ຄວາມຮູ້ວິຊາສະເພາະ | ສາຍຄູປະຖົມຕໍ່ເນື່ອງພັກສິ້ນປີຮຽນ

# ສັງຄົມສຶກສາ











ສາຍສ້າງຄູປະຖົມຕໍ່ເນື່ອງພັກສິ້ນປີຮຽນ

ປີທີ 3

ວິທະຍາໄລຄູສາລະວັນ

2022

| ຄວາມຮູ້ວິຊາສະເພາະ | ສາຍຄູປະຖົມຕໍ່ເນື່ອງພັກສິ້ນປີຮຽນ |
|---|---|

# ສັງຄົມສຶກສາ


ຮຽບຮຽງ ແລະ ຕີພິມໂດຍ: ຊອ ປທ ນ ສົງອຳໄພ ພິມພາພອນ

ກວດແກ້ໂດຍ: ວັດທະນາ ໝັ້ນວິໄລ

ເພັດສະໝອນ ແກ້ວບຸບຜາໄລ

ອິນປອນ ເພັງສຸວນ



ວິທະຍາໄລຄູສາລະວັນ

2022

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ສພ.ວສ

ເລກທີ..02.....

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມສາຍປະຖົມ

## ວິຊາສັງຄົມສຶກສາ ຕໍ່ເນື່ອງພັກສິ້ນປີຮຽນ

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກຮຽນ 2021 – 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
| --- | --- |
| ທ່ານ ອຈ ປທ ແສນຮັກ ບຸນມີ | ................................ |
| ທ່ານ ຊອ ປທ ສົມບຸນ ຊານຸນຕິ | ................................ |

ທີ່, ສາລະວັນ, ວັນທີ 11 JAN 2023

ປະທານສະພາວິທະຍາສາດ

ອຈ. ນ. ສົມປອງ ແສນທະວິສຸກ

Sompong SENTHAVISOUK

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

## ໃບຮັບຮອງການກວດແກ້ບົດຮຽນຮຽງປຶ້ມ ວິຊາ ສັງຄົມສຶກສາ

ຊື່ຫົວຂໍ້: ສັງຄົມສຶກສາ

ພາກວິຊາ: ປະຖົມ

**ຜູ້ຮຽບຮຽງປຶ້ມ**

**ທ່ານ ຊອ ປທ ນ ສີງອຳໄພ ພົມພາພອນ**

ຄະນະກຳມະການກວດແກ້ບົດ

ລາຍເຊັນ

ທ່ານ ວັດທະນາ ໜັ້ນອີໄລ ..........................

ທ່ານ ຊອ ອິນປອນ ເພັງສຸວັນ ..........................

ທ່ານ ນ ເພັດສະໝອນ ແກ້ວບຸບຜາໄລ ..........................

ວິທະຍາໄລຄູສາລະວັນ

ທີ່, ສາລະວັນ, ວັນທີ ....10/1../.2023

ຫົວໜ້າພາກວິຊາ..................

ແສນຮັກ ບຸນມີ

Sanhack BOUNMY

# ຄຳນຳ

ວິຊາສັງຄົມສຶກສາແມ່ນໜຶ່ງໃນຈຳນວນລາຍວິຊາທີ່ຈັດເຂົ້າໃນຫຼັກ ສູດການຮຽນ-ການສອນສຳລັບການສ້າງ ຄູ ສາຍປະຖົມ ຕໍ່ເນື່ອງພັກສົ້ນປີຮຽນ ປີທີ 3 ທີ່ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາໄດ້ວາງອອກ.

ສັງຄົມສຶກສາແມ່ນວິຊາໜຶ່ງທີ່ເຮັດໜ້າທີ່ໄດ້ການສຶກສາຄົ້ນຄວ້າກ່ຽວກັບກ່ຽວກັບເລື່ອງລາວ, ເຫດການ, ທາງປະຫວັດສາດ, ການກຳເນີດ ແລະ ການຂະຫຍາຍຕົວຂອງສັງຄົມລາວ, ຄວາມໝາຍ-ອົງປະກອບຂອງລະບົບ ສຸລິຍະຈັກກະວານ, ຮູບຮ່າງລັກສະນະຂອງງໜ່ວຍໂລກ, ການໝູນປິ່ນຂອງໜ່ວຍໂລກ, ລັກສະນະພູມສັນຖານ, ພູມອາກາດ, ປະຊາກອນລາວ ແລະ ວັດທະນະທຳລາວ-ອາຊຽນ. ເນື້ອໃນບົດຮຽນທັງໝົດແບ່ງອອກເປັນ 11 ບົດ ໃຊ້ເວລາສອນທັງໝົດ 30 ຊົ່ວໂມງ.

ຄະນະຜູ້ຮຽບຮຽງຫວັງຢ່າງຍິ່ງວ່າການຮຽບຮຽງຄັ້ງນີ້ຈະເປັນປະໂຫຍດແກ່ຜູ້ທີ່ມີຄວາມສົນໃຈກ່ຽວກັບ ການຄົ້ນຄວ້າເລື່ອງການສອນສຳລັບວິທະຍາສາດສັງຄົມ, ແລະ ເພື່ອເຮັດໃຫ້ການຮຽນຮຽງສົມບູນຍິ່ງຂຶ້ນພວກເຮົາ ຍິນດີຢ່າງຍິ່ງທີ່ຈະຮັບເອົາຄຳຕຳນິຕິມຊົມຈາກບັນດາທ່ານ.

# ສາລະບານ


ຄໍານໍາ.......................................................................................................a

ພາກທີ1......................................................................................................1

ປະຫວັດສາດລາວ ..........................................................................................1

ບົດທີ1........................................................................................................1

ການທ້ອນໂຮມແຜນດິນລາວ ..............................................................................1

1. ການທ້ອນໂຮມອານາຈັກລາວລ້ານຊ້າງຂອງພະເຈົ້າຟ້າງຸ່ມ......................................1

2. ອານາຈັກລາວລ້ານຊ້າງແຕ່ ປີ ຄ. ສ 1373-1560 ..............................................11

3. ອານາຈັກລາວລ້ານຊ້າງແຕ່ 1560-1638 .......................................................25

ບົດທີ2......................................................................................................37

ອານາຈັກລາວລ້ານຊ້າງໄລຍະຈະເລີນຮຸ່ງເຮືອງ.......................................................37

1. ອານາຈັກລາວລ້ານຊ້າງສະໄໝການປົກຄອງຂອງເຈົ້າສຸລິຍະວົງສາ (ຄ.ສ 1638-1695). ..........37

2.ໄລຍະສຸດທ້າຍຂອງເຈົ້າສຸລິຍະວົງສາ. ..............................................................49

3.ຄວາມຂັດແຍງພາຍໃນອານາຈັກລາວລ້ານຊ້າງພາຍຫຼັງລາດຊະການຂອງເຈົ້າສຸລິຍະວົງສາ..........49

4.ການແຕກແຍກຂອງອານາຈັກລາວລ້ານຊ້າງ.........................................................51

ບົດທີ3......................................................................................................54

ອານາຈັກລາວລ້ານຊ້າງໃນໄລຍະເສຍເອກະລາດໃຫ້ສະຫຍາມ.......................................54

1.ການຮຸກຮານ ແລະ ຍຶດຄອງອານາຈັກລາວລ້ານຊ້າງຂອງສັກດີນາສະຫຍາມ .....................54

1.1. ກົນອຸບາຍຮຸກຮານຂອງເຈົ້າຊີວິດກຸງທົນບູລີ ......................................................54

1.2. ສັກດີນາສະຫຍາມເຂົ້າຮຸກຮານ ແລະ ຍຶດຄອງອານາຈັກລ້ານຊ້າງຈໍາປາສັກ ຄ.ສ 1778 ...........55

ສະຫຍາມບຸກຕີອານາຈັກວຽງຈັນ. .....................................................................55

ກົນເສິກອັນໂຫດຮ້າຍປ່າເຖື່ອນຂອງສັກດີນາສະຫຍາມ ...........................................57

2.1. ຫຍໍ້ຂອງເຈົ້າອະນຸວົງ.................................................................................59

1) ການປັບປຸງ ແລະ ການສ້າງສາອານາຈັກຄືນໃໝ່ ................................................60

1) ຈຸດເລີ່ມຕົ້ນຂອງແນວຄິດໃນການກອບກູ້ເອກະລາດ...............................................64

2)ການວາງແຜນກອບກູ້ເອກະລາດ.......................................................................65

3)ການເຄື່ອນທັບຂອງເຈົ້າອະນຸວົງ ປີ ຄ.ສ 1825-1827 ........ 65

2.5. ແຜນການຂອງເຈົ້າເມືອງນະຄອນລາດຊະສີມາເພື່ອປາບປາມເຈົ້າອະນຸວົງ. ........ 69

3.ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານສັກດີນາສະຫຍາມຫຼັງການສິ້ນພະຊົນຂອງເຈົ້າອະນຸວົງ ........ 76

ບົດທີ4 ........ 77

ປະເທດລາວໄລຍະຕົກເປັນຫົວເມືອງຂຶ້ນຝຣັ່ງ ........ 77

1.ການປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງປີຄ.ສ 1893-1945 ........ 77

2. ການລຸກຮື້ຂຶ້ນຍຶດອຳນາດ ແລະ ປະກາດເອກະລາດຄັ້ງທຳອິດຂອງລາວ. ........ 82

4. ການປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງແ ລະ ການຕໍ່ສູ້ຂອງປະຊາຊົນລາວ (ຄ.ສ 1945-1954). ........ 83

ບົດທີ5 ........ 87

ການຮຸກຮານລາວຂອງຈັກກະພັດອາເມລິກາ ........ 87

1. ກົນອຸບາຍຍຶດຄອງລາວຂອງຈັກກະພັດອາເມລິກາ ........ 87

2. ການດຳເນີນການປົກຄອງລາວຂອງຈັກກະພັດອາເມລິກາ ແລະ ຂະບວນການຕໍ່ສູ້ຂອງປະຊາ ຊົນລາວໃຕ້ການ ນຳພາຂອງພັກປະຊາຊົນປະຕິວັດລາວແຕ່ປີ 1955-1973 ........ 88

3.ການລຸກຮື້ຂຶ້ນຍຶດອຳນາດ 23 ສິງຫາ 1975 ແລະ ການສະຖາປະນາສາທາລະນະລັດປະຊາທິປະໄຕປະຊະຊົນ ລາວວັນທີ 2 ທັນວາ 1975 ........ 90

ພາກທີ II ພູມສາດ ........ 92

ບົດທີ6 ........ 92

ລະບົບສຸລິຍະຈັກກະວານ Solar System ........ 92

1. ຄວາມໝາຍຂອງລະບົບສຸລິຍະຈັກກະວານ ........ 92

2. ອົງປະກອບຂອງລະບົບສຸລິຍະຈັກກະວານ ........ 93

ບົດທີ7 ........ 101

ໜ່ວຍໂລກແລະການໂຄຈອນຂອງໜ່ວຍໂລກ ........ 101

1. ຮູບຮ່າງ ແລະ ຂະໜາດຂອງໜ່ວຍໂລກ ........ 101

2. ການໂຄຈອນຂອງໜ່ວຍໂລກ ........ 102

3. ຜົນຕ່າງໆທີ່ເກີດຈາກການໂຄຈອນຂອງໜ່ວຍໂລກ ........ 104

ບົດທີ8 ........ 110

ທີ່ຕັ້ງ, ພູມສັນຖານ ແລະ ພູມອາກາດຂອງປະເທດລາວ ........ 110

1. ທີ່ຕັ້ງ, ຂອບເຂດ ແລະ ຊາຍແດນ ........ 110

2. ຮູບຮ່າງ ແລະ ເນື້ອທີ່ຂອງປະເທດລາວ.......................................................................111
3. ພູມສັນຖານຕົ້ນຕໍຂອງປະເທດລາວ.......................................................................112
4. ລັກສະນະລວມຂອງພູມອາກາດ.......................................................................118
5. ລະດູການແລະກະແສລົມທີ່ພັດຜ່ານລາວ.......................................................................119
ປະຊາກອນຂອງລາວ.......................................................................121
1. ໂຄງສ້າງຂອງປະຊາກອນລາວ.......................................................................121
2. ການເພີ່ມຂຶ້ນແລະຫຼຸດລົງຂອງປະຊາກອນລາວ.......................................................................121
3. ການແຈກຢາຍຂອງປະຊາກອນ.......................................................................122
ພາກທີ III.......................................................................123
ວັດທະນະທຳສັງຄົມລາວແລະ ອາຊຽນ.......................................................................123
ບົດທີ10.......................................................................123
ກຸ່ມປະເທດອາຊຽນ.......................................................................123
ບົດທີ11.......................................................................140
ຮີດຄອງປະເພນີລາວ-ອາຊຽນ.......................................................................140
1. ຮີດຄອງປະເພນີລາວ.......................................................................140
2. ຮີດຄອງປະເພນີຂອງອາຊຽນ.......................................................................141

# ພາກທີ1

# ປະຫວັດສາດລາວ

## ບົດທີ1

## ການທ້ອນໂຮມແຜນດິນລາວ

### 1. ການທ້ອນໂຮມອານາຈັກລາວລ້ານຊ້າງຂອງພະເຈົ້າຟ້າງຸ່ມ.

ເຈົ້າຟ້າງຸ່ມເກີດເມື່ອປີ ຄ.ສ 1316 ປີມະໂລງຈຸລະສັກກະລາດ 678 ເປັນລູກຊາຍຄົນທີ1 ຂອງຂຸນຜີຟ້າ ຫຼື ຟ້າງ້ຽວ ເປັນຜູ້ໄດ້ຮັບການສຶກສາອົບຮົມຈາກອ້າຍຜາວຽງຜູ້ເປັນປູ່ລ້ຽງ. ເຈົ້າຟ້າງຸ່ມເກີດໃນທ່າມກາງສະພາບການບ້ານເມືອງເກີດຄວາມປັ່ນປ່ວນວຸ້ນວາຍຂັດແຍ່ງກັນຢ່າງຮຸນແຮງລະຫວ່າງສັກດີນາລາວດ້ວຍກັນທີ່ສືບເນື່ອງມາເປັນເວລາຍາວນານເມື່ອພາຍຫຼັງທີ່ເຈົ້າຟ້າງ້ຽວ ຫຼື ຂຸນຜີຟ້າໄດ້ຂຶ້ນຄອງອຳນາດ ໃນກຸ່ມຄົນຂອງເຈົ້າຟ້າຄຳຮຽວໄດ້ຫາທຸກວິທີທາງພະຍາຍາມໂຄ່ນລົ້ມທັນທີ.

ສ່ວນເຈົ້າຂຸນຜີຟ້າເຫັນເປັນເຊັ່ນນັ້ນໄດ້ຊອກຫາວິທີການທີ່ຈະກອບກູ້ບ້ານເມືອງໃຫ້ເຂົ້າສູ່ລະບຽບຕາມລາຊະປະເພນີຕາມຂັ້ນຕອນນັ້ນກໍ່ໄດ້ຈັດຂະບວນການສົ່ງລູກຊາຍອອກຈາກເມືອງ, ຊອກຫາຮຽນຮູ້ເພື່ອທີ່ຈະນຳມາກອບກູ້ ແລະ ທ້ອນໂຮມບັນດາຫົວເມືອງລາວບູຮານທີ່ຍັງຢູ່ກະແຈກກະຈາຍໃຫ້ເຂົ້າເປັນເອກະພາບອັນໜຶ່ງອັນດຽວກັນພາຍໃຕ້ອຳນາດຂອງສັກດີນາລາວລວມສູນໃນຂັ້ນຕໍ່ໄປ ໂດຍອອກກົນອຸບາຍວ່າເຈົ້າຟ້າງຸ່ມເກີດມາມີແຂ້ວ 33 ເຫຼັ້ມ, ເປັນຄົນເຂັດຂວາງ, ແພ້ບ້ານແພ້ເມືອງຕ້ອງເອົາໃສ່ແພໄຫຼນ້ຳເສຍ.

ແຕ່ຄວາມເປັນຈິງແລ້ວ ກໍລະນີທີ່ວ່າເຈົ້າຟ້າງຸ່ມມີ ແຂວ 33 ເຫຼັ້ມນັ້ນໝາຍເຖິງເຈົ້າຟ້າງຸ່ມເດີນທາງອອກຈາກເມືອງຊວາພ້ອມກັບພັກພວກ 33 ຄົນ ໃນນັ້ນມີປູ່ລ້ຽງ,ຕາລ້ຽງ, ນ້າລ້ຽງ, ອ້າຍລ້ຽງ ແລະ ພີ່ນ້ອງພ້ອມດ້ວຍທະຫານເອກ 6 ຄົນຄື: ບາໂບ,ບາຄຸ້ມ, ບາສຽມ, ບາຈີ່ແຂ້, ບາຈິມ ແລະ ບາລູ. ພ້ອມທັງບໍລິວານອີກຈຳນວນໜຶ່ງໃຊ້ເວລາເດີນທາງ1 ປີ ຈຶ່ງຮອດຫຼີ່ຜີ (ບໍລິເວນບ້ານຄອນ ເຂດເມືອງໂຂງ ແຂວງຈຳປາສັກ). ແຕ່ໃນໄລຍະນັ້ນດິນແດນແຫ່ງນີ້ຍັງຢູ່ພາຍໃຕ້ອິດທິພົນຂອງພວກຂະແມຢູ່.

ເບື້ອງຕົ້ນເຈົ້າຟ້າງຸ່ມພ້ອມພັກພວກເມື່ອໄປເຖິງຫຼີ່ຜີກໍ່ສະແຫວງຫາການສຶກສາຮໍ່າຮຽນວິຊາອາຄົມຕ່າງໆຢູ່ກັບສຳນັກວັດພະມະຫາປາສະມັນ ( ປີ ຄ.ສ 1341-1343) ເຈົ້າທີ່ຖ້ຳຫົວຫາດຫຼີ່ຜີ ແລະ ຫຼັງຈາກນັ້ນພະເຈົ້າຟ້າງຸ່ມ ພ້ອມພັກພວກຍັງໄດ້ທ່ອງທ່ຽວຊອກຫາຮໍ່າຮຽນວິຊາສາດຕະສິນຕ່າງໆ ຈົນຮອດນະຄອນຂະເໝນ (ອັງກໍທົມ),ພ້ອມທັງຜູກສາຍສຳພັນອັນດີງາມກັບເຈົ້າຊີວິດຂະເໝນ ປີຄ.ສ 1332 ເຈົ້າໄຊຍະວໍລະມັນປະລະເມສວນເຫັນວ່າເປັນຄວາມໝາຍອັນດີເລີດ ໃນການສ້າງຜູກສາຍສຳພັນອັນໜັກແໜ້ນກັບອານາຈັກລາວລ້ານຊ້າງໄວ້ ເພື່ອຄວາມໝັ້ນຄົງຂອງຕົນເອງ, ເພື່ອເພິ່ງພາໃນວັນຂ້າງໜ້າ ດັ່ງນັ້ນຈຶ່ງໄດ້ຕົກລົງຍົກລູກສາວຊື່ນາງລັດຕະນະກັນຍາເຊິ່ງປະຊາຊົນທົ່ວໄປເອີ້ນວ່ານາງແກ້ວເກງຍາໃຫ້ເປັນມະເຫສີແກ່ເຈົ້າຟ້າງຸ່ມ.

ເວົ້າລວມແລ້ວສະພາບການຂອງເມືອງລາວບູຮານກ່ອນການທ້ອນໂຮມນັ້ນແມ່ນບໍ່ມີຄວາມສະຫງົບ, ກ່ອນໜ້ານັ້ນຄືນັບແຕ່ສະຕະວັດທີ 8 ປະມານ ປີຄ.ສ 757 ເຊິ່ງເວົ້າວ່ານະຄອນຊຽງທອງ (ເມືອງຊວາ)

ກາຍເປັນເມືອງລາວຊະທານີ ຂອງຊົນເຜົ່າອ້າຍລາວ ໂດຍເລີ່ມຈາກຂຸນລໍຜູ້ເປັນກະສັດຂອງຊົນເຜົ່າອ້າຍລາວ ຈົນເຖິງກະສັດລາວອົງທີ 20 ພະຍາລັງ ໄລຍະຜ່ານມານັ້ນ ສະພາບການບ້ານເມືອງມີຄວາມສະຫງົບປະຊາຊົນຢູ່ເຢັນເປັນສຸກ, ແຕ່ເຖິງກະສັດອົງທີ 21 ຕໍ່ມາເຫດການບ້ານເມືອງເຕັມໄປດ້ວຍຂໍ້ຂັດແຍ່ງພາຍໃນກຸ່ມສັກດີນາຂອງລາວດ້ວຍກັນ.

**1) ການທ້ອນໂຮມອະນາຈັກລາວລ້ານຊ້າງໄລຍະທີ1 ແຕ່ປີ ຄ.ສ 1349-1353**

**ກ. ການບຸກຕີຫົວເມືອງລາວພາກກາງ ແລະ ພາກໃຕ້**

- **ການບຸກຕີແຄວ້ນພິມມະທັດ:** ມີສູນກາງທີ່ພິມາຍ ເຊິ່ງຕັ້ງຢູ່ທິດຕາເວັນຕົກຂອງວັດພູຈຳປາສັກ ເປັນນະຄອນລັດໜຶ່ງປະກອບດ້ວຍ ຫຼາຍຫົວເມືອງເຊັ່ນ ເມືອງປາກກົບ, ເມືອງຂຸນຂອນ, ເມືອງດອນແດງ, ເມືອງຄຳແຫງ, ເມືອງໂສດ, ເມືອງຄ້ອງທອງ, ເມືອງຈັນທອມ ແລະ ເມືອງອ້າຍ ຫົວເມືອງທັງຫຼາຍນັ້ນພະຍາພິມມະທັດ ເປັນຜູ້ມີບົດບາດກວ່າເບື້ອງຕົ້ນ ເຈົ້າຟ້າງຸ່ມ ໄດ້ສົ່ງສານຂໍເຈລະຈາໃຫ້ພະຍາພິມມະທັດຍອມຈຳນົນ ແຕ່ກໍ່ບໍ່ໄດ້ຮັບຜົນຈຶ່ງເກີການຕໍ່ສູ້ກນສຸດທ້າຍ ເຈົ້າຟ້າງຸ່ມເປັນຝ່າຍໄດ້ຮັບໄຊຊະນະ ແລະ ໄດ້ແຕ່ງຕັ້ງຫຼານຊາຍຂອງພະຍາພິມມະທັດ ຂຶ້ນປົກຄອງເມືອງຕໍ່ໄປ.
- **ການບຸກຕີແຄ້ນກະບອງ:** ເມືອງສີໂຄດຕະບູນ ຫຼື ສີໂຄດຕະບອງ"ເປັນເມືອງທີ່ຕັ້ງຢູ່ພາກໃຕ້ຂອງເມືອງທ່າແຂກ ປະມານ 6 ກິໂລແມັດ, ໃນກາງສະຕະວັດທີ 14 ອານາຈັກສີໂຄດຕະບອງ ຖືກແບ່ງອອກເປັນ 3 ແຄວ້ນຄື , ແຄວ້ນຕະບອງ, ແຄວ້ນຈຳປາສັກ ແລະ ແຄວ້ນເຈັດວຽງ (ຢູ່ບໍລິເວນນ້ຳຫີນບູນ ແລະ ນ້ຳກະດິງ  ທີ່ມີພະຍາແປດບໍ່ ຫຼື ພະຍາສາມລ້ານເຈົ້າຄອງແຄວ້ນຕະບອງໄດ້ຂີ່ຊ້າງອອກມາແຕ່ບໍ່ທັນຮອດຂະບວນທັບຂອງພະຍາຟ້າງຸ່ມ ກໍ່ເກີດຄວາມສະທ້ານຢ້ານກົວແລ້ວຂີ່ຊ້າງແລ່ນໜີ ພະຍາຟ້າງຸ່ມໄດ້ແຕ່ງຕັ້ງກອງທັບຂອງຕົນ ຕາມຈັບເອົາມາປະຫານຊີວິດ ຈາກນັ້ນເຈົ້າຟ້າງຸ່ມໄດ້ຈັດລະບຽບ ແລະ ແຕ່ຕັ້ງນ້ອງຊາຍ ຂອງພະຍາສາມລ້ານຂຶ້ນປົກຄອງ ພ້ອມທັງໃຫ້ຫົວເມືອງດັ່ງກ່າວສົ່ງ
- **ການບຸກຕີແຄວ້ນຈຳປາສັກ:** ຫຼັງຈາກກະກຽມຄວາມພ້ອມຮຽບຮ້ອຍແລ້ວເຈົ້າຟ້າງຸ່ມກໍ່ໄດ້ຍົກທັບລົງໄປຕີແຄວ້ນຈຳປາສັກເປັນເມືອງຂອງພະຍາຈຳປາທິລາດເປັນຜູ້ເປັນໃຫຍ່ໃນເຂດແຄ້ວນນີ້ເມື່ອກອງກຳລັງຂອງພະຍາເຈົ້າຟ້າງຸ່ມໄປເຖິງພະຍາຈຳປາທິລາດ ກໍ່ຍົກທັບອອກມາສູ້ເຕັມຄວາມສາມາດ ແຕ່ສູ້ກອງກຳລັງເຈົ້າຟ້າງຸ່ມບໍ່ໄດ້ ພະຍາຈຳປາທິລາດ ຖືກຂ້າຕາຍຄາຄໍຊ້າງ  ກອງທັບຂອງພະຍາເຈົ້າຟ້າງຸ່ມເຂົ້າຢຶດເອົາເມືອງນະຄອນຈຳປາສັກ ໄດ້ຢ່າງງ່າຍດາຍ ຈາກນັ້ນບັນດາຫົວເມືອງຂຶ້ນທີ່ຂຶ້ນກັບຈຳປາສັກ ກໍ່ເຂົ້າມາຂໍອ່ອນຍອມ, ພ້ອມນັ້ນ, ເຈົ້າຟ້າງຸ່ມ ຈຶ່ງໄດ້ຈັດລະບຽບການປົກຄອງຄືນໃໝ່ ທັງໃຫ້ບັນດາຫົວເມືອງຂຶ້ນຕ່າງໆເສຍສ່ວຍ ຄືດັ່ງຫົວເມືອງອື່ນໆ ທີ່ປະຕິບັດມາທຸກໆປີ.
- **ການບຸກຕີແຄວ້ນເຈັດວຽງ:** ກອງທັບຂອງເຈົ້າຟ້າງຸ່ມໄດ້ເຄື່ອນທັບກັບຄືນແຄວ້ນກະບອງເພື່ອຕີເອົາແຄວ້ນເຈັດວຽງ, ແຄວ້ນນີ້ເມື່ອກ່ອນມີເຈັດວຽງ (ເມືອງ) ຄື ວຽງເຈັດຈໍ່ວ, ວຽງກວາງສຸມ, ວຽງກວ້າງທົ່ງ, ວຽງມ່ວນ, ວຽງວັງ, ວຽງກະຕາກ ແລະ ວຽງຊຸມພອນ ຕໍ່ມາໄດ້ເພີ່ມຂຶ້ນອີກສາມວຽງຄື: ວຽງສະໂປນ, ວຽງຫຼວງ ແລະ ວຽງປອບເລັງ ແຄວ້ນເຈັດວຽງດັ່ງກ່າວຕັ້ງຢູ່ທິດຕາເວັນອອກ ແລະ ທິດຕາເວັນອອກສ່ຽງເໜືອຂອງແຄວ້ນກະບອງ (ເມືອງທ່າແຂກເກົ່າ)ເມື່ອກອງທັບເຈົ້າຟ້າງຸ່ມມາເຖິງແຄວ້ນເຈັດ

ວຽງທີ່ວຽງເຈັດຈື່ອ (ບໍລິເວນນໍ້າຫີນບູນ ແລະ ນໍ້າກະດິງ) ພະຍາເຈັດຈື່ອ (ພະຍາວຽງ) ໄດ້ເອົາກຳລັງອອກຕໍ່ສູ້, ແຕ່ຍ້ອນເກີດຄວາມສະທ້ານຢ້ານກົວ ຈຶ່ງໄດ້ຂີ່ຊ້າງພ່າຍໜີໄປ ພະເຈົ້າຟ້າງຸ່ມ ໄດ້ແຕ່ງຕັ້ງບາກີມນຳທັບໄລ່ຕິດຕາມພະຍາເຈັດຈື່ອໄປ, ທັງສອງໄດ້ຕໍ່ສູ້ກັນຢ່າງດຸເດືອດ ໃນທີ່ສຸດບາກີມກໍ່ຕັດຄໍພະຍາເຈັດຈື່ອຕາຍຄາຫຼັງຊ້າງ ເມື່ອພະຍາເຈັດຈື່ອຕາຍແລ້ວ ບັນດາພະຍາວຽງອື່ນໆພ້ອມເສນາອາມາດທັງຫຼາຍ ກໍ່ເຂົ້າອ່ອນຍອມຕໍ່ພະເຈົ້າຟ້າງຸ່ມ,

– **ການບຸກຕີເຂົ້າວຽງພະນໍ້າຮຸ່ງ-ຊຽງສາ**

ເມື່ອສຳເລັດການຈັດແຈງການປົກຄອງທີ່ແຄວ້ນເຈັດວຽງແລ້ວເຈົ້າຟ້າງຸ່ມໄດ້ນຳທັບຂຶ້ນໄປແຄວ້ນວຽງພະນໍ້າຮຸ່ງ-ຊຽງສາ ຕັ້ງຢູ່ເຂດບໍລິເວນສອງຝັ່ງແມ່ນໍ້າຂອງລະຫວ່າງນໍ້າກະດິງ, ນໍ້າງຽບ ແລະ ນໍ້າຊັນທິດຕາເວັນອອກ ຕິດກັບແດນເມືອງພວນ (ຊຽງຂວາງ) ແລະ ແດນຫວຽດນາມ, ທິດຕາເວັນຕົກຕິດກັບເມືອງໜອງຫານ, ທິດໃຕ້ຕິດກັບແຄວ້ນເຈັດວຽງ ແລະ ທິດເໜືອຕິດກັບວຽງຈັນ, ວຽງຄຳ ທັງສອງຝ່າຍໄດ້ຕໍ່ສູ້ກັນຈົນສຸດຄວາມສາມາດ ພະຍາສາມຄ້ອນສູ້ຈົນເສຍຊີວິດ ກຳລັງຖືກກະຈາຍ ແລະ ຍອມຕໍ່ກໍ່ທັບຂອງເຈົ້າຟ້າງຸ່ມ,.

**ຂ. ການບຸກຕີຫົວເມືອງລາວຝ່າຍຕາເວັນອອກ**

– **ການບຸກຕີເຂົ້າເມືອງພວນ ແລະ ແບ່ງປັນດິນແດນກັບດາຍຫວຽດ :**

ພາຍຫຼັງທີ່ເຈົ້າຟ້າງຸ່ມຕີເອົາເມືອງຜານໍ້າຮຸ່ງໄດ້ແລ້ວ ພະອົງໄດ້ນຳເອົາກຳລັງເຄື່ອນທັບຂຶ້ນໄປພາກເໜືອ ມີຄວາມຫວັງບຸກຕີເອົາເມືອງພວນ ເຈົ້າຄອງແຄວ້ນພວນຊາບຂ່າວ ກໍ່ເກີດຄວາມຢ້ານກົວຫຼາຍ ກໍ່ແຕ່ງທູດນຳເອົາສານມາຖວາຍເພື່ອຂໍອ່ອນຍອມຕໍ່ພະເຈົ້າຟ້າງຸ່ມ ທີ່ພັກເຊົາຢູ່ວຽງຜານໍ້າຮຸ່ງ-ຊຽງສາ ໃນສານຂຽນຍອມຈຳນົນແຕ່ໂດຍດີ ແລະ ໄດ້ສືບຕໍ່ແບ່ງປັນເຂດແດນກັບດາຍຫວຽດຕາມການຕົກລົງແມ່ນ: 1)ພົນລະເມືອງທີ່ຢູ່ເຮືອນຮ້ານກວ້ານມີເສົາ (ເຮືອນຍົກພື້ນ) ແມ່ນພົນລະເມືອງລາວລ້ານຊ້າງ, 2)ເຂດແດນປະເທດນັ້ນ ໃຫ້ນັບແຕ່ຕົ້ນສ້ານສາມງ່າ ໄປເຖິງນໍ້າມ້າສາມແຄວ(ນໍ້າມ້າສາມຄອນ) ຫຼື ຫີນສາມເສົາ ໄປເຖິງນໍ້າເຕົ້າສາມແຄວ ແລະ 3) ຫຼັກການແບ່ງປັນດິນແດນໃຫ້ຖືເອົາຕາມສັນພູແບ່ງນໍ້າຄືຝົນຕົກນໍ້າໄຫລມາທາງດ້ານລາວນັ້ນແມ່ນເຂດແດນຂອງລາວ ແລະ ນໍ້າໄຫຼມາຮອດແດນຫວຽດບ່ອນໃດໃຫ້ຖືກເຂດນັ້ນເປັນດິນແດນດາຍຫວຽດ.ນັບແຕ່ນັ້ນມາອານາຈັກລາວລ້ານຊ້າງ ແລະ ດາຍຫວຽດຈຶ່ງໄດ້ຖືເອົາສັນຍາດັ່ງກ່າວເປັນຂໍ້ກຳນົດເຂດແດນຂອງສອງອານາຈັກ.

– **ການບຸກຕີເຂົ້າຫົວເມືອງລາວທາງພາກເໜືອ:**

ພາຍຫຼັງໄດ້ແບ່ງເຂດແດນກັບດາຍຫວຽດສຳເລັດແລ້ວ. ພະເຈົ້າຟ້າງຸ່ມກໍ່ຍົກກຳລັງພົນຂຶ້ນໄປຕີເອົາບັນດາເມືອງລາວຝ່າຍເໜືອ ເຊິ່ງຫົວເມືອງລາວດັ່ງກ່າວນີ້ເມື່ອກ່ອນແມ່ນດິນແດນເມືອງກາຫຼົງ. ໄດ້ແກ່ເມືອງແຖນ, ເມືອງໄຊ, ເມືອງໄລ່, ເມືອງກວ້າງ, ເມືອງໂຮມ, ເມືອງກາງລ້ານ, ເມືອງສິງທ້າວ, ເມືອງທຸມ, ເມືອງວາດ ແລະ ເມືອງອື່ນໆອີກ. ບັງຄັບໃຫ້ເຈົ້າເມືອງເຫຼົ່ານີ້ ສົ່ງສ່ວຍເປັນເງິນ, ຄຳ, ຜ້າໄໝ, ຂ້ອຍຂ້າ ແລະ ເຄື່ອງເສິກ... ຈາກນັ້ນສະເດັດໄປຕີເອົາເມືອງບຸນເໜືອ, ບຸນໃຕ້ໄດ້ທັງສອງເມືອງ ເຈົ້າຝ່າຍເມືອງຊຽງຮຸ່ງໄດ້ຊາບຂ່າວການເຄື່ອນໄຫວອັນປີຊາສາມາດ ຂອງພະເຈົ້າຟ້າງຸ່ມ ກໍ່ເກີດຄວາມກະວົນກະວາຍຢ້ານກົວ ຈຶ່ງຟ້າວແຕ່ງພະລາຊະສານ ພ້ອມກັບເຄື່ອງບັນນາການມີຈຳນວນໜຶ່ງແສນ, ມ້າ 100 ໂຕ ພ້ອມກັບອານເງິນ, ອານຄຳ ແລະຜ້າແພເປັນຈຳນວນຫຼວງຫຼາຍນຳມາຖວາຍພະອົງ.ຕີເອົາຫົວເມືອງຝ່າຍເໜືອໝົດແລ້ວ ພະເຈົ້າຟ້າງຸ່ມແຕ່ງຕັ້ງໃຫ້

ບາຈິ່ມແມ່ທັບໃຫຍ່ເປັນເຈົ້າເມືອງໝື່ນຂວາ(ເຈົ້າເມືອງຝ່າຍຂວາ). ເປັນຜູ້ປົກຄອງຫົວເມືອງລາວຝ່າຍເໜືອແລ້ວກໍ່ເຄື່ອນພົນມາເຖິງເມືອງນ້ອຍ, ເຈົ້າເມືອງນ້ອຍໄດ້ອອກໄປອ່ອນນ້ອມ ພ້ອມທັງບາສີຖວາຍໃຫ້ພະອົງຢ່າງສົມກຽດ ຫລັງຈາກນັ້ນໄດ້ເຄື່ອນທັບລົງມາຕາມລ້ອງແມ່ນ້ຳອູ (ເຖິງປາກອູ) ແລະ ໄດ້ຢຸດປະທັບຕັ້ງຄ້າຍຢູ່ທີ່ນັ້ນ ເພື່ອກະກຽມຍຶດນະຄອນຊຽງທອງ.

- **ການບຸກຕີເຂົ້ານະຄອນຊຽງທອງນະຄອນຊຽງທອງ**

ໃນເວລານີ້ແມ່ນເຈົ້າຄຳຮຽວ (ຜູ້ເປັນອາວ) ໄດ້ປົກຄອງເມື່ອຊາບຂ່າວການເຄື່ອນທັບຂອງເຈົ້າຟ້າງຸ່ມ ມາເຖິງປາກອູແລ້ວປະທັບຢູ່ທີ່ນັ້ນ, ພະເຈົ້າຄຳຮຽວກໍ່ເກີດຄວາມຢ້ານກົວຄວາມເດຊານຸພາບຂອງຫຼານຕົນ ຈຶ່ງຮີບຮ້ອນເກນໄພ່ພົນກອງທະຫານ ອອກໄປຮັບມືຂອງກອງທັບ ເຈົ້າຟ້າງຸ່ມທີ່ປາກອູເຖິງ 3 ຄັ້ງ ແຕ່ກໍ່ຖືກກອງທັບຂອງພະເຈົ້າ ຟ້າງຸ່ມຕີຕອບໂຕ້ໃຫ້ປະລາໄຊໄປທຸກຄັ້ງ. ເມື່ອພະເຈົ້າຄຳຮຽວບໍ່ສາມາດເອົາຊະນະກັບກອງທັບຫຼານຕົນເອງໄດ້ຈຶ່ງຕັດສິນໃຈກິນສານງ້ວນ (ຢາເບື່ອ) ຂ້າຕົວເອງຕາຍ ພ້ອມກັບມະເຫສີ. ເມື່ອເຈົ້າຟ້າຄຳຮຽວ ສິ້ນພະຊົນລົງແລ້ວ ພວກເສນາອາມາດພ້ອມທັງບ່າວໄພ່ລາຊະດອນໄດ້ພ້ອມພຽງຮຽງກັນອອກໄປເຊີນເອົາພະເຈົ້າຟ້າງຸ່ມທີ່ປະທັບຢູ່ປາກກອູນັ້ນ ເຂົ້າມາສະເຫວີຍລາຊະສົມບັດໃນນະຄອນຊຽງທອງ ໃນປີ ຄ.ສ 1353 ມີອາຍຸຄົບ 37 ປີ ພ້ອມເສນາອາມາດຊັ້ນຜູ້ໃຫຍ່ ໄດ້ຖວາຍພະນາມໃຫ້ແກ່ພະອົງ “ພະຍາຟ້າຫຼ້າທໍລະນີ ສີສັດຕະນາຄະນະຫູດ”

ເມື່ອພະເຈົ້າຟ້າງຸ່ມ ໄດ້ຂຶ້ນສະຫວີຍລາດທີ່ນະຄອນຊຽງທອງແລ້ວ ພະອົງໄດ້ຈັດແຈງລະບຽບການປົກຄອງບ້ານເມືອງຂຶ້ນໃໝ່ ໃຫ້ສອດຄ່ອງກັບຈຸດປະສົງຂອງພະອົງ ເປັນຕົ້ນການຄຸ້ມຄອງດ້ານແນວຄິດ ຈິດໃຈຂອງພະອົງໃຫ້ມີຄວາມຢູ່ເຢັນເປັນສຸກ ພິເສດພະອົງໄດ້ເອົາໃຈໃສ່ເສນາອາມາດຕ່າງໆ ຜູ້ທີ່ໄດ້ຕິດຕາມພະອົງ ໄປອານາຈັກອັງກໍ່ ໃຫ້ຢູ່ໃນຖານະຕຳແໜ່ງທີ່ສຳຄັນ ຕາມຄຸນງາມຄວາມດີດັ່ງນີ້:

ໃຫ້ປູ່ລ້ຽງເປັນແສນເມືອງ (ມະຫາອຸປະລາດ)

ໃຫ້ຕາລ້ຽງເປັນໝື່ນຫຼວງ

ໃຫ້ອາວລ້ຽງເປັນເຈົ້າພູມເຫນືອ

ໃຫ້ນ້າລ້ຽງເປັນເຈົ້າພູມໃຕ້

ໃຫ້ພີ່ລ້ຽງເປັນພະຍາກະຊັກ (ປົກຄອງພວກຊົນເຜົ່າລາວເທີງ).

**2) ການທ້ອນໂຮມອະນາຈັກລາວລ້ານຊ້າງໄລຍະທີ 2 ປີ ຄ.ສ 1354-1357**

ພາຍຫຼັງທີ່ເຈົ້າຟ້າງຸ່ມ ຂຶ້ນສະເຫວີຍລາດທີ່ນະຄອນຊຽງທອງ ແລະ ຈັດລະບຽບບ້ານເມືອງຄືນໃໝ່ແລ້ວ. ພະອົງໄດ້ມອບໝາຍບ້ານເມືອງໃຫ້ມະເຫສີ (ເມຍ) ນາງແກ້ວເກງຍາຜູ້ຮັກສາການແທນ ເຖິງປີຄ.ສ 1354 ພະອົງໄດ້ສັ່ງໃຫ້ບັນດາເຫລົ່າເສນາອາມາດທັງຫຼາຍ ກະກຽມກຳລັງທະຫານ ເພື່ອທ້ອນໂຮມເອົາບັນດາເມືອງລາວທີ່ຢູ່ທາງພາກຕາເວັນຕົກສ່ຽງເໜືອ ແລະ ເຂດຫົວເມືອງທາງຝັ່ງຂວາແມ່ນ້ຳຂອງ ທີ່ຍັງກະແຈກກະຈາຍຢູ່ເປັນຕົ້ນແມ່ນຕີເອົາອານາຈັກລ້ານນາ (ຊຽງແສນ) ເປັນສຳຄັນ.

ກ. ການບຸກຕີເອົາເມືອງຊຽງແສນ ແລະ ການແບ່ງປັນເຂດແດນກັບລ້ານນາ

ໃນປີ ຄ.ສ 1354 ພະເຈົ້າຟ້າງຸ່ມໄດ້ຍົກທັບຂຶ້ນໄປທາງພາກຕາເວັນຕົກສ່ຽງເໜືອທາງເຮືອບຸກຕີເອົາເມືອງແສນເໜືອ. ເມື່ອພະອົງໄດ້ເຄື່ອນທັບເຖິງເມືອງເຫຼືອກ ທ້າວອູລອງ ເຈົ້າຄອງເມືອງກໍ່ໄດ້ນຳເອົາກອງກຽດຕິຍົດພ້ອມທັງເຖົ້າແກ່ປະຊາຊົນອັນມີທັງພະສົງອົງຄະເຈົ້າອອກມາຕ້ອນຮັບ ແລະ ອ່ອນນ້ອມຕໍ່ພະເຈົ້າຟ້າງຸ່ມ ຢູ່ທີ່ທ່າຊ້າງຄໍຄຳເມື່ອເຫັນດັ່ງນັ້ນພະອົງກໍ່ໄດ້ແຕ່ງຕັ້ງໃຫ້ເຈົ້າອູລອງຂຶ້ນປົກຄອງເມືອງຄືເກົ່າ ໃນຖານະເປັນເມືອງກາງຢ້າວ ແລ້ວຫຼັງຈາກນັ້ນພະເຈົ້າຟ້າງຸ່ມ ໄດ້ສົ່ງກອງທັບຂຶ້ນຕີເອົາບັນດາຫົວເມືອງຕ່າງໆຕັ້ງຢູ່ແຄມແມ່ນ້ຳຂອງເຊັ່ນ: ເມືອງຊຽງຂອງ, ເມືອງຄົກຮຳ, ເມືອງຊຽງທອງ ແລະ ເມືອງຊຽງຕຶ້ມ. ເມື່ອນັ້ນພະອົງໄດ້ແຕ່ງຕັ້ງເມືອງເຫຼົ່ານັ້ນເປັນເມືອງ 4 ໝື່ນທາງນ້ຳ ມອບໝາຍໃຫ້ເຈົ້າຊຽງຕຶ້ມເປັນເຈົ້າ 4 ໝື່ນທາງນ້ຳມີສູນກາງຢູ່ຊຽງຕຶ້ມ.

ຈາກນັ້ນພະອົງໄດ້ສົ່ງກອງທັບເຂົ້າບຸກຕີເອົາບັນດາຫົວເມືອງທີ່ຢູ່ທາງທິດຕາເວັນອອກຂອງແມ່ນ້ຳຂອງເຊັ່ນ: ເມືອງພື້ອ, ເມືອງຖູນ, ເມືອງຜາ ແລະ ເມືອງແທງແລ້ວແຕ່ງຕັ້ງໃຫ້ຫົວເມືອງທັງ 4 ເປັນເມືອງ 4 ໝື່ນທາງບົກ ມອບໝາຍໃຫ້ເຈົ້າເມືອງຜາເປັນເຈົ້າເມືອງ 4 ໝື່ນທາງບົກສູນກາງເມືອງແມ່ນຢູ່ເມືອງຜາ. ເມື່ອເຈົ້າຟ້າງຸ່ມໄດ້ຈັດລະບຽບໃຫ້ບັນດາຫົວເມືອງ 4 ໝື່ນທາງນ້ຳ ແລະ 4 ໝື່ນທາງບົກແລ້ວພະອົງໄດ້ສຳຫຼວດພົນເສິກຄືນທາງດ້ານຊາຍສະກັນ, ຊ້າງເສິກ, ມ້າເສິກ ແລະ ອາວຸດຕ່າງໆຢ່າງພຽງພໍເພື່ອກະກຽມບຸກຕີເຂົ້າຢຶດເອົາອານາຈັກລ້ານນາ(ຊຽງໃໝ່) ທີ່ເປັນອານາຈັກໃຫຍ່ຕັ້ງຢູ່ທາງທິດຕາເວັນຕົກສ່ຽງເໜືອຂອງອານາຈັກລາວລ້ານຊ້າງ. ເຊິ່ງລວມມີພົນເສິກ 400.000 ຄົນ, ຢ້າວ ແລະ ແກ 100.000 ຄົນ, ຊ້າງເສິກ 500 ໂຕ ແລະ ມ້າເສິກຈຳນວນຫຼວງຫຼາຍ. ຜ່ານການສຳຫຼວດພົນເສິກທີ່ຮຽບຮ້ອຍ ແລ້ວພະອົງເຄື່ອນທັບຂຶ້ນຕີເອົາເມືອງຫີນ, ເມືອງ ງາວໄດ້ທັງສອງເມືອງແລ້ວໄດ້ສະເດັດໄປປະທັບຢູ່ເມືອງມູນ (ເຂດເມືອງຊຽງລາຍປະເທດໄທປັດຈຸບັນ). ເພື່ອກຽມຕີເອົານະຄອງຊຽງໃໝ່ອານາຈັກລ້ານນາຕໍ່ໄປ.

ຝ່າຍເຈົ້າສາມພະຍາ ຫຼື ພະຍາຜາຍູ້ຜູ້ເປັນໃຫຍ່ຂອງອານາຈັກນີ້ທີ່ມີສູນກາງຕັ້ງຢູ່ຊຽງແສນໄດ້ຍົກກຳລັງພົນ 400.000 ຄົນອອກມາສູ້ຮົບກັບກຳລັງຂອງເຈົ້າຟ້າງຸ່ມ. ບາຈິ່ມແມ່ທັບໃຫຍ່ຂອງເຈົ້າຟ້າງຸ່ມ ສາມາດຕີໃຫ້ກອງທັງຂອງພະຍາແສນເມືອງແຕກໜີໄປກອງທັບຂອງເຈົ້າຟ້າງຸ່ມໄລ່ຕິດຕາມໄປຈົນເຖິງເມືອງຊຽງແສນ, ເມືອງແພວ, ເມືອງເລັນ, ເມືອງໄຮ, ເມືອງຍວງຈົນເຖິງເມືອງຊຽງແຂງ.ເຈົ້າສາມພະຍາເຫັນວ່າສູ້ຕ້ານທ້ານບໍ່ໄດ້ຈຶ່ງໄດ້ແຕ່ງຕັ້ງໃຫ້ໝື່ນຂຸນ ແລະ ໝື່ນກາງເມືອງອອກມາອ່ອນນ້ອມເປັນເມືອງຊ່ວຍຂໍສົ່ງສ່ວຍເປັນເຂົ້າເປືອກປີລະ 1000 ຫາບ ຄຳ2ໝື່ນ, ເງິນສອງແສນ, ແຫວນນິນລູກໜຶ່ງ, ແກ້ວພິທູນລູກໜຶ່ງ ແລະ ແຫວນແດງລູກໜຶ່ງ. ພ້ອມນັ້ນເຈົ້າສາມພະຍາຍັງໄດ້ໃຫ້ຄຳສັນຍາໃນສານວ່າ: **"ເມື່ອໃດລູກສາວຂອງຜູ້ຂ້ານາງນ້ອຍອ່ອນສໍ ໃຫຍ່ 16 ປີ ຈະຈັດໃຫ້ເມືອປັດເຊື່ອປູໝອນແກ່ເຈົ້າຟ້າແລ. ບັດນີ້ຍັງນ້ອຍຂໍແກ່ເຈົ້າເອົາແຕ່ຜາໃດໄປໃຫ້ເປັນບ້ານເປັນເມືອງແກ່ເຈົ້າເຖີ້ນ"** .

ຫຼັງຈາກນັ້ນກະສັດລ້ານນາ ແລະ ລ້ານຊ້າງກໍ່ຕົກລົງແບ່ງເຂດແດນຕັ້ງແຕ່ຜາໃດຜາດ່ານລົງມາໃຫ້ເປັນເຂດແດນຂອງອານາຈັກລາວລ້ານຊ້າງ. ພະເຈົ້າຟ້າງຸ່ມໄດ້ໃຊ້ເວລາເຖິງ 2 ປີຈຶ່ງສຳເລັດໃນການທ້ອນໂຮມເອົາຫົວເມືອງລາວຝ່າຍເໜືອ ພະອົງຈຶ່ງໄດ້ສະເດັດກັບຄືນນະຄອນຊຽງທອງ. ກ່ອນທີ່ພະອົງເຄື່ອນທັບສູ່ນະຄອນຊຽງທອງນັ້ນພະເຈົ້າຟ້າງຸ່ມໄດ້ພິຈາລະນາສະພາບຄວາມເປັນຢູ່ຂອງພວກລາວເທິງ (ລາວເດີມ) ເຊິ່ງຮ້ອງກັນວ່າ "ຂ້າ" ຊີວິດການເປັນຢູ່ຟືດເຄືອງຫຼາຍ ພະອົງຈຶ່ງໄດ້ຍົກຍ້າຍພວກເຜົ່າດັ່ງກ່າວນີ້ຈຳນວນ 100.000 ຄົນ. ຈາກເຂດ 12

ປັນນາລື້ລົງມາຢູ່ຊຽງທອງ ພ້ອມນັ້ນເຈົ້າຟ້າງຸ່ມບອກສອນວ່າ "ສູ່ຢ່າວ່າຢ່າງານແກ່ໄທແກ່ລາວ ສູຢ່າຍາດເອົາສິ່ງຂອງລາວອັນໃດກໍ່ດີ, ອັນໜຶ່ງຢ່າຜິດກັນ ເມື່ອຈັກໄປເລວ ໄປຮົບກັນກໍ່ດີ ໃຫ້ສູຈື່ຄວາມກູ, ສິ່ງໜຶ່ງມື້ກາບ, ມື້ຮັບ, ມື້ຮວາຍ, ມື້ເມີງ, ມື້ເປີກ ຫ້າມື້ນີ້ໃຫ້ເປັນມື້ເສີກ, ສູຈັກຮົບຈັກເລວກັນກໍ່ຕາມສູ. ມື້ກັດ, ມື້ກົດ, ມື້ຮ່ວງ, ມື້ເຕົ່າ, ມື້ກາ ຫ້າມື້ນີ້ຢ່າໃຫ້ສູຮົບເລວກັນຢ່າໄດ້ຍຸບເອົາຄາຍບາຍເອົາເງິນກັນ, ຜູ້ໃດຫາກບໍ່ຟັງຄວາມກູສັ່ງຫີນໜ່ວຍນີ້ໜັກສອງພັນຫ້າຮອຍບາດ, ຜູ້ໃດຫາກບໍ່ຟັງຄວາມກູຜູ້ເປັນເຈົ້າແຜ່ນດິນ ໃຫ້ສູທັງສີ່ຂຸນນີ້ສັ່ງເອົາເງິນເທົ່າຫີນໜ່ວຍນີ້ເລົ່າເອົາຄວາຍໂຕໜຶ່ງກັນແກ່ສູ".

ເມື່ອພະອົງກັບຄືນຈາກການທ້ອນໂຮມເອົາບັນດາຫົວເມືອງລາວພາກຕາເວັນຕົກສ່ຽງເໜືອເຖິງວັງຊຽງທອງແລ້ວໃນປີ ຄ.ສ 1356 ເວລານັ້ນນາງແກ້ວເກງຍາໄດ້ປະສູດລູກເສນາອາມາດທັງຫຼາຍໄດ້ໃຫ້ນາມຊື່ວ່າ: ທ້າວອຸ່ນເຮືອນ ມີອາຍຸຄົບ1 ປີພໍດີເມື່ອພະອົງປະທັບຢູ່ວັງຊຽງທອງໄດ້1 ປີກໍ່ກຽມເຄື່ອນທັບລົງມາທາງໃຕ້ຕີເອົາເມືອງວຽງຈັນ.

## ຂ. ການບຸກຕີເມືອງວຽງຈັນ-ວຽງຄຳ

ວຽງຈັນ ແລະ ວຽງຄຳໃນຕົ້ນສະຕະວັດທີ XIV ແມ່ນເຖົ້າຊຽງມຸ່ງ ຫຼື ເຖົ້າຊຽງເຫຼັກເປັນຜູ້ປົກຄອງເມືອງ ມີລູກຊາຍຜູ້ໜຶ່ງຊື່ວ່າ ພະຍາເພົາ ໄດ້ສົ່ງລົງໄປປົກຄອງເມືອງວຽງຄຳ ເຂດທົ່ງພຽງໂຫຼ້ງແມ່ນໍ້າງື່ມ ເປັນເມືອງຢູ່ທາງທິດເໜືອນະຄອນວຽງຈັນ ທັງເປັນເມືອງທີ່ສອງຂອງບັນດາເມືອງໃຫຍ່ຮອງຈາກອານາຈັກລ້ານນາ.

ເຖິງຄສ 1356 ພະເຈົ້າຟ້າງຸ່ມໂດຍຜ່ານການຕີລາຄາສັງເກດແລ້ວຈຶ່ງນຳທັບມາບຸກຕີເອົາເມືອງວຽງຈັນ. ທຳອິດພະອົງໄດ້ແຕ່ງຕັ້ງບາໂບ ແລະ ບາຈິແຂ້ເປັນນາທັບລົງໄປຕີເອົາເມືອງດ່ານຊ້າຍ (ເຂດມະຫາສາລະຄາມປະເທດໄທປັດຈຸບັນ) ຈັບຕົວທ້າວໄຄ ເຈົ້າຄອງເມືອງດ່ານຊ້າຍໄປປະຫານຊີວິດ. ກຳລັງເຈົ້າຟ້າງຸ່ມ ນຳທັບໄປຕັ້ງຢູ່ທ່ານາເໜືອ (ທິດຕາເວັນຕົກບ້ານສີໄຄນະຄອນຫຼວງວຽງຈັນ) ເມື່ອຂ່າວເຖິງເຈົ້າຊຽງມຸ່ງ ເຈົ້າຄອງເມືອງວຽງຈັນກໍ່ຕົກໃຈຢ້ານກົວ ຈຶ່ງແຕ່ງທູດໄປເຖິງພະຍາເພົາ ໃຫ້ມາຊ່ວຍປ້ອງກັນຕົວເມືອງວຽງຈັນສຸດຄວາມສາມາດ, ພະຍາຊຽງມຸ່ງກໍ່ມີກຳລັງ 20 ພັນຄົນ, ຊ້າງເສິກ 500ໂຕ. ຜ່ານສູ້ຮົບພະຍາຊຽງມຸ່ງ ຖືກແມ່ທັບບາຈິ່ແຂ້ຟັນຄໍຕາຍຄາຫຼັງຊ້າງ. ຕາມຕຳລາໜັງສືບູຮານໄດ້ກ່າວວ່າ ທ້າວຊຽງມຸ່ງຂີ່ຊ້າງຊື່ "ວັງບູລີ" ສູງ 8 ສອກ ພະຍາເພົາຂີ່ຊ້າງຊື່"ແສນນາງຄອຍ"ສ່ວນຝ່າຍພະເຈົ້າຟ້າງຸ່ມ ຄື ບາໂບ ຫຼື ໝື່ນຊ້າຍ ຂີ່ຊ້າງຊື່"ແພ້ວຈັກກະວານ" ບາຈິ່ແຂ້ ຂີ່ຊ້າງຊື່ "ຂວັນລວງຟ້າ" ໄດ້ເຄື່ອນທັບເຂົ້າມາຕັ້ງຢູ່ຖິ່ນຈຳປີ ສ່ວນເຈົ້າຟ້າງຸ່ມຂີ່ຊ້າງຊື່ "ຮົ່ມຊຽງທອງ" ນຳທັບເຄື່ອນເຂົ້າມາຕັ້ງຢູ່ທົ່ງນາເໜືອ. ການສູ້ຮົບລະຫວ່າງກຳລັງຂອງວຽງຈັນ, ວຽງຄຳກັບກຳລັງຝ່າຍຂອງເຈົ້າຟ້າງຸ່ມ ໄດ້ດຳເນີນໄປຢ່າງດຸເດືອດທີ່ສຸດ. ສ່ວນພະຍາເພົາເຈົ້າວຽງຄຳ ເຫັນທ່າສູ້ບໍ່ໄດ້ກໍ່ເລີຍຂີ່ຊ້າງໜີກັບເມືອວຽງຄຳ ເຈົ້າຟ້າງຸ່ມແຕ່ໃຫ້ບາສຽມ ແລະ ບາຈິແຂ້ໄລຕາມຈົນເຖິງເມືອງວຽງຄຳ ແຕ່ແມ່ທັບຂອງເຈົ້າຟ້າງຸ່ມບໍ່ສາມາດຍົກທັບເຂົ້າຕີເມືອງວຽງຄຳໄດ້ຍ້ອນເມືອງດັ່ງກ່າວຖືກອ້ອມຮອບດ້ວຍກໍ່ໄຜ່ໜາມຢ່າແໜ້ນໜາ ແລະ ຖືກຕ້ານທ້ານຄືນຈາກກອງທະຫານເມືອງວຽງຄຳຢ່າງແຂງແຮງ.

ເມື່ອກອງທັບຂອງເຈົ້າຟ້າງຸ່ມເຂົ້າຍຶດເອົາເມືອງວຽງຈັນໄດ້ແລ້ວພະເຈົ້າຟ້າງຸ່ມເຫັນວ່າເມືອງວຽງຄຳເປັນເມືອງທີ່ຖືກອ້ອມຮອບດ້ວຍກໍ່ໄຜ່ໜາມແໜ້ນໜາ ແລະ ຫຍຸ້ງຍາກຫຼາຍໃນການບຸກໂຈມຕີເມືອງດັ່ງກ່າວນີ້

ດັ່ງນັ້ນເຈົ້າຟ້າງຸ່ມຈຶ່ງເວົ້າວ່າ **"ບໍ່ຍາສັງເມືອໜ້າຫາກາຈະຮູ້ບໍ່ຍ່າຊະແລ"** ເຈົ້າຟ້າງຸ່ມໄດ້ຫັນປ່ຽນຍຸດທະວິທີ ແລະ ຍຸດໂທບາຍໃນການຕີເອົາເມືອງວຽງຄຳດັ່ງຕໍ່ໄປນີ້:

- ເຈົ້າຟ້າງຸ່ມໄດ້ຖອນກຳລັງອອກຈາກເມືອງວຽງຄຳມາວຽງຈັນຄືນ ແລ້ວຍົກພົນຂ້າມຂອງໄປຕີເອົາເມືອງແກ່ນທ້າວ ແລະ ເມືອງນະຄອນໄທ (ຕິດເຂດແດນກຸງສີອາຍຸດທະຍາ) ເພື່ອຫັນເຫຄວາມສົນໃຈຂອງພວກສັກດີນາວຽງຄຳ ໃຫ້ເກີດຄວາມຕາຍໃຈ ແລະ ຄິດວ່າວຽງຄຳບໍ່ເປັນທີ່ສົນໃຈຂອງເຈົ້າຟ້າງຸ່ມ.
- ສັ່ງໃຫ້ກອງກຳລັງທະຫານຕີລູກຈຽງໜ້າດ້ວຍເງິນດ້ວຍຄຳ ແລ້ວນຳມາຍິນສຸມໃສ່ກຳແພງໄຜ່ ໜາມເພື່ອດຶງດູດຄວາມສົນໃຈຂອງປະຊາຊົນເມືອງວຽງຄຳໃນການຊອກຫາສິ່ງຂອງອັນມີຄ່າ ຄືດັ່ງພົງສາວະດານລາວລ້ານຊ້າງຂຽນວ່າ "ພະອົງໄດ້ສັ່ງໃຫ້ກອງພະຄັງຫຼວງເບີກເອົາເງິນ, ຄຳ ມາຕີເປັນລູກຈຽງໜ້າ ແລ້ວຍິງສຸມໃສ່ກຳແພງໄຜ່ໜາມສາມວັນສາມຄືນເມື່ອປະຊາຊົນອອກໄປທຳມາຫາກິນ ພົບເຫັນລູກຈຽງເງິນ ຄຳດັ່ງກ່າວກໍ່ພາກັນຖາກຖາງກໍ່ໄຜ່ອັນເປັນສາເຫດເຮັດໃຫ້ກຳແພງເມືອງຖືກທຳລາຍແລ້ວພະເຈົ້າຟ້າງຸ່ມກຍົກພົນເຂົ້າໄປຕີເອົາເມືອງໄດ້ງ່າຍ

ເມື່ອເຈົ້າຟ້າງຸ່ມຊາບຂ່າວກ່ຽວກັບເຫດການເມືອງວຽງຄຳກຳແພງຖືກຖາກຖາງຂາດ ເປັນບັ້ນເປັນຕອນນັ້ນ ພະອົງໄດ້ສັ່ງໃຫ້ກອງທະຫານບຸກຕີເຂົ້າເມືອງວຽງຄຳໃນທຸກດ້ານ. ພະຍາເພົາເຈົ້າຄອງເມືອງວຽງຄຳອອກຕໍ່ສູ້ຈົນສຸດຄວາມສາມາດ ແລະ ສູ້ບໍ່ໄດ້ສຸດທ້າຍຖືກຈັບ. ເພື່ອສະແດງເຖິງຄວາມປີຊາສາມາດຂອງພະຍາເພົາ, ເຈົ້າຟ້າງຸ່ມ ໄດ້ອະນຸຍາດໃຫ້ພະຍາເພົາເຂົ້າຊົນຊ້າງກັບພະອົງ. ແຕ່ບໍ່ມີໃຜເອົາຊະນະກັນໄດ້ດ້ວຍເຫດນັ້ນເຈົ້າຟ້າງຸ່ມ ໄດ້ຕົກລົງແຕ່ງຕັ້ງໃຫ້ພະຍາເພົາຂຶ້ນຄອງເມືອງຄືເກົ່າ. ແຕ່ພະຍາເພົາບໍ່ຍອມຂໍກັບເມື່ອຢູ່ນຳພີ່ນ້ອງທີ່ຊຽງດົງຊຽງທອງ.

ເມື່ອກອງທັບຂອງເຈົ້າຟ້າງຸ່ມຕີໄດ້ເມືອງວຽງຈັນ ແລະ ວຽງຄຳ ພະອົງໄດ້ແຕ່ງຕັ້ງໃຫ້ບາຄຸ້ມເປັນ"ໝື່ນຈັນ"ປົກຄອງເຂດແຄ້ວນວຽງຈັນ, ແຕ່ງຕັ້ງໃຫ້ບາສຽມເປັນ"ໝື່ກະບອງ"ປົກຄອງບັນດາຫົວເມືອງລາວຝ່າຍໃຕ້ແຕ່ເມືອງຜານ້ຳຮຸ່ງລົງໄປເຖິງເຂດແດນຂອມທີ່ຫົວຫາດຫຼີ່ຜີ(ເຂດແຄ້ວນສີໂຄດຕະບອງ) ໄລຍະດຽວກັນພະອົງໄດ້ສັ່ງໃຫ້ພະຍາເມືອງຂວານຳເອົາເຜົ່າລາວເທີງທີ່ຕັ້ງຖິ່ນຖານໃນແຕ່ລະບ່ອນ ຄື ສິບພັນຄອບຄົວໄປຕັ້ງຫຼັກປັກຖານຢູ່ກະແດຟ້າແຄບແຄມງື່ມວຽງຈັນ, ສິບພັນຄອບຄົວໄປຕັ້ງຫຼັກຖານຢູ່ໜອງຫານນ້ອຍ ແລະ ໜອງຫານຫຼວງ ແລະ ອີກພວກໜຶ່ງໄປຕັ້ງຢູ່ພູຈານເຖົ້າ (ການລະສິນປະເທດໄທປັດຈຸບັນ).

### ຄ. ການບຸກຕີເອົາຫົວເມືອງລາວທາງຝັ່ງຂວາຂອງແມ່ນ້ຳຂອງ

ພາຍຫຼັງການຈັດແຈງຮູບແບບການປົກຄອງຢູ່ວຽງຈັນ ແລະ ວຽງຄຳສຳເລັດແລ້ວມາໃນຄສ 1357 ເຈົ້າຟ້າງຸ່ມໄດ້ເຄື່ອນກຳລັງທັບໃຫຍ່ລົງໄປແຄ້ວນຮ້ອຍເອັດ, ໂຄລາດ, ກຸງສີອາຍຸດທະຍາ(ລ້ານເພຍ) ການເຄື່ອນທັບຄັ້ງນີ້ເຈົ້າຟ້າງຸ່ມ ໄດ້ແຕ່ງຕັ້ງໃຫ້ໝື່ນແກ່ ແລະ ໝື່ນກະບອງເປັນແມ່ທັບອອກໜ້າ ໃຫ້ພະຍາເມືອງຂວາເປັນປີກຂວາ, ໃຫ້ພະຍາເມືອງຊ້າຍເປັນປີກຊ້າຍ ແຕ່ງໃຫ້ໝື່ນຈັນເປັນແມ່ທັບຫຼວງ ລວມພົນເສິກໄດ້ 60.000 ຄົນຊ້າງເສິກ 500 ໂຕ, ມ້າເສິກ 1000 ໂຕ ແລະ ເຫຼືອນັ້ນໄວ້ຮັກສາເມືອງ.

ໄລຍະການເດີນທາງໄປຕີເອົາລ້ານເພຍ (ອາຍຸດທະຍາ) ເຈົ້າຟ້າງຸ່ມໄດ້ນຳເອົາກຳລັງຕີເອົາບັນດາຫົວເມືອງທີ່ຢູ່ທາງພາກຕາເວັນອອກສ່ຽງໃຕ້ ຄື ແຄ້ວນຮ້ອຍເອັດ ແລະ ໂຄລາດໄດ້ແລ້ວຈັບເອົາພະຍາເມືອງດັ່ງກ່າວໄປຂັງ

ໄວ້. ຈາກນັ້ນເຈົ້າຟ້າງຸ່ມ ກໍ່ໃຫ້ກອງທະຫານຕີເອົາຫົວເມືອງຕ່າງໆທີ່ຂຶ້ນກັບແຄ້ວນຮ້ອຍເອັດມີ ເມືອງສາດ, ເມືອງພະສະຂຽນ, ເມືອງພະລຶງ, ເມືອງພະນາລາຍ,ເມືອງພະນາຫຽນ, ເມືອງເຊຂະມາດ, ເມືອງສະພັງສີ່ແຈ, ເມືອງໂພນຟຶງແດດ ແລ້ວຈັບເອົາພະຍາເມືອງດັ່ງກ່າວນັ້ນມາຂັງໄວ້ຢູ່ເມືອງຮ້ອຍເອັດ.

ຈາກນັ້ນພາຍຫຼັງທີ່ພະອົງໄດ້ຈັບກຸ່ມບັນດາພະຍາເມືອງດັ່ງກ່າວໄດ້ໝົດແລ້ວພະອົງໄດ້ຂຽນສານເຖິງພະຍາອູ່ທອງແຫ່ງອານາຈັກລ້ານເພຍ(ອາຍຸດທະຍາ) ໃນສານນັ້ນຂຽນວ່າ "ຈັກຣົບຫຼືຈັກຮູ້ວ່າສິ່ງໃດນັ້ນຈາ" ເມື່ອພະເຈົ້າອູ່ທອງໄດ້ຮັບຂ່າວແລ້ວ ກໍ່ເກີດຄວາມສະທ້ານຍ້ານກົວ ແລ້ວຕອບສານທັນທີວ່າ **"ເຮົາຫາກເປັນພີ່ນ້ອງກັນມາແຕ່ຂຸນບູລົມພຸ້ນດາຍເຈົ້າຢາກໄດ້ບ້ານໄດ້ເມືອງໃຫ້ເຈົ້າເອົາແຕ່ເຂດດົງສາມເສົ້າ(ດົງພະຍາໄຟ)ເມືອເທົ່າພູພະຍາພໍ່ ແລະ ແດນເມືອງນະຄອນເປັນເຈົ້າທ້ອນ, ອັນໜຶ່ງຂ້ອຍຈັດສົ່ງນໍ້າອ້ອຍນໍ້າຕານທຸກປີ ອັນໜຶ່ງລູກຂ້າຊຶ່ນາງແກ້ວຍອດຟ້າໃຫຍ່ມາແລ້ວຈັດສົ່ງໃຫ້ເມືອປັດເຊື່ອປູໝອນແກ່ເຈົ້າຟ້າແລ"**ພ້ອມນັ້ນພະຍາອູ່ທອງກໍ່ຈັດແຈງເຄື່ອງບັນນາການມາຖະຫວາຍໃຫ້ແກ່ເຈົ້າຟ້າງຸ່ມອັນມີຊ້າງພາຍ(ຊ້າງຜູ້) 51ໂຕ ຊ້າງພັງ(ຊ້າງແມ່) 50 ໂຕ, ຄໍາສອງໝື່ນ, ເງິນສອງແສນ, ນໍແສນໜ່ວຍພ້ອມກັບເຄື່ອງທີ່ມີຄ່າອື່ນໆອີກຢ່າງລະຮ້ອຍ, ພະເຈົ້າອູ່ທອງໄດ້ອ່ອນຍອມເປັນບ້ານພີ່ເມືອງນ້ອງຢ່າງແທ້ຈິງ.

ພະເຈົ້າຟ້າງຸ່ມເກີດຄວາມເພິ່ງພໍໃຈຕໍ່ພະຍາອູ່ທອງແລ້ວຕົກລົງປ່ອຍຕົວພະຍາເມືອງເຫຼົ່ານັ້ນໃຫ້ເປັນອິດສະຫຼະພ້ອມທັງສັ່ງສອນວ່າ "ໃຫ້ຢູ່ໃນຫຼັກສິນທໍາບໍ່ໃຫ້ບຽດບຽນຜູ້ອື່ນ"ແລ້ວພະອົງກໍ່ເຄື່ອນທັບກັບວຽງຈັນຢ່າງມີໄຊເມື່ອກໍາລັງເຄື່ອນມາເຖິງວຽງຈັນໃນຕົ້ນລະດູຝົນປີ 1357 ພະອົງໄດ້ພັກເຊົາຢູ່ທີ່ນີ້ເພື່ອເປັນການຕອບສະໜອງຄຸນງາມຄວາມດີຂອງແມ່ທັບນາຍກອງແລະ ເຫຼົ່າທະຫານທັງໝົດທຸກຄົນທີ່ມີຜົນງານນັ້ນພະອົງໄດ້ຈັດພິທີສະຫຼອງໄຊຢ່າງຍິ່ງໃຫຍ່ພ້ອມທັງຈັດແຈງລະບອບການປົກຄອງຄືນໃໝ່ໃຫ້ແໜ້ນໜາເຂັ້ມແຂງ ແລະ ໝັ້ນຄົງ.

## ງ. ການສະຫຼອງໄຊໃຫຍ່ທີ່ວຽງຈັນ ໃນປີ ຄ.ສ 1357

ພາຍຫຼັງທີ່ສໍາເລັດການທ້ອນໂຮມບັນດາຫົວເມືອງລາວບູຮານເຈົ້າຟ້າງຸ່ມ ກໍ່ຈັດຕັ້ງການສະເຫຼີມສະຫຼອງໄຊຄັ້ງຍິ່ງໃຫຍ່ຂຶ້ນເຊິ່ງງານດັ່ງກ່າວໄດ້ຈັດຂຶ້ນໃນມື້ອອກໃໝ່ 3 ຄໍ່າເດືອນຍີ່ປີ ຄສ 1357 ບໍລິເວນປາກປ່າສັກຄົບງັນເປັນເວລາ 7 ມື້ 7 ຄືນ ມີສະບຽງອາຫານເປັນຈໍານວນຫຼວງຫຼາຍເຊັ່ນ: ຊ້າງ10 ໂຕ ງົວ 1.000 ໂຕ, ຄວາຍ 2000 ໂຕ ແລະ ຊີ້ນປາອາຫານອີກຈໍານວນໜຶ່ງເພື່ອເອົາໄວ້ລ້ຽງໄພ່ຟ້າປະຊາຊົນໃນງານມີການບາສີສູ່ຂວັນ, ຫົດສົງໃຫ້ເຈົ້າຟ້າງຸ່ມ ແລະ ຈາກນັ້ນພະອົງຍັງໄດ້ໃຫ້ຄໍາໂອວາດແກ່ໄພ່ຟ້າລາຊະດອນ.ເຈົ້າຟ້າງຸ່ມໄດ້ໃຫ້ຄໍາໂອວາດເຊິ່ງມີເນື້ອໃນດັ່ງນີ້:

- ເຈົ້າທັງຫຼາຍຮັກສາບ້ານເມືອງຢ່າໃຫ້ມີຂ້າລັກຄົນໂຈນ ອັນໜຶ່ງຢ່າໄດ້ຂ້າຟັນກັນແມ່ນວ່າຂ້ອຍຕົນຜິດກໍ່ດີ ເມຍຕົນຜິດກໍ່ດີ ເສນາ ແລະ ລູກຄ້າມາຜິດກໍ່ດີ ຕົນຢ່າຫຼອນຂ້າຟັນເສຍໃຫ້ຜູ້ອື່ນພິຈາລະນາດູກ່ອນເປັນໂທດອັນໜັກແທ້ຈິ່ງທໍາຕາມເຫດນັ້ນ ໂທດບໍ່ໜັກຢ່າໄດ້ຂ້າທໍ່ວ່າໃຫ້ໃສ່ຄອກຂັງໄວ້ສົມໂທດແລ້ວໃຫ້ປ່ອຍຫາວຽກຫາງານ. ສົມບັດອັນຈະເກີດໃນແຜ່ນດິນນີ້ ຖ້າຄົນມີ ສົມບັດກໍ່ຈິ່ງມີ ຄັນບໍ່ມີຄົນສົມບັດເຂົ້າຂອງກໍ່ຫາບໍ່ໄດ້ ແລະເຮົາໃຫ້ຂ້າຄົນເພື່ອດັ່ງນັ້ນແລ.
- ອັນໜຶ່ງເຈົ້າທັງຫຼາຍກໍ່ຢ່າຜິດຢ່າຂ້າກັນໃຫ້ພ້ອມກັນດູແລຂອບບ້ານຂອບເມືອງ ຕ່າງບ້ານຕ່າງເມືອງເຮົາເຂົາຈະທໍາການບຽດບຽນບ້ານເມືອງເຮົາສິ່ງໃດກໍ່ໃຫ້ເຫັນແຈ້ງ.

- ອັນໜຶ່ງ ສອງເດືອນໃດໃຫ້ໃຊ້ຄົນໄປໄຫວ້ສາຫາເຮົາສູ່ບ້ານສູ່ເມືອງໃຫ້ເຮົາຮູ້ອັນຮ້າຍອັນດີ ສາມປີຈິ່ງໃຫ້ເຈົ້າທັງຫຼາຍຂຶ້ນເມືອໄຫວ້ເຮົາ ເມືອຮອດຊຽງດົງຊຽງທອງພຸ້ນແລ້ວເຮົາຈະບູຊາຟ້າແຖນຟ້າຄື້ນ ທັງແຖນຄົມແຖນແຕ່ງແຖນເຖືອກ ທັງເຖົ້າເຍີ ເຖົ້າໄລ່ ແມ່ຍ່າງ່າມ ແມ່ມົດ ທັງເທວະດາ ອັນຮັກສາຜາຕັ່ງ ແລະ ຍອດອູທັງຫຼັກໝັ້ນທ້າຍຂັນ ທັງນາໄຮ່ດຽວ ພູເຂົາກ້າອ້າຍມ້າ ທ້າວຄ່ອງ...
- ອັນໜຶ່ງຢ່າເອົາໄພ່ມາເປັນຂ້ອຍຂ້າ, ໄພ່ຜິດກັນເປັນອັນໜັກເປັນຕົ້ນວ່າມີຊູ້ສູເມຍທ່ານໃຫ້ໄໝເອົາແຕ່5ບາດເຂົາຫາກຂ້າກັນຕາຍໃຫ້ເອົາຫົວມັນແທນຜູ້ຕາຍນັ້ນ.
- ອັນໜຶ່ງ ໄປເສິກຢ່າໄດ້ເອົາຄ່າຫົວໄພ່ແຕ່ບາດໜຶ່ງເຖິງສອງຕໍ່າເທົ່າເຖິງໜ້ອຍວ່າເປັນຄ່າຫົວແລະ ເຈົ້າຂຸນຢ່າໄໝໄພ່ເຖິງຮ້ອຍຂຶ້ນໄປຜູ້ໃດໄໝຈັກເສຍໜ້າຕົວມັນຈັກເອົາໃຊ້ຕ່າງໄພ່

### 3) ການປັບປຸງອະນາຈັກຂອງເຈົ້າຟ້າງຸ່ມ

### ກ ການປັບປຸງອຳນາດການປົກຄອງ

ເມື່ອສຳເລັດການທ້ອນໂຮມເມືອງລາວບູຮານເປັນເອກະພາບໃນປີ ຄ ສ 1357 ເຈົ້າຟ້າງຸ່ມກໍ່ດຳເນີນການຈັດຕັ້ງການປົກຄອງ ໂດຍຮັກສາຮູບແບບການປົກຄອງເດີມໄວ້ ພຽງແຕ່ປ່ຽນຜູ້ປົກຄອງເທົ່ານັ້ນ. ໂດຍສະເພາະແມ່ນການປັບປຸງອານາຈັກຄືນໃໝ່ເຊັ່ນ:  ທຳການເລື່ອນຕຳແໜ່ງຜູ້ທີ່ມີຜົນງານ, ແບ່ງເຂດການປົກຄອງ ແລະ ແຕ່ງຕັ້ງຜູ້ທີ່ມີຜົນງານໄປປົກຄອງເມືອງຕ່າງໆ.

**ການເລື່ອນຍົດຕຳແໜ່ງຜູ້ທີ່ມີຜົນງານ**

- ແຕ່ງຕັງປູ່ລັງງເປັນແສນເມືອງ(ອ້າຍຜາວຽງ) ເປັນແມ່ທັບໃຫຍ່(ເສນາທິການສູງສຸດ)ຮັບຜິດຊອບແຜ່ນດິນລ້ານຊ້າງທັງມວນ.
- ແຕ່ງຕັ້ງໃຫ້ໝື່ນກະບອງເປັນຮອງແມ່ທັບໃຫຍ່ ຫຼື ເປັນເສນາທິການທະຫານສູງສຸດຮັບຜິດຊອບແຜ່ນດິນລ້ານຊ້າງທັງມວນ.
- ແຕ່ງຕັ້ງໃຫ້ໝື່ນຫຼວງ, ພະຍາເມືອງຂວາ, ພະຍາເມືອງຊ້າຍ, ເຈົ້າພູມເໜືອ, ເຈົ້າພູມໃຕ້ທັງ 5 ພະຍາເປັນແມ່ທັບ,ທັງ5ຮັບຜິດຊອບແຜ່ນດິນລ້ານຊ້າງທັງມວນແບ່ງເຂດກັນຮັບຜິດຊອບ
- ແຕ່ງຕັ້ງໃຫ້ພະຍາໝື່ນໜ້າ ດຳລົງຕຳແໜ່ງເປັນເຈົ້າຫໍແທ່ນ (ເຈົ້າພູມໜ້າ) ຫຼື ຂຸນລາຊະວົງໜ້າ (ກົມໜ້າ ຫຼື ກົມວັງໜ້າ).
- ແຕ່ງຕັ້ງໃຫ້ເຈົ້າໝື່ນແຜ່ນດຳລົງຕຳແໜ່ງເປັນເຈົ້າຫໍແທ່ນ
- ແຕ່ງຕັ້ງເຈົ້າໝື່ນາເໜືອນ, ໃຫ້ດຳລົງຕຳແໜ່ງເຈົ້າຫໍຫຼັງ ຫຼື ຂຸນລາຊະວົງກ້ຳຊ້າຍ(ກົມຫຼັງ ຫຼື ກົມວັງຫຼັງ).
- ແຕ່ງຕັ້ງເຈົ້າໝື່ນນາໃຕ້ດຳລົງຕຳແໜ່ງເປັນຮອງເຈົ້າຫໍຫຼັງ.
- ແຕ່ງຕັ້ງນາຍຫຼວງເໜືອໃນຖານະເປັນຂຸນພົນທະຫານເອກຜູ້ຮັກສານະຄອນຫຼວງໃຫ້ດຳລົງຕຳແໜ່ງເປັນເຈົ້າຄຸ້ມຄອງກ້ຳໜ້າ (ຜູ້ພິພາກສານຝ່າຍໜ້າ).
- ແຕ່ງຕັ້ງນາຍຫຼວງໃຕ້ດຳລົງຕຳແໜ່ງເປັນເຈົ້າຄຸ້ມຄອງໃນກ້ຳຫຼັງ(ສານຝ່າຍຫຼັງຄືສານຝ່າຍນາງສະໜົມ)

ນອກຈາກນີ້ແລ້ວບັນດານາຍທະຫານຂັ້ນຜູ້ນ້ອຍລົງມາສັບຊ້ອນໄປຢູ່ໃນໜ້າທີ່ຕຳແໜ່ງທີ່ເໝາະສົມຂອງໃຜລາວ ແລະ ພ້ອມນັ້ນເຈົ້າຟ້າງຸ່ມຍັງໄດ້ຈັດລະບຽບການປົກຄອງຄືນໃໝ່.

**ການແບ່ງເຂດການປົກຄອງ**

ເຈົ້າຟ້າງຸ່ມແບ່ງເຂດການປົກຄອງອອກເປັນສອງສ່ວນຄື: ເຂດນະຄອນຫຼວງ ແລະ ເຂດຫົວເມືອງ(ຂັ້ນທ້ອງຖິ່ນ)

**ເມືອງຫຼວງ:** ເປັນສູນກາງທາງດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ. ທັງເປັນບ່ອນຢູ່ຂອງເຈົ້າຊີວິດ ແລະ ເຊື້ອສາຍກະສັດ

**ຂັ້ນທ້ອງຖິ່ນ:** ແບ່ງເປັນສາມລັກສະນະຄື:

- **ຂັ້ນເຂື່ອນເມືອງ**
- **ຂັ້ນແຂວງເມືອງ**
- **ຂັ້ນຂອບເມືອງ ຫຼື ເມືອງຂອບດ່ານ**

**ຂ. ການແຕ່ງຕັ້ງຜູ້ທີ່ມີຜົນງານໄປປົກຄອງເມືອງສຳຄັນ**

- ແຕ່ງຕັ້ງໝື່ນຈັນ (ບາຖຸມ) ໄປປົກຄອງເມືອງວຽງຈັນ
- ແຕ່ງຕັ້ງພະຍາເພົາ (ຄົນໃໝ່) ໄປປົກຄອງເມືອງວຽງຄຳ
- ແຕ່ງຕັ້ງໝື່ນແກ (ບາຈິແຂ້) ໄປປົກຄອງເມືອງວຽງແກ
- ແຕ່ງຕັ້ງໝື່ນພະນ້ຳຮຸ່ງ ໄປປົກຄອງເມືອງພະນ້ຳຮຸ່ງ
- ແຕ່ງຕັ້ງພະຍາຊຽງສາໄປປົກຄອງເມືອງຊຽງສາ.

ເວລານີ້ເຈົ້າຟ້າງຸ່ມໄດ້ວາງຂໍ້ກຳນົດເພື່ອຄຸ້ມຄອງສັງຄົມ ໂດຍຍຶດຖືເອົາຂະນົບທຳນຽມ ແລະ ຮີດຄອງປະເພນີໃຊ້ໃນການປົກຄອງເຊິ່ງລວມມີສອງປະເພດຄື: ທຳນຽມ (ກົດໝາຍ) ສຳລັບຜູ້ຖືກປົກຄອງຄື: ປະຊາຊົນທົ່ວໄປ ແລະ ທຳນຽມ  (ກົດໝາຍ) ສຳລັບຜູ້ປົກຄອງຄື: ເຈົ້າຊີວິດ,  ຂຸນນາງ ແລະ ເຈົ້າທາດ.ສັງຄົມລ້ານຊ້າງໃນເວລານີ້ແບ່ງຖານະທາງສັງຄົມອອກເປັນ 2 ຊົນຊັ້ນຄື:

- ຊົນຊັ້ນຜູ້ປົກຄອງ (ເຈົ້າຊີວິດ, ຂຸນນາງ) ຜູ້ມີອຳນາດສູງສຸດແມ່ນກະສັດຮອງລົງມາແມ່ນເຊື້ອສາຍຂອງເຈົ້າຊີວິດ
- ຊົນຊັ້ນຜູ້ຖືກປົກຄອງ (ປະຊາຊົນທົ່ວໄປ)ໃນຊົນຊັ້ນນີ້ກໍ່ມີການແບ່ງຖານະ ຄື:ຜູ້ມີຜົນງານ, ຜູ້ຮັ່ງມີ ແລະ ຜູ້ທຸກຍາກ. ສຳລັບຜູ້ມີຜົນງານຈະໄດ້ເລື່ອນຂັ້ນຂຶ້ນເປັນຜູ້ມີຖານະສູງໃນສັງຄົມ. ປີ ຄ ສ 1359 ພະນາງແກ້ວເກງຍາຜູ້ເປັນອັກຄະລະມະເຫສີຂອງເຈົ້າຟ້າງຸ່ມ ໄດ້ຮ້ອງຂໍໃຫ້ພະອົງລົງໄປນຳເອົາສາສະໜາພຸດຈາກນະຄອນອັງກໍຂຶ້ນມາອານາຈັກລາວລ້ານຊ້າງ, ເວລານັ້ນພະອົງມີຄວາມຍິນດີ ຈຶ່ງແຕ່ງໃຫ້ເສນາອາມາດນຳເຄື່ອງບັນນາການຖວາຍແກ່ເຈົ້າຊີວິດອັງກໍ. ເຈົ້າຊີວິດ ຂະເໝນແຫ່ງນະຄອນອັງກໍຜູ້ເປັນພໍ່ເຖົ້າເມື່ອໄດ້ຮັບສານຂອງເຈົ້າຟ້າງຸ່ມຍິນດີທີ່ສຸດ ຈຶ່ງໄດ້ນິມົນເອົາພະມະຫາປາສະມັນ, ມະຫາເທບລັງກາ, ພິຊຸສົງ 20  ຕົນພ້ອມທັງນັກປາດຜູ້ທີ່ຮຽນຈົບພະໄຕປິດົກຊື່ ນໍຣະສິງ, ນໍຣະເດດ, ນໍຣະສາດ ພ້ອມທັງໄດ້ລາຊະທານພະພຸດທະຮູບປັດຈະໂສກະອົງໜຶ່ງ ນາມວ່າ "ພະບາງ" ໃຫ້ເປັນສິ່ງສັກກະລະ

ບູຊາແກ່ຊາວລ້ານຊ້າງພ້ອມນັ້ນເຈົ້າຊີວິດຂະເໝນຍັງໄດ້ມອບໜໍ່ຕົ້ນມະຫາໂພ, ຄຳພີພະໄຕປີດົກ, ນາຍຊ່າງຫຼໍ່ພະ, ຊ່າງເຫຼັກ, ຊ່າງເງິນ, ຊ່າງຄຳ ຕະຫຼອດຮອດເຄື່ອງດຸລິຍານດົນຕີ, ປີ່ພາ, ລະນາດ, ຄ້ອງວົງ ພ້ອມດ້ວຍບໍລິວານອຸປະຖາກວັດ, ອຸປະຖາກນັກບວດອາຈານ 100 ຄົນ ພ້ອມທັງບໍລິວານຊ່ອຍນາງແກ້ວເກງຍາ ນຳອີກ 1.000 ຄົນ ແລະ ນັກປາດ 10 ຄົນ ເດີນທາງເຂົ້າສູ່ນະຄອນຊຽງທອງ ສ່ວນພະບາງໄດ້ນຳມາສະຖິດຢູ່ເມືອງວຽງຄຳວັດຊຽງແກ້ວ ແລະ ນັບຕັ້ງແຕ່ນັ້ນມາສາສະໜາພຸດໄດ້ກາຍເປັນສາສະໜາຂອງຊາວລາວຈົນເຖິງທຸກວັນນີ້.

## 2. ອານາຈັກລາວລ້ານຊ້າງແຕ່ ປີ ຄ. ສ 1373-1560

### 1) ອະນາຈັກລາວລ້ານຊ້າງສະໄໝພະຍາສາມແສນໄທ ປີຄ.ສ 1374-1417

ເມື່ອເຈົ້າຟ້າງຸ່ມສິ້ນພະຊົນ (ປີ ຄ.ສ 1373ທີ່ເມືອງນ່ານ) ເສນາອາມາດກໍ່ໄດ້ເຊີນເອົາທ້າວອຸ່ນເຮືອນ (ອຸ່ນເມືອງ) ຜູ້ເປັນໂອລົດຂຶ້ນປົກຄອງເມືອງຊຽງທອງ ແທນພະບິດາ ແລະ ພາຍຫຼັງທີ່ພະອົງຂຶ້ນຄອງລາດແລ້ວກໍ່ໄດ້ປ່ຽນພະນາມມາເປັນ "ພະຍາສາມແສນໄທ ໄຕພູວະນາ ຖາທິປັດສີສັດຕະນະຄານະຫຸດ" ພ້ອມນັ້ນເສນາອາມາດ ໄດ້ອະພິເສກສົມລົດ ນາງນ້ອຍນົງຮຽວເປັນເອກອັກຄະຣະມະເຫສີ ຂອງເຈົ້າສາມແສນໄທ ແລະ ຖວາຍພະນາມວ່າ "ເຈົ້ານາງແທ່ນຟ້າ. ພະອົງໄດ້ດຳເນີນການປັບປຸງ ແລະ ຈັດລະບຽບການປົກຄອງຄືນໃໝ່.

ກ. ດ້ານການປົກຄອງ: ອານາຈັກລາວລ້ານຊ້າງຍັງຄົງຮັກສາຮູບແບບການເດີມ; ໂດຍສະເພາະແມ່ນການສືບທອດລາຊະບັນລັງແມ່ນສືບທອດທາງສາຍເລືອດ, ຈາກພໍ່ສູ່ລູກ(ລູກຊາຍກົກ, ຖ້າວ່າບໍ່ມີລູກເອົານ້ອງຊາຍຂຶ້ນປົກຄອງແທນ) ການຈັດການປົກຄອງແມ່ນຮັກສາອຳນາດລວມສູນຊຶ່ງມີຄວາມໝັ້ນຄົງກວ່າເກົ່າເພາະມີລັກສານະເຄືອຍາດ ໂດຍການແຕ່ງຕັ້ງໃຫ້ລາຊະບຸດ (ລູດຊາຍ) ເຂົ້າຮັບຕຳແໜ່ງສຳຄັນ ແລະ ໄປປົກຄອງເມືອງຕ່າງໆຊຶ່ງຈະເຫັນໄດ້ໃນສະໄໝພະຍາສາມແສນໄທເຊັ່ນ:

- ແຕ່ງຕັ້ງທ້າວລ້ານຄຳແດງໄປເປັນແສນຫຼວງ
- ແຕ່ງຕັ້ງເຈົ້າກ້ອນຄຳໄປປົກຄອງເມືອງວຽງຜານໍ້າຮຸ່ງ-ຊຽງສາ
- ແຕ່ງຕັ້ງເຈົ້າວັງບູລີ ໄປປົກຄອງເມືອງວຽງຈັນ
- ແຕ່ງຕັ້ງເຈົ້າຄຳເຕັມຊາວໄປປົກຄອງເມືອງປາກຫ້ວຍຫຼວງ(ອຳເພີໂພນພີໄສ ຈັ່ງຫວັດໜອງຄາຍປະເທດໄທ)
- ແຕ່ງຕັ້ງເຈົ້າລີໄຊ ໄປປົກຄອງເມືອງກະບອງ

ຂ. ການສຳຫຼວດພົນເສິກ: ເມື່ອເຈົ້າອຸ່ນເຮືອນຂຶ້ນຄອງລາຊະບັນລັງພະອົງໄດ້ສືບຕໍ່ພາລະກິດຂອງພະບິດາໂດຍສະເພາະເອົາໃຈໃສ່ສ້າງກອງກຳລັງປ້ອງກັນອານາຈັກເຊິ່ງຖືກເອົາວຽກງານສຳຫຼວດພົນເສິກເປັນວຽກງານທຳອິດ, ຈາກການສຳຫຼວດພົນເສິກທີ່ອານາຈັກຄັ້ງນີ້ສາມາດຮູ້ວ່າ ທີ່ວອານາຈັກມີພົນລະເມືອງທີ່ເປັນຊາຍສະກັນເຖິງ 700.000 ຄົນ ໃນນັ້ນມີລາວເທິງ400.000ຄົນ ແລະ ພົນລະເມືອງທີ່ເປັນຊາວໄຕ (ກຸ່ມຄົນໄທ) 300.000 ຄົນ. ດັ່ງນັ້ນປະຊາຊົນຈຶ່ງເອີ້ນ ເຈົ້າອຸ່ນເຮືອນວ່າ "ພະຍາສາມແສນໄທໄຕພູວະນາຖາທິປັດສີສັດຕະນາຄານະຫຸດ"

ໃນການຈັດຕັ້ງກອງກຳລັງພົນພະອົງໄດ້ແບ່ງກຳລັງອອກເປັນ 2 ກອງທັບໃຫຍ່ຄື: ກອງທັບຫຼວງ ແລະ ກອງທັບທ້ອງຖິ່ນ.

- ກອງທັບຫຼວງມີ 5 ຫົວເສິກເຊິ່ງມີຈຳນວນພົນທັງໝົດ 300.000ຄົນ (ຫົວເສິກໜຶ່ງມີ 6 ໝື່ນຄົນ) ແຕ່ລະຫົວເສິກຈະແບ່ງເປັນສາມພົນເສິກອີກເຊັ່ນ:
  - ພົນເສິກສູ້ຣົບ (ພົນລຳຫອກຫົວເສິກ) ມີ 3 ໝື່ນຄົນ
  - ພົນເສິກລຳລຽງ (ພົນຫາບເຂົ້າໄຖ່ເຂົ້າຖົງ) ມີ 2 ໝື່ນຄົນ
  - ພົນເສິກແນວຫຼັງ (ພົນເຝົ້າວຽງ) ມີ 1 ໝື່ນຄົນ
- ກອງທັບທ້ອງຖິ່ນ: ເຮັດໜ້າທີ່ເປັນກອງໜູນໃຫ້ແກ່ທັບຫຼວງ, ກອງທັບນີ້ແມ່ນຮັບຄຳສັ່ງໂດຍກົງຈາກກອງທັບຫຼວງເຊິ່ງມີຫົວເມືອງຕ່າງໆເຊັ່ນ:
  - ຫົວເສິກວຽງຈັນ
  - ຫົວເສິກວຽງແກ
  - ຫົວເສິກວຽງກະບອງ
  - ຫົວເສິກເມືອງພວນ

    ແລະ ຫົວເສິກເມືອງອື່ນໆອີກ.

**ຄ. ການສ້າງສຳພັນທະໄມຕີກັບອະນາຈັດອ້ອມຂ້າງ:** ຍ້ອນອານາຈັກລ້ານຊ້າງ ຢູ່ໃນຄວາມສະຫງົບ, ມີຄວາມເຂັ້ມແຂງ, ມີກຳລັງປ້ອງກັນ ແໜ້ນແກ່ນ, ທັງເປັນເຂດທີ່ອຸດົມຮັ່ງມີໄປດ້ວຍຊັບພະຍາກອນທຳມະຊາດ. ຖ້າທຽບໃສ່ອານາຈັກອື່ນໆເຫັນວ່າ ລ້ານຊ້າງມີທ່າອ່ຽງທີ່ດີກວ່າ. ດັ່ງນັ້ນ, ການພົວພັນກັບອານາຈັກອື່ນລ້ານຊ້າງຈິ່ງຢູ່ໃນສະຖານະສູງກວ່າ ແຕ່ເປັນການພົວພັນແບບບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນ.

**ອານາຈັກລ້ານນາ:**

ຕະຫຼອດໄລຍະແຫ່ງການພົວພັນລະຫວ່າງອານາຈັກລ້ານຊ້າງ ແລະ ອານາຈັກລ້ານນາແມ່ນມີສາຍພົວພັນອັນດີນັບຕັ້ງແຕ່ສະໄໝເຈົ້າຟ້າງຸ່ມແຫ່ງລ້ານຊ້າງກັບທ້າວຜາຍູແຫ່ງລ້ານນາແບ່ງເຂດແດນກັນປະຊາຊົນທັງສອງກໍ່ຍອມຮັບຮູ້ເຂດນ້ຳແດນດິນຊຶ່ງກັນ ແລະ ກັນ ເຈົ້າແຜ່ນດິນແຫ່ງລ້ານນາຍັງຄົງຮັກສາຄຳໝັ້ນສັນຍາທີ່ມີມາແຕ່ກ່ອນຊຶ່ງຈະເຫັນໃນຊ່ວງການປົກຄອງຂອງພະຍາສາມແສນໄທ (ປີ ຄ ສ 1373-1416) ເຈົ້າຊີວິດແຫ່ງລ້ານນາໄດ້ສົ່ງເຄື່ອງບັນນາການ ແລະ ທຳການຜູກສາຍສຳພັນທະໄມຕີທາງສາຍເລືອດ ໂດຍສົ່ງນາງນ້ອຍອ່ອນສົມາເປັນມະເຫສີຂອງພະຍາສາມແສນໄທ.

**ອານາຈັກອາຍຸດທະຍາ**

ເວລານີ້ອາຍຸດທະຍາບໍ່ມີຄວາມເປັນເອກະພາບເພາະຕົກຢູ່ໃຕ້ 2 ອຳນາດ ຄື: ສຸໂຂໄທ ແລະ ອາຍຸດທະຍາ ແຕ່ອານາຈັກອາຍຸດທະຍາກໍ່ຍັງປະຕິບັດຕາມຄຳໝັ້ນສັນຍາທີ່ມີມາແຕ່ສະໄໝເຈົ້າຟ້າງຸ່ມລ້ານຊ້າງ-ອາຍຸດທະຍາ ພົວພັນກັນແບບບ້ານພີ່ເມືອງນ້ອງເຊິ່ງຈະເຫັນໄດ້ໃນສະໄໝການປົກຄອງຂອງພະຍາສາມແສນໄທ ອານາຈັກອາຍຸດທະຍາໄດ້ຈັດສົ່ງເຄື່ອງບັນນາການພ້ອມດ້ວຍນາງແກ້ວຍອດຟ້າກັນລະຍານີ ມາເປັນມະເຫສີຂອງພະຍາສາມແສນໄທ.

**ອານາຈັກດາຍຫວຽດ**

ອານາຈັກລ້ານຊ້າງກັບດາຍຫວຽດມີຊາຍແດນຮ່ວມກັນພົວພັນກັນແບບພີ່ນ້ອງ, ຊ່ວຍເຫຼືອເຊິ່ງກັນແລະກັນຕະຫຼອດມາເຊັ່ນ: ລ້ານຊ້າງຊ່ວຍເຫຼືອດາຍຫວຽດດ້ານສະບຽງອາຫານ ແລະ ອາວຸດໃນການເຮັດສົງຄາມຕ່າງໆ. ໃນລາຊະການຂອງພະຍາລ້ານຄຳແດງ ແລະ ການພົວພັນຍັງສືບຕໍ່ມີໄມຕີທີ່ດີຕໍ່ກັນ

2) **ລາດຊະການຂອງພະຍາລ້ານຄຳແດງ ປີ ຄ.ສ 1417-1428**

ເມື່ອພະເຈົ້າສາມແສນໄທສະຫວັນນາຄົດແລ້ວ, ເສນາອາມາດຈຶ່ງໄດ້ອະພິເສດ ທ້າວລ້ານຄຳແດງຂຶ້ນຄອງລາຊະສົມບັດແທນໃນປີຄສ 1417 ຊົງພະນາມວ່າ"ພະເຈົ້າລ້ານຄຳແດງ" ເວລານັ້ນພະອົງມີອາຍຸ 30 ປີ ຫຼັງຈາກໄດ້ຂຶ້ນຄອງລາຊະສົມບັດແລ້ວພະອົງກໍ່ໄດ້ສືບຕໍ່ຂະຫຍາຍອຳນາດການປົກຄອງໃຫ້ມີຄວາມເຂັ້ມແຂງຮອບດ້ານໂດຍສະເພາະ ແມ່ນເອົາໃຈໃສ່ເສີມຂະຫຍາຍສາສະໜາພຸດ ເຊິ່ງຖືວ່າເປັນບ່ອນເຜີຍແຜ່ວັດທະນະທຳທີ່ສຳຄັນອີກທາງໜຶ່ງ. ພ້ອມນັ້ນພະອົງໄດ້ສ້າງວັດຕ່າງໆ ເຊັ່ນ: ວັດສວນແຖນ ແລະ ເອົາກະດູກຂອງພະຍາສາມແສນໄທໄປເກັບມ້ຽນໃນທີ່ນັ້ນ.

ສະເພາະວຽກການຕ່າງປະເທດພະອົງຍັງໄດ້ສືບຕໍ່ສ້າງສາຍພົວພັນອັນດີງາມກັບບັນດາອານາຈັກອ້ອມຂ້າງ. ພິເສດການພົວພັນກັບອານາຈັກດາຍຫວຽດ, ສະແດງອອກໃນປີ ຄ.ສ 1421 ອານາຈັກດາຍຫວຽດຖືກຮຸກຮານຈາກຈີນ ພະຍາລ້ານຄຳແດງ ກໍ່ຈິ່ງໃຈສົ່ງກຳລັງທະຫານຂອງຕົນນຳພາໂດຍພະຍາພຸດທະວົງເຈົ້າເມືອງ ເມືອງພວນ ອັນມີກຳລັງເຖິງ 30.000 ຄົນ ແຕ່ຮອດສະໜາມຮົບພະຍາມພຸດທະວົງພັດນຳກຳລັງໄປສົມທົບກັບກັບຈີນຕີດາຍຫວຽດເຮັດໃຫ້ຄວາມສຳພັນຂອງລ້ານຊ້າງກັບດາຍຫວຽດທີ່ເຄີຍມີມາກ່ອນຕ້ອງພັງທະລາຍລົງ ດັ່ງນັ້ນ. ພາຍຫຼັງກອງທັບດາຍຫວຽດໄດ້ຮັບໄຊຊະນະ ແລະ ຂັບໄລ່ສັກດີນາຈີນອອກຈາກດິນແດນໄດ້ແລ້ວເຈົ້າຊີວິດດາຍຫວຽດກໍ່ໄດ້ສັ່ງໃຫ້ນາຍທະຫານຄຸມກອງທະຫານລ້ານຊ້າງທີ່ຍັງເຫຼືອກັບອານາຈັກລ້ານຊ້າງເຫດການດັ່ງກ່າວນີ້ເຖິງວ່າຈະບໍ່ມີບັນຫາຮ້າຍແຮງເກີດຂຶ້ນກໍ່ຕາມແຕ່ກໍ່ເປັນຜົນເຮັດໃຫ້ຄວາມສຳພັນລະຫວ່າງລ້ານຊ້າງກັບ ດາຍຫວຽດຊຸດໂຊມລົງ.

ພໍມາຮອດຄສ 1427 ເຈົ້າລ້ານຄຳແດງສິ້ນພະຊົນ, ເສນາອາມາດແລະປະຊາຊົນ ຈຶ່ງໄດ້ສ້າງວັດແຫ່ງໜຶ່ງຂຶ້ນຊື່ວ່າ"ວັດມະໂນລົມ" ເພື່ອເກັບກະດູກຂອງພະອົງໄວ້. ຕໍ່ຈາກນັ້ນມາອານາຈັກຊຽງທອງກໍ່ເກີດຄວາມວຸ້ນວາຍເນື່ອງຈາກນາງມະຫາເທວີ ນ້ອງສາວຂອງພະເຈົ້າສາມແສນໄທຕ້ອງການຢາກໃຫ້ສາມີຂອງຕົນເປັນຜູ້ມີອຳນາດ ແລະ ເປັນເຈົ້າແຜ່ນດິນໃນນະຄອນຊຽງທອງ.

ພາຍຫຼັງການສິ້ນພະຊົນຂອງພະເຈົ້າລ້ານຄຳແດງ ອຳນາດການປົກຄອງໃນນະຄອນຊຽງທອງກໍ່ຕົກຢູ່ໃນກຳມື ຂອງມະຫາເທວີແກ້ວພິມພາ ເຊິ່ງເປັນນ້ອງສາວຂອງພະຍາສາມແສນໄທທີ່ເຄີຍໄດ້ຮັບຄວາມເຄົາລົບນັບຖືຈາກປະຊາຊົນ ແລະ ມີອຳນາດສູງສຸດໃນອານາຈັກຊຽງທອງ. ໃນເວລາດຽວກັນນັ້ນ ນາງ ໄດ້ມີຄວາມສະໜິດສະໜົມກັບອ້າຍຜາວຽງ ເປັນແສນຫຼວງຊຽງລໍເຊິ່ງມີຕຳແໜ່ງສູງສຸດ, ມີອຳນາດບັງຄັບບັນຊາຝ່າຍທະຫານ ແລະພົນລະເຮືອນ ຕໍ່ຈາກນັ້ນນາງກໍ່ໄດ້ວາງແຜນໃຫ້ຜົວຂອງນາງຄ່ອຍໆຂຶ້ນເປັນຜູ້ສຳເລັດລາຊະການແຜ່ນດິນ. ຍ້ອນແຜນດັ່ງກ່າວນັ້ນຈຶ່ງໄດເຮັດໃຫ້ເຈົ້າລ້ານຄຳແດງ ເຈົ້າຊີວິດຜູ້ໜຸ່ມນ້ອຍ ກາຍເປັນເຈົ້າຊີວິດທີ່ເຄາະຮ້າຍ ໂດຍແມ່ນນາງມະຫາເທວີຫຼອກລວງໄປຂ້າຄືກັນກັບກະສັດອົງອື່ນໆເຮົາຈະເຫັນໃນໄລຍະ 7 ປີ ແຕ່ປີ ຄ ສ 1428-1435 ໄດ້ມີກະສັດເຖິງ 6 ພະອົງໄດ້ຖືກ ນາງມະຫາເທວີຫຼອກໄປຂ້າລາຍລະອຽດດັ່ງນີ້:

- ປີ ຄ ສ 1428-1429 ພະຍາພິມມະທັດໂອລົດຂອງພະເຈົ້າລ້ານຄຳແດງສະເຫວີຍລາດໄດ້ 10 ເດືອນກໍ່ຖືກຫຼອກໄປຂ້າຢູ່ຜາດ່ຽວ
- ປີ ຄ ສ 1430 ທ້າວຄຳເຕັມຊ້ຳ ຫຼື ພະຍາປາກຫວຍຫຼວງສະເຫວີຍລາດໄດ້ 5 ເດືອນຖືກປ້ອງຂ້າຈຶ່ງລັກໜີໄປຢູ່ປາກຫ້ວຍຫຼວງໄດ້ 1 ປີ ກໍ່ເສຍຊີວິດ
- ປີ ຄ ສ 1430 ທ້າວໝື່ນໄຊ ໂອລົດຂອງພະເຈົ້າສາມແສນໄທຂຶ້ນສະເຫວີຍລາດໄດ້ 6 ເດືອນເມື່ອຮູ້ຕົນຖືກປອງຮາຍຈຶ່ງຫຼົບໜີມາວຽງຈັນ ແລະ ປະຕິເສດບໍ່ກັບຄືນເມືອງຊຽງທອງ
- ປີ ຄ ສ 1431-1434 ພະຍາຟ້າໄຄ ໂອລົດຂອງພະຍາຟ້າຄົ້ມຂຶ້ນສະເຫວີຍລາດໄດ້ 3 ປີ ຖືກຂ້າຕາຍຢູ່ຜາດ່ຽວ
- ປີ ຄ ສ 1435 ທ້າວຄຳກ້ອນ  (ພະຍາຊຽງສາ) ປົກຄອງເມືອງໄດ້ 7 ເດືອນກໍ່ຖືກອຸບາຍໄປຂ້າຢູ່ຄົກເຮືອ
- ປີ ຄ ສ 1436 ພະຍາຍຸຄົນ (ຍຸຄອນ) ໂອລົດຂອງພະຍາລ້ານຄຳແດງສະເຫວີຍລາດໄດ້ 8 ເດືອນ (ຖືກຂ້າຢູ່ທີ່ຄົກເຮືອ)

ຈາກນັ້ນກໍ່ໄດ້ເຊື້ອເຊີນເອົາທ້າວວັງບູລີ ລູກຊາຍຂອງພະຍາສາມແສນໄທ ທີ່ປົກຄອງຢູ່ວຽງຈັນຂຶ້ນມາເປັນເຈົ້າຊີວິດ ລາວລ້ານຊ້າງ ແຕ່ທ້າວ ວັງບູລີ ໄດ້ຮູ້ຄວາມໂຫດຮ້າຍປ່າເຖື່ອນຂອງນາງມະຫາເທວີ ທ້າວວັງບູລີຈຶ່ງໄດ້ປະຕິເສດຄຳເຊື້ອເຊີນດັ່ງກ່າວ. ຕໍ່ມາຈຶ່ງມີທ້າວ ຄຳເກີດ ທີ່ອ້າງວ່າຕົນແມ່ນພະຍາສາມແສນໄທ ມາເກີດເພາະທ້າວຄຳເກີດຈົດຈຳທຸກເຫດການ ຕະຫຼອດຮອດຄົນໃຊ້ໃນພາລະຊະວັງ ກໍ່ຈົດຈຳໄດ້ຫມົດ ດັ່ງນັ້ນ ນາງມະຫາເທວີ ຈຶ່ງໄດ້ເຊື້ອເຊີນເອົາທ້າວຄຳເກີດ ຂຶ້ນເປັນເຈົ້າຊີວິດ ແຕ່ຂຶ້ນໄດ້ 2 ປີ ກໍ່ໄດ້ເສຍຊີວິດ ເຮັດໃຫ້ອຳນາດທັງໝົດໃນອານາຈັກຊຽງທອງ ຕົກຢູ່ໃຕ້ອິດທິພົນຂອງນາງມະຫາເທວີ ຜູ້ໃຈບາບ ພ້ອມນັ້ນນາງກໍ່ພະຍານາມກຳຈັດເສນາມົນຕີ ພະສົງອິງຄະເຈົ້າຕະຫຼອດຮອດປະຊາຊົນ ທີ່ທຳການຂັດຂວາງຈົນເກີດການອົບພະຍົບອອກຈາກນະຄອນຊຽງທອງ ເປັນຈຳນວນຫຼວງຫຼາຍ ໃນເວລານີ້ມີກຸ່ມເຈົ້າຊາຍ ຄື ນໍລະສິງ , ນໍຣະເດດ, ນໍຣະຣາດ ແລະ ນໍຣະລາຍ ພ້ອມດ້ວຍພະສົງອິງຄະເຈົ້າ, ໄດ້ພ້ອມກັນເຕົ້າໂຮມກຳລັງ ເພື່ອຊອກຫາວິທີກຳຈັດນາງ ມະຫາເທວີ  ແລະ ພັກພວກທີ່ທຳຕົວເປັນກາລະກິນີຕໍ່ສັງຄົມໃຫ້ສິ້ນໄປ.

ພໍຕົກມາຮອດປີ ຄ.ສ 1438 ກຸ່ມນັກປາດທັງ 4 ໄດ້ເຕົ້າໂຮມກຳລັງ ເຂົ້າບຸກປິດລ້ອມພະລາຊະວັງແລ້ວຈັບເອົານາງ ມະຫາເທວີ ແລະ ແສນຫຼວງຊຽງລໍ ໄປປະຫານຊີວິດທີກ້ອງຜາດ່ຽວ (ຢູ່ກາງນ້ຳຂອງກົງກັນຂ້າມກັບຊຽງທອງ) ຫຼັງຈາກນັ້ນເຮັດໃຫ້ຊຽງທອງ ຫວ່າງເປົ່າບໍ່ມີກະສັດປົກຄອງ ເຖິງ 3 ປີ ດັ່ງນັ້ນປະຊາຊົນ ແລະ ເສນາມຸນຕີ ທັງຫຼາຍໄດ້ໄປເຊືອເຊີນເອົາເຈົ້າວັງບູລີ (ລູກຊາຍຄົນທີ 4 ຂອງພະເຈົ້າສາມແສນໄທ) ຜູ້ປົກຄອງເມືອງວຽງຈັນຂຶ້ນມາເປັນເຈົ້າຊີວິດລ້ານຊ້າງໃນ ປີ ຄ.ສ 1441 ແລະ ໃສ່ຊື່ວ່າ “ພະຍາໄຊຍະ  ຈັກກະພັດແຜ່ນແຜ້ວ”

ເຫດການປັ່ນປ່ວນຂອງກຸ່ມກະບົດໄດ້ແກ່ຍາວ ເປັນເວລາປະມານ 10 ປີ  (ປີຄ.ສ 1428 ຫາ1438) ແຕ່ບັນດາຂຸນນາງ ແລະ ເສນາອາມາດ ຫຼາຍຄົນກໍ່ບໍ່ກ້າທີ່ຈະຕໍ່ຕ້ານ ອິດທິພົນດັ່ງກ່າວເຖີງຢ່າງໃດກໍ່ຕາມ ຍັງມີກຸ່ມນັກປາດທັງ 4 ຄື: ນໍຣະສິງ, ນໍຣະເດດ, ນໍຣະຣາດ, ນໍຣະຣາຍ. ໄດ້ຂົນຂວາຍມະຫາຊົນ ແລະ ເສນາມູນຕີຜູ້ກ້າວໜ້າ, ຜູ້ທີ່ຕໍ່ຕ້ານການກະທຳຂອງກຸ່ມນາງ ມະຫາເທວີ ໂດຍໄດ້ຮັບການປຶກສາຈາກພະສົງ.

ກຸ່ມນັກປາດໄດ້ນໍາພາປະຊາຊົນບຸກເຂົ້າພະລາຊະວັງຈັບເອົາ ນາງມະຫາເທວີ, ອ້າຍວຽງຜາ ແລະ ພັກພວກ ໄປລົງໂທດສະເພາະ ນາງມະຫາເທວີ ແລະ ອ້າຍວຽງຜາ ໄດ້ຖືກຈັບມັດທໍລະມານ ດ້ວຍການບັງຄັບ ໃຫ້ນອນຫົວມູນຫີນ ຕີນຈຸ່ມນໍ້າ ຈົນຂາດໃຈຕາຍຢູ່ກາງນໍ້າຂອງ ແລະ ຕໍໜ້າທ່າວັດວຽງທອງ.

**3) ລາດຊະການຂອງພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ປີ 1441-1479**

ພະເຈົ້າຈັກກະພັດແຜ່ນແຜ້ວ ເປັນໂອລົດຂອງພະເຈົ້າສາມແສນໄທ ທີ່ມີກັບມະເຫສີນາງແກ້ວຍອດຟ້າ (ລາຊະທິດາແຫ່ງກຸງສີອາຍຸດທະຍາ) ພະອົງປະສູດໃນປີມະແມຈຸລະສັກກະລາດ 777 (ຄ.ສ 1415) ໄດ້ຂຶ້ນປົກຄອງເມືອງໃນປີ ຄ.ສ 1441 ພະອົງຊົງພະນາມວ່າ “ສົມເດັດເຈົ້າ ໄຊຍະ ຈັກກະພັດແຜ່ນແຜ້ວ” ເມື່ອສະເດັດຂຶ້ນຄອງລາຊະບັນລັງແລ້ວ ພະອົງສະຖາປະນາພະລາ ຊະຄູມະຫາສະໝຸດ ທະໂຄດຂຶ້ນເປັນພະທໍາມະເສນາສະຖົດ ຢູ່ວັງມະໂນລົມ. ໃຫ້ພະມະຫາຍາຍຄໍາພີ ເປັນພະສັງຄະເສນາສະຖົດ ຢູ່ວັງໂບດກາງເມືອງ ຍ້ອນທັງພະລາຊະທານອະໄພຍະໂທດໃຫ້ແກ່ຜູ້ກະທໍາຜິດ ພະລາຊະອາຍາ ເຊິ່ງໄດ້ເຂົ້າມາອາໄສຢູ່ໃນວັດ ທັງສອງທີ່ພະລາຊະບິດາ ໄດ້ຊົງປະຫານມາແຕ່ກ່ອນ.

ໃນຂະນະທີ່ພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ສະເດັດຂຶ້ນປົກຄອງຢູ່ຊຽງທອງ ວຽງຈັ້ນໄດ້ມອບໃຫ້ເຈົ້າຊາຍມຸ່ຍເປັນຜູ້ປົກຄອງແທນເວລານັ້ນ ເສນາໃຫຍ່ຝ່າຍວຽງຈັນເຫັນວ່າເຫດການທາງການເມືອງຊຽງທອງຄົງຈະບໍ່ມີຄວາມສະຫງົບສຸກ ຈຶ່ງຍົວະເຍີາໃຫ້ເຈົ້າຊາຍມຸ່ຍໃຫ້ແຍກວຽງຈັນອອກເປັນເອກະລາດ ໜຶ່ງຕ່າງຫາກ ໂດຍກໍານົດເອົາຕາດນໍ້າລົງໄປ (ເຫັນຈະແມ່ນແກ້ງຈັນ) ເມື່ອເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ໄດ້ຊາບຂ່າວນີ້ ຈຶ່ງແຕ່ງຕັ້ງໃຫ້ພວກມະຫາດເລັກປອມຕົວລົງຈັບເຈົ້າຊາຍມຸ່ຍໄປປະຫານຊີວິດທີ່ດອນຈັນ ແລ້ວໃຫ້ຫລານຊາຍຂອງພະອົງຊື່ວ່າ “ພະຍາຈັນທາງອກ” ໃຫ້ເປັນເຈົ້າຄອງນະຄອນວຽງຈັນ.

ສົມເດັດພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ມີລາຊະໂອລົດ 6 ພະອົງແຕ່ລະພະອົງກໍ່ໄດ້ແຕ່ງຕັ້ງໄປປົກຄອງຫົວເມືອງຕ່າງໆດັ່ງນີ:

1. ທ້າວ ກ້ອນແກ້ວ ແຕ່ງຕັ້ງເປັນແສນຫຼວງຊຽງລໍ, ຕໍາແໜ່ງມະຫາອຸປະລາດ
2. ທ້າວ ແທ່ນຄໍາ ແຕ່ງຕັ້ງໄປປົກຄອງເມືອງດ້ານຊ້າຍ
3. ທ້າວ ໝື່ນຫຼວງ ໄດ້ແຕ່ງຕັ້ງໄປປົກຄອງເມືອງກະບອງ
4. ທ້າວ ຫຼ້າແສນໄຕ ແຕ່ງຕັ້ງໃຫ້ໄປປົກຄອງເມືອງວຽງຄໍາ
5. ທ້າວ ວິຊຸນນະລາດ ແຕ່ງຕັ້ງໃຫ້ໄປປົກຄອງເມືອງວຽງແກ.
6. ທ້າວ ເທພາ ແຕ່ງຕັ້ງໃຫ້ໄປປົກຄອງເມືອງຂວາ.

**ສົງຄາມລ້ານຊ້າງດາຍຫວຽດ**

ພະຍາແສນຫຼວງຊຽງລໍເປັນຜູ້ມີອໍານາດສູງສຸດໃນການກະກຽມກໍາລັງ ແລະ ວາງແຜນຕໍ່ຕ້ານກັບກອງທັບດາຍຫວຽດໂດຍຜ່ານກອງປະຊຸມກະກຽມການປ້ອງກັນຊາດໄດ້ເປັນເອກະພາບກັນດັ່ງນີ້:

- ໃຊ້ຍຸດທະວິທີເສິກແບບບ້ານຮ້າງເຮືອນເປົ່າແລະໃຊ້ສົງຄາມແບບກອງຫຼອນຄືເຮັດໃຫ້ນະຄອນຊຽງທອງເປັນເມືອງເປີດໝາຍວ່າບໍ່ໃຫ້ມີປະຊາກອນອາໄສຢູ່ ແລະ ມີການຂົນຍ້າຍຄອບຄົວ

ປະຊາຊົນແລະລາຊະຕະກຸນໄປໄວ້ເມືອງຊຽງຄານມີການຈັດຕັ້ງກຳລັງປະຊາຊົນເປັນກຳລັງສູ້ຮົບແບບກອງຫຼອນ.

- ໃຊ້ວິທີແບບປະຈັນບານ ໂດຍແຕ່ງຕັ້ງກອງທັບຫຼວງມີໜ້າທີ່ປະຈັນບານກັບກອງທັບຂ້າເສິກໂດຍກົງບັນຊາໂດຍພະຍາແສນຫຼວງຊຽງລໍ
- ໃຊ້ຍຸດທະວິທີຫຼອກລໍ້ສັດຕູຄື: ໃຊ້ວິທີແບບຕີຖອນເພື່ອໃຫ້ສັດຕູຕາມມາແລ້ວນຳກອງທະຫານທີ່ດັກໄວ້ອອກມາສະກັດລັດຕີ, ຜູ້ມີໜ້າທີ່ໃນການບັນຊາການນີ້ແມ່ນເຈົ້າແທ່ນຄຳ
- ນອກຈາກນີ້ຍັງແຕ່ງຕັ້ງແມ່ທັບ 4 ຄົນໃຫ້ມີໜ້າທີ່ນຳກອງທັບມາສົມທົບກັນໃນນະຄອນຊຽງທອງ

**ບັ້ນຮົບທີ1:**

ເມື່ອຊາບຂ່າວວ່າກອງທັບດາຍຫວຽດຍົກທັບມາທາງເມືອງພວນ ແລະ ມາຕັ້ງທັບຢູ່ຕີນພູມຸງທັງສອງພາກຕາເວັນອອກ ກອງທັບລາວ 50.000 ຄົນ ແລະ ມ້າ 4000 ໂຕໃຕ້ການບັນຊາຂອງຂຸນພົນທັງ 4ຄື: ນໍຣະສິງ, ນໍຣະເດດ, ນໍຣະລາຍ,ແລະ ນໍຣະລາດທັງສອງຝ່າຍໄດ້ສູ້ຮົບກັນຕະຫຼອດ 3 ມື້ 3 ຄືນຝ່າຍລາວບໍ່ສາມາດຂັບໄລ່ກອງທະຫານຂອງດາຍຫວຽດ(ໄຕໜິງ) ເຖິງແມ່ນວ່າພວກຂ້າເສິກຈະຖືກລົ້ມຕາຍເປັນຈຳນວນຫຼວງຫຼາຍກໍ່ຕາມແຕ່ກໍ່ມີກຳລັງໜຸນເຂົ້າມາເລື້ອຍໆກອງກຳລັງພົນຝ່າຍລາວກໍ່ບົກບາງລົງນາຍທະຫານເອກທັງ 4 ຄື: ນໍຣະສິງ, ນໍຣະເດດ, ນໍຣະລາຍ,ແລະ ນໍຣະລາດ ,ມີຄວາມອິດເມື່ອຍຈົນບໍ່ສາມາດຍົກດາບຟັນໄດ້. ດັ່ງນັ້ນ ກອງທັບໝື່ນຫຼ້າຈິ່ງຖອຍເຂົ້າມາລວມກັບກອງທັບໃຫຍ່ຂອງພະຍາແສນຫຼວງຊຽງລໍຢູ່ທົ່ງນາເຂົ້າຈ້າວ. ສ່ວນແມ່ທັບໃຫຍ່ໄຕໜິງໄດ້ຕັ້ງໝັ້ນຢູ່ຕີນພູມຸງຕິດຕາມສະພາບການ.

**ບັ້ນຮົບທີ2:**

ພໍຮອດມື້ໃໝ່ກອງທັບດາຍຫວຽດກໍ່ຍົກພົນເຂົ້າມາພະຍາແສນຫຼວງຊຽງລໍໄດ້ຈັດຕັ້ງກອງທັບລາວເຂົ້າສູ້ຮົບພາຍໃຕ້ການບັນຊາຂອງພະຍາໝື່ນຫຼວງ, ໝື່ນບຸນ ປະກອບດ້ວຍຈຳນວນພົນເສິກ 80.000 ຄົນ, ຊ້າງ 800 ໂຕ, ອອກມາສະກັດລັດຕີຢູ່ພູຜາພຶ້ງ. ສ່ວນທະຫານເອກທັງ 4 ກໍ່ນຳກຳລັງເຖິງ 50.000ຄົນ, ມ້າເສິກ 400 ໂຕ ໄປລັດຕີທະຫານດາຍຫວຽດຢູ່ທົ່ງນາເຂົ້າຈ້າວບໍລິເວນວັດວິຊຸນຣະຣາດ (ເມືອງຫຼວງພະບາງໃນປັດຈຸບັນ) ສ່ວນພະຍາແສນຫຼວງຊຽງລໍຄຸມພົນເສິກ 40.000 ຄົນ, ຊ້າງເສິກ 400 ໂຕຕັ້ງກຳລັງຢູ່ນາໄຮ່ດຽວ. ກອງທັບລາວທັງສາມໄດ້ຕໍ່ຕ້ານກອງກຳລັງຂອງດາຍຫວຽດຢ່າງດຸເດືອດ, ທະຫານດາຍຫວຽດຖືກຂ້າຕາຍຫຼາຍເທົ່າໃດກໍ່ຍິ່ງຫຼັ່ງໄຫຼເຂົ້າມາຫຼາຍກວ່າເກົ່າ. ໃນເວລາຕໍ່ສູ້ຢ່າງດຸເດືອດ ທະຫານດາຍຫວຽດທັງ 4 ຄື: ດົກກອງ, ອົງໄສ, ອົງກອນ ແລະ ອົງເປົ້ງ ໄດ້ໃຊ້ຊ້າງທັງ 4 ເຂົ້າຫຸ້ມລ້ອມພະຍາຂວາເທພາຫຼວງໝື່ນ ແລະ ໝື່ນບຸນກໍ່ຮີບໃຊ້ຊ້າງເຂົ້າໄປຊ່ວຍໄດ້ເອົາຫອກແທງທະຫານດາຍຫວຽດທັງສີ່ຕາຍຄາຄໍຊ້າງພ້ອມນັ້ນກໍ່ມີທະຫານດາຍຫວຽດ 6 ຄົນຂີ່ຊ້າງຄົນລະໂຕເຂົ້າໄປຊົນຊ້າງພະຍາຂວາເທພາພະຍາຂວາເທພາໄດ້ໃຊ້ງ້າວຟັນທະຫານດາຍຫາຽວດທັງ 6 ຕາຍລົງອີກ ແຕ່ພະຍາຂວາເທພາກໍ່ອິດອ່ອນໂຮຍແຮງແລ້ວຕົກຈາກຫຼັງຊ້າງເຮັດໃຫ້ຖືກທະຫານດາຍຫວຽດຫຸ້ມຈັບແລ້ວຖືກແທງຕາຍຈາກນັ້ນພົນເສິກລາວກໍ່ບົກບາງ ສ່ວນດາຍຫວຽດ ກໍ່ຍັງໜຸນໜົບເຂົ້າມາເລື້ອຍໆຈົນຜ່າສະໜາມຮົບເຂົ້າໄປເຖິງບ່ອນແສນຫຼວງຊຽງລໍຕັ້ງທັບຢູ່.

- **ບັ້ນຮົບທີ3:**

ແມ່ທັບໄຕໝິງໄດ້ຄຸມກຳລັງທັບດາຍຫວຽດທັງໝົດເຂົ້າຮອດກອງທັບຂອງພະຍາແສນຫຼວງຊຽງລໍຕໍ່ໜ້າ ສະພາບການດັ່ງກ່າວນັ້ນແສນຫຼວງຊຽງລໍ ພ້ອມດ້ວຍໝື່ນບຸນ, ໝື່ນຫຼວງ, ນໍຣະສິງ, ນໍຣະເດດ, ນໍຣະລາດ, ນໍຣະລາຍໄດ້ພ້ອມກັນຕໍ່ສູ້ຢ່າງທໍລະຫົດອົດທົນແມ່ທັບໃຫຍ່ໄຕໝິງຖືກແສນຫຼວງຊຽງລໍ ແທງຕາຍຄາຫຼັງຊ້າງ, ເຈົ້າແສນຫຼວງຊຽງລໍກໍ່ຖືກບາດເຈັບສາຫັດ. ຮອງແມ່ທັບປົວຂວາງຊຸນ ໄດ້ເຮັດໜ້າທີ່ແທນແມ່ທັບໄຕໝິງ. ສ່ວນໝື່ນຫຼວງ ແລະ ໝື່ນບຸນຂີ່ຊ້າງໄລ່ແທງທະຫານດາຍຫວຽດຕາຍຫຼາຍຄົນ ໃນທີ່ສຸດຕົນເອງກໍ່ໝົດແຮງຈຶ່ງຕົກຫຼັງຊ້າງແລ້ວຖືກແທງຕາຍກັບສະໜາມຮົບສ່ວນນາຍທະຫານເອກທັງ 4 ນໍຣະສິງ, ນໍຣະເດດ, ນໍຣະຣາດ, ນໍຣະລາຍ ໄດ້ຕໍ່ສູ້ຄຸ້ມກັນແສນຫຼວງຊຽງລໍເພື່ອເຂົ້າສູ່ນະຄອນຊຽງທອງ.

ຝ່າຍເຈົ້າໄຊຍະຈັກກະພັດແຜ່ນແຜ້ວເມື່ອເຫັນວ່າກອງທັບລາວຖືກຕີແຫຍ້ເຂົ້າມາເຖິງຊຽງທອງແລ້ວຈຶ່ງພາເອົາຄອບຄົວລົງໄປລີ້ໄພຢູ່ເມືອງຊຽງຄານ. ສ່ວນທະຫານລາວທຸກກອງເມື່ອຖືກຕີເຂົ້າເຂດຊຽງທອງກໍ່ລົງເຮືອຂ້າມແມ່ນ້ຳຂອງຢູ່ທາງພາກຕາເວັນຕົກ ສ່ວນເຈົ້າແສນຫຼວງຊຽງລໍ ທີ່ຖືກບາດເຈັບຢູ່ແລ້ວບໍ່ສາມາດລໍນ້ຳໄດ້ຈຶ່ງຈົມນ້ຳຕາຍຢູ່ທີ່ນັ້ນເອງທະຫານເອກທັງ 4 ພາຍຫຼັງໄດ້ຕໍ່ສູ້ກັບທະຫານດາຍຫວຽດຢ່າງອົງອາດກ້າຫານຈົນອິດເມື່ອບໍ່ສາດຈະເອົາຕົວໜີໄດ້ຈຶ່ງຖືກທະຫານດາຍຫວຽດຈັບໄດ້ແລ້ວໄປສຽບໃສ່ປາຍແຫຼມຢູ່ທົ່ງນາເຂົ້າຈ້າວ ສ່ວນໝື່ນຫຼວງ, ໝື່ນບໍ່ ຖືກທະຫານດາຍຫວຽດຈັບໄປທໍລະມານຈົນເສຍຊີວິດ. ສຳລັບຮອງແມ່ທັບປົວຂວາງຊຸນແຫ່ງດາຍຫວຽດ ທີ່ທຳໜ້າທີ່ແທນແມ່ນທັບໄຕໝິງ ແລະ ແມ່ທັບເນີກອີງ, ແມ່ທັບດຶກທ່າ, ແມ່ທັບອີງວ່າງ ແລະ ແມ່ທັບປົວລາວ ກໍ່ໄດ້ເຄື່ອນພົນເສິກເຂົ້າສູ່ຊຽງທອງ ຕໍ່ຈາກນັ້ນແມ່ທັບດາຍຫວຽດກໍ່ຍົກທັບສ່ວນຫຼວງຫຼາຍຂ້າມແມ່ນ້ຳຂອງເພື່ອໄລ່ຈັບເອົາພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ.

**ຂະບວນການຕໍ່ສູ້ຕ້ານກັບດາຍຫວຽດນຳພາໂດຍເຈົ້າແທ່ນຄຳ**

ເມື່ອແມ່ທັບປົວຂວາງຊຸນໄດ້ນຳກຳລັງຕິດຕາມທະຫານລາວ ແລະ ເຈົ້າໄຊຍະຈັກກະພັດແຜ່ນແຜ້ວຈົນຮອດປາກແມ່ນ້ຳພູນຝ່າຍເຈົ້າແທ່ນຄຳຜູ້ເປັນລູກຊາຍຄົນທີ 2 ຂອງເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ທີ່ປົກຄອງເມືອງດ່ານຊ້າຍ-ຊຽງຄານເຊິ່ງໄດ້ກະກຽມກອງທັບໄວ້ເປັນຢ່າງດີແລ້ວ ແລະ ກອງທັບຊຽງທອງທີ່ແຕກໄປນັ້ນໄດ້ສົມທົບກັບກອງທັບເມືອງດ່ານຊ້າຍໃຕ້ການບັນຊາຂອງເຈົ້າແທ່ນຄຳ ແລະ ພົນຊຽງ ເມື່ອຮູ້ວ່າກຳລັງຂອງດາຍຫວຽດຕັ້ງຢູ່ປາກນ້ຳພູນເພື່ອກຽມຍຶດເອົາເມືອງດ່ານຊ້າຍ ເຈົ້າແທ່ນຄຳໄດ້ຍົກກຳລັງພົນທັງໝົດເຂົ້າຕີກັບປົວຂວາງຊຸນເຮັດໃຫ້ທະຫານດາຍຫວຽດທີ່ພວມພັກຜ່ອນແຕກກະແຈກກະຈາຍເຈົ້າແທ່ນຄຳນຳກຳລັງຕິດຕາມຂ້າທະຫານດາຍຫວຽດຕາຍຢ່າງລະເນດລະນາດສ່ວນທີ່ເຫຼືອຕາຍກໍ່ແຕກເປັນກຸ່ມນ້ອຍໆບາງພວກກໍ່ລອຍຂ້າມຂອງ , ບາງພວກກໍ່ວາງອາວຸດຍອມອ່ອນນ້ອມ ກອງທັບລາວໄລ່ຕິດຕາມທະຫານດາຍຫວຽດແຕກທັບໄປຮອດແດວັນພວນຈົນສຸດຊາຍແດນ.

ເພື່ອຂັບໄລ່ພວກດາຍຫວຽດໃຫ້ພົ້ນເຂດແດນຂອງອານາຈັກລ້ານຊ້າງແລ້ວເຈົ້າແທ່ນຄຳກໍ່ກັບຄືນມານະຄອຊຽງທອງເພື່ອທ້ອມໂຮມເສນາອາມາດ, ປະຊາຊົນ ແລະ ພະສົງອົງຄະເຈົ້າທັງຫຼາຍມາປະຊຸມກັນ ແລ້ວເຫັນດີໃຫ້ພະທຳມະເສນາກັບພິຊຸ 20 ຕົນໄປເຊີນເອົາພະລາຊະບິດາຄື: ພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວທີ່ປະທັບຢູ່ຊຽງຄານໃຫ້ກັບມາປົກຄອງບ້ານເມືອງຢູ່ນະຄອນຊຽງທອງຄືເກົ່າ. ແຕ່ພະລາຊະບິດານປະຕິເສດພ້ອມທັງຍົກ

ບັນລັງໃຫ້ເຈົ້າແທ່ນຄຳສ່ອນພະອົງໄດ້ສືບຕໍ່ປະທັບຢູ່ເມືອງຊຽງຄານໄດ້ປີ 1 ກໍ່ສະຫວັນນະຄົດ ໃນປີ ຄ ສ 1480 ພະເຈົ້າແທ່ນຄຳໄດ້ສັ່ງໃຫ້ປະຊາຊົນສ້າງທາດບັນຈຸອັດຖິ (ກະດູກ) ໃຫ້ແກ່ພະບິດາຊື່ວ່າວັດສີບຊຽງຄານ (ປະຈຸບັນຂຶ້ນກັບປະເທດໄທ).

**4) ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າສຸວັນນະບັນລັງປີ ຄ.ສ 1479-1486**

ໃນປີຄສ 1479 ພວກເສນາອາມາດທັງຫຼາຍພ້ອມກັນອະພິເສກເຈົ້າແທ່ນຄຳ ຂຶ້ນຄອງບ້ານເມືອງແທນພະບິດາແລ້ວຖວາຍພະນາມວ່າ“ພະເຈົ້າສຸວັນນະບັນລັງລາຊາທິລາດ” ພະອົງຂຶ້ນຄອງບັນລັງໃນທ່າມກາງບ້ານເມືອງຖືກທຳລາຍຊຸດໂຊມຈາກການຮຸກຮານຂອງສັກດິນາດາຍຫວຽດສະນັ້ນ ພາຍຫຼັງຂຶ້ນຄອງລາຊະບັນລັງແລ້ວບັນຫາທຳອິດທີ່ພະອົງຈະຕ້ອງໄດ້ເຮັດແມ່ນໃຫ້ການຊ່ວຍເຫຼືອປະຊາຊົນຜູ້ທີ່ຖືກເຄາະຮ້າຍ ແລະ ຜູ້ຕົກທຸກໄດ້ຍາກຈາກໄພສົງຄາມຈາກນັ້ນກໍ່ນຳພາປະຊາຊົນຟື້ນຟູບູລະນະສ້າງສາບ້ານເມືອງ ແລະ ປັບປຸງການປົກຄອງໃຫ້ຄືນສູ່ສະພາບເດີມ.

**ດ້ານການປົກຄອງ**

ໂຄງຮ່າງການຈັດຕັ້ງການປົກຄອງຍັງຮັກສາຮູບແບບເດີມແຕ່ໄດ້ສັບປ່ຽນການປົກຄອງໂດຍສະເພາະແມ່ນໃຫ້ຍົກຖານະຕຳແໜ່ງທີ່ສຳຄັນໃຫ້ຜູ້ທີ່ມີຜົນງານໃນການສູ້ຮົບຂັບໄລ່ຂ້າເສິກອອກຈາກດິນແດນລາວລ້ານຊ້າງ ເຊັ່ນ: ແຕ່ງຕັ້ງເຈົ້າຊຽງ ເປັນເຈົ້າຄອງນະຄອນເມືອງຊ່ອງມາເປັນເຈົ້າເມືອງຊຽງຄານທັງໄດ້ດຳລົງຕຳແໜ່ງເປັນຫົວເສິກເຂດເມືອງຊ້າຍອີກ; ສືບຕໍ່ໃຫ້ພະຍາຄຳກອງເປັນເຈົ້າຄອງແຄວ້ນພວນ ແລະ ແຕ່ງຕັ້ງເປັນເຈົ້າຫົວເສິກອີກ.

**ດ້ານສາສະໜາ**

ສາສະໜາແລະການສຶກສາກໍ່ໄດ້ເອົາໃຈໃສ່ສົ່ງເສີມໃຫ້ມີການຂະຫຍາຍຕົວທັງໃນເມືອງຊຽງທອງ ແລະຫົວເມືອງນ້ອຍໃຫຍ່ທົ່ວອານາຈັກຄື: ດ້ານສະຖາປັດຕະຍາກຳກໍ່ໄດ້ເອົາໃຈໃສ່ຂະຫຍາຍເຊັ່ນ: ຮ່ອງຮອຍສະຖາປັດຕະຍາກຳທີ່ຍັງເຫຼືອຮອດປັດຈຸບັນແມ່ນຊາກບູຮານສະຖານທີ່ເມືອງຊະນະຄາມ (ຊຽງຄານເກົ່າ) ເຊິ່ງອ້ອມຮອບກຳແພງດິນຈີ່ທັງສີ່ດ້ານແຕ່ລະດ້ານມີຄວາມຍາວປະມານ 200 ແມັດ ພາຍໃນກຳແພງມີຮ່ອງຮອຍຫໍໂຮງ, ວິຫານຕ່າງໆບູຮານສະຖານດັ່ງກ່າວນີ້ຊາວເມືອງເອີ້ນວ່າໂພນເຈົ້າພໍ່ ປັດຕິມະກຳທີ່ສ້າງຂຶ້ນໃນລະຊະການນີ້ຍັງຕົກທອດມາຮອດປັດຈຸບັນ ແມ່ນພະພຸດທະຮູບຫີນ ສອງອົງທີ່ມີຮູບຊົງງົດງາມອົງໜຶ່ງຢູ່ວັດຜາຫົດທີ່ເມືອງຊະນະຄາມ ແລະ ອີກອົງໜຶ່ງຢູ່ວັດທ່າແຂກທາງຝັ່ງຂວາແມ່ນໍ້າຂອງ(ປະເທດໄທ)

ພະເຈົ້າສຸວັນນະບັນລັງເປັນວິລະກະສັດທີ່ກ້າຫານໄດ້ທຳການກູ້ຊາດ ແລະ ບ້ານເມືອງລາວໃຫ້ພົ້ນຈາກອຳນາດຂອງສັດຕູພະອົງສະເຫວີຍລາຊະສົມບັດໄດ້ 7 ປີກໍ່ສະຫວັນນະຄົດປີຄສ 1486 ລວມພະຊົນໄດ້ 41 ປີ.

**5) ລາດຊະການພະຍາຫຼ້າແສນໄຕພູໄທ ປີຄ.ສ 1486-1495**

ເມື່ອເຈົ້າສຸວັນນະບັນລັງສະຫວັນນາຄົດແລ້ວພວກເສນາອາມາດທັງຫຼາຍຈຶ່ງໄດ້ພ້ອມກັນອະພິເສກເອົາເຈົ້າຫຼ້າແສນໄຕ (ໂອລົດອົງທີ3 ຂອງເຈົ້າໄຊຍະຈັກກະພັດແຜ່ນແຜ້ວ) ເຊິ່ງເວລານັ້ນເປັນເຈົ້າຄອງນະຄອນວຽງແກ. ຂຶ້ນຄອງບັນລັງໃນປີສະຫຼູເດືອນ 5 ອອກໃໝ່ 13 ຄໍ່າ ວັນຈັນ ປີ ຄ.ສ 1486 ລາຊະບັນດິດທັງຫຼາຍໄດ້ຖວາຍພະນາມວ່າ ”ພະເຈົ້າຫຼ້າແສນໄຕພູວະນາດ”

ພະຍາຫຼ້າແສນໄຕຂຶ້ນຄອງບ້ານເມືອງມາຮອດປີ ຄ.ສ 1495 ກໍ່ສະຫວັນນາຄົດ ພະອົງມີໂອລົດຜູ້ໜຶ່ງຊື່ວ່າເຈົ້າຊົມພູ ແຕ່ງເນື່ອງຈາກເຈົ້າຊົມພູມີອາຍຸ 7 ປີ ສະນັ້ນ, ເຈົ້າວິຊຸນນະລາດ ຜູ້ເປັນອາວຈຶ່ງຮັກສາບ້ານເມືອງແທນພະອົງໄດ້ຈັດສ້າງວັດບຸຜາລາມຂຶ້ນສຳລັບກວມທາດກະດູກຂອງພະຍາຫຼ້າແສນໄຕ ມາຮອດປີ ຄ ສ 1497 ເສນາອາມາດທັງຫຼາຍຈຶ່ງພ້ອມກັນອະພິເສດເຈົ້າຊົມພູຂຶ້ນຄອງລາຊະສົມບັດເວລານັ້ນພະອົງມີອາຍຸ 9 ປີສ່ວນເຈົ້າວິຊຸນນະລາດຖືກແຕ່ງຕັ້ງເປັນແສນເມືອງ, ເຈົ້າຊົມພູຂຶ້ນຄອງບ້ານເມືອງໄດ້ 5 ປີ ກໍ່ສະຫວັນນະຄົດ.

ພະຍາຫຼ້າແສນໄຕພູວະນາດເປັນກະສັດທີ່ມີຄວາມເຫຼື້ອມໃສຕໍ່ພຸດທະສາສະໜາຫຼາຍດັ່ງນັ້ນພະອົງໄດ້ເອົາໃຈໃສ່ປັບປຸງວັດວາອາລາມ ແລະ ສົ່ງເສີມທາງດ້ານພຸດທະສາສະໜາຈົນມີນັກບວດຈາກອານາຈັກສະຫຍາມ, ຂະແມ ແລະ ລ້ານນາມາສຶກສາຮ່ຳຮຽນພະທຳ, ພາສາບາລີ ແລະ ສັນສະກິດ ຢູ່ນະຄອນຊຽງທອງເປັນປະຈຳໃນການຕ່າງປະເທດພະອົງໄດ້ຜູກສຳພັນທະໄມຕີກັບພະເຈົ້າແຜ່ນດິນກຸງສີອາຍຸດທະຍາໄວ້ຢ່າງແໜ້ນໜາ ແລະ ທັງໄດ້ກຳນົດເຂດແດນ , ບ່ອນມາເຈລະຈາຄວາມເມືອງກັນທີ່ນາສອງຮັກໃນເຂດແດນເມືອງດ່ານຊ້າຍ

6) **ລາຊະການຂອງເຈົ້າວິຊຸນນະລາດ ປີຄ.ສ 1500-1520**

ໃນປີຄສ 1500 (ຈຸນລະສັກກະລາດ 862) ເສນາອາມາດລາຊະມົນຕີ ແລະ ພະສົງອົງຂະເຈົ້າທັງຫຼາຍຈຶ່ງໄດ້ພ້ອມກັນຍົກເຈົ້າວິຊຸນນະລາດຂຶ້ນເປັນເຈົ້າແຜ່ນດິນຖວາຍພະນາມວ່າ ”ພະວິຊຸນນະລາດ ໄຕພູວະນາດ ຖາທິປັດ ສີສັດຕະນະຄານະຫຸດ” ເວລານັ້ນພະອົງມີພະຊົນໄດ້ 34 ປີ ພະອົງສະເຫວີຍລາຊະສົມບັດແລ້ວຈຶ່ງພະລາຊະທານນ້ອງສາວຊື່ນາງໝື່ນນາໃຫ້ເປັນພະຊາຍາເຈົ້າຊາຍ ແລະ ຊົງແຕ່ງຕັ້ງເຈົ້າຊາຍເປັນເຈົ້າພູນເໜືອ ອີກຜູ້ໜຶ່ງເຈົ້ານາງແພງໄດ້ພະລາດຊະທານໃຫ້ແກ່ທ້າວກ້ອນຄຳ ໂອລົດເຈົ້າເມືອງປາກຫ້ວຍຫຼວງ ແລ້ວພະລາຊະທານໃຫ້ເປັນເຈົ້າເມືອງກະບອງ.

ໄລຍະຕໍ່ມາທ້າວກ້ອນຄຳ ຜູ້ເປັນນ້ອງເຂີຍຂອງເຈົ້າວິຊຸນທີ່ປົກຄອງເມືອງກະບອງເກີດມີບັນຫາຂັດແຍ່ງກັບພະອົງ, ດັ່ງນັ້ນ, ພະອົງຈຶ່ງແຕ່ງໃຫ້ເຈົ້າພູນເໜືອ ນຳກຳລັງໄປປາບປາມ ແຕ່ບໍ່ສາມາດເອົາຊະນະພະຍາກະບອງໄດ້, ຕໍ່ມາພະອົງຈຶ່ງໄດ້ແຕ່ງໃຫ້ເຈົ້າເມືອງຂວານຳກຳລັງໄປປາບປາມອີກ ກອງກຳລັງຂອງເຈົ້າເມືອງຂວາ ແລະ ທ້າວກ້ອນຄຳ ໄດ້ສູ້ຮົບກັນຢູ່ແກ້ງສະໂງກ ທ້າວກ້ອນຄຳ ສູ້ບໍ່ໄດ້ຈຶ່ງໜີໄປຢູ່ເມືອງກາຫຼົງ ພະຍາເມືອງຂວານຳຈັບໄດ້ທ້າວກ້ອນຄຳ ອ່ອນຍອມ ແລະ ຂໍບວດ ສົມເດັດພະເຈົ້າວິຊຸນກໍ່ອະນຸຍາດໃຫ້ບວດສ່ວນພະຍາເມືອງຂວາເນື່ອງຈາກມີຜົນງານຈຶ່ງຖືກເລື່ອນຍົດພະຍາເມືອງຂວາຂຶ້ນເປັນແສນເມືອງຊື່ວ່າ “ພະຍາແສນສຸລິນ”

**ການປັບປຸງດ້ານສາສະໜາ**

- ໄດ້ມີການສ້າງສາວັດວາອາຮາມ ສະຖານທີ່ຕ່າງໆທາງດ້ານສາສະໜາ ຄື ສ້າງວິຫານແສນເຈດີ ຊື່ວ່າ ວັດວິຊຸນ ໃນປີ ຄ.ສ 1503 ແລະ ສຳເລັດໃນປີ ຄ.ສ 1504 ແລະ ມີທາດໃຫຍ່ຊື່ວ່າ ເຈດີປະທຸມ ຫຼື ທາດດອກບົວໃຫຍ່ ແຕ່ຄົນທັງຫຼາຍເອີ້ນວ່າ ທາດໝາກໂມ ພ້ອມນັ້ນກໍ່ໄດ້ອັນເຊີນພະບາງມາສະຖິດຢູ່ວັດວິຊຸນ.

**ການຈັດຕັ້ງວຽກງານບໍລິຫານຝ່າຍສົງ** ໄດ້ມີການຈັດວາງໂຄງຮ່າງການຈັດຕັ້ງຂອງສົງກ່ຽວກັບບໍລິຫານພະອົງໃນທົ່ວອານາຈັກຕ້ອງຢູ່ໃຕ້ການປົກຄອງຂອງພະລາຊາຄະນະສົງທັງສາມໄດ້ແກ່ພະສັງຄະລາດ, ເຈົ້າຄະນະສົງໃຫຍ່ຝ່າຍຂວາ ແລະ ເຈົ້າຄະນະສົງໃຫຍ່ຝ່າຍຊ້າຍ

ໃນລາຊະການຂອງພະອົງນີ້ ຍັງໄດ້ກຳນົດເອົາພາສາບາລີ ແລະ ສັນສະກິດເປັນພາສາສັກສິດ ກຳນົດເອົາອັກສອນທຳເປັນອັກສອນຂຽນທົ່ວໄປ ແຕ່ຕ້ອງອີງໃສ່ພາສາບາລີເປັນຫຼັກ ດັ່ງນັ້ນ, ໃນລາຊະການນີ້ຈຶ່ງເກີດມີນັກປາດອາຈານຜູ້ມີຄວາມຮູ້ ເປັນຈຳນວນຫຼວງຫຼາຍ, ບັນດາຄຳພີທີ່ສຳຄັນໄດ້ມີການແປ ອອກມາເປັນພາສາລາວວິທີແຕ່ງກາບກອນແບບວິຊຸນມາລີ ຫຼື ໂຄງສິສຸພາບ ເຊິ່ງມີການແຜ່ຂະຫຍາຍຢ່າງຫຼວງຫຼາຍ ແລະ ໜັງສືຊຸນບູລົມສະບັບທຳອິດ ກໍ່ໄດ້ຂຽນປຶ້ມໃນຍຸກນີ້.

7) **ລາຊະການເຈົ້າໂພທິສາລະຣາດ ຄ.ສ 1520-1550**

**ນະໂຍບາຍດ້ານວັດທະນະທຳ**

ພາຍຫຼັງການສິ້ນພະຊົນຂອງເຈົ້າຊຸນນະລາດ ເສນາອາມາດທັງຫຼາຍໄດ້ພ້ອມກັນອະພິເສກ ເຈົ້າໂພທິສາຣະລາຊະກຸມມານ ຜູ້ເປັນບຸດຂຶ້ນເປັນເຈົ້າແຜ່ນດິນແທນ ໃນປີ ຄ.ສ 1520 (ຈ.ສ 882) ແລ້ວຖວາຍພະນາມວ່າ: “ສົມເດັດໂພທິສາຣະຣາຊະມະຫາທຳມິກະທະສາລັກຂະນະກຸມຊອນມະຫາລາຊາທິປະຕິ ຈັກກະພັດພູມິນນໍຣິນທະຣາດເຈົ້າ” ເວລານັ້ນພະອົງໄດ້ມີພະຊົນ 19 ປີ ພາຍຫຼັງຂຶ້ນປົກຄອງບ້ານເມືອງແລ້ວ ພະອົງໄດ້ປັບປຸງກົງຈັກການປົກຄອງໃໝ່ ປີ ຄ.ສ 1522 ພະອົງໄດ້ແຕ່ງຕັ້ງໝື່ນຫຼວງລູກພະຍາຄຳສັກທາ ເຈົ້າເມືອງພວນຂຶ້ນເປັນເຈົ້າພວນ ຊຽງຂວາງແລ້ວແຕ່ງຕັ້ງອາວໝື່ນຫຼວງໃຫ້ເປັນແສນເມືອງພ້ອມທັງມອບເຄື່ອງອະພິເສກ ແລະ ຊ້າງເປັນຈຳນວນຫຼວງຫຼາຍ ພໍມາເຖິງປີມະແມ ຈຸລະສັກກະລາດ 885 (ຄ.ສ 1523) ພະອົງໄດ້ແຕ່ງຕັ້ງລາຊະທູດໄປຂໍເອົາພະໄຕປິດົກ ແລະ ພະສົງອົງຄະເຈົ້າມາຈາກນະຄອນຊຽງໃໝ່ ພະເມືອງແກ້ວເຈົ້າແຜ່ນດິນແຫ່ງນະຄອນຊຽງໃໝ່ ຈຶ່ງໄດ້ແຕ່ງໃຫ້ພະເທບ ມົງຄົນເຖຣະກັບພະສົງບໍລິວານ ເຊີນຄຳພີພະໄຕປິດົກ 60 ຄຳພີມາຍັງນະຄອນສີສັດຕະນາຄະນະຫຸດ ດ້ວຍຄວາມເຫຼື້ອມໃສໃນພະພຸດສາສະໜາ ຂອງພະເຈົ້າໂພທະສາຣະລາດ ກໍ່ໄດ້ສະເດັດອອກບວດ ເປັນພິຊຸປະທັບຢູ່ວັດວິຊຸນມະຫາວິຫານເປັນເວລາ 1 ພັນສາ ປີ ຄ.ສ 1527 ພະອົງໄດ້ມີພະລາຊະອາຍາ ປະກາດໃຫ້ບ່າວໄພ່ຟ້າລາຊະດອນ ເລີກນັບຖືຜີຟ້າຜີແຖນ ອັນເຄີຍເຊື່ອຖືມາແຕ່ບູຣານນະການ ນັ້ນໃຫ້ໝົດໄປ ບັນດາຫໍໂຮງວ້ານສານ ອັນເປັນບ່ອນຂຶ້ນຟ້າແຖນ ຂອງພະເຈົ້າແຜ່ນດິນໃນເມືອງກ່ອນພະອົງໄດ້ຮື້ຖອນອອກຖິ້ມ ແລະ ສ້າງອາຣາມຂຶ້ນແທນ ບ່ອນຫໍຜີນັ້ນຊື່ວ່າ: “ວັດສຸວັນນະໂລກ ຫຼື ວັດສັງຄະໂລກໃນປັດຈຸບັນ” ນັບແຕ່ນັ້ນເປັນຕົ້ນມາ ປະຊາຊົນຈຳນວນຫຼວງຫຼາຍ ກໍ່ໄດ້ເຊື່ອມສັດທາໃນການເຊື່ອຖືຜີຟ້າຜີແຖນ ແລະ ຫັນມາສັດທາໃນພຸດທະສາສະຫນາຫຼາຍຂຶ້ນ.

ມາຮອດ ຄ.ສ 1532 ເຈົ້າເມືອງພວນຊຽງຂວາງກັບອາວຜູ້ເປັນແສນເມືອງເກີດຜິດກັບແສນເມືອງຢູ່ຊຽງຂວາງຈຶ່ງໜີມານະຄອນຊຽງທອງເພື່ອລາຍງານສະພາບການ. ເຫດການນີ້ເຈົ້າເມືອງພວນຊຽງຂວາງເກີດຄວາມບໍ່ພໍໃຈ ແລະ ທຳການຂັດແຂງບໍ່ຍອມມາອ່ອນຍອມຕໍ່ສົມເດັດພະໂພທະສາຣະຣາດເຈົ້າສະນັ້ນພະອົງຈຶ່ງສັ່ງໃຫ້ພະຍາປາກຫ້ວຍຫຼວງ, ເຈົ້າພູມເໜືອ, ເຈົ້າພູມໃຕ້. ຍົກກອງທະຫານມາຕີເມືອງພວນຊຽງຂວາງ ພວກແມ່ທັບທັງສາມໃຊ້ເວລາປາບປາມຢູ່ 2 ປີ ເຫດການຈຶ່ງຄ່ອຍສະຫງົບລົງ ແລະ ປີ ຄ.ສ 1533 ສົມເດັດພະໂພທິຣະຣາດເຈົ້າ ໄດ້ສະເດັດປະທັບຢູ່ນະຄອນຊຽງໃໝ່ໄລຍະໜຶ່ງແລ້ວ ຈຶ່ງໄດ້ສະເດັດມານະຄອນຊຽງທອງ ແລ້ວພະອົງກໍ່ເຊີນເອົາພະແກ້ວມໍລະກົດ ແລະ ພະແຊກຄຳທີ່ສະຖິດຢູ່ໃນວິຫານ ວັດບຸຜາລາມລົງມານຳ ຫຼັງຈາກກັບມາຈາກນະຄອນຊຽງໃໝ່ ບໍ່ດົນພະອົງກໍ່ໄດ້ສິ້ນພະຊົນ ໃນປີ ຄ.ສ 1550 ໃນຂະນະທີ່ສະແດງການຄ້ອງຊ້າງພະອົງ ໄດ້ເກີດອຸບັດເຫດຊ້າງລົ້ມທັບພະອົງ ຈາກນັ້ນຕໍ່ມາ 7 ວັນ ພະອົງກໍ່ສິ້ນພະຊົນ ລວມອາຍຸໄດ້ 43 ປີ.

**ສົງຄາມລ້ານຊ້າງອາຍຸດທະຍາ**

ອານາຈັກລາວລ້ານຊ້າງຜ່ານມາ ໄດ້ສ້າງສຳພັນທະໄມຕີອັນດີງາມກັບບັນດາອານາຈັກອ້ອມຂ້າງ ໂດຍສະເພາະແມ່ນໄດ້ມີການສ້າງສາຍສຳພັນທະໄມຕີ ກັບອານາຈັກອາຍຸດທະຍາ ແບບບ້ານໃກ້ເຮືອນຄຽງທີ່ດີງາມຕະຫຼອດມາ ສາເຫດທີ່ພາໃຫ້ເກີດຂໍ້ຂັດແຍ່ງແມ່ນເນື່ອງຈາກວ່າໃນປີ ຄ.ສ 1529 ພະເຈົ້າຣາມາທິບໍດີ 2 ເຈົ້າແຜ່ນດິນແຫ່ງກຸງສີອາຍຸດທະຍາໄດ້ສິ້ນພະຊົນລົງພະອົງບໍ່ມີລາຊະໂອລົດ ຂຶ້ນຄອງລາດແທນ ດັ່ງນັ້ນ, ຈຶ່ງເປັນເຫດໃຫ້ພວກເສນາມຸນຕີ ເກີດຂໍ່ຂັດແຍ່ງ ໃນການຊ່ວງຊີງກັນຂຶ້ນກຳອຳນາດການຂັດແຍ່ງກັນຄັ້ງນີ້ ກຸ່ມສັກດີນາໄດ້ແຍກອອກເປັນ 2 ກຸ່ມຄື: ກຸ່ມເຈົ້າອະທິດຕະຍະວົງ (ພະບໍລິມລາຊາທິລາດ 4 ຜູ້ເປັນມະຫາອຸປະລາດຄອງເມືອງ ພິດສະນຸໂລກ) ແລະ ອີກກຸ່ມໜຶ່ງແມ່ນກຸ່ມພະເຈົ້າໄຊຍະຣາຊາ ຜູ້ເປັນລາຊະວົງຂອງພະເຈົ້າຣາມາທິບໍດີ ທີ 2 ຜົນຂອງສົງຄາມແມ່ນກຸ່ມຂອງພະເຈົ້າອະທິດຕະຍະວົງເປັນຜູ້ໄດ້ຮັບໄຊຊະນະ ແລະ ເຮັດໃຫ້ເຈົ້າໄຊຍະຣາຊາ ພ້ອມດ້ວຍພັກພວກໄດ້ມາຂໍລີ້ໄພການເມືອງເພື່ອເພິ່ງໂພທິສົມພານນຳພະໂພທິສາຣະລາດ ເຈົ້າທີ່ວຽງຈັນພະອົງ ກໍ່ໄດ້ໃຫ້ການຊ່ວຍເຫຼືອ ເຈົ້າໄຊຍະຣາຊາ ໃນຖານະທີ່ໜີຮ້ອນມາເພິ່ງເຢັນ.

ຝ່າຍເຈົ້າອະທິດຕະຍະວົງ ຜູ້ມີກົນອຸບາຍຢາກຂະຫຍາຍອຳນາດ ແລະ ຕ້ອງການກືນກິນອານາຈັກລາວລ້ານຊ້າງແຕ່ເຫິງນານແລ້ວ ກໍ່ສວຍໂອກາດຍົກເອົາເລື່ອງນີ້ຂຶ້ນມາເພື່ອເປັນຂໍ້ອ້າງ ວ່າຕ້ອງການຈັບກຸມເຈົ້າໄຊຍະຣາຊາ ໄປລົງໂທດ ພ້ອມທັງຍົກເອົາກອງທະຫານເຂົ້າມາຮຸກຮານອານາຈັກລາວລ້ານຊ້າງ ໃນປີ ຄ.ສ 1533 ໃນການຕໍ່ສູ້ຕ້ານສະຫຍາມຄັ້ງນີ້ ສົມເດັດພະໂພທິສາຣະລາດ ເຈົ້າໄດ້ມອບໝາຍພາລະກິດ ໃຫ້ພະຍາແສນຫຼວງເປັນຜູ້ຕິຕ້ານສະຫຍາມ ກຳລັງທັງສອງຝ່າຍສູ້ຮົບກັນຢ່າງດຸເດືອດຢູ່ທົ່ງສາລາຄຳ ຈາກນັ້ນກອງທັບລາວລ້ານຊ້າງໄລ່ຕີກອງທັບອາຍຸດທະຍາ ຈົນຮອດເມືອງວຽງຄຸກ ( ໃນບໍລິເວນແຂວງໜອງຄາຍໃນປັດຈຸບັນ) ກອງທັບອາຍຸທະຍາໄດ້ເສຍໄພ່ພົນ ແລະ ຊ້າງມ້າຈຳນວນຫຼວງຫຼາຍ ສ່ວນເຈົ້າອະທິດຕະຍະວົງ ສາມາດເອົາຕົວຫຼົບໜີໄດ້ ເຈົ້າໄຊຍະຣາຊາ ຈຶ່ງໄດ້ເກນພົນທະຫານເສີກຢ່າງຫຼວງຫຼາຍຍົກລົງໄປຕີນະຄອນກຸງສີອະຍຸດທະຍາ ແຕ່ໄປຮອດເມືອງພະງາມ (ຈັ່ງຫວັດພິຈິດຂອງໄທປັດຈຸບັນ) ກໍ່ພັກພົນໂຍທາຢູ່ທີ່ນັ້ນເຖິງ 10 ວັນ ແຕ່ຊາວກຸງສີອະຍຸດທະຍາບໍ່ຍອມອອກມາສູ້ຮົບກໍ່ເລີກທັບກັບຄືນມາ.

ການຂັບໄລ່ກອງທະຫານກຸງສີອະຍຸດທະຍາອອກຈາກດິນແດນລາວລ້ານຊ້າງ ຄັ້ງນີ້ເປັນການບັງຄັບໃຫ້ພວກສັກດີນາສະຫຍາມຕ້ອງເຄົາລົບຖືຂອບເຂດດິນແດນສອງອານາຈັກ ທີ່ໄດ້ເຊັນສັນຍາຮັບຮູ້ກັນມາແຕ່ບັນພະບຸລຸດຂອງສອງຝ່າຍ.

ມາເຖິງປີ ຄ.ສ 1548 ພະເມືອງເກດເກົ້າເຈົ້າແຜ່ນດິນເມືອງຊຽງໃໝ່ ໄດ້ສະຫວັນນະຄົດພະອົງບໍ່ມີລາຊະໂອລົດຈະສືບເມືອງແທນ ພວກເສນາອາມາດ ແລະ ພວກສັງຄະລາດເຈົ້າທັງຫຼາຍ ອັນມີພະຍາແສນຫຼວງ, ພະຍາສາມລ້ານ, ພະຍາຊຽງແສນ ຈຶ່ງພ້ອມກັນຂໍເອົາເຈົ້າເສດຖະວັງໂສ ໂອລົດຂອງພະຍາໂພທິສາຣະລາດ ພະສູດຈາກ ນາງຍອດຄຳ ຜູ້ເປັນລາຊະທິດາຂອງພະເຈົ້າແຜ່ນດິນຊຽງໃໝ່ ເມື່ອເປັນເຈົ້າແຜ່ນດິນຄອງນະຄອນຊຽງໃໝ່ ເວລານັ້ນເຈົ້າເສດຖະວັງໂສ ມີພະຊົນໄດ້ 14 ປີ ສົມເດັດພະໂພທິສາຣະລາດມີຄວາມຍິນດີ ຈຶ່ງສັ່ງພະລາຊະອາດຍາ ໃຫ້ຕົກແຕ່ງປຸນແປງແຫ່ແຫນມີພົນເຖິງ 300.000 ຄົນ, ຊ້າງ 2000 ໂຕ ພ້ອມທັງອາມາດລາຊະມຸນຕີຜູ້ໃຫຍ່ 9 ຄົນຄື:

1. ພະຍາກົງກະລາດ

2. ພະຍາສີສັດຕະທຳມະໂຕໂລກ
3. ພະຍາອໍລະຊຸນ
4. ພະຍານະຄອນ
5. ພະຍາຊີວິດສິງຄາມ
6. ພະຍາສຸລະເດດ
7. ພະຍາທັກຂິນ
8. ພະຍາຍຸດລືກຽນ
9. ພະຍາ ພັນຊ້າຍ

ຂະບວນດັ່ງກ່າວໄດ້ແຫ່ແຫນໄປເຖິງນະຄອນຊຽງໃໝ່ເມື່ອເດືອນ 9 ອອກໃໝ່ 10 ຄໍ່າ ປີ ຄ.ສ 1548.

**7) ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າໄຊເສດຖາທິລາດ**

ເຈົ້າໄຊເສດຖາທິລາດມີຊື່ເດີມວ່າ "ເຈົ້າເສດຖະວັງໂສ" ເປັນພະລາຊະໂອລົດຂອງເຈົ້າໂພທິສາລະລາດ ກັບ ເຈົ້າຍິງຍອດຄຳທິບ ແຫ່ງລ້ານນາຊຽງໃໝ່ ພະອົງປະສູດໃນປີມະແມ ເດືອ ອ້າຍ ແຮ 9 ຄໍ່າເວລາທ່ຽງໃນ ປີ ຄ ສ 1534 ໃນເວລາດຽວກັນນີ້ຢູ່ລ້ານນາກໍ່ມີການຍາດແຍ່ງລາຊະບັນລັງລະຫວ່າງພໍ່ກັບລູກ ຄື: ທ້າວຊາຍຄຳ (ລູກ) ແລະ ພະຍາເກດເກົ້າ ໃນທີ່ສຸດທ້າວ ຊາຍຄຳ ກໍ່ໄດ້ຂຶ້ນຄອງລ້ານນາຊຽງໃໝ່ແຕ່ບໍ່ໄດ້ເອົາໃຈໃສ່ໃນການປົກຄອງເຮັດໃຫ້ໄພ່ຟ້າບໍ່ພໍໃຈຈຶ່ງໄດ້ທຳການໂຄ່ນລົ້ມ ແລະ ຈັບເອົາທ້າວຊາຍຄຳ ໄປປະຫານຊີວິດໃນປີ ຄ ສ 1543 (ນັ່ງບັນລັງໄດ້ 6 ປີ). ຈາກນັ້ນເສນາອາມາດຈຶ່ງໄດ້ເຊີນເອົາພະເກດເກົ້າມາຄອງບັນລັງອີກຄັ້ງໜຶ່ງປີຕໍ່ມາຖືກພວກແສນດາວແຫ່ງຊຽງຕຸງຂ້າຕາຍ ເຮັດໃຫ້ລ້ານນາບໍ່ມີກະສັດປົກຄອງ, ບ້ານເມືອງມີຄວາມວຸ້ນວາຍ ຈຶ່ງໄປຂໍຄວາມຊ່ວຍເຫຼືອຈາກນະຄອນຊຽງທອງ. ເພື່ອແກ້ບັນຫາຄວາມບໍ່ສະຫງົບຢູ່ລ້ານນາ ເຈົ້າໂພທິສາລະລາດຈຶ່ງສົ່ງກຳລັງໄປປາບປາມຄວາມບໍ່ສະຫງົບຢູ່ລ້ານນາ ແລະ ສ້າງຄວາມສະຫງົບສຸກໃຫ້ແກ່ລ້ານນາອີກຄັ້ງ.

ພາຍຫຼັງບ້ານເມືອງກັບເຂົ້າສູ່ສະພາບປົກກະຕິເສນາອາມາດພ້ອມດ້ວຍປະຊາຊົນຈຶ່ງໄດ້ໄປເຊີນເອົາເຈົ້າເສດຖະວັງໂສ (ໄຊເສດຖາທິລາດ) ມາປົກຄອງລ້ານນາ ແຕ່ເຈົ້າໂພທິສາລະລາດເຫັນວ່າລູກຂອງຕົນຍັງເຍົາໄວ (ອາຍຸ 12 ປີ) ດັ່ງນັ້ນ, ຈຶ່ງມອບໃຫ້ເຈົ້າຍິງຈິນລະປະພາ ຜູ້ເປັນມະເຫສີຂອງພະເກດເກົ້າຮັກສາການແທນ ຮອດປີ ຄ ສ 1548 ເຈົ້າຍິງຈິນລະປະພາບໍ່ສາມາດບໍລິຫານວຽກງານຈຶ່ງແຕ່ງຕັ້ງໃຫ້ເສນາອາມາດໄປເຊີນເອົາເຈົ້າໄຊເສດຖາທິລາດ ຂຶ້ນເມືອປົກຄອງນະຄອນລ້ານນາ (ຊຽງໃໝ່) ພິທີສະເຫວີຍລາດຈັດຂຶ້ນໃນມື້ອອກໃໝ່ 4 ຄໍ່າ ເດືອນ 11 ກົງກັບວັນພຸດ ປີ ຄ ສ 1548 (ມີອາຍຸ 14 ປີ).

**ການຂຶ້ນຄອງລາດທີ່ນະຄອນຊຽງທອງ ຄ ສ 1550**

ເມື່ອພະເຈົ້າໂພທິສາລະລາດສະຫວັນນະຄົດ (ປີຄສ 1550) ສະພາບການພາຍໃນອານາຈັກມີຄວາມວຸ້ນວາຍຄື: ພະລ້ານຊ້າງ (ລູກເຈົ້າຍິງແຫ່ງອາຍຸດທະຍາ) ແລະ ເຈົ້າວໍລະວັງໂສ (ແມ່ເປັນຄົນນະຄອນຊຽງທອງ) ຍາດບັນລັງກັນ; ແມ່ຂອງເຈົ້າລ້ານຊ້າງ ແລະ ເສນາມຸນຕີຈຳນວນໜຶ່ງມີແຜນຢາກເອົາພະລ້ານຊ້າງຂຶ້ນເປັນເຈົ້າຊີວິດ. ແຕ່ກໍ່ຖືກຂັດຂວາງຈາກເຈົ້າວໍລະວັງໂສ ສຳລັບກຸ່ມຂອງເຈົ້າວໍລະວັງໂສພັດຕ້ອງການແບ່ງດິນລ້ານຊ້າງອອກເປັນສອງສ່ວນຄື: ສ່ວນໜຶ່ງແມ່ນພະລ້ານຊ້າງປົກຄອງ ແລະ ສ່ວນໜຶ່ງແມ່ນຕົນປົກຄອງ ນອກນີ້ຍັງມີກຸ່ມ

ເສນາອາມາດຜູ້ທີ່ຈົງຮັກພັກດີ ແລະ ບໍ່ຕ້ອງການໃຫ້ມີການແບ່ງປັນດິນແດນ, ຈຶ່ງປຶກສາຫາລືກັນເພື່ອຕ້ານກັບແຜນການຂອງສອງກຸ່ມ ໂດຍການໄປເຊີນເອົາ ເຈົ້າໄຊເສດຖາທິລາດຈາກລ້ານນາມາແກ້ໄຂບັນຫາຄວາມບໍ່ສະຫງົບແຫ່ງນະຄອນຊຽງທອງ. ຫຼັງຈາກນັ້ນ ເສນາອາມາດຈຶ່ງສະຖາປະນາເຈົ້າໄຊເສດຖະທິລາດຂຶ້ນຄອງບັນລັງຢູ່ລ້ານຊ້າງ ໃນປີ ຄ ສ 1550 ແລະ ໄດ້ຮັບນາມໃໝ່ວ່າ "ສົມເດັດພະອຸໄທພູທອນບໍວອນ ໄຊເສດຖາ ພູວະນາຖາທິປັດ ສີສັດຕະນາຄະນະຫຸດ".

ໂດຍສະເພາະດ້ານການບໍລິຫານອານາຈັກພະອົງໄດ້ຈັດແບ່ງຄວາມຮັບຜິດຊອບອອກເປັນ 2 ຝ່າຍ ຄືຝ່າຍລາຊາຕະກູນ ແລະ ຝ່າຍເສນາ ໃນນັ້ນຝ່າຍລາຊາຕະກຸນມີ 3 ຂັ້ນຄື

- ເຈົ້າແຜ່ນດິນເປັນຜູ້ກໍາອໍານາດສູງສຸດ ແລະ ດໍາລົງຕໍາແໜ່ງເປັນຈອມທັບ
- ມະຫາອຸປະລາດມີໜ້າທີ່ເປັນທີ່ປຶກສາ ແລະ ດໍາພາລະກິດຕາງໜ້າເຈົ້າຊີວິດ
- ພະອຸປະໂຍວະຣາດ ຫຼື ອຸປະຍຸວະຣາດ

ສ່ວນຝ່າຍເສນາອາມາດນັ້ນປະກອບມີ 2 ພາກສ່ວນ  ຄື ພາກສ່ວນທະຫານ ແລະ ພາກສ່ວນປົກຄອງສອງພາກສ່ວນນີ້ເປັນຜູ້ກໍາອໍານາດສູງສຸດ ຂອງຝ່າຍເສນາອາມາດ ແລະ ມີຕໍາແໜ່ງເປັນອັກຄະເສນາບໍດີຝ່າຍພົນລະເຮືອນ ແລະ ຝ່າຍທະຫານ ຕໍາແໜ່ງຝ່າຍອັກຄະບໍດີ ຝ່າຍພົນລະເຮືອນເວລານັ້ນແມ່ນພະຍາແສນສຸລິນຄ່ວງຟ້າ ນອກຈາກນີ້ພະອົງຍັງໄດ້ມີການແຕ່ງຕັ້ງເຈົ້າປົກຄອງເມືອງຕ່າງໆ ພາຍໃນອານາຈັກອີກ.

**ການປ້ອງກັນອານາຈັກ ແລະ ການຍ້າຍນະຄອນຫຼວງປີ ຄ ສ 1560**

ພະອົງໄດ້ມີການຈັດກໍາລັງພົນຊາຍສະກັນເຂົ້າສັງກັດໃນກອງທັບເພື່ອເປັນກໍາລັງປ້ອງກັນອານາຈັກໃຫ້ມີຄວາມເຂັ້ມແຂງໄວ້ເຖິງ 380.000 ຄົນ, ຊ້າງເສິກ 5000 ໂຕ, ແລະ ມ້າເສິກ ອີກເປັນຈໍານວນຫຼວງຫຼາຍນອກຈາກນີ້ຍັງມີການເຝິກແອບຍຸດທະວິທີ ສູ້ຮົບໃຫ້ແກ່ກອງທັບ ເພື່ອໃຫ້ມີຄວາມຊໍານິຊໍານານໃນການສູ້ຮົບພິເສດໃນສະໄໝນີ້ຍັງມີການຈັດຊັ້ນຕໍາແໜ່ງການທະຫານຄືນໃໝ່ ເປັນລະບົບສະເພາະກອງທັບຄື:

- ພະຍາ ມີຕໍາແໜ່ງເປັນຜູ້ບັນຊາກອງທະຫານສູງສຸດ
- ແສນ ມີຕໍາແໜ່ງເປັນຜູ້ຮອງຜູ້ບັນຊາທະຫານສູງສຸດ ແລະ ເປັນແມ່ທັບ
- ໝື່ນມີຕໍາແໜ່ງເປັນນາຍທະຫານ.

**ການສ້າງຕັ້ງນະຄອນຫຼວງວຽງຈັນເປັນລາຊະທານີ:**

ພາຍຫຼັງ ຕໍ່ສູ້ຊິງອໍານາດເພື່ອຄອບຄອງນະຄອນຊຽງໃໝ່ພະເຈົ້າໄຊຍະເສດຖາທິລາດ ກໍ່ໄດ້ເຫັນຢ່າງຈະແຈ້ງຕໍ່ກົນອຸບາຍ ຂະຫຍາຍອານາເຂດຂອງ ບູເລັງນອງ ຕາມຄາດຄະເນວ່າ ບູເລັງນອງ ຕ້ອງກໍ່ສົງຄາມຮຸກຮານອານາຈັກລາວລ້ານຊ້າງແນ່ນອນ ດັ່ງນັ້ນ, ພະເຈົ້າຈຶ່ງຮຽກປະຊຸມເສນາມຸນຕີ ເພື່ອວາງແຜນປ້ອງການຮຸກຮານຈາກພະມ້າ ຕໍ່ຈາກການປະຊຸມເສນາມຸນຕີ ທັງຫຼາຍຈຶ່ງໄດ້ຕົກລົງຄວາມເຫັນກັນວ່າ "ນະຄອນຊຽງທອງບໍ່ເໝາະສົມທີ່ຈະເປັນນະຄອນຫຼວງຕໍ່ໄປ ເພາະຢູ່ໃກ້ກັບພະມ້າທີ່ພວມເປັນສັດຕູກັບລ້ານຊ້າງ ອີກດ້ານໜຶ່ງນະຄອນຫຼວງຊຽງທອງເປັນເມືອງທີ່ຄັບແຄບ ບໍ່ກວ້າງຂວາງມີພູເຂົາອ້ອມຮອບ  ບໍ່ມີທາງຂະຫຍາຍສ່ວນວຽງຈັນເປັນເມືອງໃຫຍ່ ມີບໍລິເວນກວ້າງຂວາງສົມບູນ ແລະ ຕັ້ງຢູ່ເຄິ່ງກາງອານາຈັກ ສະດວກໃຫ້ແກ່ການປົກຄອງທາງພາກເໜືອ ແລະ ພາກໃຕ້ , ອີກອັນໜຶ່ງນະຄອນຫຼວງວຽງຈັນມີປະຊາຊົນພົນລະເມືອງຢູ່ຢ່າງໜາແໜ້ນ ແລະ

ວຽງຈັນເປັນສູນກາງການຄົມມະນາຄົມທາງບົກ ແລະ ທາງນໍ້າ, ທັງເປັນບ່ອນແລກປ່ຽນທາງພາຍໃນ ແລະ ພາຍນອກ ໃນຍາມສະຫງົບວຽງຈັນເປັນສູນກາງປົກຄອງ, ເສດຖະກິດ, ວັດທະນະທໍາ ເປັນຕົວແທນໃຫ້ແກ່ລາວລ້ານຊ້າງ ໃນຍາມສົງຄາມກໍ່ສັ່ງກໍາລັງຫຼວງອອກໄປປ້ອງກັນຊາຍແດນ ຫຼື ເກນເອົາກໍາລັງທ້ອງຖິ່ນມາປ້ອງກັນນະຄອນຫຼວງກໍ່ໄດ້ໄວທັນກັບເຫດການ ຍ້ອນສະພາບການດັ່ງກ່າວນັ້ນ ພະເຈົ້າໄຊຍະເສດຖາທິລາດ ຈຶ່ງຕົກລົງຍ້າຍຈາກນະຄອນຫຼວງຊຽງທອງ ມາຕັ້ງຢູ່ວຽງຈັນໃນ ປີ ຄ. ສ 1560 ສ່ວນນະຄອນຊຽງທອງໄດ້ຮັກສາໄວ້ພຽງຖານະ ຜູ້ຄອງເມືອງ ເພາະໄດ້ມອບພະສົງອົງຄະເຈົ້າ ແລະ ພະບາງໄວ້ເປັນມິ່ງເມືອງ ສ່ວນພະແກ້ວມໍລະກົດ ແລະ ພະແຊກຄໍາ ເອົາມາສະຖິດໄວ້ທີ່ວຽງຈັນ ແຕ່ນັ້ນມາປະຊາຊົນຈຶ່ງເອີ້ນນະຄອນຊຽງທອງວ່າ “ເມືອງຫຼວງພະບາງ” ພາຍຫຼັງການຍ້າຍນະຄອນຫຼວງສໍາເລັດ ແລ້ວພະເຈົ້າໄຊຍະເສດຖາທິລາດ ໄດ້ມີການກໍ່ສ້າງລະບົບ ນະຄອນຫຼວງດ້ວຍການກໍ່ສ້າງກໍາແພງເມືອງ ໂດຍມີປ້ອມຍາມເປັນໄລຍະຫ່າງກັນ ພໍສາຍຕາຫຼຽວເຫັນ, ທາງດ້ານໜ້າກໍາແພງ (ເບື້ອງນອກ) ໄດ້ຂຸດຮ່ອງຂະໜານກັນໄປກັບກໍາແພງ ເຊິ່ງມີລວງກວ້າງ 5-8 ແມັດ ແລະ ເລິກປະມານ 1.70-2 ແມັດ ສ່ວນກໍາແພງນັ້ນສູງກວ່າຫຼັງຊ້າງໃຫຍ່ ການກໍ່ສ້າງກໍາແພງໂດຍມີຮ່ອງນໍ້າຢູ່ດ້ານນອກ ນີ້ເປັນລະບົບປ້ອງກັນໄພທີ່ດີທີ່ສຸດ ໃນສະໄໝນັ້ນ ທັງເປັນຈຸດພິເສດ ໃນການສ້າງຕົວເມືອງໃນລະບອບສັກດີນາ ຄຽງຄູ່ກັນນັ້ນແມ່ນການສ້າງສະຖານທີ່ ປູສະນີຍະສະຖານ ເຊິ່ງເປັນຈຸດລວມຈິດໃຈເພື່ອສ້າງຄວາມສາມັກຄີ  ສ້າງຄວາມເປັນເອກະລາດແຫ່ງຊາດ ເຊັ່ນ: ຫໍພະແກ້ວວຽງຈັນ, ເປັນບ່ອນປະດິດສະຖານພະແກ້ວມໍລະກົດ ແລະ ພະແຊກຄໍາ ເຖິງ ປີ ຄ.ສ 1566 ໄດ້ສ້າງພະທາດຫຼວງວຽງຈັນ ນອກຈາກນັ້ນຍັງໄດ້ຈັດຕັ້ງລະບົບ ເມືອງເພື່ອເປັນເສນາທິການປ້ອງກັນນະຄອນຫຼວງ ເຊັ່ນ:  ເມືອງວຽງຄໍາ,ເມືອງວຽງພັນແກ້ວ, ວຽງປາກຫ້ວຍຫຼວງ, ວຽງປາກງື່ມ ເປັນດ່ານປ້ອງກັນຂ້າເສິກ ເບື້ອງຕາເວັນຕົກ ສ່ວນດ້ານຕາເວັນອອກ ດ່ານຊັ້ນອອກນອກໄປແມ່ນໜອງຄູວຽງ, ວຽງໜອງຫານນ້ອຍ, ດ່ານເມືອງເໜືອໄດ້ແກ່ວຽງຄໍາ, ວຽງແກ້ວ, ວຽງເງິນເປັນຕົ້ນ.

ນອກຈາກນີ້ພະເຈົ້າໄຊຍະເສດຖາທິລາດ ໄດ້ປັບປຸງຄວາມສາມັກຄີພາຍນອກ ໂດຍສ້າງສາຍສໍາພັນແບບພິເສດ ລະຫວ່າງອານາຈັກລາວລ້ານຊ້າງ ກັບອານາຈັກກຸງສີອາຍຸດທະຍາເພື່ອຮ່ວມກັນຕໍ່ຕ້ານພະມ້າທີ່ເປັນສັດຕູຕົວດຽວກັນ.

**ການສ້າງສິ່ງກໍ່ສ້າງຕ່າງໆຂອງເຈົ້າໄຊເສດຖາທິລາດ**

ໃນດ້ານນີ້ພະອົງໄດ້ນໍາພາປະຊາລາຊະດອນບູລະນະສ້າງສາວັດວາອາຮາມຕ່າງໆເພື່ອແນ່ໃສ່ຊຸກຍູ້ເຜີຍແຜ່ສາສະໜາໃຫ້ມີບົດບາດສໍາຄັນໃນວິຖີດໍາເນີນຊີວິດ ປະຊາຊົນ ແລະ ແນໃສ່ສ້າງແນວຄິດສູນລວມ ຫຼື ສ້າງຄວາມເປັນເອກະພາບແຫ່ງຊາດ ກິດຈະກໍາການສ້າງທີ່ສໍາຄັນໃນໄລຍະນີ້ໄດ້ແກ່ການກໍ່ສ້າງວັດຊຽງທອງ.

ແຕ່ພາຍຫຼັງການຍ້າຍນະຄອນຫຼວງຊຽງທອງມາຕັ້ງຢູ່ວຽງຈັນ (ປີ ຄ.ສ 1560 ) ພະອົງໄດ້ມີການກໍ່ສ້າງພະທາດຫຼວງ, ທາດສີສອງຮັກ, ກໍາແພງເມືອງວຽງຈັນ, ວັດອົງຕື້, ວັດສີເມືອງ...ນອກຈາກນີ້ຍັງປະຕິສັງຂອນວັດວາອາຮາມຕ່າງໆ ເຊັ່ນ: ທາດສີໂຄດຕະບອງ, ພະທາດອິງຮັງ, ພະທາດພະນົມ ແລະ ຍັງມີການຄວັດຫຼໍ່ພະພຸດທະຮູບອັນເປັນປູຊະນີຍະສະຖານຕ່າງໆ  ໃນອານາຈັກລ້ານຊ້າງເປັນຈໍານວນຫຼວງຫຼາຍ ເພື່ອແນໃສ່ສ້າງສູນລວມທາງດ້ານຈິດໃຈ ຂອງປະຊາຊົນໃຫ້ມີຈິດໃຈສາມັກຄີ ຮັກຊາດ, ຮັກຄວາມສະຫງົບສຸກ ແລະ ເປັນອັນໜຶ່ງອັນດຽວກັນໂດຍອາໄສບົດບາດ ທາງພຸດທະສາສະໜາ ແລະ ພະອົງເປັນຜູ້ຊີ້ນໍາສັ່ງສອນເພື່ອເຕົ້າໂຮມກໍາລັງແຮງຂອງປະຊາຊົນລາວລ້ານຊ້າງ.

ງ. ດ້ານການຕ່າງປະເທດ

ໂດຍສືບຕໍ່ພາລະກິດຂອງພະລາຊະບິດາທາງດ້ານການເມືອງພາຍນອກທີ່ເຄີຍປະຕິບັດມາແລ້ວໂດຍແນ່ໃສ່ພົວພັນທຸກໆອານາຈັກອ້ອມຂ້າງພະອົງໄດ້ມີການປັບປຸງຄວາມສຳພັນໄມຕີກັບອານາຈັກອາຍຸດທະຍາຄືຜູກພັນກັນສ້າງພະທາດສອງຮັກເພື່ອເປັນຫຼັກໝາຍຊາຍແດນລະຫວ່າງສອງອານາຈັກພະທາດສີສອງຮັກໄດ້ລົງມືສ້າງແຕ່ ປີ ຄ.ສ 1560 ຈົນເຖິງປີ ຄ.ສ 1563 ຈຶ່ງສຳເລັດບໍລິບູນ ແລະ ແບ່ງເຂດແດນທັງສອງໄວ້ດັ່ງນີ້: “ແຫກແຕ່ທາດນີ້ໄປເຖິງນ້ຳນານ ແລະ ນ້ຳຂອງໄກເທົ່າກັນ” ນອກນັ້ນຍັງຜູກພັນທະໄມຕີທາງສາຍເລືອດ ແລະ ເຄືອຍາດໂດຍການມີສົມລົດ ກັບລາຊະບິດາຂອງພະມະຫາຈັກກະພັດແຫ່ງກຸງສີອາຍຸດທະຍາ ແລະ ຜູກພັນກັນທາງດ້ານການທະຫານ ໂດຍສະເພາະເຈົ້າໄຊຍະເສດຖາທິລາດ ໄດ້ນຳກອງທັບລ້ານຊ້າງໄປຊ່ວຍກອງທັບອາຍຸດທະຍາໃນການບຸກໂຈມຕີອານາຈັກຕ່າງໆ ທີ່ເປັນປໍລະປັກກັບອານາຈັກກຸງສີ ອາຍຸດທະຍາ ເຊັ່ນ: ເຄີຍຍົກທັບໄປຕີຕ້ານການຮຸກຮານ ຂອງສັກດີນາພະມ້າເຖິງ 2 ຄັ້ງ ຄື: ຄັ້ງທີ 1 ແມ່ນປີ ຄ.ສ 1567, ຄັ້ງທີ 2 ແມ່ນປີ ຄ.ສ 1569 ນັ້ນແມ່ນສະແດງເຖິງການຜູກພັນທາງດ້ານສຳພັນທະໄມຕີຕໍ່ກັນ.

## 3. ອານາຈັກລາວລ້ານຊ້າງແຕ່ 1560-1638

### 3.1. ສົງຄາມລ້ານຊ້າງພະມ້າ

#### 1) ສະພາບກ່ອນສົງຄາມ

#### ກ. ສະພາບຂອງພະມ້າ

ໃນລະຫວ່າງສະຕະວັດທີ 16-17 ແມ່ນໄລຍະການຂະຫຍາຍຕົວຂອງອານາຈັກລາວລ້ານຊ້າງທີ່ມີຄວາມເຂັ້ມແຂງໄປດ້ວຍອຳນາດທາງດ້ານການເມືອງ, ການທະຫານ ແລະ ຄວາມອຸດົມສົມບູນທາງດ້ານເສດຖະກິດ, ແຕ່ໃນຂະນະດຽວກັນນັ້ນກໍ່ເກີດມີຄູ່ແຂ່ງທີ່ສຳຄັນຄື: ສັກດີນາພະມ້າ ເຊິ່ງເປັນຜູ້ປໍລະປັກ ທີ່ມີຄວາມເຂັ້ມແຂງທີ່ສຸດໃນອານາຈັກລາວລ້ານຊ້າງ ໃນຂະນະທີ່ລາວລ້ານຊ້າງພວມຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ນັ້ນ ຝ່າຍສັກດີນາພະມ້າ ກໍ່ພວມຕໍ່ສູ້ກ້າວເຂົ້າສູ່ສັກດີນາລວມສູນ ແລະ ກາຍເປັນມະຫາອານາຈັກໃນແຫຼມສຸວັນນະພູມ ໃນທີ່ສຸດກໍ່ປະສົບຜົນສຳເລັດ.

ເມື່ອສຳເລັດການທ້ອນໂຮມອຳນາດລວມສູນໃນພະມ້າແລ້ວສັກດີນາພະມ້າກໍ່ໄດ້ຂະຫຍາຍອິດທິພົນລົງໃຕ້ເລື້ອຍໆ ແລະ ສາມາດຍຶດເອົາອານາຈັກຫົງສາວະດີຂອງພວກມອນໄດ້ສຳເລັດໃນ ປີ ຄ.ສ 1539 ເປົ້າໝາຍຮຸກຮານຕໍ່ໄປຂອງສັກດີນາພະມ້າ ແມ່ນອາຍຸດທະຍາ ແລະ ລາວລ້ານຊ້າງ ພໍຕົກມາຮອດສະໄໝຂອງບູເລັງນອງກໍ່ໄດ້ສືບຕໍ່ນະໂຍບາຍຂະຫຍາຍອານາເຂດ ຕາມແນວທາງຂອງ ຕະບິງເສີເວຕີ ບູເລັງນອງວາງເປົ້າໝາຍວ່າ ຂັ້ນທຳອິດຕ້ອງເຕົ້າໂຮມເອົາພາກກາງ ຂອງພະມ້າໃຫ້ສຳເລັດ, ຂັ້ນທີ 2 ແມ່ນສ້າງຄວາມເປັນເອກະພາບແຫ່ງອານາຈັກພະມ້າໃຫ້ສົມບູນ.

ບູເລັງນອງໄດ້ຈ້າງກອງທະຫານອາສາສະຫມັກຂອງຊາວປ໋ອກຕຸຍການເປັນຜູ້ບັນຊາການແລ້ວເຕົ້າໂຮມເອົາກຳລັງທຸກເມືອງຂຶ້ນເພື່ອບຸກຕີເມືອງອັງວະພາຍຫຼັງຍຶດນະຄອນອັງວະສຳເລັດແລ້ວບູເລັງນອງຈຶ່ງປະກາດຕົນເອງເປັນລາຊາທິລາດທີ່ເມືອງຫົງສາວະດີ ຈາກນັ້ນ ກໍ່ໄດ້ລວບລວມກຳລັງທັງໝົດຂຶ້ນ. ເມື່ອຍຶດເອົາພາກເໜືອ

ຂອງລັດຊານ ຄວາມພະຍາຍາມຂອງ ບູເລັງນອງ ໄດ້ກາຍເປັນ ຄວາມສໍາເລັດ ໃນປີ ຄ.ສ 1555 ແລະ ກາຍເປັນອານາຈັກທີ່ເຂັ້ມແຂງທີ່ສຸດ ຢູ່ພາກພື້ນອາຊີອາຄະເນ.

**ຂ. ສະພາບຂອງລ້ານຊ້າງ**

ການທີ່ເຈົ້າໄຊຍະເສດຖາທິລາດ ປະນະຄອນຊຽງໃໝ່ມາແກ້ໄຂສະພາບບໍ່ປົກກະຕິຢູ່ນະຄອນຊຽງທອງເທົ່າກັບເປັນການໄຂປະຕູຮັບເອົາແຜນການຂະຫຍາຍອານາເຂດ ຂອງສັກດີນາພະມ້າເຊິ່ງບູເລັງນອງເປັນກະສັດໃນເວລານັ້ນ ແຜນການຂະຫຍາຍອານາເຂດຂອງ ບູເລັງນອງ ແມ່ນການຂະຫຍາຍອິດທິພົນກວມເອົາອານາຈັກລ້ານນາ , ອານາຈັກອາຍຸດທະຍາ ແລະ ອານາຈັກລາວລ້ານຊ້າງ ແຕ່ອຸປາສັກທີ່ຂັດຂວາງແຜນການຂອງ ບູເລັງນອງ ແມ່ນຄວາມເຂັ້ມແຂງຂອງອານາຈັກລາວລ້ານຊ້າງ ຂອງເຈົ້າໄຊຍະເສດຖາທິລາດ , ເພາະວ່າລ້ານນາ ແລະອາຍຸດທະຍາຕ່າງກໍ່ມີຄວາມສໍາພັນກັບລ້ານຊ້າງ, ດັ່ງນັ້ນ, ບູເລັງນອງຈິ່ງວາງເປົ້າໝາຍວ່າ ຕ້ອງລົບລ້າງຄວາມເຂັ້ມແຂງຂອງອານາຈັກລາວລ້ານຊ້າງກ່ອນຄື: ຕ້ອງຢຶດເອົາລ້ານນາ ໃຫ້ຢູ່ໃນກໍາມືສາກ່ອນ ບູເລັງນອງໄດ້ຍຸແຍ່ໃຫ້ກຸ່ມສັກດີນາ ໃນອານາຈັກລ້ານນາປະກາດແຍກຕົວ ອອກຈາກລ້ານຊ້າງ ອີກດ້ານໜຶ່ງ ກໍ່ໃຊ້ກໍາລັງນາບຄູ່ບັນດາຂຸນນາງ ແລະ ເຈົ້າເມືອງຕ່າງໆ ທີ່ຂຶ້ນກັບລ້ານນາ ໃຫ້ອ່ອນຍອມຕໍ່ພະມ້າ. ຂັ້ນຕໍ່ໄປແມ່ນເກນເອົາກໍາລັງຈາກຫົວເມືອງຂຶ້ນທັງໝົດບຸກເຂົ້າກຸງສີອາຍຸດທະຍາ ເຮັດໃຫ້ອານາຈັກລາວລ້ານຊ້າງຕ້ອງໂດດດ່ຽວແຜນການສຸດທ້າຍຂອງ ບູເລັງນອງ ແມ່ນເອົາກໍາລັງທັງໝົດເຂົ້າຍໍ້າຍີ່ອານາຈັກລາວລ້ານຊ້າງ ແຜນການດັ່ງກ່າວເປັນກາລະໂອກາດດີ ໃຫ້ແກ່ ບູເລັງນອງ ເພາະວ່າ ພໍດີກັບນະຄອນຊຽງໃໝ່ຫວ່າງບໍ່ມີເຈົ້າແຜ່ນດິນ ບູເລັງນອງ ຈຶ່ງມີເງື່ອນໄຂສ້າງຄວາມແຕກແຍກ ໃນສັກດີນາຂຸນນາງນະຄອນຊຽງໃໝ່ ເຊິ່ງມີແສນເມືອງເປັນຫົວໜ້າຕ້ອງການຢູ່ຮ່ວມກັບອານາຈັກລາວລ້ານຊ້າງ ແຕ່ກຸ່ມພະຍາສຸທັດສະນະພັດ ຕ້ອງການຂຶ້ນກັບພະມ້າ ເຮັດໃຫ້ນະຄອນຊຽງໃໝ່ເກີດຄວາມວຸ້ນວາຍ.

ຂ່າວຄວາມວຸ້ນວາຍຂອງນະຄອນຊຽງໃໝ່ມາເຖິງນະຄອນຊຽງທອງພະເຈົ້າເສດຖາທິລາດ ໄດ້ສົ່ງກໍາລັງຈາກຊຽງທອງຂຶ້ນເມືອປາບເຫດການທັງຫຼາຍຈຶ່ງສະຫງົບລົງ ສອງປີຕໍ່ມາກຸ່ມທີ່ນິຍົມພະມ້າ ອັນມີພະຍາສຸທັດສະນະພັດ ເປັນຫົວໜ້າໄດ້ທໍາການເຄື່ອນໄຫວພ້ອມທັງໄປເຊີນເອົາເຈົ້າເມກຸຕິ ຜູ້ເປັນເຊື້ອສາຍພະຍາເມັງລາຍ (ເວລານັ້ນບວດເປັນພະ) ຂໍໃຫ້ສິກອອກມາເປັນເຈົ້າຊີວິດຊຽງໃໝ່ ເມື່ອເຈົ້າເມກຸຕິໄດ້ເປັນເຈົ້າແຜ່ນດິນລ້ານນາແລ້ວກໍ່ເກີດຄວາມຢ້ານກົວພະເຈົ້າໄຊຍະເສດຖາທິລາດ ຈະຍົກທັງກໍາລັງມາປາບຈຶ່ງຍອມຮັບເອົາສິດອາລັກຂາຂອງພະມ້າ ເຊິ່ງແຜນການນີ້ສ້າງຄວາມບໍ່ພໍໃຈໃຫ້ແກ່ ບູເລັງນອງ ເປັນທີ່ສຸດ.

ພໍຕົກຮອດ ປີ ຄ.ສ 1555 ພະເຈົ້າໄຊຍະເສດຖາທິລາດ ໄດ້ກະກຽມກໍາລັງໄປບຸກຕີເມືອງຊຽງໃໝ່ເພື່ອລົບລ້າງບັນລັງຂອງພະຍາເມກຸຕິ ແລະ ຂັບໄລ່ອິດທິພົນຂອງພະມ້າອອກຈາກລ້ານນາ ຝ່າຍພະຍາເມກຸຕິເມື່ອຊາບຂ່າວການຍົກທັບຂອງພະເຈົ້າໄຊຍະເສດຖາທິລາດ ກໍ່ຕົກໃຈຟ້າວຂໍກໍາລັງຈາກພະມ້າ ເພື່ອປ້ອງກັນນະຄອນຊຽງໃໝ່ ແລະ ໄດ້ຈັດແຈງກໍາລັງທັບນໍາພາໂດຍພະຍາໄຊຍະເສນໃຫ້ໄປດັກສະກັດ ກອງທັບລາວລ້ານຊ້າງຢູ່ຜາໄດ (ເມືອງຊຽງລາຍ) ກອງທັບລາວລ້ານຊ້າງນໍາພາໂດຍພະຍົດລືກຽດ (ພະຍາແສນສຸລິນລືໄຊ) ໄດ້ປະທະກັບພະຍາໄຊຍະເສນ ຢູ່ບ້ານດ່ານໃນບັ້ນຮົບນີ້ ພະຍາໄຊຍະເສນຖືຂ້າຕາຍ. ໃນເວລາດຽວກັນນັ້ນ ບູເລັງນອງ ຜູ້ນໍາຂອງພະມ້າ ກໍ່ໄດ້ທໍາການເຄື່ອນໄຫວປາບປາມບັນດາຫົວເມືອງທັງຫຼາຍ ຢູ່ດິນແດນລ້ານນາພ້ອມທັງບັງຄັບ ໃຫ້ພະຍາ

ເມກຸຕິຕ້ອງຍອມເປັນເມືອງຂຶ້ນໂດຍກົງຕໍ່ພະມ້າສຸດທ້າຍພະຍາເມກຸຕິຕ້ອງຍອມມອບເມືອງຊຽງໃໝ່ໃຫ້ແກ່ພະມ້າ ແລະ ພະຍາເມກຸຕິກໍ່ຖືກແຕ່ງຕັ້ງເປັນເຈົ້າແຜ່ນດິນແຫ່ງອານາຈັກລ້ານນາພ້ອມທັງສາບານເປັນຜູ້ຈົ່ງຮັກພັກດີ ແລະ ຊື່ສັດຕໍ່ພະມ້າ.

ພາຍຫຼັງສຳເລັດແຜນການຍຶດຄອງລ້ານນາແລ້ວ ບູເລັງ ນອງກໍ່ວາງແຜນເພື່ອຈັບເອົາພະເຈົ້າໄຊຍະເສດຖາທິລາດແຕ່ທຸກການກະທຳຂອງ ບູເລັງນອງ ນັ້ນພະເຈົ້າໄຊຍະເສດຖາທິລາດ ໄດ້ຮັບຮູ້ໝົດພະອົງໄດ້ກະກຽມກຳລັງເພື່ອບຸກຕີເມືອງຊຽງໃໝ່ ພ້ອມກັນນັ້ນກໍ່ໃຫ້ພະຍາກາສີວິໄຊ, ແສນຊ້າງທ້າວ, ແສນໄຊຍະໂຊດ, ເອົາທະຫານຈຳນວນໜຶ່ງຄຸມຕົວນ້ອຍເມັງເຈຍ (ທູດພະມ້າ) ທີ່ສົ່ງສານຈາກ ບູເລັງນອງ ເຖິງພະເຈົ້າໄຊຍະເສດຖາທິລາດ ລົງມາຊຽງທອງ ແຕ່ຖືກກອງມ້າໄວຂອງພະຍາໄລ່ມາທັນຢູ່ແຄມແດນເມືອງຈຶ່ງເກີດການສູ້ຮົບກອງລະຫວ່າງ ຫຼັງຂອງລ້ານຊ້າງຖືກຕີແຕກພະຍາກາງວິໄຊ, ແສນຊ້າງທ້າວ ແລະ ແສນໄຊຍະໂຊດ ພ້ອງດ້ວຍນ້ອຍເມັງເຈຍ ຖືກກອງມ້າໄວພະມ້າຈັບໄດ້ດັ່ງນັ້ນພະເຈົ້າໄຊຍະເສດຖາທິລາດ ຈຶ່ງຖອຍກັບຄືນມາຊຽງທອງ ໃນປີ ຄ.ສ 1559.

**ຄ. ແຜນການປ້ອງກັນອານາຈັກຂອງລ້ານຊ້າງ**

- ດຳເນີນການຍົກຍ້າຍນະຄອນຫຼວງຊຽງທອງ ລົງມາຕັ້ງຢູ່ວຽງຈັນ (1560)
- ສ້າງກຳແພງອ້ອມນະຄອນວຽງຈັນ
- ດຳເນີນການປັບປຸງເມືອງດ່ານ ເຊັ່ນ: ວຽງຄຸກ, ວຽງງົວ, ວຽງພັນພ້າວ, ວຽງປາກຫ້ວຍຫຼວງ (ຂຶ້ນກັບໜອງຄາຍໃນປັດຈຸບັນ), ວຽງປາກງື່ມ, ວຽງໜອງຫານນ້ອຍ, ວຽງໜອງຫານຫຼວງ,ວຽງແກ້ວ, ວຽງຕຳ ແລ ຊາຍຟອງ.
- ປັບປຸງກຳລັງກອງທັບ, ຝຶກແອບທະຫານ, ຝຶກແອບຊ້າງເສິກ ແລະ ມ້າເສິກ.
- ປັບປຸງລະບົບບໍລິຫານ
- ສ້າງສາຍພົວພັນພິເສດກັບອາຍຸດທະຍາ (ສະໄໝລາຊະການພະມະຫາຈັກກະພັດ)

**2) ການດຳເນີນສົງຄາມ**

**ກ. ການດຳເນີນສົງຄາມໄລຍະທີ1 ປີ ຄ ສ 1563**

ໃນໂອກາດທີ່ກຳລັງນຳພາປະຊາຊົນ ສ້າງນະຄອນຫຼວງໃໝ່ຢູ່ວຽງຈັນນັ້ນ ພະເຈົ້າໄຊຍະເສດຖາທິລາດພ້ອມດ້ວຍພະຍາມືເຫຼັກ, ພະຍາຊ້າຍແຂນທັກ ແລະ ແສນຊ້າງທ້າວ ລົງໄປຢ້ຽມຢາມເມືອງທີ່ຢູ່ບັນດາຕາເວັນອອກກໍ້າໃຕ້ ໂດຍທາງເມືອງໂສກ, ເມືອງຊຸງ ຈົນຮອດເມືອງອັດກະບື ຢູ່ທີ່ນີ້ມີຊ້າງປ່າຫຼາຍພະອົງຈຶ່ງເລືອກເອົາເມືອງອັດກະບື ເປັນບ່ອນຕັ້ງທັບ ແລະ ພະນຽດ ຊ້າງສາມາດຈັບຊ້າງປ່າມາຝຶກແອບໃຫ້ກາຍເປັນຊ້າງບ້ານບອກໄດ້ໃຊ້ຟັງເຖິງ 100 ໂຕໃນໄລຍະນີ້ພະອົງໄດ້ໄປຢ້ຽມຢາມຫົວເມືອງທາງພາກໃຕ້ນີ້ ໄດ້ມອບໃຫ້ພະຍາແສນສຸລິນ ແລະ ບາຈັນກອງນາງ ເປັນຜູ້ດູແລບ້ານເມືອງ.

ໃນເວລາດຽວກັນນັ້ນແສນນ້ອຍກັບພະຍາສາມລ້ານເມືອງຊຽງໃໝ່ສົມຮູ້ຮ່ວມຄິດກັນຈະລົ້ມລາຊະບັນລັງຂອງພະຍາເມກຸຕິ ຈົນເກີດສົງຄາມກາງເມືອງຂຶ້ນອັນເປັນການເປີດໂອກາດໃຫ້ແກ່ພະມ້າ ພະຍາເມກຸຕິຢ້ານເສຍບັນລັງຈຶ່ງແຕ່ງຕັ້ງທູດໄປລາຍງານເຈົ້າຫົງສາວະດີ. ດັ່ງນັ້ນ, ເຈົ້າຫົງສາວະດີ ຈຶ່ງນຳກຳລັງມາປາບປາມ

ແສນນ້ອຍໄດ້ລົບໜີໄປຢູ່ເມືອງຊຽງແສນ ສ່ວນພະຍາສາມລ້ານ ໄດ້ພາຄອບຄົວ ແລະ ພັກພວກໜີມາຢູ່ລ້ານຊ້າງ ກອງກຳລັງຫົງສາວະດີໄດ້ໄລ່ຕິດຕາມຈັບຕົວແສນນ້ອຍ ແລະ ພະຍາສາມລ້ານແລ້ວໄດ້ຍຶດເອົາເມືອງຫຼວງພະບາງ ແລະ ກໍ່ຍຶດເອົາເມືອງພວນຊຽງຂວາງ. ຈາກນັ້ນ ກອງທັບພະມ້າກໍ່ໄດ້ຕີລ່ອງເຂົ້ານະຄອງຫຼວງວຽງຈັນ, ມະຫາອຸປະລາດວໍລະວັງໂສ ເປັນນ້ອງຊາຍຂອງເຈົ້າໄຊຍະເສດຖາທິລາດ ເຊິ່ງໄດ້ຮັບການມອບໝາຍໃຫ້ເບິ່ງແຍງບ້ານເມືອງ ໃນເວລາເຈົ້າໄຊຍະເສດຖາທິລາດບໍ່ຢູ່ໄດ້ນຳກຳລັງອອກຕໍ່ສູ້ກັບພະມ້າ ແຕ່ບໍ່ສາມາດຕ້ານທານໄດ້ ເມື່ອກອງທັບພະມ້າເຂົ້າວຽງຈັນແລ້ວ ກໍ່ທຳການຈັບເອົາມະຫາອຸປະລາດວໍລະວັງໂສ, ເຈົ້າຍິງຄຳໄຂ, ເຈົ້າຍິງແທນຄຳ ແລະ ພະຍານະຄອນສົ່ງໄປຫົງສາວະດີເພື່ອເປັນຕົວປະກັນ.

ຂ່າວການຍຶດວຽງຈັນຂອງກອງທັບພະມ້າດັ່ງໄປຮອດ ພະເຈົ້າໄຊຍະເສດຖາທິລາດ ໃນຂະນະທີ່ພະອົງຢັ້ງຢາມປະຊາຊົນເຂດນ້ຳເຊກອງ, ເຊຊາມ ແລະ ເຊໂປນ. ພະອົງມີຄວາມວິຕົກກັງວົນທີ່ສຸດ ພະອົງໄດ້ມອບພາລະກິດການສ້າງວັດວາອາຣາມໃຫ້ແກ່ທ່ານພະຄູຫຼຸຍາວຈຸບ່າ ເຊິ່ງພະສະຫາຍທີ່ຮັກແພງ ສ່ວນພະອົງເອງກໍ່ຟ້າວນຳຂະບວນ ການກັບຄືນນະຄອນຫຼວງ ໂດຍຜ່ານເມືອງສາລະວັນ, ວາປີທົມ ລັດໃສ່ວຽງໜອງຫານ ແລ້ວຟ້າວຮຽກເສນາມຸນຕີ ທີ່ຕິດຕາມທ່ານມາປະຊຸມ ວາງແຜນຂັບໄລ່ກອງທັບພະມ້າອອກຈາກດິນແດນລ້ານຊ້າງ ແລະ ໄດ້ຈັດກອງທັບອອກເປັນສອງສາຍໃຫຍ່ ຄື: ສາຍທີ 1 ແມ່ນພະອົງເປັນແມ່ທັບຕິດຕາມດ້ວຍພະຍາຊ້າຍແຂນຫັກ ແລະ ພະຍາຊ້າງທ້າວ; ສາຍທີ 2 ມອບໃຫ້ພະຍາແສນສຸລິນ ເປັນແມ່ທັບຕິດຕາມດ້ວຍພະຍາຈັນກອງນາງໃຫ້ຍົກທັບແບບສາຍຟ້າແມບເຂົ້າວຽງຈັນ ໂດຍສາຍທີ່1 ມີໜ້າທີ່ເປັນກອງໜູນ ຝ່າຍອິມພາເລຢູ່ວຽງຈັນເມື່ອວ່າກອງທັບພະເຈົ້າໄຊຍະເສດຖາທິລາດ ພວມຍົກທັບກັບມາຈຶ່ງມີຄຳສັ່ງໃຫ້ກອງທັບຂອງຕົນຖອນອອກຈາກວຽງຈັນ ຢ່າງຮີບດ່ວນເພື່ອໃຫ້ພົ້ນຈາກການໄລ່ຕິດຕາມຂອງທະຫານລາວລ້ານຊ້າງ, ພະຍາຊ້າຍແຂນຫັກ ແລະ ພະຍາຊ້າງທ້າວ ໄດ້ນຳກຳລັງໄລ່ຕິດຕາມຈົນຮອດເມືອງນ່ານ ຈັບຊ້າງເສີກພະມ້າ ໄດ້ສອງໂຕແລ້ວນຳກຳລັງທັບກັບວຽງຈັນ.

**ຂ. ການດຳເນີນສົງຄາມໄລຍະທີ2ປີ ຄ ສ 1570**

ເມື່ອບູເລັງນອງ ສາມາດຍຶດອາຍຸດທະຍາໄດ້ແລ້ວ ມັນໄດ້ເປັນການເພີ່ມຈຳນວນພົນຮົບຂອງບູເລັງນອງຂຶ້ນຫຼາຍໝື່ນຄົນ, ພາຫານະສົງຄາມກໍ່ເພີ່ມຂຶ້ນເຊັ່ນ: ຊ້າງເສີກ, ມ້າເສິກ, ອາວຸດຍຸດໂທປະກອນກໍ່ເພີ່ມຂຶ້ນຢ່າງພຽງພໍ. ອຸປະກອນສົງຄາມທີ່ສຳຄັນທີ່ສຸດໃນເວລານັ້ນໄດ້ແກ່ປືນໃຫຍ່ທີ່ຊື້ຈາກຊາວຕາເວັນຕົກ (ປອກຕຸຍການ) ມີເຖິງ 400 ກະບອກ, ອັນໄດ້ເຮັດໃຫ້ອິດທິພົນຂອງບູເລັງນອງ ເຂັ້ມແຂງຍິ່ງຂຶ້ນ. ພ້ອມທັງອານາເຂດພະມ້າກໍ່ຂະຫຍາຍກວ້າງອອກຍິ່ງຂຶ້ນ. ການເຄື່ອນໄຫວກໍ່ບໍ່ຫຍຸ້ງຍາກໃນການຂົນສົ່ງສະບຽງອາຫານ. ເມື່ອສະຖານະການອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍອານາເຂດຂອງພະມ້າເຂົ້າສູ່ດິນແດນຂອງລ້ານຊ້າງ. ແຕ່ວ່າຊ່ວງໄລຍະທີ່ພະເຈົ້າໄຊເສດຖາທິລາດ ຄອງບັນລັງນີ້ ກຳລັງທະຫານຂອງອານາຈັກລາວລ້ານຊ້າງກໍ່ມີຄວາມເຂັ້ມແຂງຍ້ອນມີການເຝິກແອບ, ທະຫານສ່ວນຫຼາຍໄດ້ຜ່ານການສູ້ຮົບເລື້ອຍໆ, ມີຍຸດທະວິທີໃນການສູ້ຮົບ, ມີການຈັດຕັ້ງທາງການເມືອງ, ການປົກຄອງໜັກແໜ້ນ, ມີເສດຖະກິດໝັ້ນຄົງ. ບູເລັງນອງ ຖືວ່າພະເຈົ້າໄຊເສດຖາທິລາດ ເປັນຄູ່ແຂ່ງຕົວອັນຕະລາຍທີ່ສຸດ ຖ້າແຜນການຍຶດອານາຈັກລາວລ້ານຊ້າງບໍ່ສຳເລັດ, ບັນດາອານນາຈັກອື່ນໆ ໂດຍສະເພາະແມ່ນບັນດາອານາຈັກທີ່ມີເຊື້ອຊາດອ້າຍລາວຈະລວມຕົວກັນຕໍ່ຕ້ານຕົນເອງ. ຍ້ອນແນວ

ນັ້ນບູເລັງນອງ ຕ້ອງທຸ້ມເທຄວາມພະຍາຍາມຢ່າງໃຫຍ່ຫຼວງໃນການຢຶດເອົາອານາຈັກລາວລ້ານຊ້າງໃຫ້ໄດ້ຢ່າງເດັດຂາດ. ໂດຍສະເພາະແມ່ນພະຍາຍາມຈັບພະເຈົ້າໄຊເສດຖາທິລາດເປັນຕົວປະກັນ.

ເຖິງຢ່າງໃດກໍ່ຕາມ ເມື່ອບູເລັງນອງມີອຳນາດສູງສຸດ ໄດ້ບັງຄັບເກັບເກນກຳລັງເພື່ອລວບລວມເອົາອານາຈັກລ້ານຊ້າງ ໄວ້ໃນກຳມື ຖ້າບໍ່ໄດ້ລາວລ້ານຊ້າງກໍ່ບໍ່ສົມກັບຄຳກ່າວຂອງບັນດາສັກດີນາທີ່ເປັນເມືອງຂຶ້ນຂອງພະມ້າວ່າ "ຜູ້ຊະນະສິບທິດ" ຮອດຕົ້ນປີ ຄ ສ 1570 ບູເລັງນອງ ໄດ້ເກັບເກນເອົາຊາຍສະກັນຕາມຫົວເມືອງຂຶ້ນທັງໝົດເຂົ້າເປັນກອງທັບຫຼວງເພື່ອກຽມຍົກທັບມາຕີອານາຈັກລ້ານຊ້າງ.

ມາຮອດປີ ຄ ສ 1570 ເປັນປີແຫ່ງການກະກຽມເງື່ອນໄຂຂອງບູເລັງນອງ ທີ່ຈະບຸກຍຶດເອົາອານາຈັກລ້ານຊ້າງ. ດັ່ງນັ້ນ, ບັນຫາທີ່ສຳຄັນທີ່ສຸດແມ່ນການກະກຽມສະບຽງອາຫານບູເລັງນອງ ໄດ້ສັ່ງໃຫ້ຫົວເມືອງຕ່າງໆເລັ່ງໃສ່ການປູກຝັງລ້ຽງສັດຢ່າງຂະໜາດໃຫຍ່ເພື່ອສະສົມໃຫ້ແກ່ກອງທັບຫຼວງ. ນອກນັ້ນກໍ່ຍັງມີການຈັດກຳລັງທັບໂດຍຮີບໂຮມເອົາກຳລັງຈາກປະເທດສາລາດ ແລະ ແບ່ງໜ້າທີ່ຮັບຜິດຊອບດັ່ງນີ້:

- ມະຫາອຸປະຮາດເມືອງຫົງສາ (ຜູ້ເປັນລູກຊາຍ) ເປັນກອງທັບໜ້າເກນເອົາທະຫານມອນ, ຍວນຊຽງໃໝ່, ຍົກທັບເຂົ້າມາເມືອງນ່ານ ແລ້ວເຂົ້າສູ່ຊຽງຄານ.
- ແຕ່ງເຈົ້າເມືອງອັງວະ (ລູກເຂີຍ) ແລະ ເຈົ້າເມືອງແປ (ນ້ອງຊາຍ) ເປັນແມ່ທັບຄຸມຊາວມອນ, ພະມ້າ, ກະລຽງ, ໄທສະຫຍາມ ຮ່ວມກັບກອງທັບມະຫາອຸປະຮາດ ເມືອງພິດສະນຸໂລກຍົກທັບມາທາງເໜືອເພັດສະບູນເຂົ້າສູ່ໜອງບົວລຳພູນ.
- ສຳລັບບູເລັງນອງ ເປັນແມ່ທັບຫຼວງຄຸມຊາວມອນ, ສະລຽງ, ພະມ້າ, ຊາວລື້ ແລະ ໄທສະຫຍາມສົມທົບກັບເຈົ້າເມືອງຕອງອູ, ເມືອງໄຊຍະ ແລະ ກອງທັບເມືອງພິດສະນຸໂລກ ຂອງພະມະຫາທຳມະລາຊາ ເຄື່ອນທັບເຂົ້າມາຕາມລຳນ້ຳຊີຜ່ານທາງເມືອງໄຊຍະພູມ ເຂົ້າສູ່ເມືອງ ໜອງບົວລຳພູ.

ພໍກ້າວເຂົ້າສູ່ລະດູແລ້ງຂອງຕົ້ນ ປີ ຄສ 1571 ບູເລັງນອງ ໄດ້ສັ່ງໃຫ້ກອງທັບທຸກກອງເຄື່ອນຍ້າຍຕາມເສັ້ນທາງດັ່ງກ່າວ ແລະ ມຸ່ງໜ້າສູ່ອານາຈັກລາວລ້ານຊ້າງໄດ້ກຳນົດເອົາເມືອງ ໜອງບົວລຳພູ ເປັນຄ້າຍໃຫຍ່ເພື່ອວາງແຜນບຸກເຂົ້າວຽງຈັນ.

ຕໍ່ໜ້າສະພາບການດັ່ງກ່າວນັ້ນເຈົ້າໄຊເສດຖາທິລາດ ໄດ້ເລັ່ງລົງມືປັບປຸງກຳລັງປ້ອງກັນອານາຈັກລົງມືກໍ່ສ້າງລະບົບປ້ອງກັນນະຄອນຫຼວງຢ່າງແໜ້ນໜາທຸກສິ່ງທຸກຢ່າງທີ່ເຈົ້າໄຊເສດຖາທິລາດໄດ້ຄາດຄະເນໄວ້ຕົ້ນ ປີ ຄ ສ 1571 ຂ່າວການເຄື່ອນທັບຂອງພະມ້າພວມຈະມາຢໍ່າຢີນະຄອນວຽງຈັນ, ເພື່ອປົກປັກຮັກສາຄວາມເປັນເອກະລາດຂອງອານາຈັກລາວລ້ານຊ້າງພະເຈົ້າໄຊເສດຖາທິລາດຈຶ່ງໄດ້ຮຽກບັນດາແມ່ທັບມາວາງແຜນຕີຕ້ານການບຸກລຸກຂອງພະມ້າ. ໃນກອງປະຊຸມຄັ້ງນີ້ມີພະຍາແສນສຸລິນ ເຊິ່ງດຳລົງຕຳແໜ່ງເປັນເສນາເມືອງໄດ້ສະເໜີຍຸດທະວິທີຕ້ານ ການຮຸກຮານຂອງພະມ້າວ່າ "ເຈົ້າຫົງສາວະດີຊົງສະຫຼາດໃນການເສິກສົງຄາມເປັນຢ່າງດີ ປັນຍາກໍ່ຫຼັກແຫຼມຈຳຕ້ອງມີກົນອຸບາຍຈຶ່ງຈະໄດ້ໄຊຊະນະ, ຂ້າຜ່າບາດເຫັນວ່າຄວນຈະຍົກ ແລະ ອົບພະຍົບພົນລະເມືອງໄປຢູ່ດ້ານໃຕ້ເຂົ້າລີ້ຢູ່ຕາມປ່າດົງໃຫ້ໝົດສ່ວນຄອບຄົວ ທ້າວ ພະຍາ ທັງຫຼາຍນັ້ນໃຫ້ເອົາໄປໄວ້ຢູ່ວຽງສຸລິນ ຖ້າເຈົ້າຫົງສາວະດີ ເຂົ້າມາຕີວຽງຈັນຈະໄດ້ເອົາວຽງຈັນເປັນຄ່ວງສະໜາມ "ຕໍ່ໜ້າສະພາບການພະມ້າເຖິງຈະມີທ່າແຮງກຳລັງຫຼາຍແຕ່ ບູເລັງນອງ ກໍ່ແມ່ນທັບຜູ້ຮຸກຮານຈາກແດນໄກແນ່ນອນເຂົ້າເຈົ້າບໍ່ເຄີຍກັບດິນຟ້າອາກາດ ແລະ ພູມສັນຖານ ອີກດ້ານໜຶ່ງເສັ້ນທາງລຳລຽງສະບຽງອາຫານພັດຢູ່ໄກ ແລະ ພົບພໍ້ຄວາມຫຍຸ້ງຍາກ

ຫຼາຍດ້ານ. ຜ່ານການໄຈ້ແຍກ ແລະ ຕຶກຕອງຂອງພະຍາແສນສຸລິນໄດ້ວາງຍຸດທະວິທີຕໍ່ຕ້ານ ແລະ ຮຸກຮານຂອງສັດຕູທີ່ພະເຈົ້າໄຊເສດຖາທິລາດ ໄດ້ເຫັນນຳທຸກຢ່າງຄື:

1. ອົບພະຍົກຄອບຄົວພົນລະເມືອງຂ້າມໄປຢູ່ຝັ່ງດ້ານໃຕ້ໃຫ້ເຂົ້າໄປລີ້ຊ້ອນຢູ່ຕາມປ່າຕາມດົງປະໃຫ້ວຽງຈັນເປັນເມືອງວ່າງເປົ່າໃຫ້ປະຊາຊົນຖາງປ່າດົງລຽບຕາມແຄມແມ່ນ້ຳຂອງໃຫ້ກຽງເພື່ອໃຫ້ສັດຕູເຂົ້າມາວຽງຈັນ ແລະ ເອົາວຽງຈັນເປັນສະໜາມຮົບ.
2. ໃຫ້ພະຍາຫານແກ້ວ, ພະຍາຫານພາບ ແລະ ພະຍາທຳມະຄຸນ ຄຸມທັບເປັນກອງຫຼອນປິດລ້ອມຂ້າເສິກ ທີ່ສົ່ງສະບຽງອາຫານມາລ້ຽງກອງທັບພະມ້າຢູ່ວຽງຈັນເມື່ອຂົນປະຊາຊົນອອກຕາມແຜນແລ້ວກໍ່ເລີ່ມຈັດຕັ້ງຍຸດທະວິທີກອງທັບດັ່ງນີ້:

- ໃຫ້ພະຍານະຄອນ (ສີໂຄດຕະບອງ), ພະຍາເພັດ, ພະຍາປາກຫ້ວຍຫຼວງ, ພະຍາສຸລະເສນຄຸມທັບຫຼອກໃຫ້ຂ້າເສິກທັງຫຼາຍຫຼົງຕິດຕາມແລ້ວຕັ້ງສະກັດຕີຢູ່ທາງໃຕ້ວຽງຈັນໃນຝັ່ງຂວາແມ່ນ້ຳຂອງ.
- ຕັ້ງພະຍາສີນາດ(ຈັນກອງນາງ), ພະຍາຂາວດອກນາດ, ພະຍາລາສະກົດ, ພະຍາຍົດລືກຽດຄຸມທັບສະກັດອອກລັດຕີຢູ່ທາງຕາເວັນອອກວຽງຈັນ.
- ຕັ້ງໝື່ນໄຊ (ເຈົ້າເມືອງພວນ) ເຈົ້າພູມເໜືອຄຸມທັບອອກລັດຕີກອງລຳລຽງຂອງຂ້າເສິກພະມ້າ
- ກອງທັບຫຼວງຄຸມທັບໂດຍພະເຈົ້າໄຊເສດຖາທິລາດ, ໃນກອງທັບນີ້ມີນາຍທະຫານຜູ້ເຄີຍຜ່ານສົງຄາມມາຫຼາຍແລ້ວເຊັ່ນ: ພະຍາມືໄຟຫົວໜ້າ, ພະຍາມືເຫຼັກເປັນທັບຂວາ, ພະຍາຊາຍແຂນທັກເປັນທັບຊ້າຍ.
- ສ່ວນພະຍາແສນສຸລິນນອກຈາກເປັນຜູ້ບັນຊາທະຫານສູງສຸດແລ້ວຍັງໄດ້ຄຸມທັບອອກສະກັດຂ້າເສິກທາງດ້ານຕາເວັນຕົກຂອງວຽງຈັນທີ່ເປັນທາງຂອງພວກຂ້າເສິກພະມ້າຈະຖອນອອກຈາກວຽງຈັນ, ໃນກອງນີ້ລ້ວນແຕ່ມີນັກຮົບຜູ້ທີ່ຜ່ານສົງຄາມມາຫຼາຍແລ້ວເຊັ່ນ: ພະຍາສາມລ້ານ, ພະຍາພິມເທບ, ພະຍາເມືອງຊ້າຍ, ພະຍາແກ່ນທ້າວ, ພະຍາເມືອງຂວາ, ພະຍາແກ, ພະຍາເມືອງນະຄອນໂລກ, ພະຍານະຄອນລ້ານຊ້າງເປັນຕົ້ນ.

ເມື່ອກອງທັບພະມ້າເຂົ້າມາໃກ້ເຂດນະຄອນຫຼວງວຽງຈັນແລ້ວກອງທັບພະຍາຄອນກໍ່ທຳອຸບາຍຖອນກຳລັງລົງປາກງື່ມເຮັດໃຫ້ກອງທັບຂ້າເສິກພະມ້າເຂົ້າໃຈວ່າເຈົ້າໄຊເສດຖາທິລາດພາກອງທັບໜີ, ພວກພະມ້າຈຶ່ງໄລ່ຕິດຕາມ ແລະ ສາມາດຢຶດໄດ້ເມືອງທ່າບໍ່, ເມືອງວຽງຄຸກ ແລະ ໜອງຄາຍຕາມລຳດັບ ພ້ອມທັງສັ່ງໃຫ້ທະຫານເຮັດເຮືອຂະໜາດໃຫຍ່ 300 ລຳ ເຮືອນ້ອຍ 200 ລຳ, ກະກຽມໄວ້ເພື່ອຍົກກຳລັງມາຕັ້ງທາງພາກເໜືອປາກງື່ມເພື່ອຫຼີກລຽງການປະທະກັບເຈົ້າໄຊເສດຖາທິລາດ ແຕ່ການຄາດຄະເນຂອງກອງທັບພະມ້າຜິດໄປເພາະວ່າກອງທັບຂອງລ້ານຊ້າງເວລານັ້ນບໍ່ຮູ້ວ່າຢູ່ບ່ອນໃດແທ້. ຈາກນັ້ນບູເລັງນອງໄດ້ສັ່ງໃຫ້ກອງທັບຫຼວງເຂົ້າຢຶດເອົານະຄອນວຽງຈັນເຊິ່ງພົບແຕ່ຄວາມເປົ່າແປນ ແລະ ບໍ່ໄດ້ຮັບການຕໍ່ສູ້ຈາກຝ່າຍລາວລ້ານຊ້າງເລີຍ. ມາຮອດເວລານີ້ນະຄອນຫຼວງວຽງຈັນ ແລະ ຫົວເມືອງຕ່າງໆໄດ້ຕົກຢູ່ພາຍໃຕ້ການຍຶດຄອງຂອງບູເລັງນອງເຊິ່ງເປັນໄປຕາມແຜນຍຸດທະສາດຂອງພະຍາແສນສຸລິນຄືປ່ອຍໃຫ້ຂ້າເສິກເຂົ້າໃນວົງປິດລ້ອມ ແລ້ວຕີສັດຕູແບບກອງຫຼອນ ແລະ ຍາວນານຕາມແຜນການນີ້ເຮັດໃຫ້ຂ້າເສິກຕ້ອງຕົກຢູ່ໃນທ່າຕັ້ງຮັບ, ແຕ່ບູເລັງນອງກໍ່ບໍ່ຖອຍຄວາມພະຍາຍາມທີ່ຈະທຳລາຍອານາຈັກລາວລ້ານຊ້າງ

ແລະ ຈັບຕົວພະເຈົ້າໄຊເສດຖາທິລາດ ໃນເວລານັ້ນພະເຈົ້າໄຊເສດຖາທິລາດກໍ່ໄດ້ເຄື່ອນກໍາລັງຈາກໜອງຫານນ້ອຍອອກມາສູ່ປາກງື່ມໃຕ້ ຈຶ່ງໄດ້ປະທະກັບກໍາລັງບູເລັງນອງທີ່ຢູ່ທີ່ນັ້ນເປັນເວລາ 3 ມື້ 3 ຄືນ ຈາກນັ້ນພະເຈົ້າໄຊເສດຖາ ຈຶ່ງໄດ້ຖອນທັບມາຕັ້ງຢູ່ວຽງສຸລິນ ຕາມແຜນຍຸດທະສາດທີ່ວາງໄວ້ ເພື່ອປ່ອຍໃຫ້ຝ່າຍຂ້າເສິກມາຕັ້ງຢູ່ປາກງື່ມ ຈາກນັ້ນກອງທັບລ້ານຊ້າງກໍ່ໄດ້ມີການຫຼອນຕີກອງທັບຂອງພະມ້າທັງເວັນທັງຄືນ ເຮັດໃຫ້ພະມ້າຕົກຢູ່ໃນທ່າເສຍຫາຍຢ່າງໜັກໜ່ວງ, ໂດຍສະເພາະກອງກໍາລັງທະຫານລາວລ້ານຊ້າງໄດ້ທໍາການສະກັດລັດຕີກອງກໍາລັງສະບຽງອາຫານເຮັດໃຫ້ສັດຕູລົ້ມຕາຍໃນແຕ່ລະວັນນັບບໍ່ຖ້ວນ.

ດັ່ງນັ້ນ, ທຸກຄ້າຍຂອງກໍາລັງບູເລັງນອງຈຶ່ງຕົກຢູ່ສະພາວະຂາດແຄນອາຫານ, ທະຫານເຈັບປ່ວຍ ແລະ ລົ້ມຕາຍ ສະນັ້ນ, ບູເລັງນອງຈຶ່ງອອກຄໍາສັ່ງໃຫ້ກອງທະຫານທຸກເຫຼົ່າ ໃຫ້ຖອນອອກໄປໃຫ້ພົ້ນເຂດການໂຈມຕີຂອງຝ່າຍລາວ ແຕ່ເສັ້ນທາງຖອນທັບຂອງບູເລັງນອງ ຕ້ອງພົບກັບອຸປະສັກຫຼາຍຢ່າງ ໂດຍສະເພາະແມ່ນພະເຈົ້າໄຊຍະເສດຖາທິລາດໄດ້ມອບໝາຍ ໃຫ້ພະຍາແສນສຸລິນ ກຽມກໍາລັງໃຫ້ພຽບພ້ອມເພື່ອລໍຖ້າ ໂອກາດຖອນຕົວອອກ ຈາກນະຄອນວຽງຈັນຂອງພະມ້າ ໃນເວລານັ້ນພະຍາແສນສຸລິນແມ່ທັບໃຫຍ່ ໄດ້ນໍາພາກອງທັບໄລ່ຕິດຕາມກອງທັບບູເລັງນອງ ແລະ ໄດ້ເກີດການສູ້ກັນຢ່າງຂະໜາດໃຫຍ່ ໃນ 3 ຈຸດຄື:

- **ການສູ້ຮົບເມືອງວຽງຄຸກ**

ຕາມການມອບໝາຍຂອງພະຍານະຄອນພະຍາສຸກກະເສີມໄດ້ນໍາກອງທະຫານ ແລະ ປະຊາຊົນບຸກຕີໃສ່ກອງທະຫານພະມ້າ ທີ່ພວມຖອນອອກຈາກເມືອງວຽງຄຸກ, ສ່ວນພະຍາຫານພາບເປັນກອງຫຼອນ ຕີຂະໜາບແມ່ທັບຂ້າເສິກກອງທັບພະຍານະຄອນບຸກເຂົ້າຕີດ້ານຫຼັງ ຂອງຂ້າເສິກ ເຮັດໃຫ້ກອງທັບພະມ້າແຕກກະຈາຍເສຍຂວັນ ມີທັງຜູ້ໄດ້ຮັບບາດເຈັບ ລົ້ມຕາຍ ແລະ ຖິ້ມອາວຸດ , ຊ້າງ, ມ້າ ເປັນຈໍານວນຫຼວງຫຼາຍ ສ່ວນທີ່ເຫຼືອໜີລອດໄປໂຮມກັນຢູ່ໜອງບົວລໍາພູ.

- **ການສູ້ຮົບຢູ່ເມືອງໜອງບົວລໍາພູ**

ເມື່ອກໍາລັງທະຫານທີ່ລອດຕາຍຈາກບັ້ນຮົບວຽງຄຸກ, ມາພັກປິ່ນປົວທີ່ໜອງບົວລໍາພູມັນສ້າງໂອກາດອັນດີໃຫ້ແກ່ລາວລ້ານຊ້າງທີ່ຈະຕ້ອງສັ່ງສອນບົດຮຽນອັນເຈັບແສບໃຫ້ແກ່ບູເລັງນອງ. ກອງທັບລາວພາຍໃຕ້ການນໍາພາຂອງພະຍາສີຫານາດ, ພະຍາຂາວດອກນາກ, ພະຍາຍົດລຶກຽດ ແລະ ພະຍາລາກົດ ສົມທົບກັບກອງຫຼອນ ຂອງພະຍາທໍາມະຄຸນ ເຊິ່ງໄດ້ລໍຖ້າບຸກໂຈມຕີຢູ່ທີ່ນັ້ນ ໄດ້ສວຍໂອກາດເວລາກາງຄືນ ເຊິ່ງທະຫານພະມ້າກໍາລັງພັກຜ່ອນຢູ່ນັ້ນກອງທັບລາວກໍ່ໄດ້ບຸກໂຈມຕີຢ່າງກະທັນຫັນ ບຸກຕີພວກພະມ້າຕະຫຼອດຄືນ, ພໍຮຸ່ງເຊົ້າມາພວກພະມ້າກໍ່ໄດ້ຖອນອອກໄປທາງສະໜໍສໍ, (ໃກ້ຊ່ອງແຄບພູພະຍາພໍ່ຈອດໃສ່ສາຍພູໄຊຍະບູລີ) ກອງທັບລາວລ້ານຊ້າງກໍ່ຕີລັດທາງຂະບວນຂອງພະມ້າ ເຮັດໃຫ້ທະຫານພະມ້າບໍ່ຮູ້ຕົວ ຈຶ່ງແຕກໜີບໍ່ມີແນວຄິດຈະສູ້ຮົບ ພຽງແຕ່ເອົາຕົວລອດກໍ່ພໍ ຕ່າງກໍ່ພາກັນແລ່ນໜີເຂົ້າສູ່ລ່ອງແມ່ນໍ້າປາກສັກ. ຢູ່ໃນບັ້ນຮົບນີ້ກອງທັບພະມ້າໄດ້ສູນເສຍກໍາລັງເປັນຈໍານວນຫຼວງຫຼາຍ, ກອງທັບລ້ານຊ້າງສາມາດຂັບໄລ່ສັດຕູໃຫ້ພົ້ນຈາກດິນແດນລ້ານຊ້າງ ແລະ ຈັບສະເບຍສິງຄາມ, ຊ້າງ, ມ້າ ແລະ ອາວຸດໄດ້ເປັນຈໍານວນຫຼວງຫຼາຍ.

- **ບັ້ນຮົບບ້ານມະໂນສົມ**

ກອງທັບຫຼວງພະມ້ານໍາໂດຍບູເລັງນອງໄດ້ເຕົ້າໂຮມກໍາລັງຢູ່ເມືອງວຽງພັນພ້າວເມື່ອກອງທັບລາວໂຈມຕີຢ່າງໜັກໜ່ວງຈຶ່ງໄດ້ຖອນຕົວໄປທາງບ້ານມະໂນສົມ, ກອງທັບລາວໄດ້ໄລ່ຕີໄປຕະຫຼອດທາງເຊິ່ງມີກອງທັບລາວ 3 ກອງຄື: ກອງຫຼອນພະຍາຫານແກ້ວ, ພະຍານະຄອນໂລກ, ພະຍານະຄອນລ້ານຊ້າງ. ສ່ວນກອງທັບຂອງພະຍາແສນສຸລິນ ພ້ອມດ້ວຍນາຍທະຫານຊັ້ນຜູ້ໃຫຍ່ເປັນກອງດັກສະກັດທັງ 3 ກອງນີ້ໄດ້ບຸກຕີເຂົ້າໃສ່ກອງທະຫານຂອງບູເລັງນອງແບບສາມກ້ອນເສົ້າການບຸກຕີຂ້າເສິກໄປຕາມແບບແຜນຍຸດທະສາດທີ່ວາງໄວ້ທຸກປະການ.

ຜ່ານການຕໍ່ຕ້ານການຮຸກຮານຂອງພະມ້າຄັ້ງນີ້ມັນມີຄວາມໝາຍສໍາຄັນຄື: "ປະຊາຊົນລາວມີນໍ້າໃຈຮັກຊາດອັນພິລະອາດຫານເຊື່ອໝັ້ນຕໍ່ການນໍາພາ ແລະ ທໍລະຫົດອົດທົນເຖິງແມ່ນວ່າການຕໍ່ສູ້ຄາວນັ້ນຈະປະສົບຄວາມຫຍຸ້ງຍາກສັບສົນພຽງໃດກໍ່ຕາມ ແຕ່ປະຊາຊົນລາວກໍ່ອົດທົນຜ່ານຜ່າຕໍ່ສູ້ບໍ່ຍ້ອມຈໍານົນ. ຍ້ອນຄວາມມັກສະຫງົບ ຮັກອິດສະຫຼະມີຄວາມຮັກແພງສາມັກຄີກັນເຖິງຍາມມີສັດຕູຮຸກຮານກໍ່ໄດ້ສູ້ເອົາເປັນເອົາຕາຍໃນທີ່ສຸດກໍ່ສາມາດຍາດເອົາໄຊ້ຊະນະ.

**ຄ. ການດໍາເນີນສົງຄາມໃນໄລຍະທີ3 ປີ ຄ ສ 1574-1575**

ພາຍຫຼັງພະເຈົ້າໄຊເສດຖາທິລາດສິ້ນພະຊົນໃນ ປີ ຄ ສ 1572 ພາຍໃນລາຊະບັນລັງໄດ້ເກີດຄວາມວຸ້ນວາຍ ແລະ ແບ່ງອອກເປັນ 2 ກຸ່ມ: ກຸ່ມໜຶ່ງຕ້ອງການອະພິເສດພະໜໍ່ເມືອງ (ລາຊະບຸດຂອງພະເຈົ້າໄຊເສດຖາທິລາດ) ເຊິ່ງມີອາຍຸພຽງແຕ່ 5 ປີ ແລະ ກຸ່ມໜຶ່ງເປັນບິດາຂອງມະເຫສີພະເຈົ້າໄຊເສດຖາທິລາດ, ເປັນແມ່ທັບໃຫຍ່ຂອງລ້ານຊ້າງ ໃນທີ່ສຸດ ພະຍາແສນສຸລິນ ກໍ່ໄດ້ຂຶ້ນເປັນຜູ້ສໍາເລັດລາຊະການແຜ່ນດິນ ໃນໄລຍະຕົ້ນ ດັ່ງນັ້ນ , ບູເລັງນອງຈຶ່ງຫັນມາໃຊ້ອຸບາຍທາງການທູດ ຖືສານມາສະເໜີຕໍ່ເສນາມົນຕີ ນະຄອນວຽງຈັນເພື່ອຮັບເອົາມະຫາອຸປະຣາດ ວໍລະວັງໂສ (ນ້ອງຊາຍຂອງເຈົ້າໄຊເສດຖາທິລາດທີ່ຖືກພະມ້າຈັບເປັນຕົວປະກັນ) ມາເປັນເຈົ້າແຜ່ນດິນລ້ານຊ້າງ. ເມື່ອເສນາມົນຕີນໍາເລື່ອງນີ້ໄປທູນຕໍ່ພະເຈົ້າແຜ່ນດິນໃໝ່ຂອງລ້ານຊ້າງ (ພະຍາແສນສຸລິນ) ກໍ່ມີຄວາມໂກດແຄ້ນຕໍ່ບູເລັງນອງຢ່າງໃຫຍ່ຫຼວງ ແລະ ປະກາດສົງຄາມກັບບູເລັງນອງ.

ຮອດປີ ຄ.ສ 1575 ບູເລັງນອງໄດ້ລະດົມກອງທັບຫຼວງໃນອານາຈັກພະມ້າໄດ້ 7 ກອງທັບໃຫຍ່ຄື:

- ກອງທັບບູເລັງນອງເມືອງຫົງສາວະດີ
- ກອງທັບເມືອງຕອງອູ
- ກອງທັບມະຫາອຸປະຣາດ
- ກອງທັບເມືອງແປ
- ກອງທັບພະເຈົ້າເມືອງອັງວະ
- ກອງທັບພະໄຂ
- ກອງທັບລ້ານນາຊຽງໃໝ່

ສົງຄາມຄັ້ງນີ້ບູເລັງນອງໄດ້ສວຍໃຊ້ສົງຄາມຈິດຕະສາດຫຼາຍກວ່ານໍາໃຊ້ອາວຸດຄືບູເລັງນອງໄດ້ປະກາດວ່າການຍົກທັບຄາວນີ້ແມ່ນວ່າຊ່ວຍຕໍ່ສູ້ເອົາບັນລັງໃຫ້ມະຫາອຸປະຣາດວໍລະວັງໂສ, ເພື່ອກໍາຈັດພະຍາແສນສຸລິນ ຜູ້ທີ່ບໍ່ແມ່ນເສື້ອສາຍກະສັດອອກຈາກລາຊະບັນລັງອານາຈັກລາວລ້ານຊ້າງ. ຕໍ່ຄໍາປະກາດດັ່ງກ່າວນີ້

ມັນໄດ້ເປັນຜົນຕໍ່ເສນາມົນຕີຜູ້ທີ່ບໍ່ຄ່ອຍໃຫ້ຄວາມສະໜັບສະໜູນພະຍາແສນສຸລິນຂຶ້ນເປັນເຈົ້າແຜ່ນດິນຢູ່ແລ້ວຍິ່ງມີຄວາມສົນໃຈຕໍ່ພະມະຫາອຸປະຣາດວໍລະວົງໂສ, ດັ່ງນັ້ນ, ເສນາມົນຕີຈຶ່ງແຕກອອກເປັນສອງຝ່າຍຝ່າຍໜຶ່ງແມ່ນພ້ອມໃຈກັບເຈົ້າຊີວິດໃໝ່, ອີກຝ່າຍໜຶ່ງແມ່ນຫັນຄວາມສົນໃຈຕໍ່ອຸປະຣາດວໍລະວົງໂສຍ້ອນຄວາມແຕກແຍກພາຍໃນ ດັ່ງນັ້ນ, ເມື່ອບູເລັງນອງຍົກທັບມາຕີອານາຈັກລາວລ້ານຊ້າງຈຶ່ງເຮັດໃຫ້ລ້ານຊ້າງຕົກໃນທ່າປາລາໄຊ ແລະ ຕົກຢູ່ໃນການຄອບຄອງຂອງພະມ້າຢ່າງສົມບູນ ໃນ ປີ ຄ ສ 1575.

### 3.2. ອະນາຈັກລາວລ້ານຊ້າງພາຍໃຕ້ແອກປົກຄອງຂອງພະມ້າ

#### 1) ດ້ານການປົກຄອງ

ພາຍຫຼັງພະມ້າຢຶດເອົາອານາຈັກລ້ານຊ້າງແລ້ວເຮັດໃຫ້ລ້ານຊ້າງຕົກໃນສະຖານະເປັນປະເທດສະລາດ ໃນປີ ຄ ສ 1575 ພວກເຂົາຮັກສາຮູບແບບການປົກຄອງໄວ້ຄືເກົ່າໂດຍທີ່ພວກເຂົາກໍ່ໄດ້ແຕ່ງຕັ້ງໃຫ້ເຈົ້າວໍລະວົງໂສ ຂຶ້ນຄອງບັນລັງລ້ານຊ້າງແຕ່ຢູ່ພາຍ ໃຕ້ອໍານາດກົດຂີ່ຂູດຮີດຂອງພະມ້າເຊິ່ງໂຄງສ້າງການປົກຄອງຂອງປະເທດສະລາດຈະມີຮູບແບບການປົກຄອງດ້ວຍຕົນເອງ, ມີກອງທັບເປັນຂອງຕົນເອງ, ມີລະບົບເສດຖະກິດ ແລະ ຕ້ອງສົ່ງເຄື່ອງບັນນາການ ນອກຈາກນີ້ ແລ້ວພວກເຂົາກໍ່ຍັງບັງຄັບໃຫ້ສັກດີນາລາວປະຕິບັດຕາມເງື່ອນໄຂຕ່າງໆທີ່ວາງອອກ ບັນດາເງື່ອນໄຂ ແລະ ຂໍ້ກໍານົດຕ່າງໆທີ່ສັກດີນາພະມ້າວາງອອກຕໍ່ປະຊາຊົນລາວລ້ານຊ້າງຕາມຄວາມພໍໃຈຂອງພະມ້າ.

#### 2)ການກົດຂີ່ຂູດຮີດປະຊາຊົນລາວຂອງພະມ້າ

ຫຼັງຈາກທີ່ພະມ້າເອົາລ້ານຊ້າງເປັນປະເທດສະລາດແລ້ວພວກເຂົາໄດ້ດໍາເນີນນະໂຍບາຍການກົດຂີ່ຂູດຮີດປະຊາຊົນລາວລ້ານຊ້າງຢ່າງໜັກໜ່ວງເຊິ່ງປະກອບມີດັ່ງນີ້:

- ກໍານົດໃຫ້ສັກດີນາລາວລ້ານຊ້າງຕ້ອງສົ່ງຊ້າງເສິກ ໃຫ້ສັກດີນາພະມ້າ 10 ໂຕ ແລະ ຄໍາ 12 ກິໂລໃນທຸກໆປີ.
- ຕ້ອງເສຍສ່ວຍຈາກປະຊາຊົນໄປໃຫ້ພະມ້າທຸກໆປີ
- ຕ້ອງເກັບເກນກໍາລັງຊາຍໜຸ່ມຍິງສາວໄປເປັນກໍາລັງຮັບໃຊ້ພວກພະມ້າຕາມຄວາມຕ້ອງການ
- ຕ້ອງສົ່ງກອງທັບໄປຊ່ວຍພະມ້າໃນເມື່ອເກີດສົງຄາມ ຫຼື ໄປປາບປາມຂະບວນການຕໍ່ສູ້ຢູ່ພາຍໃນ ແລະ ປະເທດສະລາດຕ່າງໆຕາມຄວາມຮຽກຮ້ອງຕ້ອງການ
- ຕ້ອງນໍາເອົາຕົ້ນດອກໄມ້ເງິນ, ດອກໄມ້ຄໍາ ພ້ອມດ້ວຍເຄື່ອງບັນນາການຕ່າງໆທີ່ມີຄຸນຄ່າສູງໄປຖວາຍແກ່ສັກດີນາພະມ້າໃນທຸກໆສາມປີ ຖ້າບໍ່ປະຕິບັດຕາກໍ່ຈະຖືວ່າເປັນກະບົດ ແລະ ບໍ່ມີຄວາມຈົ່ງຮັກພັກດີຕໍ່ພະມ້າ.
- ຕ້ອງເກັບເກນຍິງສາວຕະຫຼອດຮອດລາຊະທິດາຂອງຂຸນນາງສັກດີນາລາວລ້ານຊ້າງໄປເປັນນາງບໍາເລີຕໍ່ສັກດີນາພະມ້າ.

ຕໍ່ການກະທໍາດັ່ງກ່າວພະເຈົ້າວໍລະວົງໂສບໍ່ເຄີຍຄິດທີ່ຈະກອບກູ້ເອກະລາດອິດສະຫຼະພາບໃຫ້ແກ່ປະຊາຊົນແຕ່ຢ່າງໃດເລີຍ, ເມື່ອເປັນແນວນັ້ນຂຸນນາງ ແລະ ປະຊາຊົນເກີດຄວາມບໍ່ພໍໃຈ. ດັ່ງນັ້ນ, ຈຶ່ງເກີດມີຂະບວນການຕໍ່ຕ້ານອໍານາດການປົກຄອງຫຸ່ນຂອງພະເຈົ້າວໍລະວົງໂສຂຶ້ນໃນຫຼາຍບ່ອນ ທັງຢູ່ໃນນະຄອນວຽງຈັນ

ແລະ ບັນດາຕົວເມືອງທີ່ສຳຄັນ ເຊັ່ນ: ປີ ຄ ສ 1578 ເຈົ້າຄອງແຄວ້ນຊຽງຂວາງໄດ້ນຳພາປະຊາຊົນຊຽງຂວາງປະກາດຄວາມເປັນອິດສະຫຼະພາບບໍ່ຍ້ອມຂຶ້ນຕໍ່ວຽງຈັນຍ້ອນເຂົ້າເບື່ອໜ່າຍຕໍ່ການຍ້ອມຈຳນົນຂອງພະເຈົ້າວໍລະວັງໂສ.

ຮອດ ຄ.ສ 1579 ຂະບວນການຕໍ່ສູ້ຂອງອັດຕະປືພາຍໃຕ້ການນຳພາຂອງພະຄູຫູຍາວໄດ້ທຳການເຄື່ອນໄຫວປຸກລະດົມປະຊາຊົນລາວບັນດາເຜົ່າຢູ່ພາກໃຕ້ເພື່ອກຳຈັດອິດທິພົນຂອງພະມ້າທີ່ປົກຄອງວຽງຈັນຍ້ອນພະຄູຫູຍາວມີໜ້າຕາຄ້າຍຄືພະເຈົ້າໄຊເສດຖາທິລາດ ແລະ ພະຄູຫູຍາວກໍ່ຕໍ່ສູ້ໃນນາມຂອງພະເຈົ້າໄຊເສດຖາທິລາດ ມາໃນປີ ຄ ສ 1579 ພະຄູຫູຍາວຈູບ່າ ກໍ່ນຳພາປະຊາຊົນລາວຢຶດເອົາຫົວເມືອງຕ່າງໆ, ເຮັດໃຫ້ເຈົ້າຊີວິດວໍລະວັງໂສຊາບຂ່າວວ່າມີກຳລັງທະຫານທາງພາກໃຕ້ຈະມາຍາດແຍ່ງບັນລັງຂອງຕົນຈິ່ງໄດ້ສົ່ງທະຫານນຳພາໂດຍພະຍາຊຽງໃຕ້, ພະຍາຊຽງເໜືອ ພະຍານະຄອນ ແລະ ແສນຄອງ ຍົກທັບລົງໄປປາບປາມແຕ່ຖືກປະລາໄຊ. ຝ່າຍເຈົ້າວໍລະວັງໂສເມື່ອເຫັນກອງກຳລັງຂອງຕົນປາລາໄຊກໍ່ເກີດຄວາມສະທ້ານຢ້ານກົວ ແລະ ອົບພະຍົບຄອບຄົວຂອງຕົນເພື່ອຈະໄປເພິ່ງບູເລັງນອງຢູ່ຫົງສາວະດີດ້ອຍການເດີນທາງເຮືອ ແຕ່ສຸດທ້າຍເຮືອກໍ່ລົ້ມເຈົ້າຊີວິດວໍລະວັງໂສ ແລະ ຄອບຄົວເສຍຊີວິດໃນທີ່ນັ້ນ.ດັ່ງນັ້ນຂວນການກູ້ຊາດລາວພາກໃຕ້ຈິ່ງສາມາດຢຶດເອົານະຄອນວຽງປະກາດຄວາມເປັນອິດສະຫຼະພາບ ແລະ ບໍ່ຍອມເສຍຊ່ວຍໃຫ້ແກ່ສັກດິນາພະມ້າອີກຕໍ່ໄປ. ເມື່ອບູເລັງນອງ ຮັບຂ່າວການສິ້ນພະຊົນຂອງພະເຈົ້າວໍລະວັງໂສ ແລະ ປະຊາຊົນຢູ່ວຽງຈັນຢຶດອຳນາດໃຫ້ພະຍາແສນສຸລິນ ທີ່ຖືກກັກຕົວຢູ່ພະມ້າ ແລະ ມະຫາອະຣາດເມືອງຫົງສາວະດີຊື່: ອິນແຊະມັນກູ (ນັນທະບູເລັງ ) ນຳກຳລັງຫຼວງພ້ອມດ້ວຍກຳລັງເມືອງຊຽງໃໝ່  ແລະ ກຳລັງຈາກກຸງສີອາຍຸດທະຍາປິດລ້ອມນະຄອນຫຼວງວຽງຈັນ ແລະ ສາມາດຢຶດວຽງຈັນໄດ້.

ເຖິງວ່າຂະບວນການຕໍ່ສູ້ຂອງປະຊົນລາວພາຍໃຕ້ຮູບແບບພະເຈົ້າໄຊເສດຖາທິລາດ (ພະຄູຫູຍາວ) ຈະຖືກປາບປາມລົງຢ່າງສິ້ນເຊີ່ງກໍ່ຕາມແຕ່ຈິດໃຈຮັກຊາດຮັກອິດສະຫຼະພາບຂອງປະຊາຊົນລາວຍັງຝັງຢູ່ໃນຈິດໃຈ ແລະ ກໍ່ຄ່ອຍຫາໂອກາດທີ່ຈະປົດປ່ອຍຕົນຢູ່ສະເໝີ.

**3)ຂະບວນການກອບກູ້ເອກະລາດຈາກພະມ້າຂອງປະຊາຊົນລ້ານຊ້າງ ຄສ 1582-1600**

ເມື່ອຮອດປີຄ ສ 1581  ບູເລັງນອງ ໄດເສຍຊີວິດມະຫາອຸປະຣາດ ແຊະມັນກູຜູ້ເປັນລູກຊາຍເປັນຜູ້ສືບທອດບັນລັງ ແລະ ໄດ້ປ່ຽນຊື່ວ່າ ນັນທະບູເລັງ ກະສັດອົງນີ້ໄດ້ສືບແນວຄິດຣຸກຮານອານາຈັກໃກ້ຄຽງ, ຈາກສະພາບການດັ່ງກ່າວປະຊາຊົນພະມ້າໄດ້ມີຄວາມເບື່ອໜ່າຍສົງຄາມ, ໃນກຸ່ມສັກດິນາກໍ່ເກີດຄວາມຂັດແຍ່ງອຳນາດກັນຢ່າງຮຸນແຮງຈົນເຖິງຂັ້ນແຕກຫັກເຮັດໃຫ້ສະຖານະການຂອງຄວາມເປັນລາຊາທິລາດສັ່ນຄອນເຕັມໄປດ້ວຍຄວາມສັບສົນວຸ້ນວາຍ.

ເມື່ອສະພາບເປັນແນວນັ້ນມັນໄດ້ເປັນໂອກາດອັນດີໃຫ້ແກ່ບັນດາປະເທດສະລາດຍາດເອົາສິດເປັນເຈົ້າຕົນເອງເຊັ່ນ: ປະຊາຊົນລ້ານຊ້າງພ້ອມກັນປົດເຈົ້າຊີວິດຂອງຕົນທີ່ຮັບໃຊ້ພະມ້າອອກຈາກບັນລັງໃນປີ ຄ ສ 1584 ພະເຈົ້ານະເຣສວນ (ເຈົ້າດຳ) ໄດ້ປະກາດອິດສະຫຼະພາບອອກຈາກແອປົກຄອງຂອງພະມ້າ ເຖິງແມ່ນວ່າພະມ້າຈະພະຍາຍາມບຸກຕີອາຍຸດທະຍາເຖິງ 4 ຄັ້ງ ແຕ່ກໍ່ບໍ່ສາມາດເຂົ້າຢຶດຄອງອາຍຸດທະຍາໄດ້ຄືແຕ່ກ່ອນ ຕໍ່ໜ້າສະພາບການດັ່ງກ່າວນີ້ປະຊາຊົນລາວລ້ານຊ້າງກໍ່ໄດ້ເລັ່ງທວງໃຫ້ ນັນທະບູເລັງສົ່ງພະໜໍ່ເມືອງ (ລູກຊາຍຂອງພະ

ເຈົ້າໄຊເສດຖາທິລາດ) ກັບມາເປັນເຈົ້າແຜ່ນດິນລ້ານຊ້າງ ສຸດທ້າຍພະມ້າຈຶ່ງຍອມຍົກພະໜໍ່ເມືອງໃຫ້ກັບມາເປັນເຈົ້າແຜ່ນດິນລ້ານຊ້າງໃນປີ ຄ ສ 1591 ພາຍຫຼັງຂຶ້ນຄອງລາດແລ້ວພະໜໍ່ເມືອງກໍ່ຮີບຈັດຕັ້ງປັບປຸງອຳນາດການປົກຄອງແນໃສ່ສ້າງອານາຈັກໃຫ້ຈະເລີນຮຸ່ງເຮືອງບັນດາຫົວເມືອງຕ່າງໆທີ່ເຄີຍປະກາດແຍກຕົວອອກຈາກວຽງຈັນໃນສະໄໝລາຊະການຜ່ານມານັ້ນກໍ່ກັບຄືນມາເປັນເອກະພາບເໝືອເດີມ. ນອກນີ້ພະອົງຍັງໄດ້ຫຼຸດຜ່ອນຄວາມເປັນພັນທະຕໍ່ພະມ້າສະແດງອອກໃນການປະຕິເສດບໍ່ຍ້ອມສົ່ງກຳລັງໄປຊ່ວຍພະມ້າບຸກຕີອາຍຸດທະຍາຕາມຄຳສັ່ງຂອງ ບັນທະບູເລັງ ພິເສດໃນເວລານີ້ພະອົງຍັງໄດ້ນຳພາປະຊາຊົນປັບປຸງກຳແພງເມືອງວຽງຈັນ ໃຫ້ມີຄວາມໜຶນຫານ ແລະ ກໍ່ສ້າງກຳແພງເມືອງອີກຊັ້ນໜຶ່ງ, ລວມທັງກຳແພງເມືອງພັນພ້າວ.

ການປັບປຸງອານາຈັກລາວລ້ານຊ້າງຂອງພະໜໍ່ເມືອງໄດ້ເປັນຂີດໝາຍຂອງໄຊຊະນະໃນເບື້ອງຕົ້ນຂອງຂະບວນວິວັດທາງການຕໍ່ສູ້ທີ່ຍາວນານຂອງປະຊາຊົນລາວລ້ານຊ້າງຕໍ່ກັບສັກດິນາພະມ້າ ພະອົງຂຶ້ນຄອງລາດໄດ້ພຽງ 7 ປີ ແຕ່ປີ ຄ ສ 1591-1598 ກໍ່ສິ້ນພະຊົນ.

**ກ. ສະພາບເອື້ອອຳນວຍໃຫ້ແກ່ການລຸກຂຶ້ນຕໍ່ສູ້ເພື່ອປະກາດເອກະລາດຈາກພະມ້າຂອງປະຊາຊົນລາວ**

- ປີຄ ສ 1581 ບູເລັງນອງໄດເສຍຊີວິດເປັນບາດກ້າວໜຶ່ງໃນການຄ່ອຍໆແຍກຕົວອອກຂອງບັນດາປະເທດສະລາດ ມະຫາອຸປະຣາດແຊະມັນກູຜູ້ເປັນລູກຊາຍເປັນຜູ້ສືບທອດບັນລັງແທນເຊິ່ງນິໄສສ່ວນຕົວຂອງ ມະຫາອຸປະຣາດແຊະມັນເປັນຄົນທະນົງຕົວອວດເກັ່ງເຮັດໃຫ້ບ້ານເມືອງບໍ່ສະຫງົບສຸກສະພາບພາຍໃນເກີດຄວາມແຕກແຍກ
- ປະຊາຊົນພະມ້າໄດ້ມີຄວາມເບື່ອໜ່າຍສົງຄາມ, ໃນກຸ່ມສັກດິນາກໍ່ເກີດຄວາມຂັດແຍ່ງອຳນາດກັນຢ່າງຮຸນແຮງຈົນເຖິງຂັ້ນແຕກຫັກເຮັດໃຫ້ສະຖານະການຂອງຄວາມເປັນລາຊາທິລາດສັ່ນຄອນເຕັມໄປດ້ວຍຄວາມສັບສົນວຸ້ນວາຍ.
- ບັນດາປະເທດສະລາດທີ່ເຄີຍຂຶ້ນຕໍ່ພະມ້າພ້ອມກັນແຍກຕົວອອກເປັນອິດສະຫຼະພາບ
- ປະຊາຊົນລ້ານຊ້າງມີຄວາມສະມັກຄີ ຮັກຄວາມເປັນອິດສະຫຼະພ້ອມກັນຂັບໄລ່ພະມ້າອອກຈາກດິນແດນຂອງຕົນ.

**ຂ. ໄຊຊະນະຂອງປະຊາຊົນລາວໃນການຕໍ່ສູ້ເພື່ອປົດແອກປົກຄອງຂອງພະມ້າ**

ພາຍຫຼັງການສິ້ນພະຊົນຂອງພະໜໍ່ເມືອງເນື່ອງຈາກວ່າພະອົງບໍ່ມາລາຊະໂອລົດຂຶ້ນຄອງບັນລັງແທນ, ດັ່ງນັ້ນ, ເສນາອາມາດຈຶ່ງອະພິເສດເຈົ້າວໍລະວົງສາຜູ້ເປັນບຸດນ້າສາວ ຂອງພະໜໍ່ເມືອງສືບທອດລາຊະບັນລັງແທນ ແຕ່ເນື່ອງຈາກພະວໍລະວົງສາອາຍຸດຍັງນ້ອຍພຽງແຕ່ 13 ປີ ຈຶ່ງບໍ່ສາມາດບໍລິຫານບ້ານເມືອງໄດ້. ສະນັ້ນ ຈຶ່ງສະເໜີໃຫ້ແຕ່ງຕັ້ງພະວໍລະບິດາ ເຊິ່ງເປັນພະບິດາຂອງພະວໍລະວົງສາຂຶ້ນເປັນຜູ້ວ່າລາຊະການແຜ່ນດິນຊົ່ວຄາວໃນປີ ຄ ສ 1598.

ໃນໄລຍະດັ່ງກ່າວນັ້ນຢູ່ພາຍໃນຂອງພະມ້າໄດ້ເກີດມີຄວາມວຸ້ນວາຍຍ້ອນບັນດາຂຸນນາງສັກດິນາພວມຍາດຊີງອຳນາດເຊິ່ງກັນ ແລະ ກັນຈົນເຮັດໃຫ້ເກີດສົງຄາມກາງເມືອງສວຍໂອກາດດັ່ງກ່າວນີ້ກຸ່ມຄົນລາວທີ່ຖືກພະມ້າກວດຕ້ອນໄປເມື່ອກ່ອນໄດ້ພາກັນລຸກຮື້ຂຶ້ນ ແລະ ໂຕນກັບຄືນມາລ້ານຊ້າງແຕ່ຖືກເຈົ້າເມືອງຊຽງໃໝ່ (ຄົນພະມ້າ) ໃຊ້ກຳລັງຈັບກຸ່ມເອົາຄົນລາວລ້ານຊ້າງໄວ້ເພື່ອຈະສົ່ງຄືນເມືອພະມ້າ ສ່ວນທີ່ເຫຼືອລອດມາກໍ່ເລົ່າ

ສະພາບການທີ່ເກີດຂຶ້ນຢູ່ຊຽງໃໝ່ໃຫ້ພະວໍລະປິຕາ ແລະ ພະວໍລະວົງສາຊາບ ຈາກນັ້ນ ພະອົງກໍ່ໄດ້ສັ່ງໃຫ້ກອງທັບລາວລ້ານຊ້າງອັນມີພະຍາແສນເມືອງຫຼວງເປັນແມ່ທັບ ແລະ ພະວໍລະວົງສາ ກໍ່ຕິດຕາມໄປນຳເພື່ອຮັກສາຄອບຄົວຄົນລາວລົງມາລ້ານຊ້າງ ພ້ອມນັ້ນກໍ່ໄດ້ບຸກຕີປົດປ່ອຍລ້ານຊ້າງອອກຈາກອິດທິພົນຂອງພະມ້າ ກອງທັບລາວລ້ານຊ້າງໄດ້ເຂົ້າຍຶດເອົາເມືອງພະເຢົາ, ເມືອງແພ, ເມືອງນ່ານ, ເມືອງລຳພູນ, ເມືອງເຊີງ, ເມືອງຊຽງແສນ, ເມືອງລໍ, ເມືອງຊຽງລາຍ ແລະ ເມືອງທາງ ໄດ້ທັງໝົດແລ້ວກໍ່ເຂົ້າໄປປິດລ້ອມເມືອງຊຽງໃໝ່ເອົາໄວ້. ແຕ່ບໍ່ທັນສາມາດຍຶດເອົາຊຽງໃໝ່ໄດ້ເທື່ອ, ກອງທັບກໍ່ຂາດສະບຽງອາຫານ ແລະ ໄພ່ພົນກໍ່ເຈັບເປັນລົ້ມຕາຍ ສະນັ້ນແມ່ທັບຈິ່ງສັ່ງຍົກພົນກັບເມືອວຽງຈັນເມື່ອພະວໍລະປິຕາເຫັນກອງທັບລາວລ້ານຊ້າງກັບຄືນໂດຍທີ່ບໍ່ສາມາດຍຶດເອົາເມືອງຊຽງໃໝ່ມາໄດ້ກໍ່ເກີດຄວາມໂກດຮ້າຍ ແລະ ໄດ້ສັ່ງໃຫ້ທະຫານປິດປະຕູເມືອງບໍ່ໃຫ້ພະວໍລະວົງສາ ແລະ ພະຍາແສນຫຼວງພ້ອມທະຫານເຂົ້າມາໃນເມືອງໄດ້. ສະນັ້ນ, ພະວໍລະວົງສາພ້ອມທະຫານໄດ້ໄປຕັ້ງທັງຢູ່ສະໜາມພະລານໄຊ ແລະ ປະກາດເຮັດສົງຄາມກັບພະວໍລະປິຕາຜູ້ເປັນບິດາເພື່ອກອບກູ້ເອົາລາຊະບັນລັງ. ສົງຄາມກາງເມືອງໄດ້ດຳເນີນໄປເຖິງ 4 ເດືອນ, ເຮັດໃຫ້ປະຊາຊົນເສຍຫາຍຢ່າງໜັກໜ່ວງ, ດັ່ງນັ້ນ, ເສນາອາມາດພ້ອມດ້ວຍພະສົງອົງຄະເຈົ້າໄດ້ປຶກສາຫາລືກັນ ແລະ ເກ່ຍກ່ອມ 2 ພໍ່ລູກໃຫ້ຄືນດີກັນໃນທີ່ສຸດພະວໍລະວົງສາກໍ່ເຂົ້າມາຂໍໂທດພະວໍລະປິຕາ (ພິທີຈັດຂຶ້ນທີ່ຫາດດອນຈັນ) ແລະ ພະວໍລະປິຕາກໍ່ຍິນດີມອບອຳນາດລາຊະບັນລັງໃຫ້ພະວໍລະວົງສາເມື່ອພະວໍລະວົງສາໄດ້ຂຶ້ນຄອງບັນລັງຢ່າງເປັນທາງການແລ້ວພະອົງໄດ້ປະກາດຄວາມເປັນເອກະລາດຂອງອານາຈັກລາວລ້ານຊ້າງຈາກພະມ້າຢ່າງເປັນທາງການໃນປີ ຄ ສ 1600.

ພາຍຫຼັງປະກາດເອກະລາດແລ້ວ, ພະວໍລະວົງສາກໍ່ໄດ້ປັບປຸງອຳນາດໃຫ້ມີຄວາມເຂັ້ມແຂງແລະບໍລິຫານບ້ານເມືອງໃຫ້ມີຄວາມສະຫງົບສຸກເຖິງ 20 ກວ່າປີມາຮອດ ຄສ 1621 ບ້ານເມືອງໄດ້ເກີດຄວາມວຸ້ນວາຍຍ້ອນການຍາດຊິງບັນລັງຂອງຂຸນນາງສັກດີນາອີກ.

# ບົດທີ2

# ອານາຈັກລາວລ້ານຊ້າງໄລຍະຈະເລີນຮຸ່ງເຮືອງ

## 1. ອານາຈັກລາວລ້ານຊ້າງສະໄໝການປົກຄອງຂອງເຈົ້າສຸລິຍະວົງສາ (ຄ.ສ 1638-1695).

### 1.1.ການຂຶ້ນຄອງລາຊະບັນລັງ

ຫຼັງຈາກໝ່ອມແກ້ວສິ້ນພະຊົນແລ້ວ ເຈົ້າສຸລິຍະກຸ່ມມານ ລູກຂອງພະວໍລະວົງສາທຳມິກະຣາດພ້ອມດ້ວຍພັກພວກ 509 ຄົນທີ່ໄດ້ໄປລີ້ຊ້ອນຢູ່ປ່າເຂດພູເຂົາຄວາຍດັ່ງທີ່ໄດ້ກ່າວມາແລ້ວນັ້ນ. ເມື່ອຊາບຂ່າວວ່າພະໝ່ອມແກ້ວອ້າຍຂອງຕົນນັ້ນສິ້ນພະຊົນແລ້ວບ້ານເມືອງຍິ່ງເກີດຄວາມຂັດແຍ່ງສັບສົນຂຶ້ນເພາະ ໝ່ອມຊົມພູ (ເຈົ້າຊົມພູ), ເຈົ້າບຸນຊູ ແລະ ອ້າຍນ້ອງຄົນອື່ນໆອີກກຳລັງຂັດແຍ່ງ ແລະ ຍາດຊິງກັນຂຶ້ນກຳອຳນາດ ເມື່ອສະພາບເປັນຄື ແນວນັ້ນເຈົ້າສຸລິຍະກຸມມານພ້ອມດ້ວຍພັກພວກຈຶ່ງໄດ້ຍົກເອົາກຳລັງຈາກພູເຂົາຄວາຍເຂົ້າຍຶດເອົາເມືອງວຽງຈັນໄດ້ສຳເລັດຜົນ, ປະຊາຊົນທັງຫຼາຍຈຶ່ງຍົກເອົາເຈົ້າສຸລິຍະກຸມມານຂຶ້ນເປັນເຈົ້າແຜ່ນດິນອານາຈັກລາວລ້ານຊ້າງ. ໄດ້ຂະໜານາມວ່າ "ສົມເດັດພະເຈົ້າສຸລິຍະວົງສາ ໄຊຍະເສດຖາທຳມິກະລາດ" ຫຼື "ເຈົ້າອົງຫຼວງ ຫຼື ອາດຍາອົງຫຼວງ" ພິທີການເຫຼີມສະຫຼອງໄຊນີໄດ້ຈັດຂຶ້ນເປັນເວລາ 3 ມື້ 3 ຄືນທີ່ນະຄອນຫຼວງວຽງຈັນໃນເດືອນ 6 ເພັງຈຸນລະສັງກາດ 1000 ຄ ສ 1638). ນັບແຕ່ເຈົ້າສຸລິຍະວົງສາທຳມິກະລາດເຂົ້າຍຶດອຳນາດທີ່ນະຫຼວງວຽງຈັນໄດ້ແລ້ວກໍ່ດຳເນີນການກວດລ້າງບັນດາກຸ່ມ ແລະ ບັນດາບຸກຄົນທີ່ເປັນປໍລະປັກທີ່ຍຶດເຍື້ອຍາວນານມາໄດ້ 3 ທົດສະວັດກວ່າແລ້ວນັ້ນໃຫ້ໝົດໄປດັ່ງນັ້ນ, ພະອົງຈຶ່ງໄດ້ຕົກລົງຈັດການກັບຍາດຕິພີ່ນ້ອງທີ່ຈະເປັນສັດຕູໜີຈາກເມືອງໄປໃຫ້ໝົດຄື:

- ເນລະເທດໝ່ອມຊົມພູ (ອ້າຍນ້ອງເຈົ້າສຸລິຍະກຸ່ມມານ) ພ້ອມດ້ວຍພັກພວກໃຫ້ໜີຈາກອານາຈັກລາວລ້ານຊ້າງ. ເຈົ້າຊົມພູ ແລະ ພັກພວກໄດ້ໜີໄປລີ້ໄພຢູ່ເມືອງເວ້ ອານາຈັກດາຍຫວຽດ ເຈົ້າຊົມພູມີລູກຊາຍອົງໜຶ່ງຊື່ວ່າ: ເຈົ້າໄຊອົງເຫ້ວ ຕໍ່ມາເຈົ້າຊົມພູໄດ້ເສຍຊີວິດລົງແລ້ວພະຊາຍາໄດ້ເອົາກັບແສນທິບນາບົວ ໄດ້ລູກອີກໜຶ່ງຄົນຊື່ວ່າເຈົ້າລອງ ຫຼື ເຈົ້ານ້ອງ
- ເຈົ້າບຸນຊູ (ອ້າຍອີກຄົນໜຶ່ງ) ໄດ້ຕົກລົງອອກບວດເປັນພະພິຊຸໃນພຸດທະສາສະໜາຢູ່ທີ່ພູທຳພູໂຮງໃນເຂດທ່າປາງທອງສະຫວັນນະເຂດ
- ຕົກລົງແຕ່ງຕັ້ງເຈົ້າປຸ (ຫຼານ) ລູກຂອງເຈົ້າວໍໄຊ (ໝ່ອມໄຊ)ໄປປົກຄອງເມືອງດ່ານຊ້າຍ (ຊຽງຄານ)
- ໄດ້ສົ່ງເຈົ້າສ້ອຍ ນ້ອງຊາຍເຈົ້າປຸ ໄປປົກຄອງເມືອງພະພີ (ອຳເພີຕະການແຂວງອຸບົນປະເທດໄທປັດຈຸບັນ)
- ໃນປີ ຄ ສ 1639ໄດ້ຕົກລົງຖອດພະຍາອານຸຣາດ ອອກຈາກຕຳແໜ່ງເຈົ້າປົກຄອງແຄວ້ນສີໂຄດຕະບອງ ແລະ ຍົກຍ້າຍເຈົ້າປຸທີ່ປົກຄອງເມືອງດ່ານຊ້າຍນັ້ນໄປປົກຄອງແຄວ້ນສີໂຄດຕະບອງແທນ.

ເຖິງແມ່ນວ່າເຈົ້າສຸລິຍະວົງສາທຳມິກະຣາດຍຶດອຳນາດໄດ້ຈາກພວກກະບົດສ່ວນໃຫຍ່ແລ້ວກໍ່ຕາມແຕ່ສະພາບທົ່ວອານາຈັກຍັງບໍ່ທັນໄດ້ສະຫງົບໝົດເທື່ອຄື ໃນປີ ຄ.ສ 1640 ພະອານຸຊາເຕົ້າໂຮມກຳລັງຈຳນວນໜຶ່ງ

ເປັນພັກພວກກໍ່ຄວາມວຸ້ນວາຍຂຶ້ນ ເປົ້າໝາຍກໍ່ເພື່ອຍຶດເອົາອຳນາດການປົກຄອງຈາກເຈົ້າສຸລິຍະວົງສາທຳມິກະຣາດ ແຕ່ກໍ່ຖືກກຳລັງຂອງເຈົ້າສຸລິຍະວົງສາທຳມິກະຣາດປາບປາມລົງໄດ້ ແລະ ໃນປີດຽວກັນນີ້ເອງກໍ່ເກີດຄວາມເຂົ້າໃຈຜິດລະຫວ່າງນະຄອນວຽງຈັນກັບແຄ້ວນພວນຊຽງຂວາງເຈົ້າສຸລິຍະວົງສາທຳມິກະຣາດ ໄດ້ສົ່ງກອງກຳລັງຂຶ້ນໄປແກ້ໄຂໄດ້ສຳເລັດ ແລ້ວຕົກລົງແຕ່ງຕັ້ງເຈົ້າຄຳສົ້ນ ເປັນເຈົ້າປົກຄອງແຄວ້ນພວນຊຽງຂວາງເພື່ອສະແດງຄວາມບໍລິສຸດຕໍ່ເຈົ້າສຸລິຍະວົງສານະຄອນວຽງຈັນນັ້ນ ເຈົ້າຄຳສົ້ນໄດ້ສົ່ງທິດາ (ລູກສາວ) ຂອງຕົນຊື່ວ່ານາງແກ່ນຈັນ ມາຖວາຍແກ່ເຈົ້າສຸລິຍະວົງສາ ທຳມິກະຣາດ ພ້ອມດ້ວຍຄອບຄົວຄົນລາວພວນ 1000 ຄອບຄົວລົງມາຮັບໃຊ້ເຈົ້ານາງແກ່ນຈັນ. ນັບແຕ່ນັ້ນມາບ້ານເມືອງໄດ້ກ້າວເຂົ້າສູ່ຄວາມສະຫງົບສຸກປະສາຈາກໄພທັງປວງ, ຈາກຄວາມຂັດແຍ່ງ ແລະ ບາດໝາງເຊິ່ງກັນ ແລະ ກັນລະຫວ່າງສັກດີນາເພື່ອຍາດຊີງກັນຂຶ້ນກຳອຳນາດໄດ້ສິ້ນສຸດລົງ.

### 1.2. ການປັບປຸງທາງດ້ານການເມືອງ-ການປົກຄອງ

### ກ. ຖານະ ແລະ ສິດອຳນາດຂອງສະຖາບັນກະສັດ

ຮູບແບບການປົກຄອງຂອງອານາຈັກລາວລ້ານຊ້າງໃນສະໄໝເຈົ້າສຸລິຍະວົງສາທຳມິກະຣາດແມ່ນປົກຄອງດ້ວຍລະບອບລາຊາທິປະໄຕສົມບູນເຊິ່ງລະອຽດໄດ້ມີການແບ່ງຖານະດັ່ງນີ້:

- **ພະມະຫາກະສັດ ຫຼື ເຈົ້າຊີວິດ ຜູ້ມີອຳນາດສູງສຸດ**

ເປັນຜູ້ມີສິດອຳນາດເດັດຂາດພຽງຜູ້ດຽວໃນການປົກຄອງອານາຈັກບໍ່ວ່າທາງດ້ານການປົກຄອງ, ການເມືອງ, ການທະຫານ, ເສດຖະກິດ-ສັງຄົມ ແລະ ອື່ນໆມີສິດແຕ່ງຕັ້ງ ແລະ ມີສິດໃຫ້ຍົດຖາບັນດາສັກແກ່ບຸກຄົນທີ່ມີຄວາມດີຄວາມຊອບຕໍ່ອານາຈັກ ແລະ ມີສິດຖອດຖອນ, ຂັບໄລ່ ຕະຫຼອດຮອດການຕັດສິນປະຫານຊີວິດແກ່ບຸກຄົນທີ່ທໍລະຍົດຕໍ່ຊາດ. ພິເສດໃນສະໄໝຂອງພະອົງນີ້ເຊິ່ງຖືຕົນເອງເໝືອນກັນເທບພະເຈົ້າ ຫຼື ເວົ້າວ່າມີອຳນາດແບບເທວະກະສັດຜູ້ຍິ່ງໃຫຍ່ທີ່ລົງມາຈາກເມືອງສະຫວັນເຊິ່ງຕ່າງກັບເຈົ້າຊີວິດອົງກ່ອນໆ.

- **ອຳນາດຂອງເຈົ້າອຸປະຣາດ**

ເຈົ້າອຸປະຣາດແມ່ນບຸກຄົນທີ່ສຳຄັນທີ່ຄັດເລືອກຈາກເຊື້ອສາຍເຈົ້າຊີວິດ ມີຕຳແໜ່ງສູງສຸດຖັດຈາກເຈົ້າຊີວິດ ເຮັດໜ້າທີ່ຊ່ວຍເຈົ້າຊີວິດ ແລະ ເຮັດວຽກແທນເຈົ້າຊີວິດໄດ້ເມື່ອເຈົ້າຊີວິດບໍ່ຢູ່ມະຫາອຸປະຣາດແມ່ນສະມາຊິກທີ່ສຳຄັນຂອງສະຖາບັນຂອງມະຫາກະສັດ ແລະ ເປັນປະທານກອງປະຊຸມຂອງຄະນະເສນາບໍດີ (ຄະນະລັດຖະມົນຕີ). ເມື່ອເຈົ້າຊີວິດສິ້ນພະຊົນມະຫາອູປະຣາດມີສິດຄັດເລືອກເອົາບຸກຄົນ ຫຼື ສັກດີນາຄົນໃດຄົນໜຶ່ງ ຂຶ້ນຄອງລາຊະສົມບັດແທນມີສິດເກັບເກນເອົາກຳລັງເຂົ້າສູ່ສົງຄາມໃນເວລາຖືກສັດຕູຮຸກຮານໃນສະໄໝການປົກຄອງຂອງເຈົ້າສຸລິຍະວົງສາທຳມິກະຣາດ ມີ ອຸປະຣາດເຖິງ 8 ຄົນ ໃນນັ້ນຜູ້ທີ 1 ເອີ້ນວ່າເຈົ້າສຸລິຍະວົງສາທກມິກະລາດ ມີໜ້າທີ່ຮັບຜິດຊອບແຜ່ນດິນ ສ່ວນອີກ 7 ຄົນມີໜ້າທີ່ເບິ່ງແຍງຜົນປະໂຫຍດຂອງຂອງຫົວເມືອງໃຫຍ່ ຫຼື ຂັ້ນເຂື່ອນເມືອງຕ່າງໆ.

ຄະນະອຸປະຣາດທັງ 8 ທ່ານນີ້ແມ່ນອົງປະກອບທີ່ສຳຄັນທີ່ສຸດຂອງສະພາມະຫາກະສັດປົກຄອງແຜ່ນດິນເປັນປະທານຂອງຄະນະເສນາບໍດີເບິ່ງສິດຜົນປະໂຫຍດຕົວຈິງແກ່ເຈົ້າຊີວິດ.

❖ **ອຳນາດເຈົ້າລາຊະວົງ**

ເຈົ້າລາຊະວົງແມ່ນຕຳແໜ່ງໜຶ່ງຂອງລາຊະຕະກຸນ (ຜູ້ເປັນເຊື້ອສາຍຂອງເຈົ້າຊີວິດ ຫຼື ເຈົ້າສັກດິນາ) ປົກກະຕິແລ້ວເຮັດໜ້າທີ່ຊ່ວຍເຈົ້າອຸປະຮາດ ຫຼື ຮອງເຈົ້າອຸປະຮາດ ຕາມເງື່ອນໄຂ ແຕ່ສ່ວນຫຼາຍແລ້ວ ເບິ່ງແຍງກ່ຽວກັບສານຕຸລາການນຳເສນາບໍດີຝ່າຍກາງ. ນອກຈາກນີ້ຍັງມີສິດເລື່ອນຖານະຂຶ້ນເປັນເຈົ້າອຸປະຮາດໄດ້.

❖ **ອຳນາດຂອງເຈົ້າລາຊະບຸດ**

ເຈົ້າລາຊະບຸດແມ່ນຕຳແໜ່ງໜຶ່ງຂອງລູກ ແລະ ຫຼານເຈົ້າຊີວິດ ມີໜ້າທີ່ເບິ່ງແຍງສິດຜົນປະໂຫຍດແຜ່ນດິນນຳເສນາບໍດີຝ່າຍຂວາໂດຍສະເພາະນຳພະຍາເມືອງຂວາເປັນເສນາທິການກອງທັບ, ກົມຄັງຫຼວງ, ກົມນາ ແລະ ມີສິດເລື່ອນຖານະຂຶ້ນເປັນເຈົ້າຊີວິດໃນເມື່ອເຈົ້າຊີວິດສິ້ນພະຊົນ.

❖ **ຖານະ ແລະ ສິດອຳນາດຂອງເສນາບໍດີ**

ຄະນະເສນາບໍດີແມ່ນຄະນະບໍລິຫານໜ່ວຍວຽກງານຂອງຊາດຮັບຜິດຊອບຫຼາຍກົມໃນສະໄໝເຈົ້າສຸລິຍະວົງສາທຳມິກະຣາດ ນີ້ພະອົງໄດ້ແບ່ງວຽກງານອອກເປັນ 4 ຂະແໜງການໃຫຍ່ ຄື : ກົມເມືອງ, ກົມວັງ, ກົມຄັງ, ກົມນາ ການແບ່ງໜ່ວຍງານອອກເປັນ 4 ຂະແໜງນີ້ເພິ່ນເອີ້ນວ່າ: “ຈັດຕຸສະດົມ”ແປວ່າ 4 ຫຼັກ (ລະບົບວຽກງານນີ້ເປັນວິທີປົກຄອງຂອງບູຮານທີ່ໄດ້ຮັບອິດທິພົນຈາກອິນເດຍ ເພາະວ່າອານາຈັກຢູ່ໃນອາຊີ ຕາເວັນອອກສ່ຽງໃຕ້ກໍ່ມີລະບົບການປົກຄອງຄ້າຍຄືກັນ) ຄະນະເສນາບໍດີທຳຮັບຜິດຊອບວຽກງານດັ່ງກ່າວໄດ້ແບ່ງອອກເປັນ 2 ສາຍ ຫຼື 2 ສາຂາໃຫຍ່ຄື: ເສນາບໍດີຝ່າຍຂວາ ແລະ ເສນາບໍດີຝ່າຍຊ້າຍ ຫຼື ເອີ້ນຢ່າງໜຶ່ງວ່າຝ່າຍທະຫານ ແລະ ຝ່າຍປົກຄອງ ເສນາບໍດີທັງ 2 ສາຂານີ້ມີສິດເຂົ້າຮ່ວມກອງປະຊຸມສະພາປົກຄອງຂອງພະມະຫາກະສັດຄືຜູ້ເຮັດວຽກໃຫ້ເຈົ້າຊີວິດເຊິ່ງເອີ້ນວ່າຂ້າລາຊະການຂຸນນາງຂອງເຈົ້າຊີວິດເຊິ່ງລາຍລະອຽດລຸ່ມນີ້:

- **ຄະນະບໍດີຝ່າຍຂວາ:** ມີໜ້າທີ່ປ້ອງກັນອານາຈັກ ແລະ ຮັບຜິດຊອບ 2 ກົມໃຫຍ່ຄື ກົມຄັງ ແລະ ກົມນາ ຄະນາເສນາບໍດີຝ່າຍຂວາມີຍົດສັກຕຳແໜ່ງຂັ້ນພະຍາມີເຖິງ 10 ພະຍາຄື:
    - ພະຍາແສນເມືອງ ຮັບຜິດຊອບທັງໝົດຂອງເສນາບໍດີຝ່າຍຂວາຕົ້ນຕໍແມ່ນວຽກງານປ້ອງກັນອານາຈັກ
    - ພະຍາເມືອງຂວາດຳລົງຕຳແໜ່ງເປັນຮອງ ຮັບຜິດຊອບຊ່ວຍພະຍາແສນເມືອງ ແລະ ກົມການຄັງ
    - ພະຍາຊຽງເໜືອມີໜ້າທີ່ຮັບຜິດຊອບກົມນາ
    - ພະຍາເມືອງຮາມ ຮັບຜິດຊອບ ສາງອາວຸດ, ສາສະໜາ ອີກ 6 ພະຍາ ພະຍາຊຽງສາ, ພະຍາພັນນາ, ພະຍາສອງເມືອງ, ພະຍາໝື່ນເມືອງເໜືອ, ພະຍາໝື່ນໜ້າ ແລະ ພະຍານ້ຳຮຸ່ງ ແມ່ນມີໜ້າທີ່ຊ່ວຍທົ່ວໄປຂອງຄະນະເສນາບໍດີຝ່າຍຂວາ.
- **ຄະນະເສນາບໍດີຝ່າຍຊ້າຍ:** ມີໜ້າທີເຮັດວຽກກ່ຽວກັບການປົກຄອງ ແລະ ຮັກສາຄວາມສະຫງົບພາຍໃນ ຮັບຜິດຊອບ 2 ກົມໃຫຍ່ຄື: ກົມເມືອງ ແລະ ກົມວັງ, ສະມາຊິກເສນາບໍດີຝ່າຍຊ້າຍມີຍົດສັກຕຳແໜ່ງຂັ້ນພະຍາ ເຖິງ 10 ພະຍາຄື:

- ພະຍາເມືອງຈັນ ຮັບຜິດຊອບວຽກງານທັງໝົດຂອງຝ່າຍຊ້າຍໂດຍສະເພາະແມ່ນວຽກງານປົກຄອງ
- ພະຍາເມືອງຊ້າຍຮັບຜິດຊອບກຸ່ມເມືອງຊ່ວຍພະຍາເມືອງແສນ
- ພະຍາຊຽງໃຕ້ຮັບຜິດຊອບກົມວັງ ແລະ ເບິ່ງແຍງໃນພະລາຊະວັງຫຼວງ
- ພະຍາເມືອງປາກຮັບຜິດຊອບພະແນກບັນຊີພົນລະເມືອງ ແລະ ໃນສາມປີໃດສຳຫຼວດເທື່ອໜຶ່ງສ່ວນອີກ 6 ພະຍາຄື : ພະຍາຂາ, ພະຍາເມືອງຄຸກ, ພະຍາພົນໜອງ, ພະຍາອິໄລ, ພະຍາໝື່ນໃຕ້ ແລະ ເພຍເມືອງເສນາທັງໝົດນີ້ເປັນຜູ້ຊ່ວຍວຽກງານຂອງຄະນະເສນາບໍດີຝ່າຍຊ້າຍ.
- ຄະນະເສນາບໍດີຝ່າຍກາງ ມີໜ້າທີ່ກໍ່ສ້າງກົດໝາຍ ແລະ ສານເປັນຜູ້ສືບສວນຄະດີ ແລະຕັດສິນລົງໂທດຕໍ່ຜູ້ກະທຳຜິດເພື່ອສະເໜີໃຫ້ເຈົ້າຊີວິດລົງຄວາມເຫັນສຳລັບສານມີ 2 ປະເພດຄື: ສານປະຊາຊົນມີພະຍາເມືອງຮັບຜິດຊອບ, ສານພະລາຊະວັງມີ ພະຍາປະຊຸມຮັບຜິດຊອບ, ນອກຈາກນີ້ຍັງມີພະຍາໂຍທາ, ເພຍຊານົນ, ເພຍສີພັດພະນາມ, ເພຍສີສະໝຸດ ແລະ ເພຍສີສຸມົນເປັນຜູ້ຊ່ວຍວຽກຂອງເສນາບໍດີຝ່າຍກາງ.

**ຂ. ການຈັດຮູບແບບການປົກຄອງ**

ອານາຈັກລາວລ້ານຊ້າງສະໄໝການປົກຄອງຂອງເຈົ້າສຸລິຍະວົງສາທຳມິກະຣາດລະຫວ່າງ ຄ ສ 1638-1695 ມີຂອບເຂດກວ້າງຂວາງກວມເອົາສອງຝັ່ງໂຖ້ງແມ່ນ້ຳຂອງຕອນກາງ ແລະ ອານາຈັກນີ້ມີລະບຽບກົດໝາຍການປົກຄອງເຂັ້ມແຂງ, ຈາກບົດບັນທຶກຂອງຄະນະທູດການຄ້າຊາວໂຮນລັງທີ່ເຂົ້າມານະຄອນວຽງຈັນທີ່ເຂົ້າມາໃນປີ ຄ ສ 1641 ໄດ້ກ່າວໄວ້ວ່າມີ 7 ຫົວເມືອງໃຫຍ່ (ຂັ້ນອຸປະຣາດປົກຄອງ) ແລະ ຫຼາຍຫົວເມືອງນ້ອຍປະກອບຢູ່ໃນອານາຈັກລາວລ້ານຊ້າງ ( ແຕ່ໜັງສືພື້ນເມືອງລາວກ່າວໄວ້ວ່າມີ 13 ຫົວເມືອງທີ່ລວມຢູ່ໃນອານາຈັກລາວລ້ານຊ້າງ) ສະໄໝເຈົ້າສຸລິຍະວົງສາທຳມິກະຣາດນັ້ນໄດ້ມີການຈັດເຂດປົກຄອງອອກຄື: ນະຄອນຫຼວງວຽງຈັນ ຫຼື ເມືອງເອກ, ຫົວເມືອງໃຫຍ່ ຫຼື ຂັ້ນເຂື່ອນເມືອງ ແລະ ເມືອງຂອບດ່ານ ຫຼື ຂັ້ນດ່ານເມືອງດັ່ງນີ້:

- **ນະຄອນວຽງຈັນ ຫຼື ເມືອງເອກ**

ເມືອງວຽງຈັນໃນສະໄໝການປົກຄອງຂອງເຈົ້າສຸລິຍະວົງສາທຳມິກະຣາດສະຕະວັດທີ XVII ເປັນເມືອງທີ່ມີຄວາມຮຸ່ງເຮືອງທີ່ສຸດ ເຊິ່ງປະກອບດ້ວຍເມືອງສຳຄັນທີ່ເປັນປ້ອມດ່ານໜ້າເຊັ່ນ: ເມືອງວຽງຄຳ (ເມືອງເກົ່າທຸລະຄົມ) 70 ກິໂລແມັດໄປທາງພາກຕາເວັນອອກສ່ຽງເໜືອ, ເມືອງຊຽງຄານ (ຊະນະຄາມເກົ່າ) ຕັ້ງຢູ່ລ່ອງແມ່ນ້ຳຂອງທາງທິດເໜືອ, ເມືອງຜານ້ຳຮຸ່ງ (ບໍລິເວນປາກນ້ຳກະດິງ) ເບື້ອງເໜືອເມືອງວຽງຄຸກ, ເມືອງວຽງພະໂຄ, ເມືອງປາກຫ້ວຍຫຼວງ ( ຕັ້ງຢູ່ຈັ່ງຫວັດໜອງຄາຍປະເທດໄທປັດຈຸບັນ) ນະຄອນວຽງຈັນ ເປັນເມືອງໃຫຍ່ ແລະ ສວຍງາມມີປະຊາຊົນອາໄສຢູ່ຢ່າງໜາແໜ້ນ, ເມືອງນີ້ມີກຳແພງດິນຈີ່ອ້ອມຮອບ 2 ຊັ້ນກວມເອົາສອງຝັ່ງໂຖ້ງແມ່ນ້ຳຂອງ ຊັ້ນທີໜຶ່ງຍາວ 4 ກິໂລແມັດ, ກວ້າງ ຫຼື ເລິກປະມານ 1200 ແມັດເມືອງຢູ່ພາຍໃນກຳແພງຊັ້ນທີ ໜຶ່ງນີ້ ກວມເອົາບ້ານເຮືອນຂອງຊົນຊັ້ນສັກດີນາ, ຂຸນນາງ ແລະ ວັດສຳຄັນທາງພຸດທະສາສະໜາໃນນັ້ນມີວັດສີມເດັດພະສັງຄະຣາດ (ເຈົ້າຊີວິດພະ) ຕັ້ງຢູ່ບໍລິເວນໂຮງແຮມລ້ານຊ້າງປະຈຸບັນ. ສຳລັບກຳແພງຊັ້ນ

ທີ 2 ຫຼື ຊັ້ນນອກນັ້ນຍາວປະມານ 14 ກິໂລແມັດກໍ່ສ້າງດ້ວຍດິນຈີ່ເສີມສ້າງດ້ວຍດິນໜຽວທີ່ແຂງທີ່ສຸດໃນສະໄໝຂອງເຈົ້າສຸລິຍະວົງສາທຳມິກະຣາດ.

ຕາມການບັນທຶກຂອງຄະນະທູດການຄ້າຊາວໂຮນລັງ ແລະ ຄະນະສາສະໜາຄຣິດຖຸນພໍ່ມາລີນີ ແລະ ລີເລຍຊາວເອີຣົບທີ່ເຂົ້າມາວຽງຈັນໃນປີ ຄ ສ 1641-1642ມີເນື້ອໃນບາງຕອນກ່າວເຖິງນະຄອນວຽງຈັນວ່າ ດ້ານໜຶ່ງມີກຳແພງສູງ, ມີຮ່ອງນ້ຳເລິກອ້ອມ ແລະ ອີກດ້ານໜຶ່ງມີນ້ຳຂອງເປັນທີ່ປ້ອງກັນສັດຕູ, ແລະ ພະລາຊະວັງປຸກສ້າງຢ່າງມີລະບຽບກວ້າງຂວາງມີສິ່ງກໍ່ສ້າງທີ່ໃຫຍ່ໂຕ ເມື່ອເບິ່ງເຂົ້າມາແຕ່ໄກຄືວ່າ ແມ່ນເມືອງໜຶ່ງຕ່າງຫາກ ຫ້ອງບ່ອນປະທັບຂອງເຈົ້າຊີວິດສວຍສົດງົດງາມທີ່ສຸດຊຸມປະຕູ ແລະ ບານປະຕູຂອງພະລາຊະວັງນີ້ປະກອບດ້ວຍດອກດວງ ພະລາຊະວັງນີ້ເຮັດດ້ວຍໄມ້ທີ່ດີທີ່ສຸດ ມີຫຼາຍຫ້ອງ ຫຼາຍແຖວຕໍ່ໆກັນຟອກດ້ວຍນ້ຳຄຳທີ່ສົດໃສ ເມື່ອແນມມາແຕ່ໄກຄືວ່າ ເອົາຄຳເປັນແທ່ງມາຕັ້ງໄວ້ໃນປະສາດ, ສຳລັບເຮືອນຂອງ ເຈົ້ານາຍ ແລະ ເສດຖີຜູ້ຮັ່ງມີເຮັດດ້ວຍໄມ້ປະດັບດ້ວຍດອກດວງທີ່ສວຍງາມທີ່ສຸດ, ແຕ່ເຮືອນປະຊາຊົນທົ່ວໄປນັ້ນເປັນເຮືອນສູງມຸງດ້ວຍຫຍ້າ ມີແຕ່ພະສົງເທົ່ານັ້ນທີ່ຢູ່ເຮືອນດີ ກໍ່ດ້ວຍດິນຈີ່ນີ້ສະແດງວ່າ ນະຄອນຫຼວງວຽງຈັນໃນສະໄໝເຈົ້າສຸລິຍະວົງສາ ທຳມິກະຣາດເປັນນະຄອນຫຼວງທີ່ສວຍງາມ ມີປະຊາຊົນທີ່ໜາແໜ້ນ. ແຕ່ການບັນທຶກນີ້ບໍ່ໄດ້ເວົ້າເຖິງຈຳນວນພົນລະເມືອງທີ່ຢູ່ໃນນະຄອນຫຼວງວຽງຈັນມີເທົ່າໃດແທ້ ຕາມແຫຼ່ງບູຮານຄະດີທີ່ພົບເຫັນຢູ່ວຽງຈັນນີ້ ຜັງເມືອງບູຮານນັ້ນມີກຳແພງເມືອງບູຮານ, ວັດວາອາຮາມທາງພຸດທະສາສະໜາ ແລະ ວັດຖຸສິລະປະອື່ນໆສະໄໝສະຕະວັດທີXVII ມີຫຼາຍທີ່ສຸດພິເສດແມ່ນວັດຖຸທາງພຸດທະສາສະໜາທີ່ກວດພົບ ມີປະມານ 120 ວັດເຊິ່ງເວລານັ້ນວັດກໍ່ຄືໂຮງຮຽນອົບຮົມປະຊາຊົນດັ່ງນັ້ນພົນລະເມືອງ ຫຼື ປະຊາຊົນທີ່ອາໃສຢູ່ນະຄອນຫຼວງວຽງຈັນເວລານັ້ນຢ່າງນ້ອຍກໍ່ປະມານ 60.000 ຄົນ ສະເພາະອາໄສຢູ່ກຳແພງດ້ານໃນບໍ່ນັບປະຊາຊົນທີ່ອາໄສຢູ່ນອກກຳແພງທັງສອງຊັ້ນ.

- **ຂັ້ນຫົວເມືອງໃຫຍ່ ຫຼື ຂັ້ນເຂື່ອນເມືອງ**

ອານາຈັກລາວລ້ານຊ້າງໃນສະຕະວັດທີ XVII ໂດຍສະເພາະສະໄໝການປົກຄອງຂອງພະເຈົ້າສຸລິຍະວົງສາ ທຳມິກະຣາດ ຂັ້ນຫົວເມືອງໃຫຍ່ໃນທົ່ວອານາຈັກລາວລ້ານຊ້າງເວລານີ້ມີເຖິງ 7 ຫົວເມືອງໃຫຍ່ (ຈາກບົດບັນທຶກຂອງທ່ານວັນວຸດສະຕົບ) ໃນທົ່ວອານາຈັກລາວລ້ານຊ້າງຜູ້ປົກຄອງມີຊັ້ນເປັນອຸປະຣາດ ຫຼື ເອີ້ນອີກຢ່າງໜຶ່ງວ່າ ເມືອງຊັ້ນ ອຸປະຣາດ (ແຕ່ຕຳນານພື້ນເມືອງລາວບູຮານວ່າມີ 13 ຫົວເມືອງໃຫຍ່ທີ່ຂຶ້ນກັບພະອົງນັ້ນ) ທັງສອງແຫຼ່ງຂໍ້ມູນບໍ່ໄດ້ກ່າວໄວ້ວ່າແມ່ນຫົວເມືອງໃດແດ່ທີ່ເປັນຫົວເມືອງໃຫຍ່ໄດ້ສັງເກດຕາມເຫດການຕົວຈິງຂອງປະຫວັດສາດລາວໃນສະຕະວັດທີ XVII ນັ້ນມີຫົວເມືອງໃຫຍ່ອາດຈັດເປັນຂັ້ນເຂື່ອນເມືອງໄດ້ນັ້ນມີ 7 ເມືອງຄື:

1. ເມືອງໄລ່ (ແຄວ້ນ12 ຈຸໄທ)
2. ເມືອງພວນຊຽງຂວາງ
3. ເມືອງຫຼວງພະບາງ
4. ເມືອງຮ້ອຍເອັດ (ປະເທດໄທປັດຈຸບັນ)
5. ເມືອງນະຄອນ (ນະຄອນສີໂຄດຕະບອງທ່າແຂກເກົ່າ)
6. ເມືອງນ່ານ (ປະເທດຈີນປັດຈຸບັນ)

7. ເມືອງຈຳປາສັກ

ແຕ່ລະເມືອງມີເຈົ້າສັກດີນາປົກຄອງເອີ້ນວ່າ “ເຈົ້າຄອງນະຄອນ” ໃນນັ້ນຫົວເມືອງໃຫຍ່ໄດ້ມີການຈັດຕຳແໜ່ງບໍລິຫານປົກຄອງອອກເປັນດັ່ງນີ້:

- ເຈົ້າຄອງນະຄອນດຳລົງຕຳແໜ່ງເປັນພະຍາພົນໝື່ນ ຫຼື ເຈົ້າພົນໝື່ນ ມີສິດເທົ່າທຽມກັບເສນາບໍດີມີຍົດສັກດີນາ 1.400ກົບ
- ເຈົ້າຝ່າຍດຳລົງຕຳແໜ່ງເປັນເຈົ້າຄອງນະຄອນເທົ່າກັບເຈົ້າເມືອງໃນປັດຈຸບັນ
- ເຈົ້າກວານດຳລົງຕຳແໜ່ງເທົ່າກັບຕາແສງ ແລະ ພໍ່ບ້ານໃນປັດຈຸບັນ.

ເຈົ້າສັກດີນາທີ່ປົກຄອງບາງເມືອງກໍ່ຖືກສົ່ງໄປຈາກລາຊະຕະກຸນທີ່ນະຄອນຫຼວງວຽງຈັນຫົວເມືອງໃຫຍ່ແຕ່ລະຫົວເມືອງນັ້ນມີລະບົບການຈັດຕັ້ງການປົກຄອງ, ວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນາທຳ-ສັງຄົມເປັນຂອງຕົນເອງ. ໄປຄຽງຄູ່ກັບອຳນາດການປົກຄອງຂອງເຈົ້າຄອງນະຄອນຍັງມີເຈົ້າອູປະຣາດອີກ 7 ຄົນ ເຊິ່ງພາກັນຢູ່ກັບເຈົ້າຊີວິດຢູ່ນະຄອນຫຼວງວຽງຈັນມີໜ້າທີ່ເບິ່ງແຍງສິດຜົນປະໂຫຍດຂອງແຕ່ລະເມືອງທີ່ຕົນຮັບຜິດຊອບແທນເຈົ້າຊີວິດ. ເຈົ້າຄອງນະຄອນແຕ່ລະເມືອງຕ້ອງລາຍງານສະພາບການເມືອງ ຂອງຕົນໃຫ້ເຈົ້າອຸປະຣາດທີ່ຢູ່ສູນກາງນະຄອນວຽງຈັນ ເພື່ອລາຍງານໃຫ້ແກ່ເຈົ້າຊີວິດສຸລິຍະວົງສາ ທຳມິກະຣາດ ໂດຍຜ່ານເຈົ້າມະຫາອຸປະຣາດ (ອຸປະຣາດຜູ້ໃຫຍ່ ຫຼື ຮອງເຈົ້າຊີວິດ).

- **ເມືອງຂອບດ່ານ ຫຼື ເມືອງດ່ານໜ້າ**

ໄດ້ແກ່ເມືອງທີ່ເປັນປ້ອມດ່ານໜ້າຂອງອານາຈັກລາວລ້ານຊ້າງທີ່ຕັ້ງຢູ່ຕາມເຂດຊາຍແດນແລະ ບາງເມືອງສຳຄັນທີ່ຕິດຕໍ່ກັນ. ເຈົ້າຄອງເມືອງເຫຼົ່ານີ້ມີຍົດສັກຕຳແໜ່ງເທົ່າກັບເຈົ້າສັກດີນາຫົວພັນ ຫຼື ພະຍາຫົວພັນ ຖືສັກດີນາ 1.200 ກົບ ເມືອງຂອບດ່ານນີ້ມີການປົກຄອງເມືອງໂດຍກົງຕໍ່ເມືອງຫຼວງນະຄອນວຽງຈັນເມືອງນີ້ອາດມີຫຼາຍແຕ່ປາກົດຊື່ໃນໜັງສືພື້ນເມືອງລາວບູຮານ ມີ 16 ເມືອງ ຄື: ເມືອງອູ, ເມືອງສິບທາ, ເມືອງໂສຍ, ເມືອງຄຳ, ເມືອງວັງ, ເມືອງຊະໂປນ, ເມືອງນອງ, ເມືອງໂສກ (ອັດຕະປື), ເມືອງຊຸງ, ເມືອງຊຽງແຕງ (ຫາງໂຄ), ເມືອງບ້ານແມ່ທວດ, ເມືອງວັດເກາດ (ພົມມະຂັນ), ເມືອງຫົງ, ເມືອງທອງ ( ອຳເພີຈະຕຸລະພັກພິມາຍ), ເມືອງບົວ(ໄຊຍະພູມ), ເມືອງພູຂຽວ (ສາມໝື່ນ) ແລະ ເມືອງດ່ານຊ້າຍຈັ່ງຫວັດເລີຍ.

ນອກນີ້ຍັງມີເມືອງອື່ນໆອີກຫຼາຍເມືອງທີ່ປະກົດໃນຊື່ສະໄໝບູຮານທີ່ຕັ້ງລະຫວ່າງເມືອງໃຫຍ່ທີ່ສຳຄັນທຽບເທົ່າກັບເມືອງຂອບດ່ານມີ: 10 ເມືອງເຊັ່ນ: ເມືອງຊອງ(ວັງວຽງ), ເມືອງໜອງຫານນ້ອຍ(ອຸບົນ), ເມືອງຊຽງຊຸມ (ສາກົນນະຄອນ), ເມືອງຊຽງສາ, ເມືອງມຸກດາຫານ, ເມືອງພູແລ່ນຊ້າງ (ອຸດອນ), ເມືອງບຶງບອນ, ເມືອງບຶງຊວນ, ເມືອງທ່າອຸເທນ, ເມືອງຖຸປະທາຍ ແລະ ອື່ນໆ.

ນອກຈາກນີ້ຍັງມີເມືອງສຳຄັນທີ່ຕັ້ງຢູ່ລະຫວ່າງສອງອານາຈັກເຊັ່ນ: ເມືອງລະຄອນລາດສະສີມາ ຖືວ່າເປັນເມືອງສອງທ້າວ, ຢ້າວສອງເຂີຍເໝືອນກັບວ່າ ນາສອງເໝືອງເມືອງສອງທ້າວເພາະວ່າເປັນເມືອງທີ່ຕັ້ງຢູ່ລະຫວ່າງກາງຂອງອານຈັກລາວລ້ານຊ້າງ ແລະ ອານາຈັກອາຍຸດທະຍາ ເມື່ອໃດອານາຈັກລາວລ້ານຊ້າງເຂັ້ມແຂງກໍ່ຂຶ້ນກັບອານາຈັກລາວລ້ານຊ້າງ ແລະ ເມື່ອໃດກຸງສີອາຍຸດທະຍາເຂັ້ມແຂງກໍ່ໄປຂຶ້ນກັບອາຍຸດທະຍາບາງເທື່ອກໍ່ຂຶ້ນກັບສອງອານາຈັກພ້ອມໆກັນ ແລະ ບາງເທື່ອກໍ່ປະກົດຕົນເປັນເອກະລາດບໍ່ຂຶ້ນກັບໃຜສະເພາະສະໄໝເຈົ້າສຸລິຍະ

ວັງສາທຳມິກະຣາດປົກຄອງອານາຈັກລາວລ້ານຊ້າງ, ນະຄອນລາດຊະສີມາໄດ້ເປັນຫົວເມືອງຂຶ້ນ ຫຼື ນັບຖືສອງອານາຈັກຄຽງຄູ່ກັນໄປ.

**ຄ. ດ້ານກົດໝາຍ ແລະ ການຕັດສິນຄະດີ**

- **ກົດໝາຍ**

ນອກຈາກນີ້ພະອົງຍັງໄດ້ເອົາໃຈໃສ່ປັບປຸງທາງດ້ານກົດໝາຍເພື່ອເຮັດໃຫ້ການຄຸ້ມຄອງພົນລະເມືອງໃນສັງຄົມມີຄວາມເປັນລະບຽບຮຽບຮ້ອຍ. ສະນັ້ນ, ພະອົງຈຶ່ງໄດ້ເອົາໃຈໃສ່ກໍ່ສ້າງກົດໝາຍເພື່ອຄຸ້ມຄອງສັງຄົມໃຫ້ມີຄວາມເປັນລະບຽບຮຽບຮ້ອຍບໍ່ພຽງແຕ່ຂ້າລາຊະການ, ທະຫານ, ຕຳຫຼວດພົນລະເຮືອນ ແລະ ປະຊາຊົນທົ່ວໄປເທົ່ານັ້ນແມ່ນແຕ່ເຈົ້າຊີວິດເອງກໍ່ຕ້ອງປະຕິບັດກົດໝາຍຢ່າງເຄັ່ງຄັດທີ່ສຸດ ໃນ ປີ ຄ.ສ 1660 ນີ້ກົດໝາຍມີ ສອງສຳນວນຄື ສຳນວນທີ່ຂຽນເປັນກາບກອນເພື່ອປຸກລະດົມປະຊາຊົນ. ຄຳພີກົດໝາຍນີ້ຜູ້ແຕ່ງໃສ່ຊື່ວ່າ: "ຄຳພີທຳມະຊາດ" ຜູ້ເປັນເຈົ້າການໃນການແຕ່ງກົດໝາຍນີ້ ແມ່ນເສນາບໍດີຝ່າຍກາງເຊິ່ງມີໜ້າທີ່ຮັບຜິດຊອບກ່ຽວກັບ ກົດໝາຍ ແລະ ສານຕາງເຈົ້າຊີວິດ ແລະ ມີສິດລົງໂທດຜູ້ຝ່າຝືນກົດໝາຍ ແລະ ກາບທູນເຈົ້າຊີວິດຕັດສິນ ຊີ້ຂາດບາງບັນຫາສຳຄັນ ໃນຮ່າງກົດໝາຍນັ້ນ ແມ່ນເອົາສິນທຳທາງພຸດທະສາສະນາເປັນຕົ້ນຕໍເຊັ່ນ: ທະສະພິສຣາຊະທຳ 10 ປະການ, ສິນ 5 ປະການ, ອະຄະຕິ 4, ພົມວິຫານ 4 ແລະ ອື່ນໆ ອີກ ຕົວຢ່າງເພິ່ນໄດ້ແບ່ງຄຳພີທຳມະຊາດ(ກົດໝາຍ)ອອກເປັນ 5 ຫ້ອງ (ຫຼື 5 ພາກ) ຕາມຫຼັກສິນ 5 ທາງພຸດທະສາສະໜາຄື:

- ຫ້ອງປານາຕິບາດ ວ່າດ້ວຍການຂ້າຕະກຳຕ່າງໆ
- ຫ້ອງອະທິນາທານວ່າດ້ວຍເລື່ອງໂຈລະກຳຕ່າງໆ (ການກໍ່ການຮ້າຍ ຫຼື ສ້າງຄວາມບໍ່ສະຫງົບ)
- ຫ້ອງກາເມສຸມິດສາຈານວ່າດ້ວຍເລື່ອງຮີດຄອງຜົວເມຍ
- ຫ້ອງມຸສາວາດວ່າດ້ວຍເລື່ອງການຫຼອກລວງ ແລະ ຕົວະລ້າຍ
- ຫ້ອງສຸລາເມໄລຍະວ່າດ້ວຍເລື່ອງໂທດການດື່ມຂອງໝື່ນເມົາ.

ນອກນີ້ຍັງມີສິນທຳທາງພຸດທະສາສະໜາຫຼາຍອັນທີ່ໝູນໃຊ້ເຂົ້າໃນວຽກງານກໍ່ສ້າງກົດໝາຍ ແລະ ສານຈຸດປະສົງກໍ່ເພື່ອຢາກໃຫ້ກົດໝາຍ ແລະ ສານນັ້ນສັກສິດ ແລະ ເປັນໜ້າເຊື່ອຖືແກ່ມະຫາຊົນທົ່ວໄປແຕ່ຈຸດປະສົງຕົ້ນຕໍແມ່ນເພື່ອຢາກໃຫ້ປະຊາຊົນຮັບໃຊ້ສັກດີນາຢ່າງຕາຍໃຈ ການດຳເນີນຄະດີຂອງຜູ້ກະທຳຜິດ ການໄຕ່ສວນ ຫຼື ສືບສວນ ແລະ ຕັດສິນລົງໂທດຕໍ່ຜູ້ກະທຳຜິດນັ້ນກ່ອນອື່ນໝົດຜູ້ໄຕ່ສ່ວນ ແລະ ດຳເນີນຄະດີໝາຍເຖິງເຈົ້າກວ້ານ, ເຈົ້າສານ ຕ້ອງຢູ່ໃນສິນທຳ (ສັດຈະທຳ) ຢ່າງເຄັ່ງຂັດ ບໍ່ມີອະຄະຕິເຫັນແກ່ຜູ້ໃດຜູ້ໜຶ່ງ, ບໍ່ວ່າຂຸນນາງມີຍົດສັກ, ຄູບາອາຈານ, ເຈົ້າຊີວິດທີ່ປົກຄອງແຜ່ນດິນກໍ່ຕາມ ຜູ້ເຮັດຜິດກໍ່ໃຫ້ວ່າຜິດ, ຜູ້ເຮັດຖືກກໍ່ໃຫ້ວ່າຖືກລັກສະນະຕັດສິນຄະດີມີຢູ່ 4 ສະຖານຄື:

- ໂທດສະຖານໜັກເອີ້ນວ່າຂັບຄ່າຄໍ
- ໂທດສະຖານກາງເອີ້ນວ່າຂັບໄໝ
- ໂທດສະຖານເບົາເອີ້ນວ່າຂັບແປງ
- ໂທດສະຖານນ້ອຍເອີ້ນວ່າຂັບສິມມາ.

- **ການຕັດສິນຄະດີ(ສານຍຸດຕິທຳ)**

ໄດ້ແບ່ງອອກເປັນສອງສານໃຫຍ່ຄືສານຍຸດຕິທຳວັງຫຼວງ ແລະ ສານຍຸດຕິທຳຮັບໃຊ້ປະຊາຊົນທົ່ວໄປ. ສານທັງສອງນີ້ມີຈຸດປະສົງເປົ້າໝາຍແຕກຕ່າງກັນຄືສານວັງຫຼວງມີຈຸດປະສົງຕົ້ນຕໍໃນການເສີມສ້າງຖານະບົດບາດບັນດາເຈົ້າສັກດີນາຂ້າລາຊະການຂຸນນາງໃນພະລາຊະວັງໃນຖານະທີ່ຖືຕົນເອງວ່າເປັນຊົນຊັ້ນໜຶ່ງທີ່ມີອຳນາດອາດສະໜາຢູ່ໃນສັງຄົມເວລານັ້ນ ການຕັດສິນຄະດີກໍ່ມີເປົ້າໝາຍແຕກຕ່າງກັນຈາກຄົນທຳມະດາສາມັນ ສານທີ່ຮັບໃຊ້ຕັດສິນຄະດີມະຫາຊົນນັ້ນກໍ່ມີສອງຂັ້ນ ຫຼື ສອງລະດັບຄື: ສານປະຊາຊົນຂັ້ນສູນກາງ ແລະ ສານປະຊາຊົນຂັ້ນທ້ອງຖິ່ນ ສານປະຊາຊົນຂັ້ນສູນກາງ ມີໜ້າທີ່ດຳເນີນຄະດີອາຍາ ແລະ ຄະດີແພ່ງຂອງມະຫາຊົນທົ່ວໄປໃນເມື່ອໄດ້ຮັບອຸທອນທ້ອງຖິ່ນຕາມລຳດັບ ແລະ ມີໜ້າທີ່ຈັບກຸ່ມນັກໂທດເຂົ້າຄຸກ ແລະ ສັ່ງປ່ອຍຕົວນັກໂທດ. ຖ້າກໍລະນີທີ່ສານນີ້ບໍ່ສາມາດຕັດສິນໄດ້ກໍ່ນຳຂຶ້ນກາບທູນເຈົ້າມະຫາອຸປະຣາດ ແລະ ເຈົ້າຊີວິດເພື່ອຂໍຄວາມພິຈາລະນາ, ສານທ້ອງຖິ່ນໝາຍເຖິງສານປະຈຳເມືອງ ເອີ້ນວ່າສານເມືອງ, ຫົວໜ້າສານນີ້ເອີ້ນວ່າສານເມືອງ, ມີ 1 ຄົນຜູ້ພິພາກສານໄຕ່ສວນ ແລະ ຕຸລາການ ເອີ້ນວ່າ: "ຂຸນພິນິໄສ  ແລະ ລ່າມເມື່ອງ" ມີ 4 ຄົນທີ່ຕໍ່າກວ່າເມືອງລົງມາແມ່ນສານຝ່າຍຕາແສງ, ບ້ານຕາມລຳດັບ, ທັງສາມຂັ້ນປົກຄອງທີ່ດ່າວມານີ້ ບໍ່ມີເຈົ້າໜ້າທີ່ປະຈຳການ ແຕ່ມີເລື່ອງເກີດຂຶ້ນກໍ່ປະຊຸມເພື່ອຄົ້ນຄວ້າຖ້າບໍ່ຕົກລົງກັນ ໄດ້ກໍ່ອຸທອນຂຶ້ນຕາມລຳດັບ.

**1. 3 ວຽກງານດ້ານການປ້ອງກັນອານາຈັກ**

**ກ. ຮູບການຈັດຕັ້ງກອງທັບ**

ຮູບການຈັດຕັ້ງບັນຊາການກອງທັບສະໄໝເຈົ້າສຸລິຍະວົງສາ ທຳມິກະຣາດນັ້ນ ຕາມບົດບັນທຶກຄະນະທູດການຄ້າ ແລະ ນັກສອນສາສະໜາຊາວຕາເວັນຕົກ ແລະ ບາງຂໍ້ມູນໃນໜັງສືທຳມະຊາດ ບູຮານລາວກ່າວວ່າພະອົງມີກຳລັງປ້ອງກັນເຖິງ 500.000 ຄົນ ໃນນັ້ນກໍ່ມີທະຫານຫຼວງປະຈຳຢູ່ນະຄອນ ແລະ ຫົວເມືອງໃຫຍ່ທີ່ຊາວເອີຣົບ ເອີ້ນວ່າ"ມົນທົນ" ຮູບການຈັດຕັ້ງບັນຊາວຽກງານກອງທັບທັງໝົດຂຶ້ນກັບ"ອັກຄະມະຫາເສນາບໍດີຝ່າຍຂວາ" ມີບົດບາດເປັນພະຍາເອີ້ນວ່າ: ພະຍາແສນເມືອງສະເພາະຢູ່ສູນກາງ ຍັງມີຄະນະເສນາທິການ 6 ຄົນມີຍຸດເປັນພະຍາ 4 ຄົນ ອີກ 2 ຄົນເປັນຜູ້ເສນາທິການມີຄື:

- ພະຍາສຸໄພບັນຊາການຮົບ
- ພະຍາຄຳມູນເກນກຳລັງທະຫານ
- ພະຍາແກ ຈັດກອງທັບເຝິກແອບໜ່ວຍຮົບຕ່າງໆ ມີເຝິກແອບທະຫານ, ຊ້າງເສິກ, ມ້າເສິກ ແລະ ອື່ນໆ
- ພະຍາວຽງຄຳ ລຳລຽງສະບຽງອາຫານໃຫ້ກອງທັບທັງ 4 ຄົນ ນີ້ມີຖານດອນສັກ ຫຼື ເອີ້ນວ່າມີຂັ້ນຄ່າຄໍ ພັນສອງຮ້ອຍ (1200)
- ອຸປະຣາຊາ ເປັນເສນາທິການຜູ້ຊ່ວຍ.
- ໝື່ນໃຈເປັນເສນາທິການຜູ່ຊ່ວຍທັງ 2 ຄົນໃນຖານະດອນສັກ 800 ເງິນ.

ທັງ 6 ທີ່ກ່າວມານີ້ເປັນກຳລັງຫຼວງປ້ອງກັນອານາຈັກພິເສດກຳລັງຫຼວງປ້ອງກັນອານາຈັກມີໜ້າທີ່ຕິດຕໍ່ພົວພັນກັບກອງທັບຢູ່ທ້ອງຖິ່ນ ພາຍໃຕ້ການຊີ້ນຳຂອງພະຍາເມືອງແສນ ມີສິດສັ່ງໄປຍັງກອງທັບທຸກເຫຼົ່າໄປຍັງ

ກອງທະຫານທຸກເຫຼົ່ານັ້ນ ໃນ 7 ຫົວເມືອງເພື່ອອອກຕໍ່ສູ້ ກັບສັດຕູ ໃນສະໄໝຂອງພະອົງແບ່ງກອງທັບອອກ ເປັນ: ເລົ່າທະການຍ່າງທາງຕີ, ເຫຼົ່າທະຫານລົດມ້າ, ເຫຼົ່າທະຫານລຳລຽງບຳລຸງ ແລະ ເຫຼົ່າທະຫານສຳຮອງ

**ຂ. ທິດທາງການປ້ອງກັນອານາຈັກ ແລະ ສາມາດປ້ອງກັນເຂດນ້ຳແດນເດີນ**

ທິດທາງປ້ອງກັນອານາຈັກແມ່ນວຽກງານໜຶ່ງທີ່ສຳຄັນ ແລະ ຮີບດ່ວນຂອງພະອົງ ຍ້ອນສະພາບຢູ່ພາຍ ໃນ ແລະ ພາຍນອກໜີບຮັດ.ດັ່ງນັ້ນພະອົງໄດ້ຊຸກຍູ້ທ້ອງຖິ່ນພື້ນຖານ ໂດຍສະເພາະແມ່ນຫົວບົດເມືອງໃຫຍ່ຕ້ອງ ປັບປຸງກຳລັງຕົນເອງໃຫ້ເຂັ້ມແຂງຮູບດ້ານເພື່ອ ປົກປ້ອງແຜ່ນດິນອອກຈາກອຳນາດອານາຈັກອ້ອມຂ້າງ ພະອົງໄດ້ ສັ່ງໃຫ້ກຳລັງຫຼວງສົມທົບກັບກຳລັງທ້ອງຖິ່ນເປັນເຈົ້າການ ດັ່ງນັ້ນ, ການປະທະກັນຢູ່ເຂດຊາຍແດນອ້ອມຂ້າງ ເຮັດໃຫ້ກຳລັງທັບຂອງອານາຈັກລາວລ້ານຊ້າງ ໄດ້ປຽບສະເໝີ ກຳລັງປ້ອງກັນໃນສະໄໝເຈົ້າສຸລິຍະວົງສາ ທຳມະ ກະຣາດ ໄດ້ເປັນກຳລັງທັບທີ່ເຂັ້ມແຂງທີ່ສຸດ ໃນປະຫວັດສາດລາວເປັນທີ່ເກງຂາມ ແກ່ຂ້າເສິກສັດຕູພາຍໃນ ແລະ ພາຍນອກເຮັດໃຫ້ອານາຈັກລາວລ້ານຊ້າງ ມີຊື່ສຽງໂດ່ງດັງ.

**1.4 ການປັບປຸງດ້ານເສດຖະກິດ**

ພື້ນຖານເສດຖະກິດຂອງອານາຈັກລາວລ້ານຊ້າງ ສະໄໝເຈົ້າສຸລິຍະວົງສາ ທຳມິກະຣາດ ປົກຄອງນັ້ນ ແມ່ນຢຶດຖືອາຊີບກະສິກຳເປັນຫລັກ ໂດຍສະເພາະມີການປູກຝັງ ແລະ ລ້ຽງສັດຄຽງຄູ່ກັນ ນອກນັ້ນຂະ ແໜງການຄ້າ ແລະ ຫັດຖະກຳກໍ່ຂະຫຍາຍຄວບຄູ່ກັນໄປ ການຜະລິດສ່ວນໃຫຍ່ເປັນຂອງບຸກຄົນ ຫຼື ຂອງ ຄອບຄົວຕ້ອງດຳເນີນການຜະລິດ ຢູ່ໃນຂອບເຂດຕອນດິນທີ່ເຈົ້າຊີວິດອະນຸຍາດໃຫ້ ປະຊາຊົນທຸກຄົນຕ້ອງເສຍ ພາສີເຂົ້າຄັງຫຼວງ ໂດຍຄິດໄລ່ເອົາຜົນຜະລິດຕາມຈຳນວນ ພົນໃນຄອບຄົວ ແລະ ຕາມອາຍຸກະສຽນທີ່ບົ່ງໄວ້ໃນ ກົດໝາຍ ເພື່ອສົ່ງເສີມໃຫ້ເສດຖະກິດມີຄວາມເຂັ້ມແຂງ ແລະ ປະຊາຊົນມີຄວາມຢູ່ດີກິນດີ ມາໃນປີ ຄ.ສ 1660 ພະອົງຈຶ່ງມີການອອກກົດຫມາຍກ່ຽວກັບການຄຸ້ມຄອງທີ່ດິນປູກຝັງ, ການເຊົ່າດິນປູກຝັງແລະ ການເສຍ ພາສີໃຫ້ລັດ ການອອກກົດໝາຍດດັ່ງນີ້ ໄດ້ເປັນການສົ່ງເສີມກະຕຸກຊຸກຍູ້ ໃຫ້ຜູ້ທຳການຜະລິດມີກຳລັງໃຈ ສະແດງອອກບ່ອນວ່າ:

- ການຄຸ້ມຄອງທີ່ດິນຕອນດິນບຸກຄົນໃດກໍ່ຕາມທີ່ປະປ່ອຍ ໂດຍບໍ່ມີການທຳການຜະລິດນັ້ນຈະມີພຽງ ແຕ່ 3 ປີ ຖ້າກາຍ 3 ປີ ບໍ່ມາບຸກເບີກສ້າງສາ ຈະຖືວ່າໝົດກຳມະສິດໃນດິນຕອນນັ້ນ.
- ການເຊົ່າບຸກຄົນໃດກໍ່ຕາມທີ່ເຊົ່າດິນຜູ້ອື່ນ ເພື່ອທຳການຜະລິດບໍ່ໄດ້ຂາດ ແລະ ເສຍຄ່າເຊົ່າໃຫ້ເປັນ ປະຈຳ ເຈົ້າຂອງດິນບໍ່ມີສິດຖອນດິນນາໄປ ໃຫ້ຜູ້ອື່ນເປັນເດັດຂາດ ບໍ່ວ່າບຸກຄົນນັ້ນຈະມີຖານະສັກສູງ ປານໃດກໍ່ຕາມ, ຖ້າມາບັງຄັບໃຫ້ຜູ້ເຊົ່ານາອອກ ຈາກຕອນດິນເພື່ອໃຫ້ຜູ້ອື່ນທຳການຜະລິດ ບຸກຄົນນັ້ນ ຈະຖືກລົງໂທດໜັກຂຶ້ນ.
- ການເສຍສ່ວຍກ່ຽວກັບການເສຍພາສີ ກະສິກຳເຂົ້າພະຄັງຫຼວງນັ້ນ ເວລານີ້ໄດ້ມີການຫຼຸດຜ່ອນລົງ.

**ກ. ດ້ານກະສິກຳ**

ປະຊາຊົນສະໄໝເຈົ້າສຸລິຍະວົງສາທຳມິກະຣາດ (ປົກຄອງ) ອາຊີບຕົ້ນຕໍແມ່ນເຮັດນາ ແລະ ໄຮ່ໄປຄຽງຄູ່ ກັນ. ອີງຕາມສະພາບເງື່ອນໄຂຂອງທ້ອງຖິ່ນໃຜລາວຢູ່ເຂດທົ່ງພຽງຕາມສອງຝັ່ງແມ່ນ້ຳຂອງ ແລະ ສາຂາແມ່ນ້ຳ ຂອງ. ສ່ວນຫຼາຍແມ່ນເຮັດນາ ແຕ່ບາງປີຟ້າແລ້ງຈຳເປັນຕ້ອງເຮັດໄຮ່ເພີ່ມເຕີມເພື່ອແກ້ໄຂສະພາບໃນຕໍ່ໜ້າ ແຕ່ ທ້ອງຖິ່ນເຂດພູດອຍແມ່ນເຮັດໄຮ່ປູກເຂົ້າເປັນຫຼັກ, ປູກທາດແປ້ງອື່ນໆເປັນສຳຮອງ. ການເຮັດນາ, ເຮັດໄຮ່ນີ້

ສ່ວນໃຫຍ່ອີງໃສ່ນໍ້າຝົນຈຶ່ງສາມາດເຮັດນາປີໄດ້ປີລະເທື່ອເທົ່ານັ້ນ, ແຕ່ບາງບ່ອນມີການເຮັດເໝືອງຝາຍ (ບ່ອນເກັບນໍ້າ) ໄດ້ມີຄວາມກ້າວໜ້າສາມາດເຮັດນາປີໄດ້ປີລະສອງເທື່ອ ເຊັ່ນ: ຢູ່ທົ່ງຮາບວຽງຈັນເປັນຕົ້ນຕໍານານອຸລັງຄະທາດບູຮານກ່າວວ່າຢູ່ເຂດເທິງບຶງຫຼວງເພິ່ນເຮັດຝາຍກັ້ນນໍ້າ ແຕ່ກ່ອນເອີ້ນວ່າ "ໜອງຄັນແທຜີເຊື້ອ" ບ່ອນເກັບນໍ້າໄວ້ເພື່ອການກະສິກໍາ ໄປຄຽງຄູ່ກັບການປູກຝັງຍັງມີການລ້ຽງສັດທີ່ປະກົດຊື່ໃນກົດໝາຍບູຮານມີ: ຊ້າງ, ມ້າ, ງົວ, ຄວາຍ, ໝູ, ໝາ, ແບ້, ເປັດ, ໄກ່...ສ່ວນງົວ ແລະ ຄວາຍນັ້ນລ້ຽງໄວ້ສໍາລັບລາກແກ່ ແລະ ເປັນອາຫານ.

ໃນລາຊະການຂອງພະເຈົ້າສຸລິຍະວົງສາທໍາມິກະຣາດນີ້ຍັງມີກົດໝາຍຫ້າມບໍ່ໃຫ້ຂ້າງົວ, ຄວາຍຂາຍຢູ່ຕາມຕະຫຼາດ ເວັ້ນເສຍແຕ່ກໍລະນີຈໍາເປັນຕ້ອງຂໍອະນຸຍາດຈາກເຈົ້າໜ້າທີ່ຂອງລັດ. ຖ້າບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 1 ໂຕ ຕໍ່ 5ໂຕ ໃຫ້ເປັນຂອງຫຼວງ.

**ຂ. ວຽກງານຫັດຖະກໍາ ແລະ ການຄ້າ**

ຄຽງຄູ່ກັບການກະສິກໍານັ້ນວຽກງານຫັດຖະກໍາເຊິ່ງມີມາໃນສະຕະວັດແລ້ວຍິ່ງໄດ້ຖືກປັບປຸງດີ ກວ່າເກົ່າ ແລະ ມີຄຸນນະພາບໃໝ່ (ການບັນທຶກຂອງຊາວຕ່າງປະເທດທີ່ເຂົ້າມາຢ້ຽມຢາມລາວ) ວຽກງານຫັດຖະກໍາມີຫຼາຍປະເພດ ເຊັ່ນ: ຫັດຖະກໍາເຄື່ອງປັ້ນດິນເຜົາ, ຫັດຖະກໍາຕີເຫຼັກ, ປັ້ນຫູ່, ຕີເຄື່ອງເອ້, ເຄື່ອງປະດັບ, ຫັດຖະກໍາຕໍ່າແຜ່ນແພ,ທຍິບແສ່ວ, ຈັກສານ, ການຊ່າງ ແລະ ອື່ນໆ ໄປຄຽງຄູ່ກັບການຂະຫຍາຍຕົວ. ວຽກງານການຄ້າໃນສະໄໝນັ້ນໄດ້ຂະຫຍາຍຕົວ ພໍ່ຄ້າ, ແມ່ຄ້າມີສິດເສລີພາບໃນການດໍາເນີນທຸລະກິດຫຼາຍຂຶ້ນການຄ້າເວລານັ້ນມີ 2 ປະເພດຄື: ການຄ້າຂາຍຂອງເອກະຊົນ ແລະ ການຄ້າຂອງລັດສອງປະເພດນີ້ໄດ້ຂະຫຍາຍຕົວຄຽງຄູ່ກັນໄປແຕ່ວ່າການຄ້າເອກະຊົນນັ້ນຈະຕ້ອງຢູ່ໃຕ້ການຄອບຄອງຂອງລັດບົນພື້ນຖານຂອງລະບຽບກົດໝາຍ.

**1.5. ການປັບປຸງດ້ານວັດທະນະທໍາສັງຄົມ**

**ກ. ລັກສະນະທາງສັງຄົມ**

ສັງຄົມລ້ານຊ້າງໃນສະໄໝປົກຄອງຂອງພະເຈົ້າສຸລິຍະວົງສາ ທໍາມິກະຣາດນັ້ນປະກອບຫຼາຍຊັ້ນຄົນທີ່ມີຖານະຕໍາແໜ່ງແຕກຕ່າງກັນແຕ່ເຮົາອາດຈໍາແນກຊົນຊັ້ນໃນສັງຄົມລາວລ້ານຊ້າງສະໄໝນັ້ນແບ່ງອອກເປັນ 2 ຊົນຊັ້ນໃຫຍ່ຄື: ຊົນຊັ້ນປົກຄອງ ແລະ ຊົນຊັ້ນຖືກປົກຄອງ. ໃນແຕ່ລະຊົນຊັ້ນນີ້ປະກອບດ້ວຍຫຼາຍກຸ່ມຄົນຄື:

- ຊົນຊັ້ນປົກຄອງປະກອບດ້ວຍກະສັດ, ພະສົງ, ຂຸນນາງ ແລະ ຂ້າລາຊະການພວກນີ້ເປັນຜູ້ມີສິດໃນການຄອບຄອງດິນແດນເປັນຂອງສ່ວນຕົວ ແລະ ມີສິດເໜືອປະຊາຊົນ.
- ຊົນຊັ້ນທີ່ຖືກປົກຄອງປະກອບດ້ວຍປະຊາຊົນສ່ວນໃຫຍ່ທີ່ມີຖານະເປັນໄພ່ ແລະ ຂ້ອຍຂ້າ ພວກນີ້ມີຊີວິດຢູ່ພາຍໃຕ້ການຄຸ້ມຄອງຂອງສັກດີນາ ແລະ ເປັນຂ້ອຍຂ້າຮັບໃຊ້ແກ່ຜູ້ທີ່ມີຖານະຮັ່ງມີໃນສັງຄົມ. ພວກບ່າວໄພ່ ແລະ ຂ້ອຍຂ້ານີ້ເປັນຜູ້ອອກແຮງງານໂດຍກົງ ເພື່ອຜະລິດລ້ຽງສັງຄົມ ແລະ ມີສິດຄອບຄອງດິນເພື່ອປູກຝັງຕາມຖານະຄືປະຊາຊົນທົ່ວໄປໃນຄອບຄົວໜຶ່ງ ມີສິດຄອບຄອງດິນນາເປັນຂອງຕົນເອງໄດ້ 500 ໄຮ່ ຫາ 2.000ໄຮ່. ພວກທີ່ເປັນຂ້ອຍຂ້າໃນຄອບຄົວໜຶ່ງ ມີສິດຄອບຄອງດິນເປັນຂອງຕົນເອງໄດ້ 250 ໄຮ່ ຫາ 1.000 ໄຮ່ ແຕ່ຢ່າງໃດກໍ່ຕາມ ເຖິງວ່າສັງຄົມລາວລ້ານຊ້າງໃນສະໄໝການປົກຄອງຂອງພະເຈົ້າສຸລິຍະວົງສາ ທໍາມິກະຣາດ ນັ້ນ ຈະມີການແບ່ງຊົນຊັ້ນຕາມຖານະຕໍາແໜ່ງກັນກໍ່

ຕາມແຕ່ ການພົວພັນກັນທາງສັງຄົມ ແມ່ນຢູ່ບົນພື້ນຖານລະບຽບກົດໝາຍຂອງບ້ານເມືອງ ແລະ ຫຼັກສິນທຳທາງດ້ານສາສະໜາ.

**ຂ. ວັດທະນະທຳ**

ປະຊາຊົນມີພື້ນຖານວັດທະນະທຳທີ່ເປັນເອກະລັກຂອງຕົນ ບໍ່ວ່າທາງດ້ານວັດຖຸທີ່ເປັນສີໄມ້ລາຍມືກໍ່ຄືທາງດ້ານຈິດໃຈ. ຄົນລາວມີນິໄສໃຈຄໍໂອບອ້ອມອາລີ, ກວ້າງຂວາງ (ໃຈບຸນ) ຊື່ສັດຕໍ່ເພື່ອນມິດ ແລະ ອື່ນໆມີສິລະປະວັດຖຸທີ່ສະແດງອອກທາງດ້ານຫົວຄິດປະດິດສ້າງເຊັ່ນ: ສິລະປະສະຖາປັດຕະຍາກຳ, ປະຕິມະກຳ ແລະ ຈິດຕະກຳທີ່ສວຍສົດງົດງາມໄດ້ສືບທອດມາຮອດປະຈຸບັນໃນໄລຍະນັ້ນວັດໄດ້ເປັນສູນກາງທາງດ້ານວັດທະ ນະທຳລາວເປັນໂຮງຮຽນສຶກສາອົບຮົມປວງຊົນທົ່ວໄປ ແລະ ຍັງເປັນບ່ອນເຕົ້າໂຮມບັນດານັກປາດອາຈານຜູ້ທີ່ມີຫົວຄິດປະດິດສ້າງຄືບົດບັນທຶກຂອງຊາວຕາເວັນຕົກທີ່ເຂົ້າມາໃນວຽງຈັນເມື່ອ ປີ ຄ.ສ 1641-1642 ບາງຕອນໄດ້ກ່າວວ່າ: ພຸດທະສາສະໜາໃນສະຕະວັດທີ XVII ສະໄໝຂອງພະເຈົ້າສຸລິຍະວົງສາ ທາມົກະຣາດໄດ້ມີບົດບາດອິດທິພົນສູງສຸດ ຢູ່ໃນສັງຄົມລາວສະໄໝສັກດີນາ. ພະສົງທາງພະພຸດທະສາສະໜາມີຍົດສັກ (ສະມະນະສັກ) ເທົ່າທຽມກັບສັກດີນາ, ຂຸນນາງຂັ້ນຕ່າງໆຂອງອາຈານ.

ສິນທຳທາງພຸດທະສາສະໜາມີອິດທິພົນຢູ່ເໜືອຈິດໃຈຂອງຄົນລາວຕັ້ງແຕ່ຊົນຊັ້ນສູງສຸດລົງຮອດປະຊາຊົນລາວທົ່ວໄປໄດ້ເປັນທິດສະດີພື້ນຖານໃຫ້ແກ່ການເມືອງການປົກຄອງ, ນັກບວດ, ອາຈານ, ນັກປະດິດຄິດແຕ່ງ ແລະ ອື່ນໆໄດ້ກາຍເປັນແສງສະຫວ່າງເບື້ອງທາງໃນການດຳລົງຊີວິດປະຈຳວັນ ແລະ ເປັນເຄື່ອງວັດແທກຄຸນສົມບັດຂອງຄົນໃນສັງຄົມ. ໃນການບໍລິຫານອານາຈັກເຈົ້າຊີວິດຍັງໄດ້ອີງໃສ່ສາສະໜາເປັນເຄື່ອງມືຊ່ວຍໃນການປົກຄອງ.

**ການສຶກສາ:** ເພື່ອພັດທະນາອານາຈັກໃຫ້ມີຄວາມຮຸ່ງເຮືອງ ແລະ ເຂັ້ມແຂງນັ້ນ ພະອົງໄດ້ເອົາໃຈໃສ່ໃນການພັດທະນາຄົນໃຫ້ມີຄວາມຮູ້, ດ້ວຍເຫດນັ້ນໃນໄລຍະນີ້ຈຶ່ງເກີດມີນັກປາດອາຈານເປັນຈຳນວນຫຼວງຫຼາຍການສຶກສາເວລານີ້ ໄດ້ມີພື້ນຖານຈາກພຸດທະສາສະໜາຄື ເອົາວັດເປັນສະຖານທີ່ສຶກສາຫາຄວາມຮູ້ຂອງຄົນທົ່ວໄປ. ພິເສດບໍ່ພຽງແຕ່ລູກຂອງສັກດີນາ ແລະ ຂຸນນາງຜູ້ໃຫຍ່ເທົ່ານັ້ນທີ່ມີໂອກາດຮ່ຳຮຽນຢູ່ລາຊະວັງຂອງເຈົ້າຊີວິດ, ຄົນທຳມະດາກໍ່ມີໂອກາດຄືກັນຖ້າຮຽນໄດ້ດີເດັ່ນຈາກຂອບເຂດຕົນກໍ່ກໍ່ຈະຖືກສົ່ງຂຶ້ນໄປຮຽນໃນວັງ ແລະ ໃນວັດທີ່ສຳຄັນ ຈົນກາຍເປັນຄົນທີ່ສຳຄັນ ເຊັ່ນ: ພະຍາແສນສຸລິນ ແລະ ຍາຄູຂີ້ຫອມເປັນຕົ້ນ. ຜູ້ທີ່ສິດສອນທົ່ວໄປແມ່ນພະສົງສຳມະເນນຢູ່ວັດ. ການສິດສອນບໍ່ໄດ້ຄິດໄລ່ຄ່າຕອບແທນໂດຍກົງເພາະວ່າມີປະຊາຊົນມາຖວາຍຢູ່ແລ້ວ. ເນື້ອໃນການສິດສອນມີຢູ່ 2 ລັກສະນະຄື: ລັກສະນະຝ່າຍທຳ ຫຼື ເອີ້ນວ່າ “ຄະດີທຳ” ແລະ ຫຼັກສູດຝ່າຍໂລກເອີ້ນວ່າ “ຄະດີໂລກ” ລະບົບການຮຽນແບ່ງເປັນ3 ຂັ້ນຄື:

- **ຂັ້ນທີ1** ຮຽນອັກຄະລະວິທີຄືຮຽນອ່ານ-ຂຽນ ແລະ ວິຊາການຕ່າງໆທີ່ກ່ຽວພັນກັບສາສະໜານອກຈາກນີ້ຍັງມີການຮຽນສູດມົນນ້ອຍ ແລະ ກາງອົກ
- **ຂັ້ນທີ2** ຮຽນໄວຍະກອນບາລີ, ອະພິທຳ 7 ຄຳພີ ແລະ ຍັງຮຽນກ່ຽວກັບວິຊາການຕ່າງໆເພື່ອແນໃສ່ປະກອບອາຊີບເຊັ່ນ: ຊ່າງແກະສະຫຼັກ, ຊ່າງຫຼໍ່ອມ ແລະ ອື່ນໆ

- **ຂັ້ນທີ3** ເປັນຂັ້ນຕອນການຕັດສິນການຮຽນຈະດຳເນີນການສຶກສາໄປໃນຝ່າຍໃດຄື: ຝ່າຍທຳ ຫຼື ຝ່າຍໂລກ.

ສຳລັບຄາລະວາດ (ປະຊາຊົນທົ່ວໄປ) ເມື່ອຮຽນສຸດຂັ້ນທີ1 ແລະ ຂັ້ນທີ 2 ແລ້ວບາງຄົນກໍ່ໄປປະກອບອາຊີບອັນໃດອັນໜຶ່ງໄດ້ສະເພາະຜູ້ທີຍັງມີຄວາມພະຍາຍາມຈະສືບຕໍ່ສຶກສາຮ່ຳຮຽນຂັ້ນຕໍ່ໄປຕ້ອງເລືອກເອົາວິຊາໃດໜຶ່ງໃນສາຕະສົນ 18 ປະທານຄື:

| | | |
|---|---|---|
| 1. | ຍຸດທະສາດ | ວິຊາສົງຄົມ |
| 2. | ຣັດຖະສາດ | ວິຊາການປົກຄອງ ຫຼື ບໍລິຫານປະເທດ |
| 3. | ນິຕິສາດ | ວິຊາກົດໝາຍແບບແຜນປະເພນີຣົດຄອງ |
| 4. | ວານິຊາສາດ | ວິຊາການຄ້າ |
| 5. | ອັກສອນສາດ | ວິຊາທາງໜັງສື |
| 6. | ນິຣຸດຕິສາດ | ວິຊາພາສາຕ່າງປະເທດ |
| 7. | ຄະນິດສາດ | ວິຊາຄຳນວນ |
| 8. | ໂຊຕິສາດ | ວິຊາເບິ່ງດາວ ຫຼື ດາລາສາດ |
| 9. | ພູມິສາດ | ວິຊາເບິ່ງພູມປະເທດ |
| 10. | ໂຫລາສາດ | ວິຊາຄຳນວນນ້ຳຟ້ານ້ຳຝົນ |
| 11. | ສັດຕະສາດ | ວິຊາກ່ຽວກັບສັດ |
| 12. | ໂຍຄະສາດ | ວິຊາຊ່າງກົນຫູ່ |
| 13. | ເຫຕຸສາດ | ວິຊາຮູ້ເຫດຜົນ (ຕັກກະສາດ) |
| 14. | ເວຊະສາດ | ວິຊາແພດ (ໝໍຢາ) |
| 15. | ສາສະໜາສາດ | ວິຊາທາງສາສະໜາ |
| 16. | ມາຍາສາດ | ວິຊາໃຊ້ກົນອຸບາຍ (ປະຈຸບັນເອີ້ນວ່າວິຊາຈິດຕະສາດ) |
| 17. | ຄັນທັບພະສາດ | ວິຊາດົນຕີ,ນາຕະສິນ, ການຂັບຮ້ອງ |
| 18. | ສັນຕິສາດ | ວິຊາແຕ່ງກາບກອນ, ກາວີຕ່າງໆ |

ຈາກການເອົາໃຈໃສ່ທາງດ້ານການສຶກສານີ້ຈຶ່ງເຮັດໃຫ້ຜົນງານທາງດ້ານການຂີດຂຽນໂດຍສະເພາະພາສາແລະ ວັນນະຄະດີທີ່ມີການຂະຫຍາຍຕົວສູງບັນດາຜົນງານແຫ່ງການຂີດຂຽນທີ່ດີເດັ່ນໃນສະໄໝນັ້ນຍັງຄົງມີຄຸນຄ່າມາຈົນຮອດປະຈຸບັນນີ້ເຊັ່ນ: ນິທານສຽວສະຫວາດ, ມູລະຕັນໄຕ, ສິນໄຊ, ກາລະເກດ ແລະ ອື່ນໆ.

**ສິລະປະກຳຕ່າງໆ:**ໄປຄຽງຄູ່ກັບການຂະຫຍາຍຕົວທາງດ້ານສິລະປະ, ວັນນະຄະດີ, ວຽກງານສິລະປະກຳ .ການຄວັດ, ການແຕ້ມ, ການຫູ່ ແລະ ການປັ້ນກໍ່ຂະຫຍາຍຕົວສູງ.

ນອກນີ້ພະອົງຍັງເອົາໃຈໃສ່ການປັບປຸງວຽກງານການຕ່າງປະເທດເພື່ອແນໃສ່ການປະຕິບັດນະໂຍບາຍການຢູ່ຮ່ວມກັນໂດຍສັນຕິບໍ່ແຊກແຊງຮຸກຮານເຊິ່ງກັນ ແລະ ກັນເປັນມິດກັບທຸກອານາຈັກອ້ອມຂ້າງເຊັ່ນ: ສ້າງສາຍພົວພັນກັບອານາຈັກຂະແມ, ດາຍຫວຽດ

ເວົ້າລວມແລ້ວອານາຈັກລາວລ້ານຊ້າງໃນສະຕະວັດທີ XVII ໂດຍສະເພາະໃນສະໄໝການປົກຄອງຂອງພະເຈົ້າສຸລິຍະວົງສາ ທຳມິກະຣາດ ໄດ້ມີການຂະຫຍາຍຕົວຮຸ່ງເຮືອງສູງສຸດ ແລະ ມີຊື່ສຽງໂດ່ງດັ່ງໄປເຖິງຫຼາຍປະເທດໃນໂລກດັ່ງນັ້ນໃນລາຊະການຂອງພະອົງຈຶ່ງມີຊາວຕ່າງປະເທດເຂົ້າມາລ້ານຊ້າງຄື: ຕົວແທນທູດການຄ້າຊາວໂຮນລັງກໍ່ເດີນທາງມາເຖິງອານາຈັກລາວລ້ານຊ້າງກ່ອນໝູ່ຊື່ວ່າ ວັນວຸດສະຕົບໃນເວລານັ້ນ ພະເຈົ້າສຸລິຍະວົງສາ ທຳມິກະຣາດ ໄດ້ຕ້ອນຮັບຢ່າງສົມກຽດທີ່ພະທາດຫຼວງ ໃນເດືອນພະຈິກ ຄ ສ 1641 ເຊິ່ງແມ່ນໄລຍະບຸນນະມັດສະການພະທາດຫຼວງ. ຈາກນັ້ນກໍ່ມີຊາວປອກຕຸຍການອີກທີ່ເດີນທາງເຂົ້າມາອານາຈັກລາວລ້ານຊ້າງໃນປີ ຄ ສ 1642 ເພື່ອເຜີຍແຜ່ສາສະໜາຄຣິດແຕ່ບໍ່ສຳເລັດເພາະຖືກປະຊາຊົນລາວລ້ານຊ້າງປະຕິເສດ.

## 2. ໄລຍະສຸດທ້າຍຂອງເຈົ້າສຸລິຍະວົງສາ.

ສົມເດັດພະເຈົ້າສຸລິຍະວົງສາທຳມິກະຣາດມີຊື່ເດີມວ່າ ສຸລິຍະກຸມມານ ເປັນບຸດຂອງພະວໍລະວົງສາທຳມິກະຣາດ ເກີດເມື່ອປີ **ຄ.ສ 1613** ມີອ້າຍນ້ອງຮ່ວມພໍ່ແມ່ດຽວກັນຄື: ພະອຸປະຣາດ, ພະໝ່ອມແກ້ວ (ພະຕ່ອນຄຳ), ພະໝ່ອມໄຊ (ວິໄຊ), ເຈົ້າຊົມພູ, ເຈົ້າບຸນຊູ, ເຈົ້າປຸ ແລະ ເຈົ້າສ້ອຍ ພະເຈົ້າສຸລິຍະກຸມມານມີລາຊະບຸດ ແລະ ລາຊະທິດາ 3 ຄົນ ຄື: ເຈົ້າລາຊະບຸດ, ເຈົ້ານາງກຸມມາລີ, ເຈົ້ານາງສຸມັງຄະລາ. ໃນສະໄໝຂອງພະອົງນີ້ໄດ້ມີພວກຫໍ້ທີ່ຢູ່ທາງພາກໃຕ້ໄດ້ລົງມາຕີເອົາເມືອງຊຽງຮຸ່ງ, ແຄວ້ນ 12 ປັນນາລື ເຈົ້າອິນທະກຸມມານຜູ້ປົກຄອງເມືອງຊຽງຮຸ່ງ ໄດ້ພານ້ອງສາວຊື່ ນາງຈັນທະກຸມມາລີ ໜີລົງມາເພິ່ງພະຣາຊາສົມພານ ຂອງ ພະເຈົ້າສຸລິຍະວົງສາ ທຳມິກະຣາດ ທີ່ນະຄອນວຽງຈັນ ເຈົ້າລາຊະບຸດໄດ້ອະພິເສກສົມລົດກັບ ນາງຈັນທະກຸມມາລີ ໄດ້ບຸດ 2 ຄົນ ຄື: ເຈົ້າກິ່ງກິດສະລາດ ແລະ ເຈົ້າອິນທະໂສມ ສ່ວນເຈົ້າອິນທະກຸມມານນັ້ນໄດ້ສົມລົດກັບນາງກໍ່ານມີລູກຊາຍຜູ້ໜຶ່ງຊື່ວ່າເຈົ້າໝ່ອມນ້ອຍ ຫຼື ເຈົ້າອົງນ້ອຍ ພາຍລຸນມາຄົນທັງຫຼາຍເອີ້ນວ່າເຈົ້າອົງນົກ (ເພາະມັກຕໍ່ນົກ) ພະເຈົ້າສຸລິຍະວົງສາ ທຳມິກະຣາດ ສະເຫວີຍລາຊະສົມບັດໃນປີ ຄ.ສ 1638 ແລະ ໄດ້ປົກຄອງອານາຈັກລ້ານຊ້າງມາໄດ້ 57 ປີ ຄື: ມາເຖິງປີ ຄ.ສ 1695 (ຈຸນລະສັກກະຣາດ1057) ກໍ່ສິ້ນພະຊົນດ້ວຍໂລກຊະລາລວມອາຍຸໄດ້ 82 ປີ ແລະ ບໍ່ມີໂອລົດສືບແທນລາຊະບັນລັງ.

## 3. ຄວາມຂັດແຍ່ງພາຍໃນອານາຈັກລາວລ້ານຊ້າງພາຍຫຼັງລາດຊະການຂອງເຈົ້າສຸລິຍະວົງສາ

ອານາຈັກລາວລ້ານຊ້າງນັບແຕ່ກາງສະຕະວັດທີ 14 ເຖິງສະຕະວັດທີ 17 ເປັນອານາຈັກທີ່ມີອານາເຂດກ້ວາງຂວາງ, ອຸດົມສົມບູນມີຄວາມເຂັ້ມແຂງຈະເລີນຮຸ່ງເຮືອງຮອບດ້ານມາເຖິງປີ ຄ.ສ 1638 ມີການແຕກແຍກໃນກຸ່ມສັກດີນາລາວໄດ້ປາກົດຕົວຂຶ້ນ, ແຕ່ຍ້ອນມີກຸ່ມຄົນທີ່ມີກຳລັງເຂັ້ມແຂງພາຍໃຕ້ການນຳພາຂອງເຈົ້າສຸລິຍະວົງສາ ທຳມິກະຣາດ ທີ່ສາມາດກຳຈັດບັນດາກຸ່ມຄົນທີ່ເປັນປໍລະປັກ ຄື ກຸ່ມເຈົ້າບຸນຊູ ແລະ ກຸ່ມຂອງເຈົ້າຊົມພູທັງສອງກໍ່ເປັນອ້າຍນ້ອງຂອງເຈົ້າສຸລິຍະວົງສາ ທຳມິກະຣາດ ພາຍຫຼັງເຈົ້າສຸລິຍະວົງສາສິ້ນພະຊົນ ຄວາມແຕກແຍກພາຍໃນກຸ່ມສັດີນາລາວລ້ານຊ້າງໄດ້ເກີດຂຶ້ນອີກ. ສາເຫດຄວາມແຕກແຍກແມ່ນເກີດມາຈາກຄວາມມັກໃຫຍ່ໃຝ່ສູງ ຍາດແຍ່ງກຳອຳນາດໃນລະຫວ່າງເຊື້ອສາຍ ລາຊະວົງດ້ວຍກັນ ຄວາມແຕກແຍກຂອງກຸ່ມສັກດີນາເຫລົ່ານີ້ ໄດ້ເກີດຂຶ້ນໃນກຸ່ມສັກດີນານະຄອນຫຼວງວຽງຈັນກ່ອນແລ້ວກໍ່ຄ່ອຍທແຜ່ລາມອອກໄປຕາມຫົວເມືອງ

ໃຫຍ່ ໃນທີ່ອອານາຈັກຕາມການຢັ້ງຢືນທາງປະຫວັດສາດ ໃຫ້ຮູ້ວ່າ ເມື່ອເຈົ້າສຸລິຍະວົງສາ ທຳມິກະຣາດ ສິ້ນພະຊົນໃນປີ ຄ.ສ 1695 ນັ້ນແລ້ວບໍ່ມີໃຜທີ່ຈະສືບທອດລາຊະບັນລັງ (ບໍ່ມີລັດຊະທາຍາດ). ພະຍາຫຼວງ ເມືອງຈັນຜູ້ເປັນອັກຄະລະເສນາບໍດີຜູ້ກຳຕຳແໜ່ງທີ່ສຳຄັນເຊັ່ນ: ເປັນຫົວໜ້າຮັກສາຄວາມສະຫງົບຝ່າຍຕຳຫຼວດ, ທະຫານ ແລະ ຝ່າຍພົນລະເມືອງ ພ້ອມທັງເປັນເຈົ້າກົມທ່າຮັບຜິດຊອບການສົ່ງສິນຄ້າອອກ ແລະ ຂົນສົ່ງພາຍໃນພ້ອມນັ້ນຍັງວ່າ ລາຊະການພາຍນອກອີກດ້ວຍພະຍາຫຼວງເມືອງຈັນໄດ້ຢຶດເອົາອຳນາດໄວ້ໃນກຳມື ແລ້ວສະຖາປົນຂຶ້ນເປັນຜູ້ສຳເລັດລາຊະການແຜ່ນດິນ. ໃນປາຍ ເດືອນ ເມສາ ປີຄ.ສ 1695.

ໃນນາມເຈົ້າກິ່ງກິດສະລາດ ແລະ ເຈົ້າອິນທະໂສມ ເຊິ່ງເປັນບຸດຫຼານຂອງເຈົ້າສຸລິຍະວົງສາ ທຳມະກະຣາດ ເປັນຜູ້ທີ່ມີສິດສືບທອດບັນລັງ ທີ່ຖືກຕ້ອງຕາມກົດລາຊະປະເພນີ ແຫ່ງລາຊະວົງລ້ານຊ້າງມາແຕ່ບູຮານ, ແຕ່ເຈົ້າຊາຍທັງສອງ ແມ່ນຢູ່ໃນໄວເຍົາບໍ່ທັນສາມາດ ວ່າລາຊະການແຜ່ນດິນແທນໄດ້ ເມື່ອສະພາບເປັນຄືແນວນັ້ນ ພະຍາເມືອງຈັນຈຶ່ງໄດ້ວາງແຜນໄຕ່ເຕົ້າຂຶ້ນສູ່ການເປັນເຈົ້າແຜ່ນດິນລ້ານຊ້າງ ໂດຍຂໍອະພິເສກ (ສົມຣົດ) ກັບເຈົ້າຍິງສຸມັງຄະລາ ຜູ້ເປັນລູກສາວຂອງເຈົ້າສຸລິຍະວົງສາ ທຳມິກະຣາດ ຜົວຂອງນາງເສຍຊີວິດໄປບໍ່ດົນມານັ້ນ ແລະ ນາງກໍ່ພວມຖືພາຄົນທີສອງຢູ່ ຄຳສະເໜີຂອງພະຍາຫຼວງເມືອງຈັນ ຖືກນາງສຸມັງຄະລາ ປະຕິເສດ ແຕ່ເຈົ້າພະຍາຍັງໄດ້ຕັ້ງຄວາມຫວັງໄວ້ຢູ່ ນາງສຸມັງຄະລາເຫັນວ່າການປະເສດຂອງຕົນ ອາດນຳໄປສູ່ຄວາມເປັນຕາຍ ແລະຍັງເຂົ້າໃຈເລິກໄປກວ່ານັ້ນວ່າ ການຕາຍຂອງຜົວນາງອາດຈະນອນຢູ່ໃນແຜນການນີ້ດ້ວຍ ດັ່ງນັ້ນ, ນາງກໍ່ໄດ້ປຶກສາຫາລືເສນາບໍດີບາງທ່ານທີ່ມີຄວາມຈົ່ງຮັກພັກດີ ຕໍ່ນາງເພື່ອຊອກຫາຊ່ອງທາງແກ້ໄຂບັນຫານັ້ນ ໃນທີ່ສຸດຈຶ່ງໄດ້ເລືອກເອົາຫົນທາງໜີອອກຈາກວຽງຈັນ ໄປອາໄສຄວາມເມດຕາຈາກພະຄູຍອດແກ້ວ ທີ່ວັດໂພນສະເມັກຝ່າຍພະຄູຍອດແກ້ວເຫັນວ່າການທີ່ນາງສຸມັງຄະລາ ພ້ອມດ້ວຍພັກພວກເຂົ້າມາອາໄສ ນຳຕົນນີ້ຄົງບໍ່ພົ້ນອັນຕະລາຍ ແລະ ຕົນກໍ່ຈະພອຍມີເລື່ອງ ໝາງໃຈ ກັບພະຍາຫຼວງເມືອງຈັນອີກດ້ວຍ ເພື່ອລີບຫຼີກຈາກບັນຫານີ້ພະຄູຍອດແກ້ວ ຈຶ່ງໄດ້ຈັດສົ່ງນາງ ແລະ ພັກພວກໄປຢູ່ພູສະງົ້ທຳຄຳ ເມື່ອນາງໄດ້ໄປຢູ່ທີ່ນັ້ນແລ້ວ ນາງສຸມັງຄະລາເກີດລູກຄົນທີສອງ ຊື່ ເຈົ້າໜໍ່ກະສັດ .

ຝ່າຍພະຍາຫຼວງເມືອງຈັນໄດ້ຮູ້ວ່າ ຄວາມມຸ່ງຫວັງຂອງຕົນຖືກປະຕິເສດ ກໍ່ຄຽດແຄ້ນຄິດຈະກຳຈັດນາງເສຍກ່ອນແຕ່ກໍ່ຊ້າໄປແລ້ວ ໃນເມື່ອຮັບຮູ້ວ່ານາງໄດ້ພາພັກພວກຫຼົບຫນີ ອອກຈາກວຽງຈັນ ແລະ ໄດ້ໄປໃສ່ຢູ່ກັບພະຍາຄູຍອດແກ້ວ ທີ່ວັດໂພນສະເມັກ ຈຶ່ງແຕ່ງຄົນໄປສືບຂ່າວ ແລະ ໄດ້ຮັບລາຍງານວ່າ ນາງສຸມັງຄະລາພ້ອມດ້ວຍພັກພວກ ໄດ້ນີອອກຈາກທີ່ນັ້ນໄປແລ້ວ ບໍ່ຮູ້ວ່າໄປຢູ່ແຫ່ງຫົນໃດ, ການກະທຳແບບມັກໃຫຍ່ໄຝ່ສູງຂອງພະຍາເມືອງຈັນ ໄດ້ສ້າງຄວາມບໍ່ພໍໃຈຢ່າງຍິ່ງຕໍ່ກັບບັນດາເສນາມົນຕີ, ຂ້າລາຊະການ ແລະ ປະຊາຊົນຜູ້ຈົ່ງຮັກພັກດີຕໍ່ລາຊະວົງ ຂອງເຈົ້າສຸລິຍະວົງສາ, ເຂົາເຈົ້າເກີດມີຂະບວນ ການວາງແຜນເພື່ອໂຄ່ນລົ້ມພະຍາຫຼວງເມືອງຈັນລົງ. ຈຶ່ງໄດ້ພາກັນເຕົ້າໂຮມກຳລັງຢູ່ ເມືອງພານພູຊົນ ແຫ່ງອຸດອນໂດຍຖືເອົາເຈົ້າຊາຍອົງຫຼໍ່ (ລູກຊາຍຄົນທຳອິດຂອງນາງສຸມັງຄະລາ) ເປັນແກນກາງໃນການນຳພາ.

ເວົ້າລວມແລ້ວພາຍຫຼັງລາຊະການຂອງພະເຈົ້າສຸລິຍະວົງສາທຳມິກະຣາດສິ້ນສຸດລົງອານາຈັກລາວລ້ານຊ້າງທີ່ເຄີຍຈະເລີນຮຸ່ງເຮືອງເຖິງຂີດສຸດກໍ່ກ້າວເຂົ້າສູ່ຄວາມສັບສົນວຸ້ນວາຍເນື່ອງຈາກການຍາດຊີງອຳນາດຂອງສັກດີນາ

ລາວລ້ານລ້ານ ແລະ ບັງດາວົງສານຸວົງ ຈົນກ້າວໄປເຖິງອານາຈັກລາວລ້ານຊ້າງຊຸດໂຊມ ແລະ ແຕກແຍກອອກເປັນ 3 ອານາຈັກ ໃນທີ່ສຸດກໍ່ຕົກເປັນຫົວເມືອງຂຶ້ນຂອງສັກດີນາສະຫຍາມໃນປີ ຄ.ສ 1779.

## 4.ການແຕກແຍກຂອງອານາຈັກລາວລ້ານຊ້າງ

### 4.1. ອານາຈັກລາວລ້ານຊ້າງແຍກເປັນ 2 ອານາຈັກໃນປີ 1707

**ເຈົ້າກິ່ງກິດສະລາດບຸກຕີຫຼວງພະບາງ ປີ 1705**

ຝ່າຍເຈົ້າກິ່ງກິດສະລາດ ແລະ ເຈົ້າອິນທະໂສມ ເຊິ່ງເປັນຫຼານຂອງເຈົ້າສຸລິຍະວົງສາໄດ້ລີ້ໄພອັນຕະລາຍຈາກພະຍາຫຼວງເມືອງຈັນໄດ້ໄປອາໄສຢູ່ເຂດເມືອງຜົ້ງ-ເມືອງລາ ເຂດ 12 ພັນນາລື້ ເຊິ່ງເປັນບ້ານເກີດຂອງແມ່ໂດຍໄດ້ຮັບການອຸປະຖໍາຈາກເຈົ້າເມືອງ 12 ຈຸໄທ ແລະເຈົ້າຄອງແຄ້ວນພວນໄດ້ໃຫ້ການສະໜັບສະໜູນອົງຊາຍທັງສອງພະອົງ. ເຈົ້າກິ່ງກິດສະລາດ ແລະເຈົ້າອິນທະໂສມໄດ້ຕິດຕາມສະພາບວຽງຈັນຢ່າງໃກ້ຊິດ ແລະໄດ້ວາງແຜນຍຶດຫຼວງພະບາງເປັນລາດຊະທານີຂອງຕົນ. ໄດ້ກຽມກໍາລັງ 60.000 ຄົນລົງມາຕີຫຼວງພະບາງ ໃນປີ 1705 ໄດ້ສໍາເລັດເຮັດໃຫ້ເຈົ້ານອງເຈົ້າເມືອງ-ວງພະບາງບໍ່ສມາດຕ້ານທານໄດ້ຈິ່ງອົບພະຍົບລົງມາວຽງຈັນ.

**ການຂຶ້ນຄອງລາດຂອງເຈົ້າກິ່ງກິດສະລາດ ແລະ ການແຍກລ້ານຊ້າງອອກເປັນ 2 ອານາຈັກ ໃນປີ ຄສ 1707**

ເມື່ອເຈົ້າກິ່ງກິດສະລາດແລະເຈົ້າອິນທະໂສມຍຶດໄດ້ຫຼວງພະບາງ, ເຈົ້າກິ່ງກິດສະລາດກໍ່ສະຖາປະນາຕົນເປັນເຈົ້າແຜ່ນດິນຫຼວງບາງ ແລ້ວກໍ່ໄດ້ຈັດລະບຽບການປົກຄອງແຜ່ນດິນແບບເຈົ້າສຸລິຍະວົງສາ. ເປົ້າໝາຍໃນການຍຶດຫຼວງພະບາງແມ່ນການຊິງເອົາທ່າໄດ້ປຽບ ແລະ ປາບປາມກຸ່ມສັກດີນາອື່ນໆ ໃຫ້ຍອມຮັບສັກດີນາຫຼວງພະບາງເປັນໃຈກາງໂດຍສະເພາະແມ່ນສັກດີນາວຽງຈັນ.

**ສົງຄາມລະຫວ່າງຫຼວງພະບາງກັບວຽງຈັນ**

ພາຍຫຼັງທີ່ຈັດການປົກຄອງໄດ້ 1 ປີ ກໍ່ສົ່ງກໍາລັງໄປບຸກຕີວຽງຈັນເພື່ອບັງຄັບໃຫ້ວຽງຈັນຂຶ້ນຕໍ່ຫຼວງພະບາງ ແຕ່ວຽງຈັນບໍ່ຍອມ ຈິ່ງເຮັດໃຫ້ມີສົງຄາມລະຫວ່າງວຽງຈັນ-ຫຼວງພະບາງເຮັດໃຫ້ປະຊາຊົນສູນເສຍຊັບສິນບັດ, ຜົນຜະລິດ ແລະ ແຮງງານໃນການເຮັດສົງຄາມ. ຕ່າງຝ່າຍຕ່າງສູ້ຍັນໂດຍບໍ່ມີຝ່າຍໃດຍອມຈໍານົນ ແຕ່ຜູ້ທີ່ມີຄວາມກັງວົນແມ່ນຝ່າຍເຈົ້າໄຊອົງເຫວ້ ແຫ່ງວຽງຈັນຈິ່ງຂຽນສານໄປຫາເຈົ້າແຜ່ນດິນກຸງສີອາຍຸດທະຍາຈິ່ງເປັນໂອກາດດີໃຫ້ສະຫຍາມແຜ່ອິດທິພົນເຂົ້າລ້ານຊ້າງຈິ່ງຮັບປາກຊ່ວຍເຫຼືອວຽງຈັນ ແຕ່ໃຈໜຶ່ງກໍ່ມີຄວາມກັງວົນວ່າຫຼວງພະ ບາງຈະໄປຂໍຄວາມຊ່ວຍເຫຼືອກັບພະມ້າເຊິ່ງຈະເຮັດໃຫ້ສົງຄາມກວ້າງອອກຈິ່ງໃຊ້ກົນອຸບາຍໃຫ້ສອງຝ່າຍໄກ້ເກ່ຍກັນໂດຍການແບ່ງປັນເຂດປົກຄອງໃນລ້ານຊ້າງເປັນສອງອານາຈັກໃນປີ ຄ.ສ 1707 ຄືລ້ານຊ້າງວຽງຈັນ ແລະລ້ານຊ້າງຫຼວງພະບາງ.

**ຂໍ້ຕົກລົງຮ່ວມກັນໃນການແບ່ງເຂດການປົກຄອງລະຫວ່າງວຽງຈັນ-ຫຼວງພະບາງ**

ເມື່ອທັງສອງຝ່າຍເຫັນຂໍ້ສະເໜີນັ້ນ ແລະ ເປັນທາງອອກທີ່ດີ ໂດຍບໍ່ໄດ້ຄໍານຶງເຖິງກົນອຸບາຍແບ່ງແຍກຂອງສະຫຍາມ ຈິ່ງໄດ້ສົ່ງທູດໄປເຈລະຈາ ແລະຜົນອອກມາກໍ່ຄື:

- ເຂດປົກຄອງຂອງຫຼວງພະບາງຂອງເຈົ້າກິ່ງກິດສະລາດໃຫ້ຖືເອົາຕາມລຳນ້ຳຂອງນັບແຕ່ປາກນ້ຳເຫືອງຂຶ້ນໄປຮອດຜາໄດຜາດ່າງ ທິດເໜືອກວມເອົາຮອດ 12 ຈຸໄທຕໍ່ຊາຍແດນຈີນ ແລຫວຽດນາມ, ທິດຕາເວັນຕົກຕິດກັບແດນພະມ້າ ແລະ ທິດຕາເວັນອອກສ່ຽງເໜືອຮອດ 12 ພັນນາລື້.
- ເຂດປົກຄອງຂອງວຽງຈັນຂອງເຈົ້າໄຊອົງເຫວ້ແຕ່ປາກນ້ຳເຫືອງລົງມາທິດຕາເວັນອອກຕິດກັບສາຍພູແດນຫວຽດ ແຄວ້ນພວນຊຽງຂວາງ ທິດໃຕ້ ຮອດຫຼີ່ຜີກວມເອົາດິນສອງຝັ່ງແມ່ນ້ຳຂອງ ທິດຕາເວັນຕົກຮອດສາຍພູພະຍາພໍ່ດົງພະຍາໄຟ.
- ການແບ່ງເຂດການປົກຄອງຂອງເຈົ້າກິ່ງກິດສະລາດ ແລະເຈົ້າໄຊອົງເຫວ້ໃນປີ ຄ.ສ 1707 ເປັນຂີດໝາຍແຫ່ງການແຍກອານາຈັກວຽງຈັນ ແລະຫຼວງພະບາງ.

**4.2. ອານາຈັກລາວລ້ານຊ້າງໄລຍະແຕກເປັນ 3 ອານາຈັກໃນປີ ຄ.ສ 1713**

**ບົດບາດຂອງພະຄູຍອດແກ້ວກັບເຈົ້າໜໍ່ກະສັດ ແລະ ປະຊາຊົນພາກໃຕ້**

ພະຄູຍອດ ແກ້ວ ແຫ່ງວັດ ໂພນສະເມັກໃຫ້ການອຸ້ມຊູແກ້ເຈົ້າໜໍ່ກະສັດເພື່ອກໍ່ສ້າງຮາກຖານຢູ່ທາງພາກໃຕ້ຂອງອານາຈັກລາວລ້ານຊ້າງຈົນກາຍເປັນອານາຈັກທີ່ເຂັ້ມແຂງຕໍ່ສູ້ກັບວຽງຈັນພະຍູຍອດແກ້ວຖືວ່າເປັນພະສົງທີ່ເປັນຜູ້ຊົງຄຸນນະວຸດທິ, ມີອິດທິພົນເໜືອຈິດໃຈໃນຝ່າຍອົງການພະສົງ ແລະ ຝ່າຍການປົກຄອງບ້ານເມືອງ. ເມື່ອໄປຕັ້ງທັບຢູ່ຈຳປາສັກ ພະຄູຍອດແກ້ວທັງແມ່ນ ຜູ້ນຳຝ່າຍພະສົງ ແລະ ທັງເຮັດໜ້າທີ່ໃນການປົກຄອງ ໄດ້ນຳພາປະຊາຊົນສ້າງສາບ້ານເມືອງ ແລະ ສະຖາປະນາເຈົ້າໜໍ່ກະສັດເປັນເຈົ້າແຜ່ນດິນຈຳປາສັກ. ພະຄູຍອດແກ້ວເປັນບຸກຄົນໜຶ່ງທີ່ຂັດຂວາງການເປັນໃຫຍ່ຂອງພະຍາຫຼວງເມືອງຈັນ ແລະ ເປັນບຸກຄົນທີ່ປະຊາຊົນໃຫ້ການນັບຖື. ສະນັ້ນ, ພະຍາຫຼວງເມືອງຈັນຈຶ່ງຕ້ອງການກຳຈັດພະຄູຍອດແກ້ວ. ແຕ່ພະຄູຍອດແກ້ວຮູ້ຕົວຈຶ່ງຫຼົບໜີຈາກວຽງຈັນລົງມາມາງໃຕ້.

**ເຈົ້າໜໍ່ກະສັດບຸກຕີວຽງຈັນ**

ສ່ວນເຈົ້າໜໍ່ກະສັດເມື່ອເຫັນກຳລັງຂອງວຽງຈັນຖອນມາຮອດວຽງຈັນແລ້ວກໍ່ໄດ້ທຳການປັບປຸງກຳລັງຕົນເອງພ້ອມທັງເຕົ້າໂຮມເອົາປະຊາຊົນເຂດອັດຕະປື, ເມືອງໂຂງ, ຈຳປາສັກ, ເຊໂປນ ແລະ ຄຳເກີດ ກຽມບຸກຕີວຽງຈັນໃນປີ ຄ.ສ 1708 ສ່ວນເຂດທີ່ໝັ້ນຢູ່ພາກໃຕ້ແມ່ນມອບໃຫ້ພະຄູຍອດແກ້ວເປັນຄົນຄຸ້ມຄອງ ແລະໃນປີດຽວກັນນັ້ນກຳລາງຂອງເຈົ້າໜໍ່ກະສັດກໍ່ເຄື່ອນມາຕັ້ງທັບຢູ່ວຽງຄຸກ.

ເມື່ອເຈົ້າໄຊອົງເຫວ້ຊາບຂ່າວກໍ່ຮີບຮ້ອນສົ່ງກຳລັງໄປຕໍ່ຕ້ານຢູ່ທີ່ວຽງຄຸກ ສົງຄາມດຳເນີນໄປຢ່າງດຸເດືອດແລະຮຸນແຮງຈົນກອງທັບວຽງຈັນຖືກຕີຖອຍມາເມືອງຊາຍຟອງໃນທ້າຍປີ ຄ.ສ 1709 ເມື່ອເປັນແນວນັ້ນເຈົ້າໜໍ່ກະສັດກໍ່ຮີບດ່ວນບຸກຍຶດວຽງຈັນແຕ່ບໍ່ສຳເລັດ ຍ້ອນວຽງຈັນມີກຳແພງສູງ ແລະ ແໜ້ນໜາ.

ສ່ວນເຈົ້າໄຊອົງເຫວ້ເຫັນວ່າຕົນຖືກຕີຖອຍກໍ່ຮີບຮ້ອນປັບປຸງກອງທັບ ເຈົ້າໂອ ແລະເຈົ້າບ້ານທ່າຮັບຜິດຊອບຄວາມປອດໄພ ແລະໄດ້ປັບປຸງກຳລັງເຫຼົ່າທັບໃຫ້ເຂັ້ມແຂງ, ຈັດສົ່ງໜ່ວຍກໍ່ກວນໄປສະກັດລັດຕີເກັບເກນເອົາສະບຽງອາຫານຂອງເຈົ້າໜໍ່ກະສັດ ເຮັດໃຫ້ເຈົ້າໜໍ່ກະສັດຂາດສະບຽງອາຫານບວກກັບອາກາດໜ

າວເຢັນໄດ້ກາຍເປັນອຸປະສັກ, ກຳລັງທະຫານຄອນແຄນ ຂາດຄວາມຮັບຜິດຊອບ ສຸດທ້າຍກອງທັບເຈົ້າໜໍ່ກະສັດກໍ່ເປັນຝ່າຍຖອຍທັບມາຕັ້ງຢູ່ພູສະງໍ້ທຳຄຳ.

**ເຈົ້າໜໍ່ກະສັດປະກາດແຍກຈຳປາສັກອອກເປັນອານາຈັກເອກະລາດບໍ່ຂຶ້ນກັບວຽງຈັນ ປີ ຄ.ສ 1713**

ຝ່າຍພະຄູຍອດແກ້ວຜູ້ເຝົ້າຕິດຕາມການເຄື່ອນທັບຂອງເຈົ້າໜໍ່ກະສັດຊາບວ່າເຈົ້າໜໍ່ກະສັດເປັນຝ່າຍປາໄຊຈຶ່ງທຳການປຶກສານຳຜູ້ອາວຸດໂສ ເພື່ອຮຽນເຊີນເຈົ້າໜໍ່ກະສັດ ແລະ ກອງທັບກັບຄືນມາຈຳປາສັກ ແລະອະພິເສກເຈົ້າໜໍ່ຄຳເປັນກະສັດ ແລະ ຕັ້ງສົມຍານາມວ່າເຈົ້າສ້ອຍສີສະໝຸດ ພຸດທະກູນ ພ້ອມທັງປະກາດແຍກຈຳປາສັກບໍ່ຂຶ້ນກັບວຽງຈັນໃນປີ ຄ.ສ 1713 . ເຊິ່ງມີເຂດແດນ ທາງເໜືອ ແຕ່ຍາງສາມຕົ້ນ ອື້ນສາມຂອຍທັກທອດຍອດຍັງ (ສາຍພູສະກົນນະຄອນ) ທິດໃຕ້ ແຕ່ສາມໂບກຕັດໃສ່ນໍ້າແສນຕໍ່ແດນເມືອງສະທຶມກຳປົງສະຫວາຍ (ກຳປູເຈຍ) ແລະ ທິດຕາເວັນຕົກແຕ່ລຳຫ້ວຍຂະຍຸງຕໍ່ແດນເມືອງພິມາຍ.

# ບົດທີ3

## ອານາຈັກລາວລ້ານຊ້າງໃນໄລຍະເສຍເອກະລາດໃຫ້ສະຫຍາມ

# 1.ການຮຸກຮານ ແລະ ຢຶດຄອງອານາຈັກລາວລ້ານຊ້າງຂອງສັກດີນາສະຫຍາມ

### 1.1. ກົນອຸບາຍຮຸກຮານຂອງເຈົ້າຊີວິດກຸງທົນບູລີ

ພາຍຫຼາຍການຂຶ້ນກຳອຳນາດກຸງທົນບູລີພະຍາຕາກສິນກໍໄດ້ມີການພົວພັນສຳພັນທະໄມຕີກັບນະຄອນວຽງຈັນ, ເຊິ່ງເວລານັ້ນເຈົ້າສິລິບຸນຍະສານ ເປັນເຈົ້າຊີວິດແຜ່ນດິນລ້ານຊ້າງວຽງຈັນເລີ່ມຕິດຕໍ່ພົວພັນກັນແຕ່ປີ ຄ. ສ 1769 ຈົນເຖິງປີ ຄ. ສ 1774. ເມື່ອຕົກມາໃນໄລຍະເຈົ້າສິລິບຸນຍະສານໄດ້ມີການປະຕິຮູບການປົກຄອງໃນຕຳແໜ່ງເສນາມົນຕີຜູ້ໃຫຍ່ເນື່ອງຈາກມີເສນາມົນຕີບາງທ່ານແມ່ນຢູ່ໃນໄວສະລາພາບແລ້ວບໍ່ສາມາດຈະປະຕິບັດໜ້າທີ່ລາຊະການໄດ້, ໃນເວລານັ້ນພະວໍຣະຣາດວົງສາ (ເປັນພໍ່ລ້ຽງເຈົ້າສິລິບຸນຍະສານ) ກໍໄດ້ຖືກສັບຊ້ອນໃຫ້ດຳລົງຕຳແໜ່ງເສນາມົນຕີຝ່າຍຊ້າຍ (ຄວາມຈິ່ງແລ້ວພະວໍຣະຣາດວົງສາ ຢາກໄດ້ຕຳແໜ່ງເສນາມົນຕີຝ່າຍຂວາ) ກໍ່ເກີດຄວາມບໍ່ພໍໃຈຈຶ່ງໄດ້ຂັດແຍ່ງກັບເຈົ້າສິລິບຸນຍະສານ ຢ່າງຮ້າຍແຮງໃນທີ່ສຸດພະວໍຣະຣາດວົງສາໄດ້ພາຄອບຄົວ ແລະ ພັກພວກໜີຈາກວຽງຈັນໄປຕັ້ງທີ່ບ້ານໜອງບົວລຸ່ມພູແລ້ວສ້າງບ້ານນັ້ນຂຶ້ນເປັນເມືອງເອີ້ນວ່າ: ຂຶ່ນຂັນກາບແກ້ວບົວບ້ານ ພ້ອມທັງປະກາດເປັນເອກະລາດບໍ່ຂຶ້ນກັບວຽງຈັນ. ເຈົ້າສິລິບຸນຍະສານ ໄດ້ສົ່ງກຳລັງໄປປາບປາມແຕ່ບໍ່ສຳເລັດຈຶ່ງໄດ້ຂຽນສານໄປຫາພະຍານະຄອນລາດຊະສີມາໃຫ້ຍົກກຳລັງມາຊ່ວຍ. ພະວໍຣະຣາດວົງສາ ຈຶ່ງແຕກໜີຈາກໜອງບົວລຸ່ມພູໄປຕັ້ງຫຼັກຢູ່ດອນມົດແດງລ່ອງນ້ຳມູນເຂດຈຳປາສັກ (ອຸບົນປະເທດໄທ) ແລ້ວໄດ້ຂໍເພິ່ງເຈົ້າໄຊຍະກຸມມານ ແຫ່ງອານາຈັກຈຳປາສັກ.

ຮອດປີ ຄ.ສ 1777 ພະວໍຣະຣາດວົງສາ ໄດ້ເກີດຂໍ້ຂັດແຍ່ງກັບເຈົ້າໄຊຍະກຸມມານ ແລະ ໄດ້ກັບຄືນໄປຕັ້ງຢູ່ດອນມົດແດງຄືເກົ່າ. ເຈົ້າສິລິບຸນຍະສານໄດ້ຮັບຂ່າວວວ່າພະວໍຣະຣາດວົງສາກັບໄປຕັ້ງທັບຢູ່ດອນມົດແດງຄືເກົ່າ ແລະ ໄດ້ສານໄປຂໍເປັນຂ້າຮັບໃຊ້ສະຫຍາມ (ພະຍາຕາກສິນ) ອັນຖືວ່າເປັນກະບົດຕໍ່ແຜ່ນດິນລ້ານຊ້າງທີ່ຮ້າຍແຮງທີ່ສຸດຈຶ່ງໄດ້ສົ່ງພະຍຸສຸໂພນຳກຳລັງຈາກວຽງຈັນສົບທົບກັບກອງທັບຈຳປາສັກໄປລ້ອມຈັບພະວໍຣະຣາດວົງສາທີ່ດອນມົດແດງ. ພະວໍຣະຣາດວົງສາ ໄດ້ພາພັກພວກໜີໄປຢູ່ວຽງດອນກອງໃນທີ່ສຸດກຳລັງວຽງຈັນສາມາດຈັບພະວໍຣະຣາດວົງສາ ແລ້ວປະຫານຊີວິດທັນທີ່, ເຫຼືອແຕ່ທ້າວກ່ຳ ແລະ  ພັກພວກໄດ້ລົບໜີລົງໄປບາງກອກຂໍກຳລັງສະຫຍາມເອົາກຳລັງມາຊ່ວຍ. ສ່ວນພະຍາຕາກສິນເຫັນເປັນໂອກາດທີ່ດີຈະຂະຫຍາຍອານາເຂດເຂົ້າສູ່ດິນແດນລ້ານຊ້າງເພື່ອຕັດກຳລັງຂອງພະມ້າ.

**ຂໍ້ອ້າງໃນການຍຶດຈຳປາສັກ:** ແມ່ນເພື່ອປາບກະບົດຢູ່ເມືອງນາງຮອງ (ພະຍານອງ) ທີ່ຂຶ້ນກັບຈຳປາສັກ, ເພິ່ນວ່າເຈົ້າເມືອງນາງຮອງຮ່ວມກັບຈຳປາສັກເປັນກະບົດຕ້ານສັກດີນາສະຫຍາມ (ຝ່າຍຈຳປາສັກແມ່ນເຈົ້າໂອ, ເຈົ້າອິນ, ເຈົ້າອຸປະຮາດ). ສ່ວນເມືອງນາງຮອງແມ່ນພະຍາຮອງໃນການປາບເຂົາເຈົ້າຈັບພະຍານອງໄດ້ແລ້ວເອົາໄປປະຫານຊີວິດ, ແຕ່ຂະບວນຢູ່ຈຳປາສັກຍັງສືບຕໍ່. ສະນັ້ນ, ຈຶ່ງຍົກກຳລັງໄປປາບປາມຢູ່ຈຳປາສັກອີກໃນປີ ຄ. ສ 1776.

### 1.2. ສັກດິນາສະຫຍາມເຂົ້າຮຸກຮານ ແລະ ຍຶດຄອງອານາຈັກລ້ານຊ້າງຈຳປາສັກ ຄ.ສ 1778

ນັກປະຫວັດສາດໄດ້ອະທິບາຍວ່າ: ເມື່ອສະຫຍາມ (ພະຍາຕາກສິນ) ໄດ້ຮັບສານຈາກທ້າວກໍ່າແລ້ວກໍບໍ່ພໍໃຈຢ່າງຍິ່ງຈຶ່ງໄດ້ຖືໂອກາດນີ້ນຳກຳລັງມາຮຸກຮານລ້າງຊ້າງ. ສະຫຍາມໄດ້ເຄື່ອນທັບທັງທາງບົກ ແລະ ທາງນໍ້າ ຄື:

- ❖ ທັບບົກ : ແມ່ນພະຍາມະຫາກະສັດສຶກ (ພະຍາຈັກກຣີ ເປັນຜູ້ທຳອິດທີ່ກໍ່ຕັ້ງລາຊະວົງຈັກກຣີ ປັດຈຸບັນແມ່ນອົງທີ 10), ຊຶ່ງມີກຳລັງພົນເຖິງ 20.000 ກ່ວາຄົນ ໄດ້ເຄື່ອນຜ່ານນະຄອນລາດຊະສີມາ, ເມືອງສຸລິນ, ເມືອງສີສະເກດ ເພື່ອສົມທົບກັບກອງທັບເຮືອທີ່ແດນເມືອງຈຳປາສັກ.
- ❖ ທັບເຮືອ : ແມ່ນນ້ອງຊາຍພະຍາມະຫາກະສັດສຶກ ຊື່ວ່າ ພະຍາສຸລະສີ ມີກຳລັງປະມານ 10.000 ຄົນ ຍົກທັບເຮືອມາທາງຂະແມ ພ້ອມທັງເກນເອົາຂະແມເຂົ້າຮ່ວມຮຸກຮານລ້ານຊ້າງ, ພ້ອມດ້ວຍເຮືອຮົບຂຶ້ນ ມາຕາມລຳນໍ້າຂອງເພື່ອເຂົ້າຍຶດຈຳປາສັກ.

ກອງທັບສະຫຍາມ ເວລານັ້ນປະກອບດ້ວຍຊະເລີຍເສິກສົງຄາມຊາວມອນ, ຊາວລາວ ແລະ ຊາວພະມ້າທີ່ສະຫຍາມໄດ້ກວດຕ້ອນໄປພ້ອມທັງທະຫານຮົບຊ້າງ ແລະ ອາວຸດທີ່ທັນສະໄໝ. ເມື່ອກອງທັບສະຫຍາມທັງສອງກອງໄດ້ສົມທົບຮຽບຮ້ອຍແລ້ວກໍໄດ້ເປີດບັ້ນຮົບຂະໜາດໃຫຍ່ໂດຍການບຸກຍຶດເອົາເມືອງນາງລອງອິກ ພ້ອມດ້ວຍບັນດາເມືອງຕ່າງໆທີ່ຕັ້ງຢູ່ລະຫວ່າງນະຄອນລາດຊະສີມາ ແລະ ຈຳປາສັກທີ່ຕັ້ງຢູ່ເລາະລຽບແມ່ນໍ້າຂອງເຊັ່ນ: ເມືອງວຽງສຸລິນ, ເມືອງອົງຂະ ແລະ ເມືອງຄຸຂັນ, ເມື່ອສາມາດຍຶດເອົາບັນດາເມືອງທີ່ເປັນບໍລິວານຂອງຈຳປາສັກໄດ້ໝົດແລ້ວ,ກອງທັບທຸກພາກສ່ວນໂອ້ບລ້ອມຈຳປາສັກເມື່ອຈຳປາສກຖືກຕີເຂົ້າທັງສອງດ້ານຄືທາງບົກ ແລະ ທາງນໍ້າເຖິງວ່າປະຊາຊົນຈຳປາສັກໄດ້ຕໍ່ສູ້ຕ້ານຄືນຢ່າງພິລະອາດຫານກໍ່ຕາມແຕ່ກໍ່ບໍ່ສາມາດຕ້ານທານຕໍ່ກັບກຳລັງຂອງສະຫຍາມທີ່ມີກຳລັງເໜືອກວ່າໄດ້. ດັ່ງນັ້ນ ເຈົ້າໄຊຍະກຸມມານຈຶ່ງຫຼົບໜີແຕ່ກໍ່ຖືກພວກສະຫຍາມຈັບໄດ້ໃນປີ ຄ.ສ 1778 ແລະ ບັງຄັບໃຫ້ຍອມຈຳນົນ ໃນທີ່ສຸດເຈົ້າໄຊຍະກຸມມານກໍ່ຍອມເປັນເມືອງຂຶ້ນຂອງສັກດິນາສະຫຍາມ. ສະຫຍາມໄດ້ບັງຄັບໃຫ້ເຈົ້າຄອງນະຄອນຈຳປາສັກຊ່ວຍເຫຼືອທາງດ້ານກຳລັງທະຫານ ແລະ ສະບຽງອາຫານ ໃນການເຮັດສົງຄາມກັບອານາຈັກວຽງຈັນ.

### 1.3. ສັກດິນາສະຫຍາມຮຸກຮານ ແລະ ຍຶດຄອງອານາຈັກລ້ານຊ້າງວຽງຈັນປີ ຄ.ສ 1779

**ສະຫຍາມບຸກຕີອານາຈັກວຽງຈັນ.**

ພາຍຫຼັງຍຶດຈຳປາສັກໄດ້ແລ້ວເປົ້າໝາຍຕໍ່ໄປໃນການຍຶດຄອງແມ່ນອານາຈັກວຽງຈັນເຊິ່ງມີເຈົ້າສິລິບຸນຍະສານເປັນຜູ້ປົກຄອງ. ສະຫຍາມໄດ້ມີການກະກຽມກຳລັງ ໂດຍສະເພາະແມ່ນກຳລັງພົນ, ກຳລັງອາວຸດ ແລະ ສະບຽງອາຫານຄື:

- ຈັດຊື້ອາວຸດທີ່ທັນສະໄໝຈາກຊາວຕາເວັນຕົກ.
- ຈ້າງທະຫານຊາວຕາເວັນຕົກຜູ້ທີ່ມີຝີມືມາເຝິກແອບທະຫານສະຫຍາມ.
- ເກນທະຫານເຝິກແອບເພື່ອສະສົມກຳລັງພົນ ໂດຍບັງຄັບໃຫ້ເຈົ້າໄຊຍະກຸມມານແຫ່ງຈຳປາສັກເກນທະຫານ 1 ກອງທັບພ້ອມສະບຽງອາຫານ.

- ບັງຄັບໃຫ້ຂະແມເຝິກແອບທະຫານ ແລະ ເກັບສະບຽງອາຫານເຊັ່ນ: ເຂົ້າ, ຊີ້ນ, ປາ ແລະ ອາຫານແຫ້ງຊະນິດອື່ນໆ.

ຕໍ່ກັບອານາຈັກຫຼວງພະບາງ ສະຫຍາມໄດ້ໃຊ້ເລ່ກົນຕົວະຍົວະເຈົ້າຊີວິດຫຼວງພະບາງດ້ວຍການຂຽນສານສົ່ງເຖິງເຈົ້າສຸລິຍະວົງເຊິ່ງເນື້ອໃນຂອງສານເວົ້າວ່າ "ຖ້າຢາກແກ້ແຄ້ນອານາຈັກວຽງຈັນໃຫ້ຍົກພົນໂຍທາລົງມາຕີວຽງຈັນ" ເຮັດໃຫ້ເຈົ້າສຸລິຍະວົງຫຼົງເຊື່ອເກນຈຳນວນພົນລົງໄປວຽງຈັນເພື່ອຊ່ວຍສະຫຍາມບຸກຕີວຽງຈັນ ແລະ ຫວັງວ່າພາຍຫຼັງຊະນະວຽງຈັນແລ້ວສະຫຍາມຈະມອບໃຫ້ຕົນຂຶ້ນເປັນເຈົ້າປົກຄອງລ້ານຊ້າງທັງສາມອານາຈັກ.  ຍ້ອນທ່າແຮງຄືແນວນັ້ນສະຫຍາມຈຶ່ງຮີບຮ້ອນຈຸດສະນອນສົງຄາມບຸກຕີອານາຈັດວຽງຈັນ.

ຝ່າຍວຽງຈັນເມື່ອຮູ້ຂ່າວວ່າກອງທັບສະຫຍາມສາມາດຢຶດໄດ້ນະຄອນຈຳປາສັກເຈົ້າສີລິບຸນຍະສານກອງຮຽກປະຊຸມປຶກສາຫາລືເພື່ອຕ້ານກັບສະຫຍາມໂດຍມອບໃຫ້ເຈົ້ານັນທະເສນຜູ້ເປັນລູກຊາຍທີ່ດຳລົງຕຳແໜ່ງເປັນມະຫາອຸປະຣາດເປັນແມ່ທັບນຳໜ້າ. ເຈົ້ນັນທະເສນໄດ້ກະກຽມເພື່ອປ້ອງກັນນະຄອນວຽງຈັນ.




ແຜນທີ່ຈຸດທີ່ຕັ້ງຂອງເມືອງວຽງຈັນ ແລະ ບັນດາເມືອງດ່ານການທະຫານປ້ອງກັນເມືອງວຽງຈັນ

ໃນການບຸກຕີອານາຈັກວຽງຈັນ ສະຫຍາມໄດ້ແບ່ງກຳລັງອອກເປັນສອງປີກຄື: ກອງທັບບົກ ແລະ ກອງທັບເຮືອ:

**ກອງທັບທີ 1: ກອງທັບບົກ**

ກອງທັບບົກນຳທັບໂດຍພະມະຫາກະສັດເສີກໄດ້ນຳກຳລັງເຄື່ອນທັບບຸກຍຶດເອົາຫົວເມືອງຕ່າງໆທີ່ຕັ້ງຢູ່ນະຄອນລາດຊະສີມາ ແລະ ວຽງຈັນເຊັ່ນ: ເມືອງໜອງບົວ, ເມືອງພານຊົມພູ, ວຽງພູຂຽວ, ເມືອງພູວຽງ, ເມືອງໜອງຫານນ້ອຍ, ເມືອງພານຊົມພູ ແລະ ນະຄອນພະນົມ. ບັນດາຫົວເມືອງຕ່າງໆກໍ່ໄດ້ພາກັນຕ້ານຄືນແຕ່ກໍ່ບໍ່ສາມາດຮັກສາເມືອງຕົນເອງໄວ້ໄດ້ ເດັ່ນກວ່າໝູ່ແມ່ນຂະບວນການຕໍ່ສູ້ນຳພາໂດຍພະບໍລິມລາຊາກູ່ແກ້ວເຈົ້າເມືອງນະຄອນພະນົມໄດ້ນຳທະຫານ ແລະ ປະຊາຊົນຕໍ່ສູ້ເຕັມກຳລັງເຖິງວ່າຈະບໍ່ສາມາດປ້ອງກັນນະຄອນໄວ້ແຕ່ກໍ່ເຮັດໃຫ້ກຳລັງຂອງສະຫຍາມເສຍຫາຍສົມຄວນ. ເມື່ອຍຶດນະຄອນພະນົມໄດ້ແລ້ວສະຫຍາມກໍ່ເຄື່ອນກຳລັງມາບຸກຕີເຂົ້າບັນດາເມືອງປ້ອມດ່ານໜ້າຂອງວຽງຈັນ ເຊິ່ງເມືອງທຳອິດແມ່ນເມືອງໜອງຄາຍ.

**ກອງທັບທີ2 ແມ່ນກອງທັບເຮືອ**

ກອງທັບເຮືອນຳໂດຍພະຍາສຸລາສີ ເຊິ່ງເປັນກອງທັບທີ່ສະຫຍາມເກນເອົາສະເລີຍເສີກຈາກຂະແມ, ໄດ້ເຄື່ອນກຳລັງບຸກຕີເອົາບັນດາຫົວເມືອງຕ່າງໆທີ່ຕັ້ງຢູ່ແຄມແມ່ນ້ຳຂອງເຊັ່ນ: ເມືອງບັງມຸກ (ມຸກດາຫານ), ເມືອງສີໂຄດຕະບອງ (ຄຳມ່ວນ) ແລະ ເມືອງອື່ນໆ. ເມື່ອຍຶດໄດ້ທັງໝົດບັນດາຫົວເມືອງທີ່ຢູ່ແຄມຂອງສະຫຍາມກໍ່ມຸ້ງໜ້າສູ່ເມືອງໜອງຄາຍເພື່ອສົມທົບກັລກອງກຳລັງຂອງພະຍາມະຫາກະສັດເສີກບຸກຕີໜອງຄາຍ ແລະບັນດາເມືອງປ້ອມດ່ານໜ້າຂອງວຽງຈັນ.

ເມື່ອກອງກຳລັງຂອງສະຫຍາມທັງສອງປີກມາສົມທົບກັນກໍ່ບຸກຍຶດເອົາເມືອງໜອງຄາຍເຮັດໃຫ້ທະຫານ ແລະ ປະຊາຊົນໜອງຄາຍບໍ່ສາມາດຕ້ານທານກຳລັງອັນແຂງແກ່ນຂອງສະຫຍາມໄດ້ຈິ່ງຖອຍກຳລັງມາສົມທົບກັບກອງກຳລັງຫຼວງທີ່ຕັງຢູ່ເມືອງຊາຍຟອງ (ຝັ່ງຊ້າຍຂອງຂອງ).

**ກົນເສິກອັນໂຫດຮ້າຍປ່າເຖື່ອນຂອງສັກດີນາສະຫຍາມ**

ເມືອງກອງທັບຫຼວງຂອງສະຫຍາມທັງສອງກອງມີຈຳນວນພົນຮົບ 40.000 ກວ່າຍຶດໜອງຄາຍ ເປັນປ້ອມໝັ້ນໄດ້ແລ້ວແມ່ທັບ ໃຫຍ່ສະຫຍາມກໍ່ອອກຄຳສັ່ງສະຫຍາມກຳລັງຍຶດເອາເມືອງວຽງຄຸກແລະວຽງພະໂຄເຈົ້າເມືອງທັງສອງໄດ້ນຳພາທະຫານແລະປະຊາຊົນຕໍ່ຕ້ານສະຫຍາມສາມາດປອງກັນເມືອງໄວ້ໄດ້ຢ່າງໜຽວແໜ້ນເຖິງວ່າເມືອງສອງຈະຖືກຕັດຂາດຈາກວຽງຈັນຍອ້ນສູ້ຮົບທາງເຮືອຂອງສະຫຍາມ, ທາງນະຄອນຫຼວງວຽງຈັນຈະສົ່ງກຳລັງໄປຊ່ວຍກໍ່ບໍ່ມີທາງເລີຍ. ແມ່ທັບສະຫຍາມໄດ້ປິດລອ້ມເມືອງຄຸກ ແລະ ວຽງພະໂຄພອ້ມທັງສົ່ງກອງຫຼອນຕີເປັນເວລານານແຕ່ບໍ່ໄດ້ຜົນຕາມຄວາມຕອ້ງການຈິ່ງຫາອຸບາຍຫຼອກໄຫ້ປະຊາຊົນຊາວເມືອງຄຸກ ແລະ ວຽງພະໂຄແຕກຕື່ນເສຍຂວັນດວ້ຍການຈັບເອົາປະຊາຊົນຊາຍ-ຍິງເມືອງໜອງຄາຍຈຳນວນຫຼວງຫຼາຍມາຕັດຄໍ ເອົາຫົວໃສ່ເຮືອເຕັມຫຼາຍລຳແລ້ວໃຫ້ແມ່ຍິງພາຍເຮືອເລາະຂາຍຫົວທະຫານທີ່ຖືກຕັດແມ່ນ້ຳຂອງຮ້ອງປ່າວຂາຍຫົວຄົນຢູ່ຕາມທ່າເຮືອເມືອງວຽງຄຸກວຽງພະໂຄ ເຮັດໃຫ້ທະຫານ ແລະປະຊາຊົນແຕກຕື່ນຢ້ານໄດ້ໜີໄປຟັງພ້າວອັນເປັນການເປີດປະຕູວຽງໃຫ້ສະຫຍາມເຂົ້າໄປຕີເມືອງວຽງຄຸກ ແລະ ວຽງພະໂຄແລ້ວສົ່ງກຳລັງປິດລອ້ມພັນພ້າວຈະຍຶດກໍ່ຍຶດບໍ່ພໍ້ທະຫານຟັງພ້າວ ແລະທະຫານວຽງຈັນໄດ້ປອງກັນເມືອງໄວ້ຢ່າງໜຽວແໜ້ນ. ສະຫຍາມພຍງແຕ່ໄດ້ປິດລອ້ມ ແລະ ຍິງປືນໃຫຍ່ໃສ່ທຸກໆວັນສະພາບການກໍ່ບໍ່ເປັນຕາມຄວາມວັງຂອງ

ສະຫຍາມເພາະວ່າເມືອງພັນພ້າວໄດ້ສະສົມສະບຽງອາຫານໄວ້ພຽງພໍ. ຈົນມາຮອດປີ ຄ.ສ 1779 ສະຫຍາມຈຶ່ງສາມາດຍຶດເມືອງພັນພ້າວໄດ້.

ຝ່າຍ ເຈົ້າສຸລິຍາວົງ (ຫຼວງພະບາງ) ເມື່ອໄດ້ຍິນຂ່າວວ່າກອງທັບສະຫຍາມຍົກທັບມາຕີ ວຽງຈັນກໍ່ໄດ້ແຕ່ງກອງທັບຈຳນວນພົນ 3.000 ກວ່າຄົນລົງມາປິດລ້ອມເມືອງວຽງຈັນທາງດ້ານຫຼັງເພື່ອຕີໜາດຕາມໃບບອກຂອງສະຫຍາມ (ຕາກສິນ) ເພື່ອຫວັງແກ້ແຄ້ນວຽງຈັນ, ອີກແງ່ໜຶ່ງແມ່ນເພື່ອຍຶດເອົາວຽງຈັນຂຶ້ນກັບຫຼວງບາງ. ເມື່ອກອງທັບສະຫຍາມຍຶດເມືອງພັນພ້າວແລ້ວກໍຍ້າຍກອງທັບມາຕັ້ງຢູ່ພັນພ້າວເຊິ່ງໜ້າກັບກຳລັງປ້ອງກັນວຽງຈັນ, ສະຫຍາມໄດ້ພະຍາຍາມສົ່ງກຳຂ້າມມາບຸກຕີວຽງຈັນບໍ່ເວັ້ນແຕ່ລະວັນແຕ່ກໍຖືກກອງທັບ ແລະ ປະຊາຊົນວຽງຈັນຂັບໄລ່ອອກທຸກຄັ້ງ.

ໃນເວລາທີ່ປະເຊີນໜ້າກັບສັດຕູຮຸກຮານນີ້ນະຄອນວຽງຈັນພວມຕົກຢູ່ໃນວິກິດການຮອບດ້ານ, ເພາະສັດຕູປິດລ້ອມໄວດົນເທົ່າໃດຄວາມຫຍຸ້ງຍາກສັບສົນກໍຍິ່ງເພີ່ມຂຶ້ນເລື້ອຍໆເຊັ່ນ: ໄພອຶດຫິວພະຍຸລະບາດ, ສັດຕູສົ່ງກຳລັງມາປຸ້ນຈີ້ເອົາສະບຽງອາຫານ, ຍິງປືນໃຫຍ່ເຂົ້າກຳແພງເມືອງບໍ່ຂາດເຮັດໃຫ້ຂາດຄວາມສະຫງົບເຮັດໃຫ້ປະຊາຊົນບໍ່ມີເວລາອອກໄປຊອກຢູ່ຫາກິນ, ເມື່ອເຫັນສະພາບການເປັນແນວນັ້ນສະຫຍາມຈຶ່ງໄຊ້ກຳລັງຂະໜາດໃຫຍ່ປິດລ້ອມນະຄອນຫຼວງວຽງຈັນໄວ້ເກືອບທຸກດ້ານເຫຼືອພຽງແຕ່ທາງແມ່ນ້ຳຂອງໃຫ້ກອງທັບເຮືອລາດຕະເວນໃນເວລາການເວັນເທົ່ານັ້ນ.

ເມືອງປ້ອມດ່ານໜ້ານະຄອນຫຼວງວຽງຈັນເວລານັ້ນແມ່ນເມືອງຊາຍຟອງເຖິງວ່າກຳລັງຈະໜ້ອຍກ່ວາອາວຸດກໍເປັນແບບພື້ນເມືອງແຕ່ກໍສາມາດຕ້ານການບຸກລຸກຂອງສະຫຍາມຮັກສານະຄອນໄວ້ໄດ້ດົນນານ, ສະຫຍາມກໍບໍ່ສາມາດຍຶດນະຄອນຫຼວງໄດ້ຢ່າງງ່າຍໆຕາມຄວາມຄາດຄະເນໄວ້, ສະຫຍາມຈຶ່ງສັ່ງໃຫ້ກອງທັບເຮືອລຳລຽງເອົາທະຫານທີ່ຢູ່ຝັ່ງໜອງຄາຍ, ວຽງຄຸກ, ວຽງພະໂຄ ມາເພີ່ມຕື່ມ.

ສ່ວນກອງທັບເມືອງຊາຍຟອງເຫັນຝ່າຍຂ້າເສິກສົ່ງກອງທັບມາຕື່ມເລື້ອຍໆເຫັນທີ່ຈະປ້ອງກັນເມືອງບໍ່ໄຫວຈຶ່ງອົບພະຍົບຄອບຄົວປະຊາຊົນເຂົ້າໄປຢູ່ໃນກຳແພງນະຄອນວຽງຈັນ ມີແຕ່ທະຫານເທົ່ານັ້ນທີ່ທຳການສູ້ຮົບຈົນສຸດຄວາມສາມາດຈຶ່ງຖອຍມາສົມທົບກັບກຳລັງປ້ອງກັນນະຄອນຫຼວງ, ເມື່ອເສຍເມືອງຊາຍຟອງເຈົ້າສິລິບຸນຍະສານ ໄດ້ໃຫ້ມະຫາອຸປະຮາດ (ເຈົ້ານັນທະເສນລູກຊາຍ) ຈັດການປ້ອງກັນນະຄອນວຽງຈັນອັນເປັນຂັ້ນສຸດທ້າຍ. ເຈົ້ານັນທະເສນ ໄດ້ຈັດຕັ້ງທະຫານເຂົ້າປະຈຳກຳແພງເມືອງທັງສອງຊັ້ນໂດຍສະເພາະແມ່ນກຳແພງເມືອງຊັ້ນໃນຖືວ່າສຳຄັນທີ່ສຸດ, ເຈົ້ານັນທະເສນ ນຳພາທະຫານ ແລະ ປະຊາຊົນຕ້ານສັກດີນາສະຫຍາມເປັນເວລາ 4 ເດືອນກ່ວາ ກອງທັບສະຫຍາມກໍ່ໄດ້ຮັບຄວາມເສຍຫາຍ ບາດເຈັບຫຼາຍສົມຄວນ. ເມື່ອເຈົ້າສິລິບຸນຍະສານ ເຫັນວ່ານະຄອນຫຼວງວຽງຈັນຢູ່ໃນທ່າທີ່ຈະບໍ່ສາມາດປ້ອງກັນຕົນເອງໄວ້ໄດ້ຈຶ່ງໄດ້ຫຼົກໜີອອກວຽງຈັນໃນເວລາກາງພ້ອມດ້ວຍຄອບຄົວ ແລະ ພັກພວກທີ່ໃກ້ຊິດໃຊ້ເຮືອລ່ອງໄປຕາມລຳນ້ຳຂອງມຸ້ງໜ້າໄປສູ່ເມືອງຄຳເກີດໂດຍບໍ່ໃຫ້ເຈົ້ານັນທະນັນຮູ້ເລີຍ. ກອງທັບສະຫຍາມເມືອງຍຶດເມືອງຊາຍຟອງໄດ້ກໍທຳການປິດລ້ອມວຽງຈັນເພື່ອບັງຄັບໃຫ້ເຈົ້າສິລິບຸນຍະສານ ອອນນ້ອມຍອມເປັນເມືອງຂຶ້ນ. ກອງທັບສະຫຍາມປິດລ້ອມວຽງຈັນໄວເຖິງ 4 ເດືອນກໍບໍ່ສາມາດຍຶດວຽງຈັນໄດ້. ດັ່ງນັ້ນ, ສະຫຍາມຂຶ້ນມາໃຊ້ກົນອຸບາຍທີ່ເຄີຍໃຊ້ໄດ້ຜົນມາແລ້ວໃນການຍຶດ

ເມືອງພະໂຄ ແລະ ວຽງຄຸກ. ເມື່ອເຫັນສະພາບການແຕກຕື່ນ ສະຫຍາມຈຶ່ງສັ່ງລະດົມກຳລັງບຸກໂຈມຕີວຽງຈັນທຸກດ້ານ, ແຕ່ກອງທັບວຽງຈັນເຊິ່ງນຳໂດຍເຈົ້ານັນທະເສນ ກໍໄດ້ນຳພາຕ້ານສະຫຍາມຢ່າງອົງອາດກ້າຫານ, ເມື່ອຮູ້ຂ່າວວ່າ ຜູ້ເປັນພໍ່ລີ້ບໜີຈາກນະຄອນຫຼວງໄປແລ້ວກໍຕົກຢູ່ໃນສະພາບຂາດກຳລັງໃຈ. ເຖິງຢ່າງໃດກໍຕາມການສູ້ຮົບຕ້ານການຮຸກຮານກໍຍັງດຳເນີນຕໍ່ໄປສາມາດຮັກສານະຄອນວຽງຈັນໄວ້ໄດ້ຫຼາຍວັນ. ຈົນຮອດເດືອນສິບແຮມສາມຄ່ຳ ປີ ຄ. ສ 1779 ເຈົ້ານັນທະເສນຈຶ່ງສັ່ງໃຫ້ໄປໄຂປະຕູວຽງທຸກດ້ານ ສັ່ງໃຫ້ທະຫານວາງອາວຸດ ປ່ອຍໃຫ້ກອງທັບສະຫຍາມລຸງລັ່ງເຂົ້ານະຄອນວຽງຈັນ.




ແຜນທີ່ສະແດງເຖິງທີ່ຕັ້ງກຳແພງປ້ອງກັນເມືອງວຽງຈັນ

## 2.ການກອບກູ້ເອກະລາດຂອງປະຊາຊົນລາວພາຍໃຕ້ການນຳພາຂອງເຈົ້າອານຸວົງ

### 2.1. ຫຍໍ້ຂອງເຈົ້າອະນຸວົງ

ເຈົ້າອະນຸວົງເປັນໂອຣົດອົງທີ 4 ຂອງເຈົ້າສິລິບຸນຍະສານ ເກີດເມື່ອ ປີ ຈ.ສ 1129 ກົງກັບ ປີ ຄ.ສ 1767 ທີ່ພະລາດຊະວັງນະຄອນຫຼວງວຽງຈັນແລະ ຖືກຈັບເປັນອົງປະກັນໃນ ປີ ຄ.ສ 1779 (ໃນຂະນະທີ່ມີອາຍຸ 11 ປີ) ປີ ຄ.ສ 1794 ພະອົງຖືກສະຫຍາມແຕ່ງຕັ້ງເປັນມະຫາອຸປະຣາດ. ພາຍຫຼັງທີ່ເຈົ້າອິນທະວົງສິ້ນພະຊົນໃນປີ 1803 ສະຫຍາມກໍ່ແຕ່ງຕັ້ງເຈົ້າອະນຸວົງເປັນກະສັດຄອງລາດຢູ່ວຽງຈັນ ມີສົມຍານາມວ່າ ເຈົ້າໄຊເຊດຖາທິລາດ 3. ຮອດ 1826 ເຈົ້າອະນຸວົງກໍ່ທຳການກອບກູ້ເອກກະລາດ ຈາກສະຫຍາມ ແຕ່ບໍ່ປະສົບຜົນສຳເລັດພ້ອມທັງຖືກສະຫຍາມຈັບໄປທໍລະມານທີ່ບາງກອກ ແລະໄດ້ສິ້ນພະຊົນໃນປີ ຄ.ສ 1829 ລວມອາຍຸ 62 ປີ. ພະອົງມີ

ໂອຣົດ ແລະ ພະທິດາທັງໝົດ 20 ພະອົງບ (ໂອຣົດ 18 ພະອົງ ແລະ ທິດາ 2 ພະອົງ) ເຊິ່ງມີລາຍຊື່ລະອຽດລຸ່ມນີ້:

1. ເຈົ້າສຸດທິສານ (ເຈົ້າໂປ້)
2. ເຈົ້າລາດຊະວົງ (ເຈົ້າເຫງົ້າ)
3. ເຈົ້າລາດຊະບຸດ (ເຈົ້າໂຍ້)
4. ເຈົ້າແຕ້
5. ເຈົ້າບັນ
6. ເຈົ້າດວງຈັນ
7. ເຈົ້າຄຳແພງ
8. ເຈົ້າໝູຈີນ
9. ເຈົ້າປານ
10. ເຈົ້າສຸວັນນະຈັກ
11. ເຈົ້າຍິງຄຳວັນ
12. ເຈົ້າຍິງຊຽງຄຳ
13. ເຈົ້າໄຊຍະສານ
14. ເຈົ້າເສືອ
15. ເຈົ້າເໝັ້ນ
16. ເຈົ້າຊ້າງ
17. ເຈົ້າອຶ່ງຄຳ
18. ເຈົ້າຂັດຕິຍະ
19. ເຈົ້າພຸດທະຊາດ
20. ດີສະພົງ

## 2.2. ອານາຈັກລາວລ້ານຊ້າງໃນລາດຊະການຂອງເຈົ້າອະນຸວົງ

### 1) ການປັບປຸງ ແລະ ການສ້າງສາອານາຈັກຄືນໃໝ່

ພາຍຫຼັງທີ່ຂຶ້ນຄອງລາດໃນປີ ຄ.ສ 1804 ເຈົ້າອະນຸວົງຮ່ວມກັບປະຊາຊົນໄດ້ທຳການປັບປຸງ ແລະ ສ້າງສາອານາຈັກຄືນໃໝ່ ເພື່ອສວຍໂອກາດປເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມປະຊາຊົນ:

**ກ ການບູລະນະອານາຈັກ**

- **ບູລະນະພະລາດຊະວັງ**
- **ສ້ອມແປງວັດສີບຸນເຮືອງທີ່ເມືອງໜອງຄາຍ**
- **ບູລະນະສ້ອມແປງພະທາດພະນົມ**

– **ສ້າງຂົວຂ້າມນ້ຳຂອງທີ່ວຽງຈັນ**

– **ສ້ອມແປງຫໍພະແກ້ວທີ່ນະຄອນຫຼວງວຽງຈັນ**

– **ສ້າງວັດສີສະເກດ ແລະ ຫໍໄຕທີ່ນະຄອນຫຼວງວຽງຈັນ**

**ຂ ດ້ານການທະຫານ**

ກອງທັບລາວໄດ້ຮັບການປັບປຸງຈົນໄດ້ຮັບການຍ້ອງຍໍວ່າເປັນກອງທັບທີ່ເຂັ້ມແຂງເຊິ່ງແບ່ງເປັນ 4 ກອງທັບໃຫຍ່ຄື:

- ກອງທັບເຈົ້າສຸດທິສານໂປ້
- ກອງທັບເຈົ້າອຸປະຮາດຕິດຊະ
- ກອງທັບລລາດຊະບຸດໂຍ້
- ກອງທັບເຈົ້າລາດຊະວົງເຫງົ້າ ນອກນີ້ຍັງກະກຽມກຳລັງຂອງຊາຍສະກັນ, ພາຫະນະ, ອາວຸດ ແລະ ສະບຽງອາຫານໃນການເຮັດສົງຄາມ.

2) **ການເມືອງ-ການປົກຄອງ**

**ການປັງປຸງການປົກຄອງຂັ້ນສູນກາງ**: ໄດ້ມີການຈັດຕຳແໜ່ງຂຸນນາງໃນລາດຊະສຳນັກຄືນໃໝ່:

- ແຕ່ງຕັ້ງອຸປະຮາດຕິດຊະເປັນມະຫາອູປະຮາດ
- ແຕ່ງຕັ້ງເຈົ້າໂປ້ເປັນເຈົ້າສຸດທິສານເຊິ່ງເປັນຕຳແໜ່ງພິເສດທີ່ມີໃນລາດຊະການຂອງເຈົ້າອະນຸວົງມີ ອຳນາດທາງການທະຫານ ແລະ ການປົກຄອງ.
- ເຈົ້າເຫງົ້າເປັນເຈົ້າລາດຊະວົງ
- ເຈົ້າໂຍ້ເປັນເຈົ້າຮາດຊະບຸດ

**ການປັບປຸງການປົກຄອງຂັ້ນທ້ອງຖິ່ນ:** ເມືອງພວນຖືວ່າເປັນເມືອງທີ່ບໍ່ເຂັ້ມແຂງ. ສະນັ້ນ, ເຈົ້າອະນຸວົງ ຈຶ່ງເອົາໃຈໃສ່ໃນການປັບປຸງເປັນພິເສດ ແລະ ແຕ່ງຕັ້ງເຈົ້ານ້ອຍໄປປົກຄອງພ້ອມທັງໃຫ້ສຳຫຼວດພົນ ຈັດສຳມະໂນຄົນໃຫມ່ຮອດປີ ຄ.ສ 1823 ເຈົ້ານ້ອຍຖືກກ່າວຫາວ່າເປັນກະບົດຢາກແຍກຈາກວຽງຈັນຈຶ່ງນຳຕົວເຈົ້ານ້ອຍໄປກັກຂັງບໍລິເວນຢູ່ວຽງຈັນ. ຮອດປີ ຄ.ສ 1826 ເຈົ້າອະນຸວົງຈຶ່ງສົ່ງເຈົ້ານ້ອຍກັບເມືອປົກຄອງເມືອງພວນ ພ້ອມທັງມອບລູກສາວໄປເປັນຊາຍາ.

**ການພົວພັນກັບອານາຈັກອ້ອມຂ້າງ**

❖ **ນະໂຍບາຍພາຍໃນ**

**ອານາຈັກຫຼວງພະບາງ**: ວຽງຈັນ ແລະ ຫຼວງພະບາງເຄີຍມີບັນຫາສະໄໝເຈົ້ານັນທະເສນ. ມາຮອດປີ ຄ.ສ 1819 ເຈົ້າອະນຸວົງໄດ້ສົ່ງທູນໄປເຈລະຈາພ້ອມທັງສົ່ງເຮືອຄຳ 2 ເຫຼັ້ມ ໃຫ້ເຈົ້າ ມັນທາຕຸລາດ. ເຈົ້າອະນຸວົງໄດ້ສົ່ງສານໄປຫຼາຍຄັ້ງພ້ອມທັງຊ້າງສູງທີ່ມີສະຫຼຽງຄຳ ໃນສານເຈົ້າອະນຸວົງຂຽນໄປມີເນື້ອໃນວ່າ: ພວກເຮົາຈົ່ງຮ່ວມມື

ກັນເພື່ອບໍ່ໃຫ້ເມືອງລາວຂຶ້ນກັບສະຫຍາມ ພາຍຫຼັງທີ່ທ້ອນໂຮມສຳເລັດ ແລະ ເຈົ້າອະນຸວົງຈະມອບໃຫ້ເຈົ້າມັນທາຕຸລາດປົກຄອງສ່ວນຕົນຈະອອກບວດ, ເຮັດໃຫ້ວຽງຈັນ-ຫຼວງພະບາງຫຼຸດຜ່ອນຄວາມຕຶງຄຽດລົງ.

❖ **ນະໂຍບາຍພາຍນອກ**

**ອານາມ**: ເວລານັ້ນອານາມກັບສະຫຍາມຂັດແຍ່ງກັນ ສະນັ້ນ, ເຈົ້າອະນຸວົງຈຶ່ງພົວພັນກັບອານາມເພື່ອຕ້ານສະຫຍາມ. ເຈົ້າອະນຸວົງໄດ້ສົ່ງສານ ແລະ ເຄື່ອງບັນນາການ. ສ່ວນອານາມກໍ່ຕອບແທນບັນນາການແຕ່ອານາມກໍ່ຕ້ອງການເປັນໃຫຍ່ຈຶ່ງຕ້ອງໃຫ້ເມືອງພວນ ແລະ ວຽງຈັນເສຍສ່ວຍໃຫ້.

**ຜູກສຳພັນກັບສະຫຍາມ:** ເຈົ້າອະນຸວົງດຳເນີນກົນອຸບາຍເອົາໃຈສັກດີນາສະຫຍາມ ໂດຍສະເພາະແມ່ນລາດຊະການພະພຸດທະເລີດຫຼ້ານະພາໄລ. ໃນປີ ຄ.ສ 1812 ພະພຸດທະເລີດຫຼ້ານະພາໄລ.ໄດ້ຂຽນສານມາຫາເຈົ້າອະນຸວົງເນື້ອໃນສານໄດ້ສະແດງເຖິງຄວາມສະໜິດສະໜົມລະຫວ່າງສອງພະອົງ. ນັບແຕ່ປີ ຄ.ສ 1812-1816 ເຈົ້າອະນຸວົງໄດ້ສົ່ງຊ້າງເຖິງສອງຄັ້ງພ້ອມທັງສືບຕໍ່ປະຕິບັດຕາມຄຳສັ່ງໃນການເສຍພາສີ, ເສຍສ່ວຍ, ເສຍພັນທະບັນນາການເພື່ອໃຫ້ສະຫຍາມຕາຍໃຈ.

- **ວຽກງານດ້ານແນວຄິດ**

ວຽກງານແນວຄິດເປັນວຽກງານໜຶ່ງທີ່ສຳຄັນເຈົ້າອະນຸວົງໄດ້ເອົາໃຈໃສ່ປຸກລະດົມຂົນຂວາຍປະຊາຊົນໃຫ້ມີຈິດສຳນຶກວ່າຫົວເມືອງລາວເສຍເອກະລາດໃຫ້ສະຫຍາມແລ້ວ. ສະນັ້ນ, ປະຊາຊົນລາວຕ້ອງຮ່ວມມືກັນຕໍ່ສູ້ຍາດເອກະລາດຄືນມາ. ໃນໄລຍະເສຍເອກະລາດເຈົ້າອະນຸວົງບໍ່ສາມາດຕໍ່ສູ້ແບບເປີດເຜີຍໄດ້ຕ້ອງເຮັດແບບປິດລັບ. ສານລຶບພະສູນເປັນສານທີ່ຂຽນຂຶ້ນໃນສະໄໝເຈົ້າອະນຸວົງ ບໍ່ລະບຸຊື່ຜູ້ແຕ່ງ ແຕ່ສັນນິຖານວ່າອາດຈະແມ່ນເຈົ້າອະນຸວົງເປັນຜູ້ແຕ່ງ. ສານລຶບພະສູນແມ່ນບົດວັນນະກຳປະຫວັດສາດທີ່ບໍ່ລະບຸຊື່ຜູ້ແຕ່ງເປັນສານທີ່ຂຽນເຖິງປະຊາຊົນລາວເພື່ອປຸກລະດົມຈິດສຳນຶກໃຫ້ກອບກູ້ເອກະລາດ. ສານໄດ້ປຽບເອກະລາດດັ່ງດວງແກ້ວມະນີປະເສີດທີ່ສູນເສຍໄປ ແລະ ຢາກໄດ້ກັບຄືນມາຜັດສີໃຫ້ມີລັດສະໝີຜ່ອງໃສ ແລະ ປຽບຄວາມຮັກຂອງຜູ້ຂຽນກັບປະຊາຊົນຄືກັບຄວາມຮັກລະຫວ່າງບ່າວສາວ ເພື່ອປິດບັງສະຫຍາມ ແລະ ປ້ອງກັນບໍ່ໃຫ້ສະຫຍາມຈັບໄດ້. ຜູ້ແຕ່ງມີຈຸດປະສົງລະດົມປະຊາຊົນກອບກູ້ເອກະລາດ.

ສິ່ງທີ່ທຸກຄົນສັນນິຖານວ່າອາດຈະແມ່ນເຈົ້າອະນຸວົງຂຽນສານນີ້ກໍ່ຍ້ອນຜູ້ຂຽນບອກວ່າຕົນຢູ່ໃນໂຮງຜາສາດທີ່ຢາກໄດ້ໜ່ວຍແກ້ວມາຜັດສີໃຫ້ເຫຼື້ອມໃສ ປະເທດຊາດບໍ່ມີເອກະລາດກະປຽບຄືແກ້ວມະນີບໍ່ໄດ້ຜັດ ແລະ ຈະກາຍເປັນຫີນແຮ່. ການສະແຫວງຫາແກ້ວກໍ່ຄືການສະແຫວງຫາເອກະລາດໃນໃຈກໍ່ຢາກໄປຂໍຄວາມຊ່ວຍເຫຼືອຈາກເພື່ອນມິດແຕ່ບອກແບບປິດບັງ ແລະ ບໍ່ໃຫ້ບອກໃຫ້ຊາວຕ່າງດ້າວຮູ້ນຳ ດັ່ງເນື້ອໃນສານບາງຕອນ.

| | |
|---|---|
| ໂອນໍ ສານນີ້ຊື່ວ່າສົມທີ່ຄິດຄວນຄ່າລ້ານ | ມະນີສີດວງປະເສີດ |
| ຈັກຂອດໂຮງຕ່ອນຕີ | ຖະໜອມແກ້ວຄ່າເມືອງ |
| ວ່າຢາກ ພາຍພົນລ້ອມ | ມະຫານິນຮຽງຜ່າງ |

| | |
|---|---|
| ແສງອ່ອນອ້ອນ | ພິລາເຂັ້ມເຮື່ອເຮືອງ |
| ຮຽມຢາກ ໄປວານຝູງພີ່ນ້ອງ | ວິງວານໃຫ້ມາຊ່ວຍ ຊິຕືລີ |
| ທັງໝູ່ຫໍ້ | ກະເລີງພ້ອມພໍ່າແກວ |
| ເຊີນແມ ມາຊ່ວຍຜັດສີແກ້ວ | ທໍາມະໂລງໃຫ້ແຈ້ງຮຸ່ງ ແນ່ທ້ອນ |
| ຫຼອນວ່າ ບຸນສິ່ງໃຫ້ | ແສງເທົ້າທົ່ວເມືອງບໍ່ຮຸ່ງ |
| ຮຽມຢາກ ຂັດໜ່ວຍແກ້ວ | ມີຄ່າແສນຄໍາ ພຸ້ນນາ |
| ປຽບປຸນ ທໍາມະໂລງ | ໃຫ້ຮຸ່ງເຮືອງເມືອງຟ້າ |
| ມະນີໂຊກແກ້ວ | ເຮືອງແສງໃສຮຸ່ງ |
| ຫີນແຮ່ ຕົກສະແງ່ເງື້ອມ | ເກົາທີ້ນຂູດທອງ |

ເຊິ່ງສໍານວນຄວາມເວົ້າໃນບົດກະວີນີ້ບົ່ງບອກວ່າຜູ້ແຕ່ງເປັນເຈົ້າປົກຄອງທີ່ມີສິດເບີກຈ່າຍເງິນຄໍາໃນຫໍໂຮງທັງໝົດ ເພື່ອແລກເອົາແກ້ວມະນີດັ່ງຄໍາວ່າ  ຈັກຂອດໂຮງຕ່ອນຕື   ຖະໜອມແກ້ວຄ່າເມືອງ ນອກຈາກນີ້ຜູ້ແຕ່ງຍັງມີສິດອໍານາດຈະໄປຂໍຄວາມຊ່ວຍເຫຼືອຈາກປະເທດເພື່ອນມິດເຊັ່ນ: ຈີນ, ພະມ້າ ແລະ ຫວຽດນາມໃຫ້ມາຊ່ວຍກູ້ເອກະລາດດັ່ງຄໍາວ່າ

| | |
|---|---|
| ຮຽມຢາກ ໄປວານຝູງພີ່ນ້ອງ | ວິງວານໃຫ້ມາຊ່ວຍ ຊິຕືລີ |
| ທັງໝູ່ຫໍ້ | ກະເລີງພ້ອມພໍ່າແກວ |

ແຜນການກອບກູ້ເອກະລາດຖືເປັນລະຫັດຄືຄວາມລັບສຸດຍອດ ເປັນເລື່ອງຄໍ່ຂາດບາດຕາຍ ຫາກອໍານາດການປົກຄອງຂອງສະຫຍາມຈັບໄດ້ກໍ່ຈະຖືກລົງໂທດຢ່າງໜັກທີ່ສຸດ ແຕ່ຫາກບໍ່ໄຂລະຫັດ(ບໍ່ບອກໃຫ້ໃຜຮູ້) ເພື່ອຈະກອບກູ້ເອກະລາດດໍາເນີນໄປໄດ້ ຈະໄຂລະຫັດນີ້ແກ່ໃຜ? ຜູ້ແຕ່ງກະວີ ໄດ້ຄິດຫງຸ່ຫງ່າງວກັບເລື່ອງນີ້ໜັກໜ່ວງຫາກເປີດເຜີຍແກ່ບຸກຄົນຊັ້ນສູງ (ປຽບດັ່ງຜົມຢູ່ຫົວ) ກໍ່ຢ້ານເຂົາໄປບອກແກ່ໄມ້ມືຂອງສະຫຍາມ (ປຽບດັ່ງແຂ້ວ) ແລ້ວສະຫຍາມກໍ່ຈະມາປາບ ຫາກຈະເປີດເຜີຍແກ່ຄົນອ້ອມຂ້າງ (ປຽບດັ່ງຫູ ຕາດັງ ແຂນ ແລະ ເສື້ອຜ້າ) ຫາກຄົນພວກນີ້ຮັກສາຄວາມລັບບໍ່ໄດ້ກໍ່ຈະເປັນອັນຕະລາຍຄືກັນ. ດ້ວຍເຫດນີ້ຜູ້ແຕ່ງກະວີຈຶ່ງບໍ່ໄດ້ເປີດເຜີຍແກ່ໃຜ ໄດ້ຂຽນເປັນລະຫັດໄວ້ເພື່ອໃຫ້ຜູ້ອ່ານໄປຄົ້ນຄິດຕີຄວາມໝາຍເອົາເອງ. ຫາກຕີຄວາມໝາຍແລ້ວກໍ່ຢ່າໄດ້ບອກໃຫ້ໝູ່ເພື່ອນທີ່ເປັນຕ່າງດ້າວທ້າວຕ່າງແດນຮູ້ (ຄົນໃກ້ຕ່າງແຊງ) ດັ່ງເນື້ອໃນກະວີຕໍ່ໄປນີ້:

| | |
|---|---|
| ເມື່ອຈັກໄຂລະຫັດໄດ້ | ດອມຜົມພົ້ນສ່ວນ ໄປນັ້ນ |
| ຄັນວ່າໄຂຕໍ່ແຂ້ວ | ມັນຊິຮູ້ຢາກກິນ |
| ເມື່ອຈັກໄຂຕໍ່ຫູສອງກໍ້າ | ກໍ່ລົມພານພັດອອກ ໄປນັ້ນ |

| | |
|---|---|
| ເມື່ອຊິເວົ້າຕໍ່ໜ້າ | ຕາຊ້າຍກໍ່ເຫຼືອແລ |
| ເມື່ອຈະໄຂລະຫັດໃຫ້ | ດອມແຂນຊິຖ້ອມຖ່ອງ ໄປນັ້ນ |
| ມັນຈັກລະຖິ້ມໄວ້ | ເໜືອໃຕ້ທ່າເທິງ ບໍ່ຮູ້ |
| ເມື່ອຈັກໄຂຕໍ່ດັງສອງກໍ້າ | ກໍ່ກົວຈາມຟົ້ງເຟື່ອນ ໄປ ແລ້ວ |
| ເມື່ອຈັກໄຂຕໍ່ເສື້ອ | ກໍ່ຊົງເມັນຊົງເຮືອດ |
| ຄັນບໍ່ເປັນດັ່ງເຮົາເວົ້າ | ນອນກາງຄືນໃຫ້ເຈົ້າສ່ຽງ ເອົາເນີ |
| ຢ່າໄດ້ເວົ້າຕໍ່ເຊື້ອ | ຄືນໃກ້ຕ່າງແຊງ... |

**ເຈົ້າອະນຸວົງທ້ອນໂຮມເອົາເມືອງຕ່າງໆຂຶ້ນກັບວຽງຈັນ**

**ການເຕົ້າໂຮມເອົາຈຳປາສັກມາຂຶ້ນກັບວຽງຈັນ:** ຢູ່ຈຳປາສັກເກີດມີຂະບວນຕໍ່ຕ້ານສະຫຍາມນຳໂດຍພະສາ ກຽດໂງ້ເຊິ່ງເປັນຄົນວຽງຈັນທີ່ກອດຕ້ອນໄປສະລະບູລີທີ່ອອກບວກ ແລະ ສິກອອກມາໂຮມກຳລັງຢູ່ພູກຽດໂງ້ ໃນປີ ຄ.ສ 1817 ປະຊາຊົນຢູ່ພາກໃຕ້ກໍ່ເຂົ້າຮ່ວມຂະບວນການ. ເມື່ອເປັນແນວນັ້ນເຈົ້າໝານ້ອຍຈຶ່ງຂໍກຳລັງຈາກ ບາງກອກ ເຈົ້າຊີວິດບາງກອກມອບໃຫ້ກອງທັບວຽງຈັນ ແລະ ນະຄອນລາດຊະສີມາໄປປາບພະສາ ໃນປີ 1819 ພະສາໄດ້ຖອຍທັບມາອັດຕະປື ເຈົ້າອະນຸວົງຂານອາສາສົ່ງເຈົ້າລາດຊະບຸດໂຍ້ລົງໄປປາບ. ຮອດປີ ຄ.ສ 1821 ເຈົ້າ ລາດຊະບຸດໂຍ້ໄລ່ຕິດຕາມຕີພະສາສຸດທ້າຍກໍ່ຍອມມອບຕົວໃຫ້ເຈົ້າລາດຊະບຸດໂຍ້. ເຈົ້າອະນຸວົງຂໍໃຫ້ພະສາພົ້ນ ໂທດຈາກສະຫຍາມ ແລະ ສະຫຍາມໄດ້ແຕ່ງຕັ້ງເຈົ້າລາດຊະບຸດໂຍ້ເປັນເຈົ້າປົກຄອງຈຳປາສັກ (ສະແດງວ່າ ນະໂຍບາຍໂຮມວຽງຈັນ-ຈຳປາສັກສຳເລັດ).

**2.3. ເຈົ້າອະນຸວົງນຳພາປະຊາຊົນກອບກູ້ເອກະລາດ**

**1) ຈຸດເລີ່ມຕົ້ນຂອງແນວຄິດໃນການກອບກູ້ເອກະລາດ**

**ກ. ເຫດການໃນເວລາໄປປົງສົບເຈົ້າຊີວິດລາຊະການທີ 2 ຂອງສະຫຍາມ**

- **ການເກນພົນໄປຕັດຕົ້ນຕານ**

ປີ ຄ.ສ 1824 ພະພຸດທະເລີດຫຼ້ານະພາໄລ ສິ້ນພະຊົນ ແລະ ກົມໝື່ນເຈສະດາບໍດິນ (ພະນັ່ງເກົ້າເຈົ້າຢູ່ ຫົວ) ໄດ້ຂຶ້ນຄອງລາດແທນ ສ່ວນຜູ້ເປັນອິງມົງກຸດກໍ່ໜີອອກບວດ. ເມື່ອຂຶ້ນຄອງລາດກໍ່ສັ່ງໃຫ້ເຈົ້າອະນຸວົງລົງມາ ຊ່ວຍວຽກຢູ່ບາງກອກ. ກ່ອນທີ່ຈະລົງໄປບາງກອກເຈົ້າອະນຸວົງໄດ້ຈັດງານສົມໂພດວັດສີສະເກດ ແລະໄດ້ຖື ໂອກາດເຕົ້າລວມກັບບັນດາຫົວເມືອງຕ່າງໆ. ຮອດປີ ຄ.ສ 1825 ເຈົ້າອະນຸວົງເຈົ້ານຳກຳລັງພົນໄປຊ່ວຍງານສົບຢູ່ ບາງກອກ. ເມື່ອໄປຮອດ ສະຫຍາມອະນຸຍາດໃຫ້ພຽງເຈົ້າອະນຸວົງຄົນດຽວເຂົ້າໄປໃນງານສົບ ສ່ວນຄົນອື່ນແມ່ນ ໄດ້ບັງຄັບໃຫ້ໄປຕັດຕົ້ນຕານຢູ່ ສຸພັນບູລີ ແລ້ວລ່ອງໄປຕາມນໍ້າເຈົ້າພະຍາເຊິ່ງໃນນັ້ນມີເຈົ້າລາດຊະວົງເຫງົ້າໄປນຳ ຂະບວນຕັດຕົ້ນຕານເຮັດໃຫ້ເຈົ້າອະນຸວົງຄຽດແຄ້ນ.

- **ຖືກປະຕິເສດຈາກເຈົ້າຊີວິດລາຊະການທີ3**

ກ່ອນຈະກັບຈາກງານສົບເຈົ້າອະນຸວົງໄດ້ກາບທູນຂໍເອົາບາງຢ່າງກັບເມືອວຽງຈັນນໍາຄື:

- ຂໍເຈົ້າຍິງດວງຄໍາລູກສາວມະຫາອຸປະຣາດຕິດຊະ
- ຂໍນາງລະຄອນໃນວັງ
- ຂໍພະແກ້ວມໍລະກົດ
- ຂໍຄອບຄົວຄົນລາວຢູ່ສະລະບູລີຄືນມາວຽງຈັນ

ແຕ່ທັງໝົດທີ່ຂໍລ້ອນແຕ່ຖືກເຈົ້າຊີວິດສະຫຍາມປະຕິເສດ ເຮັດໃຫ້ເຈົ້າອະນຸງວົງຕໍ່າຕ້ອຍນ້ອຍໃຈ ແລະ ໝັ້ນໃຈວ່າສາຍພົວພັນວຽງຈັນ-ສະຫຍາມເຄັ່ງຕຶງກວ່າເກົ່າ.

**2)ການວາງແຜນກອບກູ້ເອກະລາດ**

ເມື່ອກັບເມືອຮອດວຽງຈັນພະອົງຈິ່ງເອີ້ນບັນດາລາດຊະນຸກູນ ແລະ ຂ້າລາດຊະການເພື່ອປຶກສາຫາລືໃນພະລາດຊະວັງວຽງຈັນເພື່ອກຽມທ້ອນໂຮມລ້ານຊ້າງໃຫ້ພົ້ນຈາກຄວາມເປັນທາດ. ເຈົ້າອະນຸວົງໄດ້ກ່າວວ່າ: ໃນເວລານີ້ສະຫຍາມມີຜູ້ນໍາທີ່ອ່ອນນ້ອຍທີ່ບໍ່ຊໍານິຊໍານານໃນການເຮັດເສິກສົງຄາມພວກເຮົາມີໂອກາດຊະນະ. ອີກປະການໜຶ່ງເປັນວິທີການເພື່ອເຮັດໃຫ້ຜູ້ຮ່ວມປະຊຸມເກີດຄວາມໝັ້ນໃຈວ່າຈະສາມາດກອບກູ້ເອກະລາດໄດ້ສຸດທ້າຍລ້ານຊ້າງໄດ້ຕັດສິນໃຈແຍກຕົວອອກຈາກສະຫຍາມໂດຍນໍາໃຊ້ສອງຮູບການຄື:

- ໄລ່ກອງທັບສະຫຍາມ ຫຼື ກອງສັກເລກຂອງສະຫຍາມທີ່ຢູ່ເຂດຕ່າງໆຕາມຫົວເມືອງຝັ່ງຊ້າຍ ແລະ ຝັ່ງຂວາ
- ອົບພະຍົບຄອບຄົວຄົນລາວອອກຈາກປ້ອມດ່ານໜ້າໂດຍສະເພາະແມ່ນເຂດເມືອງກັນຊົນນະບົດລະຫວ່າງລາວ ກັບ ສະຫຍາມຢູ່ຝັ່ງຊ້າຍແມ່ນໍ້າຂອງ.

**3)ການເຄື່ອນທັບຂອງເຈົ້າອະນຸວົງ ປີ ຄ.ສ 1825-1827**

ພະເຈົ້າອະນຸວົງເປັນນັກຮົບທີ່ເກັ່ງກ້າ ແລະ ເຂັ້ມແຂງຜູ້ໜຶ່ງທັງມີຄວາມຮັກຊາດຮັກອິດສະຫຼະພາບ. ໃນການສູ້ຮົບຄັ້ງນີ້ເຈົ້າອະນຸວົງຄິດພຽງແຕ່ຢາກກອບກູ້ອິດສະຫຼະພາບ, ຟື້ນຟູປະເທດໃຫ້ກັບຄືນມາມີເອກະລາດເທົ່ານັ້ນບໍ່ຄິດຈະສູ້ຮົບກັບສະຫຍາມເພື່ອແກ້ແຄ້ນແທນຜູ້ເປັນພໍ່. ໃນການດໍາເນີນສົງຄາມທັບວຽງຈັນແບ່ງອອກ 3 ປີກຄື:

- ກອງທັບທີ 1 ນໍາໂດຍມະຫາອຸປະຣາດຕິດຊະ
- ກອງທັບທີ 2 ນໍາໂດຍເຈົ້າອະນຸວົງ ແລະ ເຈົ້າລາດຊະວົງເຫງົ້າ
- ກອງທັບທີ 3 ແມ່ນກອງທັບຈາກຈໍາປາສັກ ນໍາໂດຍເຈົ້າລາດຊະບຸດໂຍ

### ກ. ກອງທັບທີ1: ກອງທັບມະຫາອຸປະຣາດຕິດຊະ

ເປັນກອງທັບທໍາອິດທີ່ອອກທັບກ່ອນໝູ່, ໄດ້ຍົກທັບອອກຈາກວຽງຈັນໄປສະກົດນະຄອນ, ເມືອງກາລະສິນເພື່ອຂັບໄລ່ກອງສັກເລກຂອງສະຫຍາມ. ເມື່ອໄປເຖິງກາລະສິນກໍ່ເກີດການຕໍ່ສູ້ຢ່າງຮຸນແຮງກັບກອງສັກເລກເຈົ້າເມືອງກາລະສິນ (ໄສ້ເສີກຂອງສະຫຍາມ) ຖືກຂ້າຕາຍກາງສະໜາມຮົບ ແລະ ພວກສັກເລກກໍ່ແຕກໜີ. ຫຼັງຈາກຢຶດ ກາລະສິນ ໄດ້ແລ້ວ ພະອົງກໍ່ກວດຕ້ອນເອົາຄອບຄົວຄົນລາວຈໍານວນໜຶ່ງກັບຄືນເມືອວຽງຈັນ. ສ່ວນພວກສັກເລກຂອງສະຫຍາມກໍ່ມາເຕົ້າໂຮມກັນຢູ່ເມືອງສຸວັນນະພູມ. ເຈົ້າອຸປະຣາດຕິດຊະບຸກຕີກອງສັກເລກຢູ່ສຸວັນນະພູມ ແລະ ສາມາດຂ້າພວກສັກເລກເປັນຈໍານວນຫຼວງຫຼາຍ ພ້ອມທັງອົບພະຍົບຄົວລາວກັບເມືອວຽງຈັນຕື່ມອີກ.

### ຂ. ກອງທັບຂອງເຈົ້າຣາດຊະວົງເຫງົ້າ

ເຈົ້າຣາດຊະວົງເປັນແມ່ທັບນໍາໜ້າພ້ອມກັບນາຍທະຫານສໍາຄັນຫຼາຍຄົນໄດ້ເຄື່ອນທັບມຸ້ງໜ້າໄປນະຄອນລາດຊະສີມາໃນມື້ ແຮມ 3 ຄໍ່າ ເດືອນ 3 ໃຊ້ເວລາທັງໝົດໃນການເດີນທາງ 35 ວັນ. ເວລາດຽວກັນນັ້ນເຈົ້າເມືອງນະຄອນລາດຊະສີມາໄດ້ຍົກທັບໄປປາບພວກກະບົດຢູ່ເມືອງຂຸຂັນ (ກົນລວງຂອງລາວສ້າງສະຖານະການເພື່ອຢຶດເອົານະຄອນລາດຊະສີມາໂດຍງ່າຍ). ເມື່ອໄປຮອດນະຄອນລາດຊະສີມາເຈົ້າລາດຊະວົງໄດ້ແຈ້ງຕໍ່ປະຫຼັດເມືອງວ່າວຽງຈັນໄດ້ຮັບຄໍາສັ່ງຈາກບາງກອກໃຫ້ຍົກທັບໄປຊ່ວຍສູ້ຮົບກັບອັງກິດທີ່ພວມຈະບຸກຕີບາງກອກ ສະນັ້ນ, ປະຫຼັດເມືອງຈິ່ງໄຂປະຕູເມືອງ. ເຈົ້າລາດຊະວົງຈິ່ງສັ່ງທະຫານບຸກຢຶດຕົວເມືອງນະຄອນລາດຊະສີມາ, ຈັບເອົາຂຸນນາງປົກຄອງເມືອງທັງໝົດ ພ້ອມທັງບັງຄັບໃຫ້ໄຂສາງເກັບມ້ຽນອາວຸດ ແລະ ສະບຽງອາຫານເພື່ອໃຊ້ເຂົ້າໃນກອງທັບຂອງຕົນ. ເຈົ້າລາດຊະວົງສັ່ງໃຫ້ມີການຕັ້ງຄ້າຍທະຫານ ແລະ ແປງເສັ້ນທາງຜ່ານດົງພະຍາໄຟ ໄປຍັງເມືອງສະລະບູລີເພື່ອສະດວກໃນການເຄື່ອນທັບ ແລະ ອົບພະຍົບຄົວລາວຈາກສະລະບູລີມານະຄອນລດຊະສີມາ ແລະ ເດີນທາງຕໍ່ມາວຽງຈັນ. ໄດ້ສັ່ງໃຫ້ເບີກເຂົ້າຈາກສາງນະຄອນລາດຊະສີມາເພື່ອເປັນສະບຽງອາຫານລ້ຽງກອງທັບທີເດີນທາງໄປ ສະລະບູລີ ແລະ ສັ່ງໃຫ້ເພຍເມືອງຂວາ ແລະ ເພຍຊຽງໃຕ້ຄຸມພົນ 2.000 ຄົນມຸ້ງໜ້າໄປ ສະລະບູລີ ກ່ອນ ກອງທັບເຈົ້າລາດຊະວົງໄດ້ໄປພົບກັບກອງທັບເຈົ້າລາດຊະບຸດໂຍ້ທີ່ເຄື່ອນທັບມາແຕ່ຈໍາປາສັກຢູ່ນະຄອນລາດຊະສີມາ ແລະ ໄດ້ມອບໃຫ້ເຈົ້າລາດຊະບຸດໂຍ້ຮັກສານະຄອນລາດຊະສີມາ ເພື່ອລໍຖ້າ ເຈົ້າອະນຸວົງ ຍົກທັບຫຼວງມາ ແລະ ສັ່ງໃຫ້ຄຸມພົນ 1.000 ຄົນຮັກສາຄ້າຍຢູ່ນອກເມືອງລໍຖ້າທັບເຈົ້າອະນຸວົງ. ຈາກນັ້ນເຈົ້າລາດຊະວົງກໍ່ຄຸມພົນ 3.000 ກວ່າຄົນມຸ້ງສູ່ສະລະບູລີສົມທົບກັບກອງທັບຂອງເຈົ້າເມືອງສະລະບູລີ ເພື່ອອົບພະຍົບຄອບຄົວຄົນລາວກັບຄືນມາວຽງຈັນ.

### ຄ. ກອງທັບເຈົ້າລາດຊະບຸດໂຍ້

ໄດ້ເຄື່ອນທັບອອກຈາກຈໍາປາສັກມາຢຶດເມືອງອຸບົນ, ສີສະເກດ, ເດດອຸດົມ ແລະ ສຸລິນ ພ້ອມທັງລະດົມບັນດາເຈົ້າເມືອງໃຫ້ຮ່ວມຂະບວນການ. ບັນດາເຈົ້າເມືອງກໍ່ຈັດຕັ້ງກອງກໍາລັງເພື່ອສົມທົບກັບເຈົ້າລາດຊະບຸດ. ຈາກນັ້ນກໍ່ມຸ້ງໜ້າສູ່ນະຄອນລາດຊະສີມາ ແລະ ເດີນທາງຮອດກ່ອນທີ່ເຈົ້າອະນຸວົງຈະມາເຖິງ. ເຈົ້າລາດຊະບຸດ

ໄດ້ພົບກັບເຈົ້າລາດຊະວົງຢູ່ຄ້າຍເພື່ອລາຍງານສະພາບການ ແລະ ປຶກສາຫາລືກັນ ແລ້ວກໍ່ຕັ້ງຄ້າຍຢູ່ທົ່ງທະເລ ຫຍ້າເພື່ອລໍຖ້າເຈົ້າອະນຸວົງ.

### ງ. ກອງທັບຫຼວງ

ເຈົ້າອະນຸວົງໄດ້ບັນຊາກອງທັບຫຼວງເດີນທາງໄປເຖິງນະຄອນລາດຊະສີມາໃນມື້ແຮມ 6 ຄ່ຳເດືອນ 3 ເຈົ້າອະນຸວົງກໍ່ໄດ້ເຂົ້າໄປພັກຢູ່ຄ້າຍທີ່ເຈົ້າລາດຊະວົງສ້າງໄວ້ຕ້ອນຮັບ ແລະ ໄດ້ກາຍເປັນບ່ອນບັນຊາທະຫານ. ເຈົ້າອະນຸວົງໄດ້ສັ່ງໃຫ້ສ້າງຄ້າຍຂຶ້ນ 7 ຄ້າຍ ຢູ່ທົ່ງທະເລຫຍ້າ ມີທະຫານປະຈຳການທັງໝົດ 20.000 ຄົນ. ການອົບພະຍົບຄອບຄົວຄົນລາວກັບຄືນວຽງຈັນ

**ການອົບພະຍົບຄົວລາວກັບມາວຽງຈັນ**

ເຈົ້າລາດຊະວົງໄດ້ສົມທົບກັບເຈົ້າເມືອງສະລະບູລີ ແລະ ເຈົ້າເມືອງອື່ນໆທຳການອົບພະຍົບຄົວລາວປະມານ 10.000 ກວ່າຄົນໃນເຂດສະລະບູລີກັບຄືນເມືອວຽງຈັນ ໂດຍຜ່ານທາງດົງພະຍາໄຟ ໄປໄວ້ນະຄອນລາດຊະສີມາກ່ອນ ແລ້ວຈຶ່ງເດີນທາງໄປວຽງຈັນ ຢ່າງຮີບດ່ວນ.

**ການອົບພະຍົບຄອບຄົວຄົນລາວຊາວນະຄອນລາດສະສີມາກັບມາວຽງຈັນ**

ພາຍຫຼັງກອງທັບລາວຕັ້ງຄ້າຍທັງ 7 ໄດ້ສຳເລັດ ເຈົ້າອະນຸວົງກໍ່ຮຽກພະຍາຍົກກະບັດແຫ່ງນະຄອນລາດສະສີມາເຂົ້າພົບ ແລະ ໄດ້ອະທິບາຍໃຫ້ພະຍາຍົກກະບັດເຂົ້າໃຈວ່າຕອນນີ້ຊາວນະຄອນລາດຊະສີມາລຳບາກຫຼາຍຈາກການກະທຳຂອງເຈົ້າເມືອງນະຄອນລາດຊະສີມາ ແລະ ສະຫຍາມ ດັ່ງນັ້ນ, ຈຶ່ງມອບໃຫ້ພະຍາຍົກກະບັດກະກຽມທ້ອນໂຮມຄອບຄົວລາວໃຫ້ໄດ້ຫຼາຍທີ່ສຸດແລ້ວເຄື່ອນຍ້າຍເມືອວຽງຈັນພາຍໃນເວລາ 4 ວັນ. ພະຍາຍົກກະບັກກໍ່ປະຕິບັດຕາມທຳການເຄື່ອນຍ້າຍຄອບຄົວຄົນລາວຢ່າງຮີບດ່ວນໂດຍສົມທົບກັບທະຫານລາວຈຳນວນໜຶ່ງອີກ. ສ່ວນເຈົ້າເມືອງນະຄອນລາດຊະສີມາກໍ່ເຕົ້າລວມທະຫານແຕກທັບກັບມານະຄອນລາດຊະສີມາ ຈຶ່ງຮູ້ວ່າຄອບຄົວຄົນລາວຈຳນວນຫຼາຍຖືກກວດຕ້ອນໄປວຽງຈັນຈຶ່ງໄດ້ຮ່ວມຫົວກັນວາງແຜນເພື່ອກອບກູ້ຄືນມາໂດຍໃຫ້ພະຍາປະລັດໄປອ່ອນຍອມຕໍ່ເຈົ້າອະນຸວົງ ແລະ ຂໍຕິດຕາມໄປຢູ່ວຽງຈັນ ແລະໄດ້ລາຍງານກັບເຈົ້າອະນຸວົງວ່າກອງທັບພະຍານະຄອນລາດຊະສີມາແຕກທັບໜີໄປຂະເໝນແລ້ວ. ສ່ວນຕົນເອງແມ່ນຄິດຮອດຄອບຄົວ ແລະ ຂໍໄປຢູ່ວຽງຈັນພ້ອມຄອບຄົວ ສະນັ້ນ, ເຈົ້າອະນຸວົງຈຶ່ງຍອມໃຫ້ພະຍາປະລັດຕິດຕາມໄປຢູ່ນຳຄອບຄົວທີ່ກຳລັງອົບພະຍົກ. ແຕ່ຄວາມຈິງແລ້ວພະຍານະຄອນລາດຊະສີມາໄດ້ຄຸມກຳລັງຕິດຕາມຂະບວນອົບພະຍົບແບບຫ່າງໆ ເມື່ອໄປຮອດທົ່ງສຳລິດພະຍາປະລັດໄດ້ສະເໜີນຳຫົວໜ້າທະຫານລາວຂໍພັກເຊົາຢູ່ທົ່ງສຳເລັດ ເພາະຜູ້ເຖົ້າ ແລະ ເດັກນ້ອຍອິດເມື່ອຍຫຼາຍ ສະນັ້ນ, ຫົວໜ້າທະຫານລາວຈຶ່ງອະນຸຍາດໃຫ້ພັກ. ໃນຄືນນັ້ນຄອບຄົວຄົນລາວໄດ້ກິນເຂົ້າປາອາຫານພ້ອມທັງສຸລາຈາກນັ້ນກໍ່ເລີກລາກັນໄປນອນ ພໍເຖິງທ່ຽງຄືນພະຍານະຄອນລາດຊະສີມາກອງຍົກທະຫານບຸກຕີ ແລະ ຂ້າທະຫານລາວທີ່ພວມນອນຫຼັບສະໜິດຢູ່ນັ້ນຕາຍເປັນຈຳນວນຫຼວງຫຼາຍ. ສ່ວນຜູ້ທີ່ລອດຕາຍໄດ້ໜີໄປນະຄອນລາດຊະສີມາເພື່ອລາຍງານໃຫ້ເຈົ້າອະນຸວົງຊາບຂ່າວ.

ສ່ວນເຈົ້າອະນຸວົງເມື່ອຊາບຂ່າວກໍ່ແຕ່ງທະຫານມ້າໄວ 50 ນາຍໄປສັງເກດການ, ແຕ່ກອງມ້າໄວໄດ້ປະທະກັບທະຫານນະຄອນລາດຊະສີມາຢູ່ຈຸດເກີດເຫດທີ່ມາສະກັດລັດຕີຢູ່ກາງທາງເຮັດໃຫ້ທະຫານພະຍານະຄອນລາດຊະສີມາແຕກໜີ. ພ້ອມທັງຮູ້ວ່າພະຍານະຄອນລາດຊະສີມາແມ່ນຜູ້ນຳພາໃນການບຸກຕີທະຫານລາວທີ່ຄຸມຄົວລາວນະຄອນລາດຊະສີມາກັບວຽງຈັນ ແລ້ວຈຶ່ງກັບມາລາຍງານສະພາບໃຫ້ເຈົ້າອະນຸວົງຮູ້. ດັ່ງນັ້ນເຈົ້າອະນຸວົງໄດ້ສັ່ງໃຫ້ເຈົ້າສຸດທິສານໂປ້ພ້ອມດ້ວຍນາຍທະຫານຈຳນວນໜຶ່ງຄຸມທະຫານ 3.600 ຄົນໄປປາບຄວາມວຸ້ນວາຍໂດຍໃຫ້ທະຫານມ້າ 400 ນາຍມຸ້ງໜ້າໄປກ່ອນ ສ່ວນເຈົ້າສຸດທິສານແມ່ນ ຄຸມ 3.200 ຄົນ ຕິດຕາມໄປຕາມຫຼັງ. ກອງທະຫານລາວໄດ້ປິດລ້ອມທະຫານພະຍານະຄອນລາດຊະສີມາ ແຕ່ບໍ່ສາມາດບຸກຕີເຂົ້າຄ້າຍພວກຄົວລາວອົບພະຍົກໄດ້ ເພາະພະຍານະຄອນລາດຊະສີມາໄດ້ປ້ອງກັນຄ້າຍໄວ້ຢ່າງເຂັ້ມແຂງ ແລະທຳການຍິງປືນອອກມາຈາກຄ້າຍໃສ່ກອງທະຫານລາວ ເຈົ້າສຸດທິສານໄດ້ກັບໄປລາຍງານສະພາບໃຫ້ເຈົ້າອະນຸວົງຊາບຂ່າວ.

ກອງທັບເຈົ້າລາດຊະວົງທີ່ເຮັດໜ້າທີ່ເຄື່ອນຍ້າຍຄົວລາວຢູ່ສະລະບູລີກໍ່ມາຮອດນະຄອນລາດຊະສີມາໃນກາງເດືອນ 4 ປີ ຄ.ສ 1826 ເຈົ້າລາດຊະວົງກໍ່ເຂົ້າລາຍງານເຈົ້າອະນຸວົງວ່າ ສາມາດອົບພຍົບຄອບຄົວຄົນລາວຈາກສະລະບູລີໄດ້ເຖິງ 10.330 ຄົນ ໃນນັ້ນມີຄົວລາວ 10.000 ຄົນ, ສະຫຍາມ 110 ຄົນ ແລະ ຄອບຄົວຈີນ 220 ຄົນ ເຊິ່ງອອກເດີນທາງຈາກສະລະບູລີໃນມື້ແຮມ 9 ຄ່ຳເດືອນ 3 ປີ ຄ.ສ 1826 ແລະ ມາຮອດນະຄອນລາດຊະສີມາ ໃນຕົ້ນເດືອນ 4 ແລະ ໄດ້ອອກເດີນທາງໄປວຽງຈັນແລ້ວ ແລະ ເຈົ້າລາດຊະວົງຍັງສືບຮູ້ວ່າສະຫຍາມບໍ່ໄດ້ເຮັດສົງຄາມກັບອັງກິດ ແລະກຳລັງສົ່ງກອງທັບຫຼວງມາທາງເມືອງສະລະບູລີ ແລະ ມີກອງທັບຈາກນະຄອນນາຍົກ ປະຈິນບູລີ ແລະ ກະບິນບູລີເຄື່ອນກຳລັງມາສົມທົບອີກ. ພ້ອມດຽວກັນນັ້ນເຈົ້າສຸດທິສານກອງເຂົ້າມາລາຍງານສະພາບຢູ່ທົ່ງສຳລິດ. ເຈົ້າອະນຸວົງຈຶ່ງຮຽກປະຊຸມເພື່ອປະເມີນສະຖານະການ ແລະ ທຳການປ່ຽນແຜນການສູ້ຮົບ.

**2.4. ການກະກຽມກຳລັງຂອງສະຫຍາມ ແລະ ແຜນການຂອງເຈົ້າເມືອງນະຄອນລາດຊະສີມາເພື່ອປາບປາມເຈົ້າອະນຸວົງ.**

**ກ. ກອງທັບຫຼວງ**

ກອງທັບຫຼວງນຳພາໂດຍກົມພະລາດຊະວັງບໍວອນເປັນແມ່ທັບໃຫຍ່ບຸກໂຈມຕີກອງລະວັງຫຼັງຂອງຝ່າຍລາວຈາກສະລະບູລີໄປນະຄອນລາດຊະສີມາໂດຍນຳໃຊ້ອາວຸດທີ່ທັນສະໄໝ ເຮັດໃຫ້ສາມາດບຸກຕີທະຫານລາວ ແລະ ຍຶດເອົານະຄອນລາດຊະສີມາເປັນຖານທັບ.

**ຂ. ກອງທັບພະຍາລາດຊະສຸພາວະດີ**

ຍົກທັບໄປຕີຈຳປາສັກໂດຍເຄື່ອນທັບຈາກເມືອງສຸວັນນະພູມເພື່ອເກັບເກນເອົາສະບຽງອາຫານເມື່ອເຄື່ອນໄປເຖິງພິມາຍ (ຂຶ້ນກັບນະຄອນລາດຊະສີມາ) ກໍ່ປະທະກັບກອງທັບເຈົ້າລາດຊະວົງ. ສະຫຍາມຍິງຖະຫຼົ່ມທະຫານລາວຈົນຖອຍທັບມາຢູ່ອຸບົນລາດຊະທານີ.

ຫຼັງຈາກຕີກອງທັບລາວແຕກແລ້ວພະຍາລາດຊະສຸພາວະດີກໍ່ຍົກກອງທັບໄປຕີເຈົ້າອຸປະຫຼາດຕິດຊະທີ ເມືອງຍະໂສທອນ. ເຈົ້າອຸປະລາດໄດ້ໄປຕັ້ງທັບຢູ່ເມືອງໜອງຫານ (ອຸດອນທານີ) ກອງທັບລາວຢູ່ຍະໂສທອນໄດ້ ທຳການຕ້ານຄືນສຸດກຳລັງຈົນເຮັດໃຫ້ສະຫຍາມສູນເສຍກຳລັງຫຼາຍສົມຄວນການຕໍ່ສູ້ດຳເນີນໄປສອງມື້ສອງຄືນ ສະຫຍາມຈຶ່ງສາມາດຢຶດຍະໂສທອນໄດ້ ແລ້ວໄດ້ສັ່ງປະຫານຊີວິດຄອບຄົວນາຍທະຫານທີ່ຢູ່ເມືອງຍະໂສ ທອນລວມທັງຍາດພີ່ນ້ອງຂອງມະຫາອຸປະຣາດຕິດຊະ 160 ຄົນເຜົາໄຟທັງເປັນ ສ່ວນກອງທັບລາວທີ່ແຕກກໍ່ໄດ້ ມາສົມທົບກັບກອງທັບເຈົ້າອຸປະຣາດຕິດຊະທີ່ເມືອງໜອງຫານ.

## 2.5. ແຜນການຂອງເຈົ້າເມືອງນະຄອນລາດຊະສີມາເພື່ອປາບປາມເຈົ້າອະນຸວົງ.

ພາຍຫຼັງໄດ້ຮັບການລາຍງານຈາກພະຍາວິຊິດໄຊເຈົ້າເມືອງກຸງເກົ່າ (ອາຍຸດທະຍາ) ຊຶ່ງລາຍງານໃນທ້າຍ ເດືອນກຸມພາວ່າເຈົ້າລາດຊະວົງໄດ້ຍົກທັບມາກວດຕ້ອນຄອບຄົວລາວຢູ່ສະລະບູລີເມືອວຽງຈັນ. ຝ່າຍບາງກອກ ກໍ່ລະດົມກຳລັງ ແລະ ສັ່ງເບີກອາວຸດທີ່ທັນສະໄໝຈາກຕ່າງດ້າວ ພ້ອມທັງຕັ້ງຄ້າຍປ້ອງກັນບາງກອກ. ສ່ວນ ເຈົ້າເມືອງນະຄອນລາດຊະສີມາກໍ່ສົ່ງມ້າໄວມາລາຍງານສະພາບການສູ້ຮົບໃຫ້ບາງກອກຮັບຊາບ ທັງຂໍກຳລັງ. ສະຫຍາມໄດ້ແຕ່ງຕັ້ງກົມລະຊະວັງບໍວອນເປັນແມ່ທັບໄປຕີທາງສະລະບູລີ ໃນວັນທີ 3 ມີນາ ປີ ຄ.ສ 1826 ແລະ ສືບຕໍ່ບຸກເຂົ້ານະຄອນລາດຊະສີມາ. ເມື່ອເຄື່ອນທັບຮອດອາຍຸດທະຍາກໍ່ພົບກັບພະຍາສຸລິຍາພັກດີຈຶ່ງໄດ້ ສົມທົບກຳລັງຮ່ວມກັນເອີ້ນວ່າກອງທັບຫຼວງທີ 1 ຕໍ່ມາສະຫຍາມຈຶ່ງແຕ່ງກອງທັບທີ 2 ຂຶ້ນເພື່ອໄປຊ່ວຍພະຍາ ນະຄອນລາດຊະສີມາໂດຍມີກົມໝື່ນສຸລິນພິທັກເປັນແມ່ທັບລວມຕົວຢູ່ປະຈິນບູລີ ຍົກທັບໄປກະບິນບູລີມຸ້ງສູ່ ນະຄອນລາດຊະສີມາບຸກຕີໄປທາງອຸບົນລາດຊະທານີ, ຈຳປາສັກ ແລະ ຮ້ອຍເອັດ ເພື່ອໄປສົມທົບກັບກອງທັບທີ 1 ຢູ່ວຽງຈັນ ເຊິ່ງມີທະຫານເອກແມ່ນພະຍາລາດຊະສຸພາວະດີ ຫຼື ພະຍາບໍດິນເດຊາ. ນອກນັ້ນຍັງມີກອງທັບຂະເໝນ ແລະ ກອງທັບພາກເໜືອໄປລວມພົນທີ່ພິດສະນຸໂລກເພື່ອບຸກຕີເຈົ້າລາດຊະວົງທີ່ພວມຕັ້ງທັບຢູ່ເມືອງຫຼົ່ມ ສັກ.

## 2.6. ເຈົ້າອະນຸວົງກະກຽມກຳລັງເພື່ອຕ້ານກັບສະຫຍາມ

ຝ່າຍລາວໄດ້ຜັນປ່ຽນແຜນການສູ້ຮົບຈາກແຜນການເດີມທີ່ເອົານະຄອນລາດຊະສີມາເປັນຖານທີ່ໝັ້ນ ແລ້ວສົ່ງກອງກຳລັງໄປຕີສະກັດສະຫຍາມທີ່ເຄື່ອນເຂົ້າມາທາງສະລະບູລີ, ກະບິນບູລີ ແລະ ຫຼົ່ມສັກຜ່ານຊ່ອງ ແຄບສາຍພູພະຍາໄຟ, ສາຍພູເພັດຊະບູນ ແລະ ສາຍພູພະນົມດົງຮັກ. ແຕ່ໃນຕົວຈິງກອງທັບສະຫຍາມມີກຳລັງ ອາວຸດທີ່ເໜືອກວ່າ ສ່ວນກອງທັບລາວນຳໃຊ້ອາວຸດທີ່ຫຼ້າຫຼັງ ເຮັດໃຫ້ລາວເປັນຝ່າຍເສຍປຽບ ແລະ ເຮັດໃຫ້ ທະຫານລາວຖອຍມາທຸກສະໜາມຮົບຈຶ່ງໃຊ້ແຜນສູ້ຮົບໃໝ່ໂດຍມາຕັ້ງທັບຢູ່ສາຍພູພານມາຕັ້ງຮັບໃນວົງແຄບ ປ້ອງກັນບໍ່ໃຫ້ສັດຕູຕີເຂົ້າດ້ານຫຼັງ. ເຊິ່ງປະກອບມີ 5 ຄ້າຍຄື: ຄ້າຍເມືອງຫຼົ່ມສັກ, ໜອງບົວລຳພູນ, ທົ່ງສົ້ມປ່ອຍ , ຮ່ອມພູເຂົ້າສານ ແລະພູເຂົ້າສານ.

### ກ. ຄ້າຍເມືອງຫຼົ່ມສັກ

ມອບໃຫ້ເຈົ້າລາດຊະວົງເຫງົ້າເປັນແມ່ທັບນຳທັບຈຳນວນ 3.000 ຄົນໄປສົມທົບກັບເຈົ້າເມືອງຫຼົ່ມສັກ ແລະກອງທະຫານຈາກເມືອງຕ່າງໆໃນເຂດຫຼົ່ມສັກທຳການຕໍ່ສູ້ກັບສະຫຍາມທາງດ້ານຫົວເມືອງລາວຝ່າຍເໜືອ.

**ຂ. ຄ້າຍໜອງບົວລຳພູນ**

ມອບໃຫ້ພະຍານາລິນ ພ້ອມທັງນາຍທະຫານສຳຄັນຫຼາຍຄົນນຳກຳລັງ 5.000ຄົນ ຕ້ານກັບທະຫານສະຫຍາມດ້ານຕາເວັນຕົກ. ນອກນັ້ນຍັງມີກອງທະຫານຈາກຄ້າຍສົ້ມປ່ອຍ 4.000 ຄົນເຂົ້າມາສົມທົບໃນການສູ້ຮົບ.

**ຄ. ທົ່ງສົ້ມປ່ອຍ**

ມອບໃຫ້ພະຍາຊຽງຂວາເປັນແມ່ທັບຄຸມທະຫານ 4.000 ຄົນປະຈຳການຢູ່ຄ້າຍ ແລະພະຍາແສນຄຸມທະຫານ 4.000 ຄົນ ປະຈຳຢູ່ຈຸດຍຸດທະສາດ ແລະ ໄປຕິຕິຊ່ວຍຢູ່ຄ້າຍໜອງບົວລຳພູນ.

**ງ. ຄ້າຍຮ່ອມເຂົ້າສານ**

ໃຫ້ພະຍາມືເຫຼັກເປັນແມ່ທັບຄຸມພົນ 4.000 ນາຍ ປະຈຳຢູ່ຄ້າຍປະສານສົມທົບສູ້ຮົບກັບຄ້າຍທົ່ງສົ້ມປ່ອຍ. ໃນນັ້ນພະຍາແສນຫານຄຸມພົນ 2.000 ຄົນໄປຮັກສາໜອງນໍ້າທີ່ສະຫຍາມເຄື່ອນທັບມາເພື່ອບໍ່ໃຫ້ສະຫຍາມໃຊ້ນໍ້າ ແລະ ອີກ 2.000 ຄົນເປັນກອງຫຼອນຕີສະກັດກອງທັບສະຫຍາມຢູ່ຈຸດຕ່າງໆ.

**ຈ. ຄ້າຍພູເຂົ້າສານ**

ເປັນສູນບັນຊາການສູ້ຮົບລວມມີເຈົ້າອະນຸວົງເປັນຜູ້ບັນຊາການສູງສຸດມີເຈົ້າສຸດທິສານ, ພະຍາສຸໂພ ແລະເຈົ້າຊານົນເປັນຜູ້ຊ່ວຍ. ຍັງມີການສ້າງຄ້າຍນ້ອຍຂຶ້ນຕື່ມອີກເຊັ່ນ: ຄ້າຍບ້ານສະໜົມ, ຄ້າຍຊ່ອງງົວຫົວແຕກ. ນອກນີ້ຍັງມີກອງລາດຕະເວນບຸກຕີສັດຕູ ລວມກຳລັງທັງໝົດ ປະມານ 6.000 ຄົນ.

**ສ. ກອງທັບລາດຊະບຸດໂຍ້**

ເຈົ້າລາດຊະບຸດໂຍ້ສົມທົບກັບເຈົ້າສັງຄະ (ສ່ວນໜຶ່ງຂອງຈັງຫວັດສຸລິນ), ເຈົ້າເມືອງສຸລິນຕີສະຫຍາມທີ່ເຄື່ອນມາທາງກະບິນບູລີ (ຈັງຫວັດປະຈິນບູລີ) ໃຫ້ບັນຊາສູ້ຮົບຮັກສາເຂດແດນຈຳປາສັກບໍ່ໃຫ້ສັດຕູຕີຕັດຫຼັງໄປວຽງຈັນ.

**ຊ. ກອງລະວັງຫຼັງ**

ເຈົ້າອະນຸວົງໄດ້ປະທະຫານປະຈຳການຢູ່ນະຄອນລາດຊະສີມາຈຳນວນ 1.000 ຄົນເປັນກອງລະວັງຫຼັງໃຫ້ທຳລາຍປະຕູເມືອງ, ຫໍສູ້ຮົບ ແລະ ກຳແພງເມືອງນະຄອນລາດຊະສີມາເພື່ອບໍ່ໃຫ້ໃຊ້ການໄດ້ ແລະ ໃຫ້ເຜົາຄ້າຍທະຫານລວທັງ 7 ທີ່ໄດ້ສ້າງໃນເມື່ອກ່ອນຖິ້ມ ແລ້ວໄປລວມຕົວທີ່ຄ້າຍໜອງບົວລຳພູນ.

## 2.7. ບັ້ນຣົບທີ່ສຳຄັນ

### ການສູ້ຣົບທີ່ຄ້າຍຫຼົ່ມສັກ (ເພັດສະບູນ)

ກອງທັບສະຫຍາມທາງຝ່າຍເໜືອລວມຕົວຢູ່ພິດສະນຸໂລກຈຳນວນ 10.000ຄົນ ບຸກຕີຄ້າຍຫຼົ່ມສັກ ແບ່ງເປັນ 2 ກອງທັບ ກອງທັບສະຫຍາມທັງສອງກອງໄດ້ບຸກໂຈມຕີລາວທັງ ແລະ ນອກຄ້າຍທະຫານລາວບໍ່ຍອມໃຫ້ສະຫຍາມປິດລ້ອມຈຶ່ໄດ້ຕີຜ່າວົງປິດລ້ອມອອກໄປ ແລ້ວຖອຍທັບໄປສົມທົບກັບກອງທັບຫຼວງທີ່ພູເຂົ້າສານ.

### ການສູ້ຣົບທີ່ຄ້າຍໜອງບົວລຳພູນ

ກົມພະລາດຊະວັງບໍວອນ ໄດ້ຈັດແບ່ງກອງທັບຫຼວງເປັນ 5 ກອງທັບ, ຍົກທັບທັບອອກຈາກນະຄອນລາດຊະສີມາໄປບຸກຕີກອງທະຫານລາວທີ່ຄ້າຍໜອງບົວລຳພູນໃນມື້ອອກໃໝ່ 10 ຄ່ຳ ເດືອນ 6 ກອງທັບສະຫຍາມບຸກຕີທະຫານລາວຢ່າງໜັກໜ່ວງເປັນເວລາ 3 ມື້ 3 ຄືນ ສຸດທ້າຍຄ້າຍໜອງບົວລຳພູນກໍ່ແຕກ. ສະຫຍາມຈັບຕົວພະຍານາລິນໄປຍ້ອນພະຍານາລິນເປັນນາຍທະຫານທີ່ເກ່ງສະຫຍາມຈຶ່ງຕ້ອງການລ້ຽງໄວ້. ແຕ່ພະຍານາລິນບໍ່ຍອມ ສະຫຍາມຈຶ່ງສັ່ງໃຫ້ຂ້າພະຍານາລິນ.

### ການສູ້ຣົບທີ່ຄ້າຍທົ່ງສົ້ມປ່ອຍ

ພາຍຫຼັງທີ່ຕີຄ້າຍໜອງບົວລຳພູນແຕກແລ້ວສະຫຍາມກໍ່ໄດ້ສຸມທຸກກຳລັງເພື່ອບຸໂຈມຕີຄ້າຍທົ່ງສົ້ມປ່ອຍ. ສ່ວນກອງທັບລາວກໍ່ມາເຕົ້າໂຮມທີ່ທົ່ງສົ້ມປ່ອຍ. ກອງກຳລັງທັງສອບຝ່າຍໄດ້ຕະລຸມບອນກັນ ມີທັງຊ້າງມ້າ ແລະພົນຖືຫອກງ້າວຟັນແທງກັນ. ແຕ່ລະຝ່າຍບາດເຈັບ ແລະ ລົ້ມຕາຍເປັນຈຳນວນຫຼວງຫຼາຍ. ຝ່າຍສະຫຍາມໃຊ້ປືນຕິດຫົວລະເບີດໃສ່ກອງທັບລາວໂດຍສະເພາະແມ່ນຄ້າຍົ່ງສົ້ມປ່ອຍ ຈົນພາໃຫ້ເກີດໄຟລຸກໄໝ້ພາຍໃນຄ້າຍໃນທີ່ສຸດ ທະຫານລາວກໍ່ແຕກຖອຍມາທີ່ຮ່ອມພູເຂົ້າສານເຊິ່ງຕັ້ງຢູ່ຫ່າງກັນປະມານ 10 ກມ ເພື່ອສູ້ຣົບໃນຄັ້ງຕໍ່ໄປ.

### ການສູ້ຣົບທີ່ຮ່ອມພູເຂົ້າສານ

ພາຍຫຼັງທີ່ສູນເສຍຄ້າຍຕ່າງໆ ທະຫານຈາກຄ້າຍເຫຼົ່ານັ້ນກໍ່ຖອຍມາລວມກັນທີ່ຮ່ອມພູເຂົ້າສານເຊິ່ງທີ່ວ່າເປັນຖາທີ່ໝັ້ນສຸດທ້າຍຂອງລາວ (ຮ່ອມເຂົ້າສານແມ່ນຊ່ອງແຄບຂອງສາຍພູພານ) ທີ່ຂັ້ນລະຫວ່າງເຂດນ້ຳຊີກັບທົ່ງພຽງວຽງຈັນ. ການຕໍ່ສູ້ແບບປະຈັນບານພາຍໃຕ້ການນຳພາຂອງເຈົ້າອະນຸວົງເຮັດໃຫ້ສະຫຍາມຖອຍກຳລັງມາຕັ້ງທີ່ທົ່ງສົ້ມປ່ອຍແລະຖືກທະຫານລາວປິດລ້ອມ 7 ມື້ 7 ຄືນ. ສະຫຍາມໃຊ້ປືນໃຫຍ່ ແລະ ປືນນ້ອຍຍິງອອກມາຂ້າງນອກຄ້າຍຈົນຝ່າຍລາວຖອຍອອກມາຕັ້ງທັບຢູ່ໃນໄລຍະຫ່າງທີ່ປືນໄປບໍ່ຮອດ. ທະຫານລາວປິດລ້ອມສະຫຍາມເພື່ອໃຫ້ຂາດສະບຽງອາຫານ ແຕ່ປິດລ້ອມໄດ້ພຽງ 2-3 ວັນກໍ່ຖືກທະຫານສະຫຍາມຊຸດໃໝ່ຍົກກຳລັງມາຊ່ວຍ ແລະ ໄດ້ສູ້ຣົບກັນຢ່າງໜັກ. ແຕ່ລະຝ່າຍໄດ້ຮັບບາດເຈັບສາຫັດ ກອງທະຫານສະຫຍາມຈຳນວນໜຶ່ງສາມາດຂ້າມພູພານເຂົ້າມາສູ່ແນວຫຼັງຂອງລາວ ເຮັດໃຫ້ຝ່າຍລາວຖອນກຳລັງສ່ວນໜຶ່ງມາປ້ອງກັນແນວຫຼັງ.

### 2.8. ເຈົ້າອະນຸວົງຖອນທັບກັບມາວຽງຈັນ

ສະນັ້ນ ພະຍາສຸໂພ ພ້ອມດ້ວຍນາຍທະຫານຄົນອື່ນສະເໜີໃຫ້ເຈົ້າອະນຸວົງ, ເຈົ້າສຸດທິສານ ແລະ ເຈົ້າລາດຊະວົງກັບຄືນວຽງຈັນດ່ວນເພື່ອອົບພະຍົບລາດຊະວົງ ແລະ ຂຸນນາງຜູ້ໃຫຍ່ໜີໄປບ່ອນປອດໄພ ສ່ວນພວກຕົນຈະດຳເນີນການສູ້ຮົບຕໍ່ ຖ້າບໍ່ຊະນະກໍ່ຈະແຕກທັບຖອຍໄປ. ເມື່ອເປັນແນວນັ້ນເຈົ້າອະນຸວົງໄດ້ກັບວຽງຈັນເພື່ອເຕົ້າລວມບັນດາລາດຊະວົງລົງແພລ່ອງໄປຕາມລຳແມ່ນ້ຳຂອງພ້ອມທັງມີທະຫານຄຸ້ມກັນໄປນຳແລ້ວຕັ້ງທີ່ໝັ້ນຢູ່ມະຫາໄຊກອງແກ້ວ.

ທາງດ້ານການຮົບຢູ່ຮ່ອມພູເຂົ້າສານພາຍຫຼັງເຈົ້າອະນຸວົງໄດ້ຖອນຕົວອອກຈາກຄ້າຍ ພະຍາສຸໂພກໍ່ບັນຊາການຮົບແທນ ແຕ່ກອງທັບສະຫຍາມກໍ່ບຸກເຂົ້າມາເລື້ອຍໆໃນທີ່ສຸດກອງທັບລາວກໍ່ແຕກຄ້າຍໜີໄປຄົນລະທິດ. ແຕ່ສະຫຍາມກໍ່ໄລ່ຕິດຕາມກອງທັບລາວຈົນຮອດວຽງຈັນ ແລະ ມາຕັ້ງທັບຢູ່ວຽງພັນພ້າວພ້ອມທັງຮູ້ວ່າເຈົ້າອະນຸວົງໄດ້ຫຼົບໜີໄປແລ້ວຈິ່ງຂ້າມມາຢຶດນະຄອນຫຼວງວຽງຈັນ ແລ້ວລາຍງານສະພາບໃຫ້ບາງກອກຮັບຊາບ ສ່ວນກົມພະລາດຊະວັງບໍວອນກໍ່ເຄື່ອນທັບມາຕັ້ງຢູ່ວຽງພັນພ້າວເພື່ອບັນຊາການກວດຕ້ອນເອົາຄອບຄົວຄົນລາວ ແລະ ຊັບສິນບັດລົງມາບາງກອກ ພ້ອມທັງສັ່ງໃຫ້ທຳລາຍກຳແພງເມືອງວຽງຈັນ ແລະ ຫໍຮົບຕ່າງໆ ໃສ່ຮ້າຍປ້າຍສີເຈົ້າອະນຸວົງໂດຍການສ້າງເຈດີປາບວຽງ ແລະ ຄວາມຊົ່ວຮ້າຍຂອງເຈົ້າອະນຸວົງຢູ່ວຽງພັນພ້າວຈັງຫວັດໜອງຄາຍ.



ເຈດີປາບວຽງສ້າງໃນປີ ຄ.ສ 1826 ໂດຍພະຍາລາດຊະສຸພາວະດີແຫ່ງສະຫຍາມ

(ບໍລິເວນຖານພະວິຫານ ວັດຫໍພະແກ້ວ ອະເພີພັນພ້າວ ຈັງຫວັດໜອງຄາຍ)

ຫຼັງຈາກສະຫຍາມຍຶດວຽງຈັນໄດ້ບັນດາກອງທັບທີ່ມາຊ່ວຍສະຫຍາມຕີວຽງຈັນກໍ່ມາເຖິງຄື: ກອງທັບເມືອງນ່ານ, ຊຽງໃໝ່, ຫຼວງພະບາງ, ລຳປາງ, ແພ່ ກໍ່ເດີນທາງມາຮອດ ແລະ ເຂົ້າມາຂໍໂທດກົມລາດຊະວັງບໍວອນທີ່ມາເຖິງຊ້າ. ສ່ວນກົມລາດຊະວັງບໍວອນກໍ່ຄວບຄຸມສະຖານະການຢູ່ເມືອງພັນພ້າວ ຕໍ່ມາກໍ່ກັບຄືນບາງກອກ ແລະມອບໃຫ້ພະຍາລາດຊະສຸພາວະດີ (ສິງ ສິງຫະເສນີ) ເປັນຜູ້ບັນຊາການກວດຕ້ອນເອົາຊັບສົມບັດແລະຄອບຄົວລາວວຽງຈັນລົງໄປບາງກອກຈາກນັ້ນກໍ່ກັບເມືອຍະໂສທອນເພື່ອໂຈມຕີເຈົ້າລາດຊະບຸດໂຍ້ທີ່ຕັ້ງທັບຢູ່ວຽງຈັນ. ເຈົ້າລາດຊະບຸດໂຍ້ໄດ້ຫຼົບໜີໄປອັດຕະປື, ພະຍາລາດຊະສຸພາວະດີກໍ່ກັບຄືນເມືອບາງກອກ. ເຈົ້າຊີວິດລາດຊະການທີ 3 ໄດ້ສັ່ງໃຫ້ພະຍາລາດຊະສຸພາວະດີກັບຄືນມາເຜົາວຽງຈັນຖິ້ມໃນກາງເດືອນ 6 ປີ ຄ.ສ 1827.

## 2.9. ຂະບວນການຕໍ່ສູ້ຂອງເຈົ້າອະນຸວົງໄລຍະທີ 2

## ການກັບມາຈາກດາຍຫວຽດເຈົ້າອະນຸວົງ ໃນປີ ຄ.ສ 1828

ສ່ວນເຈົ້າອະນຸວົງ ແລະ ຄອບຄົວກໍ່ໄປລີ້ໄພຢູ່ດາຍຫວຽດ, ກະສັດມິງໝ່າງດາຍຫວຽດເປັນຄົນກາງໄກ່ເກ່ຍ ແລະປັບຄວາມເຂົ້າໃຈລະຫວ່າງສະຫຍາມກັບວຽງຈັນ. ໄດ້ສົ່ງທະຫານ 80 ນາຍ ນຳເອົາເຈົ້າອະນຸວົງພ້ອມຄອບຄົວກັບມາວຽງຈັນເພື່ອເຈລະຈາກັບສະຫຍາມ. ເມື່ອມາຮອດວຽງຈັນກໍ່ພົບວ່າບ້ານເມືອງຖືກທຳລາຍກ້ຽງ ຈຶ່ງສັ່ງໃຫ້ເຈົ້າສຸດທິສານ, ເຈົ້າລາດຊະວົງ ຄຸມທະຫານໄປຕີສະຫຍາມໃນຕອນຂ້ອນແຈ້ງເຮັດໃຫ້ທະຫານສະຫຍາມຕາຍເປັນຈຳນວນຫຼວງຫຼາຍ ບາງສ່ວນກໍ່ຂ້າມນ້ຳຂອງໄປລາຍງານບາງກອກ. ພະຍາລາດຊະສຸພາວະດີຈຶ່ງສັ່ງບັນດາຫົວເມືອງຕ່າງໆນຳກຳລັງມາຕີວຽງຈັນອີກຄັ້ງ. ສ່ວນຕົນເອງແມ່ນຕັ້ງທັບຢູ່ຍະໂສທອນເພື່ບຸກຕີເຈົ້າອະນຸວົງ ແລະ ອອກເດີນທາງມາຕີວຽງຈັນໃນເດືອນຕຸລາ ປີ ຄ.ສ 1827.

ສ່ວນເຈົ້າອະນຸວົງກໍ່ສັ່ງໃຫ້ເຈົ້າລາດຊະວົງຂ້າມຂອງມາບຸກຕີສະຫຍາມຢູ່ວຽງພັນພ້າວ ແລະທຳລາຍເຈດີປາບວຽງ. ຮອດວັນທີ 15 ຕຸລາ ກຳລັງຂອງເຈົ້າລາດຊະວົງບຸກຕີຮອດບ້ານບົກຫວານ (ອຸດອນທານີ) ໄດ້ປະເຊີນໜ້າກັບພະຍາລາດຊະສຸພາວະດີເຮັດໃຫ້ພະຍາລາດຊະສຸພາວະດີບາດເຈັບສາຫັດ ສ່ວນເຈົ້າລາດຊະວົງຖືກຍິງແລ້ວຫຼົບໜີ.

## ກອງທັບສະຫຍາມໄລ່ລ່າຈັບເຈົ້າອະນຸວົງ

ເຈົ້າອະນຸ ແລະ ເຈົ້າລາດຊະວົງຊາບຂ່າວກໍ່ປຶກສາຫາລືກັນແລ້ວກໍ່ສັ່ງທະຫານເກັບເຂົ້າຂອງເຄື່ອງໃຊ້ທີ່ມີຄ່າໄປເຊື່ອງຊ້ອນ ແລະ ເກັບອາວຸດຖິ້ມລົງນ້ຳຂອງແລ້ວຈຶ່ງອົບພະຍົບໜີຈາກວຽງຈັນ ໃນມື້ອອກໃໝ່ 11 ຄ່ຳ ເດືອນ 11 ປີ  ຄ.ສ 1827 ລົງໄປທາງມະຫາໄຊກອງແກ້ວ ມື້ຕໍ່ມາເຈົ້າສຸດທິສານກໍ່ອົບພະຍົບຕາມໄປອີກ.

ພະຍາລາດຊະສຸພາວະດີໄດ້ຍົກພົນມາຕັ້ງຄ້າມຢູ່ບ້ານພັນພ້າວແລ້ວສົ່ງທະຫານມາຍຶດນະຄອນວຽງຈັນ. ສະຫຍາມເຂົ້າຍຶດວຽງຈັນ ພ້ອມທັງປົ້ນຈີ້, ເກັບກວາດເອົາຊັບສົມບັດຕ່າງໆ ແລະກວດຕ້ອນເອົາປະຊາຊົນ ແລ້ວສົ່ງທະຫານຕິດຕາມເຈົ້າອະນຸວົງແຕ່ບໍ່ພົບ. ພະຍາລາດຊະສຸພາວະດີສັ່ງເຜົາເມືອງວຽງຈັນໃຫ້ເຫຼືອແຕ່ດິນເປົ່າເທົ່ານັ້ນ.

ໃນເວລາທີ່ເຈົ້າອະນຸວົງພວມເດີນທາງໄປທາງເມືອງພວນ ພວກສະຫຍາມກໍ່ແຕ່ງກອງທັບ ແລະ ເຈົ້າເມືອງຕ່າງໆໄລ່ຕິດຕາມ ແລະ ໄດ້ເຈລະຈາກັບເຈົ້ານ້ອຍເມືອງພວນໃນການຕາມຈັບເຈົ້າອະນຸວົງ. ໃນທີ່ສຸດ ເຈົ້າອະນຸວົງພ້ອມດ້ວຍຍາດວົງກໍ່ຖືກເຈົ້າເມືອງນ່ານ, ເມືອງລັບແລ ແລະ ເມືອງຫຼວງພະບາງຈັບໃນເດືອນ ທັນວາ ປ ຄ. 1827. ຜູ້ທີ່ຖືກຈັບໃນຄັ້ງນີ້ປະກອບມີ ເຈົ້າອະນຸວົງພ້ອມດ້ວຍຊາຍາທັງ 6 ຄົນ(ເຈົ້ານາງ ຄຳປ້ອງ, ເຈົ້ານາງ ທອງດີ, ເຈົ້ານາງຄຳໃສ, ເຈົ້ານາງ ບຸດສະບາ, ເຈົ້ານາງຄຳເກີດ ແລະເຈົ້ານາງ ບຸບຜາ), ລູກສາວເຈົ້າອະນຸວົງ (ເຈົ້ານາງຄຳແພງ, ເຈົ້ານາງ ໝູນ ແລະເຈົ້າຊາຍໜູແດງ), ຫຼານສາວອີກໜຶ່ງຄົນລວມທັງບ່າວໄພ່ອີກ 40 ຄົນ ຈາກນັ້ນພະອົງພ້ອມດ້ວຍຄອບຄົວຈຶ່ງຖືກນຳສົ່ງລົງໄປບາງກອກ ແລະໄດ້ໄລ່ຕິດຕາມຈັບເຈົ້າລາດຊະວົງຕໍ່.

**ສະຫຍາມຈັບ ແລະ ທໍລະມານເຈົ້າອະນຸວົງພ້ອມທັງເຊື້ອສາຍ**

ພາຍຫຼັງທີ່ຈັບເອົາເຈົ້າອະນຸວົງສະຫຍາມກໍ່ນຳຕົວມາວຽງຈັນ ພວກເຂົາໄດ້ເຮັດກົງເຫຼັກສຳລັບຂັງເຈົ້າອະນຸວົງລົງໃສ່ເຮືອໄປບາງກອກ. ເຈົ້າອະນຸວົງຖືກນຳຕົວໄປຮອດບາງກອກໃນເດືອນຍີ່ແຮມ 11 ຄ່ຳ ປີ ຄ.ສ 1829.

ເມື່ອໄປຮອດສະຫຍາມກໍ່ຄັດເລືອກເອົາບັນດາລູກຫຼານເຈົ້າອະນຸວົງ ແລະ ຊາຍາຈຳນວນໜຶ່ງໄປເປັນພວກຫຍິບແສ່ວ ສ່ວນທີ່ຍັງເຫຼືອແມ່ນເອົາຂັງໃສ່ຄອກໄປປະຈານ. ສະຫຍາມເຮັດກົງໃຫຍ່ໃສ່ເຈົ້າອະນຸວົງ ແລະ ກົງນ້ອຍອີກ 13 ກົງເພື່ອຂັງຍາດວົງ ແລະຊາຍາຂອງເຈົ້າອະນຸວົງ, ມີເຄື່ອງທໍລະມານຄົບຊຸດເຊັ່ນ: ຄົກ-ສາກ, ເບັດ, ໝໍ້ຂາງ, ຂວານ, ເລື່ອຍ, ຂາຢັ່ງ, ເຊື້ອນ້ຳມັນ. ທຸກມື້ພວກເຂົາຈະນຳເອົາເຈົ້າອະນຸວົງ ແລະ ລູກ 7 ຄົນ (ເຈົ້າໂຍ້, ເຈົ້າເຕ້, ເຈົ້າປານ, ເຈົ້າປັນ, ເຈົ້າດວງຈັນ, ເຈົ້າສຸວັນນະຈັກ), ຫຼານອີກ 5 ຄົນ (ເຈົ້າສຸລິຍະ, ເຈົ້າໂງ່ນຄຳໃຫຍ່, ເຈົ້າປ່ານ, ເຈົ້າຄຳບຸ, ເຈົ້າທອງດີ) ແລະ ເມຍຂອງພະອົງຄື ນາງ ຄຳປ້ອງ ລວມທັງໝົດ 15 ຄົນ. ພວກເຂົາໃຫ້ ນາງຄຳປ້ອງໄປນັ່ງຫວີຜົມຢູ່ກົງ ແລະໃຫ້ບັນດານາງສະໜົມຖືກເຂົ້າ ແລະຂອງກິນໃສ່ກະເບື້ອງໄປລ້ຽງເກືອ. ປະຊາຊົນສະຫຍາມພາກັນມາເບິ່ງທັງປ້ອຍດ່າ, ຖົ່ມນ້ຳລາຍ ແລະ ແກວ່ງກ້ອນຫີນໃສ່ສາບແຊງ. ພໍຍາມແລງກໍ່ບັງຄັບໃຫ້ເຈົ້າອະນຸວົງພອ້ອມບໍລິວານຮ້ອງປະສານໂທດຕົນເອງ ເຮັດແບບນີ້ຮອດ 7-8 ວັນຈຶ່ງລົ້ມປ່ອຍລົງ ແລະເສຍຊີວິດລົງ ແລ້ວສະຫຍາມກໍ່ນຳເອົາສົບພະອົງໄປສຽບປະຈານ ແລະ ພວກເຂົາຍັງສືບຕໍ່ທໍລະມານບັນດາລູກຫຼານ ແລະຊາຍາຂອງເຈົ້າອະນຸວົງ.

**ສາເຫດການປາໄຊ ແລະຄວາມໝາຍປະຫວັດສາດ**

**ສາເຫດການປາໄຊ**

- ຍ້ອນສະພາບສາກົນບໍ່ເອື້ອອຳນວຍ ເພາະເວລານັ້ນບໍ່ທັນມີທິດສະດະປະຕິວັດທີ່ກ້າວໜ້າ, ເຮັດໃຫ້ບໍ່ມີບ່ອນອີງ. ອາໄສແຕ່ການຊ່ວຍເຫຼືອຂອງອານາມ ແຕ່ດາຍຫວຽດເອງກໍ່ມີບັນຫາພາຍໃນປະເທດຂອງເຂົາອີກ.
- ສາຍເຫດຕົ້ນຕໍ ແລະ ມີລັກສະນະຕັດສິນແມ່ນຍ້ອນຄວາມສາມັກຄີພາຍໃນບໍ່ແໜ້ນແກ່ນເທົ່າທີ່ຄວນ ເພາະອານາຈັກລາວລ້ານເວລານັ້ນແຍກເປັນ 3 ອານາຈັກ ແຕ່ອານາຈັກປົກຄອງໃຜລາວ. ເຖິງວ່າຈະຮ່ວມກັບເຈົ້າອະນຸວົງແຕ່ກໍ່ເຮັດບໍ່ສຸດກົກສຸດປາຍ ເມື່ອເຫັນທ່າປາໄຊຫຼວງພະບາງກໍ່

ຖິ້ມເຈົ້າອະນຸວົງ. ສ່ວນເຈົ້າອຸປະຣາດຕິດຊະແຫ່ງວຽງຈັນເມື່ອເຫັນທ່າປາໄຊກໍ່ເຂົ້າຍອມກັບສະຫຍາມ. ສ່ວນສັກດິນາເມືອງນ້ອຍຄື: ເມືອງນ່ານ, ພວນ, ແພ່ກໍ່ມີລັກສະນະຄືກັບຫຼວງພະບາງ ຈົນມີຄໍາສຸພາສິດໄວ້ສັ່ງສອນຄົນລຸ້ນຫຼັງທີ່ວ່າ

| | |
|---|---|
| ຢ່າໄດ້ເກັບດອກຫວ້ານ | ບ້ານເພິ່ນມາຊົມ |
| ໃຫ້ເຈົ້າງອຍຊານເກັບ | ດອກກະຈຽວແຄມຮົ້ວ |
| ຢ່າໄດ້ມົວເມົາກົ້ມ | ໜີໄປຊົມຊາດອື່ນ |
| ຢ່າໄດ້ລະພີ່ນ້ອງ | ຫຼົງໄປຍ້ອງຊາດເພິ່ນດີ |

- ອີກຢ່າງໜຶ່ງເວລານັ້ນສະຕິຊາດຂອງປະຊາຊົນລາວຍັງບໍ່ທັນສູງ.
- ຍ້ອນກອງກໍາລັງ ແລະພາຫະນະສົງຄາມບໍ່ພຽງພໍ ອາວຸດບໍ່ທັນສະໄໝ, ຍຸດທະວິທີໃນການສູ້ຮົບບໍ່ຮອບຄອບ ການຊົ່ງຊາກໍາລັງຜິດພາດ, ຂາດການສືບຂ່າວ ອາໄສການຄາດຄະເນເອົາ.
- ການບັນຊາການຕໍ່ສູ້ຍັງບົກຜ່ອງສະແດງອອກຄື: ໃນເວລາທີ່ຢຶດໂຄລາດໄດ້ແທນທີ່ຈະມາຕັ້ງທັບອັດດ່ານ ແຕ່ພັດປ່ອຍຊ່ອງຫວ່າງໃຫ້ສັດຕູມາຕີອັດຫຼັງເມື່ອຮູ້ວ່າສະຍາມມາບຸກຕີພັດຟ້າວຖອຍມາຈາກຊ່ອງແຄບດົງພະຍາໄຟ ມາຕັ້ງທັບຢູ່ໜອງບົວລະພູນ.
- ສັກດິນາສະຫຍາມໄດ້ຮັບການຊ່ວຍເຫຼືອຈາກບັນດາປະເທດຕາເວັນຕົກ.

## ຄວາມໝາຍປະຫວັດສາດ

ເຖິງແມ່ນວ່າຂະບວນການຕໍ່ສູ້ຂອງເຈົ້າອະນຸວົງບໍ່ໄດ້ຮັບໄຊຊະນະກໍ່ຕາມແຕ່ມັນກໍ່ມີຄວາມໝາຍປະຫວັດສາດທີ່ສໍາຄັນຕໍ່ຊາດລາວ. ມູນເຊື້ອອົງອາດກ້າຫານບໍ່ຍອມຈໍານົນ ແລະ ວິລະກໍາອັນລໍ້າເລີດໃນຄັ້ງນັ້ນໄດ້ຢັ່ງເລິກໃນຈິດໃຈຂອງປະຊາຊົນລາວທຸກຄົນ, ມັນເຮັດໃຫ້ລັດທິຮັກຊາດເຂັ້ມແຂງຂຶ້ນ, ປະຊາຊົນຍິ່ງມີຄວາມຄຽດແຄ້ນຕໍ່ສະຫຍາມ. ຄວາມເດັດດ່ຽວ ແລະ ຄວາມເສຍສະຫຼະຂອງປະຊາຊົນໃນເວລານັ້ນໄດ້ກາຍເປັນມູນເຊື້ອອັນດີງາມຈົນມາຮອດປັດຈຸບັນ.

## ວິລະກໍາ ແລະຄຸນສົມບັດອັນດີງາມທີ່ຄວນເອົາເປັນແບບຢ່າງ

ປະຊາຊົນລາວໄດ້ຈົດຈໍານໍ້າໃຈຮັກຊາດຂອງເຈົ້າອະນຸວົງຢ່າງບໍ່ມີວັນລືມ, ເຈົ້າອະນຸວົງໄດ້ກາຍເປັນແບບຢ່າງແຫ່ງຄວາມຮັກຊາດ ເຖິງວ່າຈະໄປຢູ່ຕ່າງປະເທດຕັ້ງແຕ່ 11 ປີ ຖືກອົບຮົມໃຫ້ລືມຄວາມເປັນລາວ ແຕ່ກໍ່ຍັງມີນໍ້າໃຈຮັກຊາດຢ່າງດູດດື່ມ, ຕໍ່ສູ້ຢ່າງບໍ່ຮູ້ອິດເມື່ອຍ ຈົນກາຍມາເປັນວິລະກະສັດວຽງຈັນ, ຫ້ອນໂຮມເອົາບັນດາຫົວເມືອງໄດ້ 165 ຫົວເມືອງ ແລະ ທໍາການກອບກູ້ເອກະລາດ. ສ່ວນເຈົ້າລາດສະວົງກໍ່ຍັງສືບຕໍ່ເຄື່ອນໄຫວຕໍ່ຕ້ານສະຫຍາມ ຈົນຊື່ສຽງຂອງເພິ່ນໄດ້ກາຍມາເປັນຊື່ເອີ້ນຂອງກອງທັບປະຊາຊົນລາວເຮົາໃນໄລຍະສ້າງຕັ້ງໃໝ່. ບົດຮຽນທີ່ເຈົ້າອະນຸວົງໄດ້ສ້າງໄວ້ໃຫ້ປຽບສະເໝືອນຄໍາພີອັນລໍ້າຄ່າທີ່ຄົນລຸ້ນຫຼັງຕ້ອງໄດ້ຮໍ່າຮຽນ ແລະເອົາເປັນແບບຢ່າງ.

## 3.ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານສັກດີນາສະຫຍາມຫຼັງການສິ້ນພະຊົນຂອງເຈົ້າອະນຸວົງ

ຍ້ອນປະຊາຊົນລາວຖືກບັງຄັບ ແລະ ກົດຂີ່ຂົ່ມເຫັງຄືດັ່ງທີ່ກ່າວມາຂ້າງເທິງນັ້ນຈຶ່ງທົນບໍ່ໄຫວ ແລະ ໄດ້ພາກັນລຸກຂຶ້ນຕໍ່ຕ້ານດ້ວຍຮູບການບຸກຕີແບບກອງຫຼອນ, ບໍ່ເສຍພາສາສີ, ຕ້ານເກັບເກນສ່ວຍ, ບໍ່ປະຕິບັດຕາມຄຳສັ່ງ, ຕ້ານການເກັບເກນແຮງງານ ແລະ ຕ້ານການເກັບກວດຈາກທ້ອງຖິ່ນ. ນອກຈາກນີ້ຍັງມີການຕໍ່ສູ້ດ້ວຍການແຕ່ງບົດວັນນະກຳເຊັ່ນ: ແຕ່ງກາບກອນ, ກະວີ, ບົດເພງ, ສຽງແຄນ, ຂັບລຳພື້ນເມືອງທີ່ມີເນື້ອເວົ້າເຖິງການກົດຂີ່ຂູດຮີດ, ຄວາມທຸກຍາກລຳບາກ ແລະ ການສາບແຊ່ງຂອງປະຊາຊົນລາວຕໍ່ສະຫຍາມ. ໃນຊຸມປີ ຄ.ສ 1830-1840 ສະຫຍາມໄດ້ເກນຄົນລາວເຮັດສົງຄາມກັບດາຍຫວຽດ ເພື່ອຍາດດິນຂະແມ ເຮັດໃຫ້ມີຂະບວນການຕໍ່ຕ້ານຢູ່ເຂດລາວພວນ ແລະ ລາວກາງ ມີສູນກາງຢູ່ເຊບັ້ງຫຽງ-ເຊບັ້ງໄຟ. ສະຫຍາມແຕ່ງຕັ້ງບັນດາເຊື້ອສາຍເຈົ້າອະນຸວົງໄປປາບ ສຸດທ້າຍກອງກຳລັງລາວກໍ່ບໍ່ສາມາດຕ້ານທານໄດ້ຈຶ່ງແຕກໜີ.

ຕໍ່ມາສະຫຍາມຈຶ່ງຕັ້ງດ່ານກວດກາ ຂຶ້ນ 7 ດ່ານມີສູນກາງຢູ່ນະຄອນພະນົມ ເຮັດໃຫ້ຂະບວນການຕໍ່ສູ້ຂອງປະຊາຊົນລາວເຄື່ອນໄຫວຍາກຂຶ້ນ ບາງສ່ວນກໍ່ໜີໄປລີ້ຊ້ອນຢູ່ປ່າ, ບາງສ່ວນກໍ່ໃຊ້ວັນນະກຳອອກມາຕໍ່ສູ້ເຊັ່ນ: ພື້ນວຽງ, ກາບເມືອງພວນ, ພື້ນລາດຊະວົງ, ບັ້ງຈຸ້ມ...

# ບົດທີ4
# ປະເທດລາວໄລຍະຕົກເປັນທືວເມືອງຂຶ້ນຝຣັ່ງ
## 1.ການປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງປີຄ.ສ 1893-1945

ພາຍຫຼັງທີ່ຝຣັ່ງຍຶດເອົາລາວທາງຝັ່ງຊ້າຍຂອງແມ່ນ້ຳຂອງໄດ້ແລ້ວ ພວກເຂົາໄດ້ຮີບຮ້ອນເຊັນສັນຍາແບ່ງແດນກັບປະເທດຕ່າງໆ ທີ່ຢູ່ອ້ອມຂ້າງໂດຍທັນທີ ເພາະມັນບໍ່ງບອກຂອບເຂດ. ເຄື່ອນໄຫວໃນທຸກດ້ານຂອງຝຣັ່ງຈາກນັ້ນຝຣັ່ງໄດ້ກຳນົດເສັ້ນຊາຍແດນພາກຕ່າງໆຂອງລາວຄືດັ່ງນີ້:

**ກ. ເສັ້ນຊາຍແດນທາງພາກຕາເວັນຕົກ**

ໄດ້ຖືເອົາແລວແມ່ນ້ຳຂອງເປັນເສັ້ນຊາຍແດນລະຫວ່າງລາວກັບສະຫຍາມຕາມສັນຍາວັນທີ 3 ຕຸລາ ປີ ຄ.ສ 1893 ເປັນການຝືນຕໍ່ສິດທິພື້ນຖານຂອງຄົນລາວ ຜູ້ເປັນເຈົ້າຂອງດິນແດນມາແຕ່ບູຮານນະການ. ສະນັ້ນ, ປະຊາຊົນລາວໃນແຖບສອງຝັ່ງແມ່ນຂອງ ເກີດຄວາມບໍ່ພໍໃຈແລ້ວປະທ້ວງ ຕໍ່ອຳນາດການປົກຄອງຂອງຝຣັ່ງ ແລະ ສະຫຍາມດ້ວຍຫຼາຍຮູບແບບ.

ສ່ວນຊາຍແດນສະຫຍາມ - ກຳປູເຈຍ ລວມທັງຊາຍແດນທີ່ຕິດກັບຈຳປາສັກຂອງລາວໃຫ້ຖືເອົາເສັ້ນກິ່ງໄປຕາມສັນພູປັນນ້ຳ, ເບື້ອງນ້ຳຕົກລົງທາງນແສນເປັນແດນກຳປູເຈຍ, ເບື້ອງນ້ຳ ຕົກໃສ່ນ້ຳຍົມເປັນຂອງສະຫຍາມ ແລະ ເບື້ອງແມ່ນຕົກລົງນາຂອງເປັນຂອງລາວ.

**ຂ. ເສັ້ນຊາຍແດນພາກຕາເວັນຕົກສ່ຽງເຫນືອ**

ພາຍຫຼັງຈັກກະພັດຝຣັ່ງ ແລະ ອັງກິດຮຸກຮານເຂົ້າອາຊີອາຄະເນແລ້ວຄວາມຂັດແຍ່ງຂອງພວກເຂົາກໍເພີ່ມຂຶ້ນອັງກິດໄດ້ທວງເອົາເຂດ 12  ພັນນາລື້ ແລະ ບ່ອນອື່ນໆ ທີ່ຄົນລື້ອາໄສຢູ່ໂດຍອ້າງວ່າເປັນດິນແດນຂອງພະມ້າ.  ຄວາມຂັດແຍ່ງນັບມື້ເພີ້ມຂຶ້ນ ສຸດທ້າຍກໍມີການເຈລະຈາກັນໃນ ວັນທີ 8    ເມສາ.1904    ໂດຍຕາງຫນ້າຝຣັ່ງແມ່ນ ທ່ານ ໂອກຸສ ປາວີ ຕາງຫນ້າອັງກິດແມ່ນ ທ່ານ ສະກັອດ ໄດ້ສັນຍາຄື ເອົາປະເທດສະຫຍາມມາເປັນລັດກັນຊົນ ພ້ອມທັງຮັບຮອງເອົາເສັ້ນຊາຍແດນ ຝັ່ງຂວາແມ່ນຂອງຄື ເມືອງ ຊຽງຕຸງ, ທ່າເດື່ອ, ທົ່ງຂີ້ເຫຼັກ , ລັດຊານ, ຊຽງລາຍ, ເມືອງຢອງໃຫ້ແກ່ພະມ້າ.

**ຄ. ເສັ້ນຊາຍແດນທາງພາກເຫນືອ**

ຫຼັງສົງຄາມລະຫວ່າງຈີນ ແລະ ຍີ່ປຸ່ນໄດ້ຍຸດຕິລົງ ຝຣັ່ງໄດ້ເຮັດສັນຍາສະບັບໜຶ່ງກັບຈີນ ໃນວັນທີ 20 ມິຖຸນາ 1895 ໃນສັນຍານີ້ນອກຈາກກຳນົດການພົວພັນທາງດ້ານການເມືອງ, ເສດຖະກິດລະຫວ່າງລາວ - ຈີນ ໂດຍເອົາຫ້າງອໍ້,  (ຫຼື ທາງຫໍ້) ເປັນເສັ້ນຊາຍແດນພ້ອມນີ້ ຝຣັ່ງກໍໄດ້ຍົກ ເອົາດິນແດນລາວທີ່ເປັນເປົ້າໝາຍຂັດແຍ່ງກັບອັງກິດຄື ເຂດສິບສອງພັນນາລື້ໃຫ້ແກ່ຈີນ ເພື່ອຕັດຕົ້ນເຫດການຜິດພາດລະຫວ່າງຝຣັ່ງກັບອັງກິດ.

ຈາກສັນຍານີ້ໄດ້ເຮັດໃຫ້ລາວເອົາເສຍດິນແດນສິບສອງພັນນາລື້ໃຫ້ແກ່ຈີນ ແຕ່ນັ້ນເປັນຕົ້ນມາ,  ພ້ອມນັ້ນຝຣັ່ງກໍກຳນົດຊາຍແດນຂອງລາວເຂດຫຼວງພະບາງ ກັບສະຫຍາມ ແມ່ນເລີ່ມແຕ່ປາກນ້ຳເຫຼືອງ ແລ້ວເນັ່ງໄປ

ຕາມລຳນ້ຳເຫືອງຈິນເຖິງພູເຂົ້າຫມັງງຈາກນັ້ນ ເບັ່ງໄປຕາມສັນພູປັນນ້ຳໄປທາງທິດເຫນືອເຖິງຍອດນ້ຳກອບແລ້ວ ຕາມລຳນ້ຳໄປຕົກໃສ່ນ້ຳຂອງ.

**ງ. ເສັ້ນຊາຍແດນທາງພາກຕາເວັນອອກ ແລະ ພາກໃຕ້**

ເມື່ອຝຣັ່ງມີສິດປົກຄອງດິນແດນທາງຝັ່ງຊ້າຍແມ່ນຂອງຢ່າງຖືກຕ້ອງຕາມກົດໝາຍແລ້ວ, ພວກເຂົາໄດ້ຖືເອົາລາວເປັນແຄວ້ນໜຶ່ງ ໃນບັນດາແຄວ້ນຕ່າງໆທີ່ຂຶ້ນກັບຝຣັ່ງຢູ່ອິນດູຈີນ ພາກຕາເວັນອອກ ແລະ ພາກໃຕ້ຂອງລາວບໍ່ໄດ້ກຳນົດຈະແຈ້ງຍ້ອນວ່າ ແຕ່ດຶກດຳບັນມາລາວ ແລະ ຊາວຫວຽດນາມໄດ້ຮັບຮູ້ກັນວ່າ ຖືເອົາສາຍພູຫຼວງເປັນບ່ອນກຳນົດຊາຍແດນ ສະໄໝຝຣັ່ງປົກຄອງພວກມັນບໍ່ໄດ້ເວົ້າຄືນມາອີກ (ບໍ່ມີສັນຍາ)

**ຈ. ດ້ານການປົກຄອງຂອງຝຣັ່ງຢູ່ລາວ**

ພວກເຂົາໄດ້ຈັດຕັ້ງການປົກຄອງຢູ່ລາວ ໂດຍແບ່ງອອກເປັນສາມໄລຍະຄື:

**ແຕ່ປີ ຄ.ສ 1893 – 1895**

ໄລຍະນີ້ ຝຣັ່ງຍັງຮັກສາຮູບການປົກຄອງເດີມຂອງສັກດີນາລາວໄວ້ ເພື່ອສະແດງຕົນວ່າຍັງເຄົາລົບອຳນາດອະທິປະໄຕຂອງລາວຢູ່ ໂດຍປະຕິບັດຍຸດໂທບາຍ "ເອົາໃຈສັກດີນາລາວ" ຄືເຈົ້າຊີວິດມີຫໍສະໜາມຫຼວງແບບເດີມມີລະບົບຂ້າລາຊະການຄົບຊຸດ ເຊັ່ນ ເຈົ້າອຸປະຮາດ, ເຈົ້າລາຊະວົງ, ເຈົ້າລາຊະບຸດ, ເຈົ້າລາຊະສຳພັນທະວົງ, ເຈົ້າລາຊະພາຄີໄນ, ເຈົ້າກົມມະຂຸນ, ເຈົ້າກົມມະວັງ.

**ແຕ່ປີ ຄ.ສ 1895 – 1899**

ປີ ຄ.ສ 1895 ຝຣັ່ງໄດ້ເລີ່ມປ່ຽນແປງລະບົບການປົກຄອງຢູ່ລາວ ຄື ໄດ້ປະກາດລົບລ້າງ ກົດຫມາຍເກົ່າຂອງສັກດີນາບາງສະບັບທີ່ຂັດກັບລະບົບການປົກຄອງ ແບບລ່າເມືອງຂຶ້ນຂອງຝຣັ່ງ. ຈາກນັ້ນຝຣັ່ງເຂົາກໍ່ໄດ້ຈັດແບ່ງປະເທດລາວອອກເປັນ 2 ເຂດດັ່ງນີ້:

- ພາກເໜືອ ໝາຍເຖິງຂອບເຂດອານາຈັກຫຼວງພະບາງໃນເມື່ອກ່ອນ ພວກເຂົາໄດ້ຈັດໃຫ້.ເປັນເຂດອາລັກຂາຂອງຝຣັ່ງ ເຊິ່ງມີເຈົ້າຊີວິດສັກກະລິນເປັນຜູ້ປົກຄອງແຕ່ຢູ່ໃຕ້ການຄວບຄຸມບົ່ງການຂອງຝຣັ່ງປະຈຳລາວ.
- ພາກໃຕ້ ນັບແຕ່ວຽງຈັນຈົນຮອດຊາຍແດນກຳປູເຈຍແມ່ນຈັດເປັນເຂດເມືອງຂຶ້ນໂດຍກົງ.

**ແຕ່ປີ ຄ.ສ 1899 - 1941**

ປີ ຄ.ສ 1899 ຝຣັ່ງໄດ້ຈັດເອົາປະເທດລາວເຮົາເປັນແຄ້ວນທີ 5 ຂອງສະຫະພັນອິນດູຈີນ - ຝຣັ່ງໄດ້ທ້ອນໂຮມສອງພາກຄື ພາກເຫນືອ ແລະ ພາກໃຕ້ເຂົ້າກັນ ແລະ ເອົາວຽງຈັນເປັນນະຄອນ ຫຼວງໃນປີ ຄ.ສ 1899 ຝຣັ່ງໄດ້ຈັດແບ່ງການປົກຄອງຢູ່ລາວອອກເປັນສອງສ່ວນ ສ່ວນກາງ ແລະ ສ່ວນທ້ອງຖິ່ນ.

- ອຳນາດການປົກຄອງສ່ວນກາງເຂົາຖືເອົາປະເທດລາວເປັນປະເທດເມືອງຂຶ້ນ ຫຼື ອານານິຄົມແຕ່ມີແຂວງໜຶ່ງມີອະພິສິດ ຄື ຫຼວງພະບາງຖືເປັນເມືອງອາລັກຂາ.

- ອຳນາດການປົກຄອງສ່ວນທ້ອງຖິ່ນ ຝຣັ່ງໄດ້ແບ່ງເຂດປົກຄອງອອກເປັນ 10 ແຂວງຄື ວຽງຈັນ ຫຼວງພະບາງ, ຊຽງຂວາງ, ຫົວພັນ, ຫົວຂອງ, ຜົ້ງສາລີ, ຄຳມ່ວນ, ສະຫວັນນະ ເຂດ, ສາລະວັນ ແລະ ຈຳປາສັກ, ແຕ່ລະແຂວງແມ່ນຝຣັ່ງເປັນເຈົ້າແຂວງສ່ວນເຈົ້າເມືອງ ແລະ ຂ້າລາຊະການ ຂັ້ນຕໍ່າລົງມາແມ່ນຄົນລາວທີ່ໄດ້ຮັບການເຫັນດີຈາກຝຣັ່ງຮອດປີ ຄ.ສ 1911 ໄດ້ມີການຈັດແບ່ງເຂດປົກຄອງຄືນໃຫມ່ເປັນ 12 ເຂດ (ເພີ່ມແຂວງອັດຕະປື ແລະ ແຂວງເມືອງໂຂງ) ຮອດປີ ຄ.ສ 1916 ຝຣັ່ງໄດ້ສ້າງ ເຂດຜົ້ງສາລີ ເປັນເຂດທະຫານທີ 5.

**ສ. ຮູບການກົດຂີ່ຂູດຮີດຂອງພວກລ່າເມືອງຂຶ້ນຝຣັ່ງຕໍ່ປະຊາຊົນລາວ**

**• ດ້ານເສດຖະກິດ**

ຝຣັ່ງໄດ້ວາງລະບຽບດ້ານແຮງງານໄວ້ວ່າ ຜູ້ຊາຍອາຍຸ 18 ປີຫາ 60 ປີ ຕ້ອງໄປເຮັດການໃຫ້ຝຣັ່ງຢ່າງນ້ອຍ 100 ວັນ/ປີ, ໃນຈຳນວນ 100 ວັນ ນີ້ເຂົາແບ່ງເປັນ 2 ປະເພດ ຄື ປະເພດ 60 ວັນເປັນກຸລີ ແລະ 40 ວັນຕ້ອງໄດ້ເຮັດການຫຼວງ. ປະເພດ 60 ວັນນັ້ນ ຕ້ອງໄດ້ໄປເຮັດວຽກດ້ວຍຕົນເອງຖ້າບໍ່ໄປຕ້ອງຈ້າງຄົນອື່ນໄປແທນດ້ວຍລາຄາແພງ (50 -100 ກີບ/ຖ້ຽວ) ຖ້າບໍ່ມີຜູ້ໄປແທນຈະຖືກປັບໄໝ ຫຼື ລົງໂທດຫນັກ. ສຳລັບການຫຼວງ 40 ວັນນັ້ນຖ້າບໍ່ຢາກໄປກໍ່ສາມາດຈ້າງຄົນອື່ນໄປແທນໄດ້ຖ້າບໍ່ມີຜູ້ໄປກໍຖືກລົງໂທດຄືກັນ.

- ການເກັບພາສີອາກອນແມ່ນມີທາງກົງ ແລະ ທາງອ້ອມຄື ທາງກົງແມ່ນເກັບທຸກໆປີ ຫຼືເກັບຕາມກຳນົດທີ່ແນ່ນອນ ແລະ ຕາຍໂຕ ເຊັ່ນ ສ່ວຍຄ່າຫົວ, ຄ່າຍົກເວັ້ນ ຄ່າຫົວຊ້າງ ແລະ ສັດລ້ຽງປະເພດຕ່າງໆທາງອ້ອມແມ່ນພາສີເກັບຈາກຕົວເລກວິສາຫະກິດຕ່າງໆຄື ພາສີຈາກຜົນຜະລິດ, ຜົນຜະລິດຈາກການເກັບເຄື່ອງປ່າຂອງດົງ, ຕົ້ນໄມ້ອຸດສາຫະກຳ ແລະ ພາສີ.ປັບໄໝຕ່າງໆ

**ການຂຸດຄົ້ນຊັບພະຍາກອນ**, ປີ 1900 ຝຣັ່ງເລີ່ມສຳຫຼວດບໍ່ແຮ່ຢູ່ໃນລາວໄດ້ ທອງ, ມາດ, ຊືນ, ເງິນ, ກົ່ວ ແລະ ຄຳຫຼາຍທີ່ສຸດ ນອກນັ້ນກໍຍັງມີເພັດພອຍ, ບໍ່ນ້ຳຮ້ອນ ປີ ຄ.ສ 1923 ພວກເຂົາເລີ່ມຂຸດຄົ້ນບໍ່ກົ່ວຢູ່ໂພນຕິ້ວ ແລະ ຢູ່ບໍ່ແໜງ ໂດຍໃຊ້ແຮງງານຄົນເປັນຕົ້ນ 1930 ຝຣັ່ງຂາຍງົວໄດ້ເຖິງ 123 ລ້ານກີບ, ນອກຈາກນີ້ຍັງໄດ້ຂຸດຄົ້ນເຄື່ອງປ່າຂອງດົງ, ຍຶດເອົາດິນໄຮ່, ດິນນາຂອງປະຊາຊົນລາວ ໄປສ້າງສວນນິຄົມຕ່າງໆຂອງພວກເຂົາເວລານັ້ນຄົນລາວ ກາຍເປັນລູກຈ້າງຂອງຝຣັ່ງຢ່າງຂາດຕົວ.

**ການຄົມມະນາຄົມ**ດ້ານນີ້ຝຣັ່ງລົງທຶນຫນ້ອຍທີ່ສຸດ ແລະ ໄດ້ກໍ່ສ້າງທາງບາງສາຍທີ່ຈຳເປັນໃຫ້ແກ່ການຂົນສົ່ງສິນຄ້າທີ່ສຳຄັນ ເຊິ່ງມີບັນດາເສັ້ນທາງຕ່າງໆຄື:

ຈາກຜົນຜະລິດກະສິກ. ແລະ ພາສີປັບໄຫມຕ່າງໆ.

- ປີ ຄ.ສ 1904 ເລີ່ມສ້າງທາງເລກທີ 9.
- ປີ ຄ.ສ 1911 ເລີ່ມສ້າງທາງເລກທີ 13.
- ປີ ຄ.ສ 1920 ເລີ່ມສ້າງທາງເລກທີ 6
- ປີ ຄ.ສ 1927 ເລີ່ມສ້າງທາງເລກທີ 7 ແລະ 12.
- ປີ ຄ.ສ 1942 ເລີ່ມສ້າງທາງເລກທີ 23.

ສ່ວນຫຼາຍເປັນທາງປູດິນເປັນເສັ້ນທາງນ້ອຍ, ແຄບ ສາມາດຮັບນໍ້າຫນັກໄດ້ພຽງແຕ່ 10 ໂຕນ ແລະ ແລ່ນໄດ້ແຕ່ຍາມລະດູແລ້ງ.

### ຊ. ດ້ານການສຶກສາ, ວັດທະນະທຳ, ສັງຄົມ ແລະ ສາທາລະນະສຸກ

**ດ້ານການສຶກສາ**

ປີ ຄ.ສ 1902 ແມ່ນປີທຳອິດທີ່ຝຣັ່ງໄດ້ລົງທຶນໃສ່ການສຶກສາຄື 6000 ກີບເທົ່າກັບ 2% ຂອງງົບປະມານທັງຫມົດເພື່ອແນ່ໃສ່ສ້າງຜູ້ແປພາສາ, ເວລານັ້ນມີໂຮງຮຽນຢູ່ 2 ແຫ່ງຄື ຢູ່ຫຼວງພະບາງ ແລະ ຢູ່ວຽງຈັນ ປີ 1915 ທົ່ວປະເທດມີໂຮງຮຽນພຽງແຕ່ 12 ແຫ່ງສ່ວນຫຼາຍ ແມ່ນໂຮງຮຽນມູນ ລະປະຖົມສຶກສາຜູ້ທີ່ໄດ້ຮຽນຕົ້ນຕໍແມ່ນລູກເຈົ້ານາຍ, ຜູ້ມີເງິນ, ປີ ຄ.ສ 1920 ຝຣັ່ງ ໄດ້ສ້າງໂຮງຮຽນ ການຊ່າງຫຼັງ ທຳອິດຢູ່ວຽງຈັນ. ປີຄ.ສ 1924 ມີໂຮງຮຽນຊັ້ນມັດທະຍົມຫຼັງທຳອິດຢູ່ວຽງຈັນ ມີນັກຮຽນ 15 ຄົນ, ຮອດ ປີທີ 4 ເຫຼືອນັກຮຽນພຽງ 5 ຄົນ. ຈາກນັ້ນມາຈຶ່ງມີໂຮງຮຽນເພີ່ມຂຶ້ນແຕ່ຜູ້ເຂົ້າຮຽນໃນນັ້ນຍັງແມ່ນລູກຫຼານເຈົ້ານາຍຜູ້ຮັ່ງມີ ແລະ ຄົນຕ່າງດ້າວ.

**ດ້ານວັດທະນະທຳສັງຄົມ**

ແມ່ນໃຊ້ການເຜີຍແຜ່ວັດທະນະທຳ, ຄຸນສົມບັດ, ແບບແຜນດຳລົງຊີວິດຮີດຄອງປະເພນີຂອງຝຣັ່ງຢູ່ໃນຫມູ່ຄົນລາວ ແນ່ໃສ່ສ້າງຄົນລາວໃຫ້ລືມຊາດແລ້ວໄປນິຍົມຊາດຝຣັ່ງຍອມຮັບເອົານະໂຍບາຍປົກຄອງແບບກົດຂີ່ຂູດຮີດຂອງຝຣັ່ງ.

**ດ້ານສາທາລະນະສຸກ**

ປີ ຄ.ສ 1896 ຝຣັ່ງລົງທຶນໃສ່ດ້ານນີ້ພຽງແຕ່ 1% ຂອງງົບປະມານທັງຫມົດ, ມາຮອດປີ ຄ.ສ 1910 ເພີ່ມເປັນ 1,6%, ປີ ຄ.ສ 1900 ມີໂຮງຫມໍພຽງແຕ່ 1 ແຫ່ງຢູ່ວຽງຈັນ, ປີ ຄ.ສ 1938 ທົ່ວປະເທດ ມີໂຮງຫມໍໃຫຍ່ພຽງແຕ່ຫນຶ່ງຫຼັງຢູ່ວຽງຈັນ, ມີໂຮງຫມໍນ້ອຍຢູ່ບາງແຂວງ ຫຼວງພະບາງ, ຊຽງຂວາງ, ປາກຫີນບູນ, ສະຫວັນນະເຂດ, ປາກເຊ ນອກນັ້ນມີສຸກສາລາຢູ່ບາງທ້ອງຖິ່ນ, ຈຳນວນແພດຫມໍມີຈຳກັດປະຊາຊົນຫນ້ອຍທີ່ສຸດທີ່ຈະໄດ້ເຂົ້າປິ່ນປົວເພາະບໍ່ມີເງິນ ດ້ວຍເຫດນັ້ນປະຊາຊົນລາວຈຶ່ງຖືກໂລກພະຍາດບຽດບຽນຢູ່ເປັນປະຈຳ, ອັດຕາການເພີ່ມຂຶ້ນຂອງພົນລະເມືອງກໍຊັກຊ້າເພາະອັດຕາການຕາຍ ຈະສູງກວ່າການເກີດ. ຕົວຢ່າງປີ ຄ.ສ 1933 ພະຍາດອະຫິວາໄດ້ລະບາດຢ່າງຮ້າຍແຮງ ເປັນປະຫວັດສາດຢູ່ວຽງຈັນ ແລະ ຫຼວງພະບາງ ສຳລັບຕົວເລກຢູ່ໂຮງຫມໍວຽງຈັນ ມີຄົນເປັນພະຍາດນີ້ ເຖິງ 448 ຄົນສາມາດປິ່ນປົວ ພຽງ 139 ຄົນ ຕາຍ 309 ຄົນ.

## 2.ຂະບວນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງແຕ່ປີ 1901-1939.

ຂະບວນການຕໍ່ສູ້ໃນໄລຍະ ນີ້ເກີດຂຶ້ນຢ່າງຫຼວງຫຼາຍຢູ່ຕາມເຂດ, ແຂວງ ແລະ ບາງທ້ອງຖິ່ນ, ໃນນັ້ນມີຂະບວນການຕໍ່ສູ້ທີ່ສຳຄັນ ເຊັ່ນ ຂະບວນການຕໍ່ສູ້ຂອງພໍ່ກະດວດ ຂະບວນການຕໍ່ສູ້ຂອງອົງແກ້ວ-ອົງກົມມະດຳ ແລະ ຂະບວນການຕໍ່ສູ້ຂອງເຈົ້າຟ້າປັດໃຈ ເຊິ່ງມີລັກສະນະຊົນ ເຜົ່າ, ທ້ອງຖິ່ນ ແລະ ໄລຍະເວລາອັນຍາວນານສົມຄວນ.

ກ. ຂະບວນການຕໍ່ສູ້ຂອງພໍ່ກະດວດ (ປີ ຄ.ສ 1901- 1903)

ພໍ່ກະດວດຊື່ນ້ອຍແມ່ນອາຍີ່ ເປັນຊົນເຜົ່າລາວລຸ່ມຕັ້ງບ້ານເຮືອນຢູ່ເມືອງພິນ.ໃນປີ ຄ.ສ. 1901 ພໍ່ກະດວດ ກັບທ່ານແກ້ວຈັດຕັ້ງຂະບວນຜູ້ມີບຸນຂຶ້ນ ທຳການເຄື່ອນໄຫວທາງສາສະໜາ ໃນນັ້ນມີຜູ້ເຂົ້າຮ່ວມຢ່າງຫຼວງຫຼາຍ ຮູບການຕໍ່ສູ້ທຳອິດ ແມ່ນການເຄື່ອນໄຫວທາງສາສະໜາ. ຂະບວນ ລຸກຂຶ້ນ ທຳອິດແມ່ນຢູ່ ເມືອງ ສອງຄອນ, ຈາກນັ້ນ ກໍ່ຂະຫຍາຍໄປຫຼາຍຈຸດເພື່ອບຸກໂຈມຕີຄ້າຍທະຫານຂອງຝຣັ່ງ ເວລາ 8 ໂມງ ເຊົ້າ ເດືອນສິງຫາ ຄ.ສ 1902 ຂະບວນໄດ້ເຕົ້າໂຮມກັນກຽມບຸກ ເຂົ້າຕົວເມືອງ ສະຫວັນນະເຂດ ຮອດ ຄ.ສ 1903 ຝຣັ່ງໄດ້ສົ່ງທະຫານ ໄປປາບປາມຂະບວນການຕໍ່ສູ້ເຮັດໃຫ້ກຳລັງຖືກທຳລາຍຢ່າງໜັກ ໃນນັ້ນພໍ່ກະດວດ ພ້ອມດ້ວຍທະຫານຈຳ ນວນ 300 ຄົນ ໄດ້ຖືກຂ້າຕາຍ ຈາກນັ້ນຂະບວນກໍ່ຄ່ອຍໆສິ້ນສຸດລົງ.

ຂ. ຂະບວນການຕໍ່ສູ້ຂອງອົງແກ້ວ, ອົງກົມມະດາ (ຄ.ສ 1901 - 1937)

ແມ່ນຂະບວນຂອງຊົນເຜົ່າລາວເທິງເຂດທີ່ໜັ້ນທຳອິດຕັ້ງຢູ່ບ້ານຕອກແຂວງສາລະວັນ (ປັດຈຸບັນ ແມ່ນແຂວງເຊກອງ) ວັນທີ 15 ເມສາ ຄ.ສ 1902 ຂະບວນຂອງອົງແກ້ວໄດ້ບຸກຕີກຳລັງທະຫານຂອງຝຣັ່ງ ໄດ້ ຫຼາຍບ່ອນຢູ່ແຂວງສາລະວັນ ຄ.ສ 1905 ຂະບວນຂອງອົງກົມມະດາໄດບອກ ຂຶ້ນຢູ່ພູກະແຕ (ເຂດທາງພາກ ຕາເວັນອອກຂອງສາຍພູຫຼວງ) ໄດ້ເຄື່ອນທັບຕີທະຫານຝຣັ່ງ ມີຄວາມຫຍຸ້ງຍາກແນວນັ້ນຝຣັ່ງ ໄດ້ຫາກົນອຸບາຍ ລອບສັງຫານຜູ້ນຳພາຂະບວນ. ຮອດວັນທີ 15 ມີນາ ປີຄ.ສ 1910 ອົງແກ້ວຖືກລອບສັງຫານ, ຈາກນັ້ນອົງກົມ ມະດາກໍສືບຕໍ່ນຳພາຂະບວນການຕໍ່ສູ້ຝຣັ່ງ ໄດ້ຫາທຸກວິທີເພື່ອສັງຫານອົງກົມມະດຳ ທັງສະກັດລັດຍິງ ແລະ ທັງ ຂໍເຈລະຈາ ແຕ່ກໍບໍ່ໄດ້ຮັບຜົນ ສຳເລັດ, ດັ່ງນັ້ນ, ເຮົາຈິ່ງບາງທີ່ຫ້າງແຮ້ວໃສ່ເຮັດໃຫ້ອົງກົມມະດາຖືກເຈັບສາຫັດ ແລະ ເສຍຊີວິດ ໃນປີ 1936 ຂະບວນກໍ່ສະຫຼາຍລົງ.

ຄ. ຂະບວນຕໍ່ສູ້ຂອງເຈົ້າຟ້າປັດໃຈ ຄ.ສ 1918-1922

ແມ່ນຂະບວນຕໍ່ສູ້ຂອງຊົນເຜົ່າມົ້ງຢູ່ແຂວງຫົວຂອງ ເກີດຂຶ້ນດ້ວຍຄວາມຄຽດແຄ້ນຍ້ອນລາຄາຢາຝິ່ນ ຕົກຕ່ຳ, ຄ່າພາສີເສຍສ່ວຍແຮງງານພັດໜັກໜ່ວງ. ຂະບວນເກີດຂຶ້ນທຳອິດແມ່ນ ຢູ່ພູຈອມຈິກຈອມຈັນ ປີ ຄ.ສ 19 18 - 1920 ຂະບວນຂອງເຈົ້າຟ້າປັດໃຈ ຂະຫຍາຍຮອດແຂວງ ຫຼວງພະບາງ, ຊຽງຂວາງ, ຫົວພັນ ຂະບວນຮອດບ່ອນໃດ ແມ່ນຈັດຕັ້ງເຈົ້າຟ້າຂຶ້ນບ່ອນນັ້ນຮອດ ວັນທີ 17 ພະຈິກ ຄ.ສ 1922 ເຈົ້າຟ້າປັດໃຈໄດ້ ຖືກລອບສັງຫານຈາກນັ້ນ ຂະບວນການກໍຄ່ອຍໆ ສະຫຼາຍລົງ.

ງ. ຂະບວນຕໍ່ສູ້ໃຕ້ການນຳພາຂອງພັກຄອມມູຍນິດອິນດູຈີນ 1930 - 1939

ພັກຄອມມູນິດອິນດູຈີນສ້າງຕັ້ງຂຶ້ນ ໃນວັນທີ 3 ກຸມພາ ປີຄ.ສ 1930 ທີ່ຮົງກົງ ໂດຍແມ່ນ ທ່ານ ໂຮ່ຈິ ມິນ ເປັນຜູ້ຈັດຕັ້ງ ແລະ ນຳພາ ທຳອິດພັກນີ້ວ່າ “ພັກຄົນງານຫວຽດນາມ” ມາຮອດ ເດືອນຕຸລາ ປີ 1930 ກອງ ປະຊຸມສູນກາງພັກຄັ້ງທຳອິດໄດ້ໄຂຂຶ້ນ ເພື່ອຕີລາຄາສະພາບການ ແລະ ປັບປຸງການເມືອງໃຫມ່, ອີງໃສ່ສະພາບ ຕົວຈິງກອງປະຊຸມໄດ້ປ່ຽນຊື່ພັກມາເປັນ "ພັກຄອມມູຍນິດ ອິນດູຈີນ” ນັບແຕ່ນັ້ນມາການປະຕິວັດອິນດູຈີນໄດ້ ເຕີບໃຫຍ່ຂະຫຍາຍຕົວຢ່າງເຂັ້ມແຂງກອງປະຊຸມໃຫຍ່ຄັ້ງ ທີ 2 ຂອງອົງການສາກົນຄອມມູຍນິດທີ III ເມື່ອ ຄ.ສ 1931 ໄດ້ຮັບຮອງເອົາພັກຄອມມຸນິດອິນດູຈີນເປັນພາກສ່ວນໜຶ່ງເອກະລາດຂອງອົງການສາກົນຄອມມູ

ນິດທີ III ແຕ່ນັ້ນ ມາການປະຕິວັດອິນດູຈີນກໍກາຍເປັນພາກສ່ວນໜຶ່ງຂອງການປະຕິວັດໂລກ, ໃນນັ້ນການປະຕິວັດ ແຕ່ລະຊາດໃນອິນດູຈີນກໍແມ່ນພາກສ່ວນໜຶ່ງ ທີ່ຕັດແຍກອອກຈາກຫົວໜ່ວຍການປະຕິວັດອິນດູຈີນບໍ່ໄດ້,

ນັບແຕ່ເວລານັ້ນມາການປະຕິວັດລາວເຮົາກໍມີພັກນໍາພາ, ມີແນວທາງຕໍ່ສູ້ຢ່າງຖືກຕ້ອງຄັນ ທຸງຊາດປະຊາທິປະໄຕໄດ້ກາຍເປັນຄັນທຸງຊີ້ນໍາຂະບວນຕໍ່ສູ້ຂອງຊາດຕ້ານລັດທິລ່າເມືອງຂຶ້ນຂອງ ຝຣັ່ງ. ບັນດານັກຄອມມູຍນິດຢູ່ລາວກໍໄດ້ຂົນຂວາຍປະຊາຊົນທາງລັບ ແລະ ນໍາພາປະຊາຊົນຕໍ່ສູ້ ຕ້ານພວກລ່າເມືອງຂຶ້ນຝຣັ່ງດ້ວຍຫຼາຍຮູບການ. .

ປີ ຄ.ສ 1931 ຢູ່ວຽງຈັນຂະບວນການປະທ້ວງໄດ້ບຸກເຂົ້າໂຮງການຕໍາຫຼວດສັນຕິບານ ເພື່ອທວງໃຫ້ປ່ອຍຕົວຜູ້ທີ່ຖືກຄຸມຂັງໃນຂໍ້ຫາຕໍ່ຕ້ານລັດຖະບານ ຄ.ສ 1932 – 1933 ຢູ່ທີ່ບໍ່ກົ່ວ ໂພນຕິ້ວ ແລະ ບໍ່ແຫນງ, ຊາວກໍາມະກອນລາວ ໄດ້ລຸກຂຶ້ນປະທ້ວງເປັນຂະບວນຕໍ່ເນື່ອງກັນ ເພື່ອໃຫ້ຫຼຸດຜ່ອນຊົ່ວໂມງເຮັດວຽກ, ເພີ່ມເງິນເດືອນດັດແປງເງື່ອນໄຂເຮັດວຽກ ແລະ ປັບແປງຊີວິດການເປັນຢູ່ຂອງເຂົາເຈົ້າ.

## 2. ການລຸກຮື້ຂຶ້ນຢຶດອໍານາດ ແລະ ປະກາດເອກະລາດຄັ້ງທໍາອິດຂອງລາວ.

ເມື່ອສົງຄາມໂລກຄັ້ງທີ 2 ລະເບີດຂຶ້ນ ແລະ ແຜ່ລາມໄປທົ່ວທະວີບເອີລົບ, ບັນດາຈັກກະພັດຈໍາຕ້ອງປະປ່ອຍຫົວເມືອງຂຶ້ນຂອງຕົນເອງ ແລ້ວສຸມກໍາລັງເຂົ້າໃສ່ສົງຄາມເອີຣົບ. ສົງຄາມລະຫວ່າງຟາດຊິດເຢຍລະມັນກັບຝຣັ່ງເຮັດໃຫ້ຝຣັ່ງປະລາໄຊອັນເຮັດໃຫ້ກໍາລັງຝຣັ່ງຢູ່ອິນດູຈີນອ່ອນເພຍລົງ, ເປັນໂອກາດດີໃຫ້ແກ່ຟາດຊິດຍີ່ປຸ່ນຄື ໃນວັນທີ 23 ກໍລະກົດ 1941 ບານຝຣັ່ງ (ເດີໂກນ) ຈໍາຕ້ອງຍອມເຊັນສັນຍາ "ຮ່ວມປ້ອງກັນອິນດູຈີນ" ກັບຍີ່ປຸ່ນ, ນັບແຕ່ມີສັນຍານີ້ເປັນຕົ້ນມາປະຊາຊົນລາວກໍຄືປະຊາຊົນອິນດູຈີນໄດ້ຕົກຢູ່ໃຕ້ສອງແອກປົກຄອງຄືຝຣັ່ງ ແລະ ຍີ່ປຸ່ນພວກໄດ້ແຂ່ງຂັນກັນກົດຂີ່ຂູດຮີດປະຊາຊົນລາວ ແລະ ອິນດູຈີນຢ່າງຫນັກຫນ່ວງອັນໄດ້ເພີ່ມທະວີຄວາມຄຽດແຄ້ນໃຫ້ແກ່ປະຊາຊົນລາວ ກໍຄືປະຊາຊົນອິນດູຈີນຍິ່ງຂຶ້ນ. ໃນສະພາບເງື່ອນໄຂຄືແນວນັ້ນບັນດານັກຄອມມຸນິດລາວ ກໍໄດ້ຈັດຕັ້ງແນວໂຮມຂຶ້ນ ເພື່ອຕໍ່ຕ້ານກັບຈັກກະພັດຝຣັ່ງ ແລະ ຟາດຊິດ ຍີ່ປຸ່ນແນວໂຮມນີ້ມີຊື່ວ່າ "ພັນທະມິດເອກະລາດ" ນັບແຕ່ນັ້ນມາຂະບວນຕໍ່ຕ້ານຈັກກະພັດລ່າເມືອງ ຂຶ້ນຝຣັ່ງ ແລະ ຟາດຊິດຍີ່ປຸ່ນໄດ້ຂະຫຍາຍຕົວໄປທົ່ວປວງຊົນ ແລະ ກ້າວ ໄປສູ່ການສ້າງຕັ້ງເປັນ ອົງການ "ລາວອິດສະຫຼະ" ຂຶ້ນເພື່ອຕໍ່ສູ້ຍາດເອົາເອກະລາດ ແລະ ອິດສະ ຫຼະພາບ.

ມາເຖິງເດືອນມີນາ 1945 ນັກປະຕິວັດລາວໄດ້ສ້າງຕັ້ງທີ່ຫມັ້ນຕໍ່ຕ້ານຂຶ້ນຢູ່ນາແກ (ນະຄອນ ພະນົມ, ປະເທດໄທປັດຈຸບັນ) ຢູ່ທີ່ນີ້ໄດ້ສ້າງຕັ້ງກອງທະຫານປະສົມລາວ - ຫວຽດນາມຂຶ້ນຕໍ່ມາ ເອີ້ນວ່າ "ກອງທະຫານອິດສະຫຼະ" ຮອດເດືອນກໍລະກົດປີ ຄ.ສ 1945 ຟາດຊິດຍີ່ປຸ່ນ ໄດ້ເປີດບັ້ນຮົບ ກວດລ້າງເຂດທີ່ຫມັ້ນນາແກ. ສະນັ້ນ ກອງທະຫານອິດສະຫຼະຈໍ່ຕ້ອງໄດ້ຂ້າມຂອງ ມາທາງຝັ່ງຊ້າຍ ແລ້ວເຄື່ອນໄຫວຈັດຕັ້ງກອງກໍາລັງປະກອບອາວຸດປະຊາຊົນຂຶ້ນເອີ້ນວ່າ "ຫນ່ວຍປ້ອງກັນອິດສະຫຼະ" ເພື່ອສ້າງເງື່ອນໄຂໃຫ້ແກ່ການຢຶດອໍານາດ. ການລຸກຮື້ຂຶ້ນຢຶດອໍານາດ ແລະ ປະກາດເອກະລາດຄັ້ງທໍາອິດຂອງລາວ

ເລີ່ມເຂົ້າເດືອນສິງຫາປີ 1945 ຂະບວນການຕໍ່ຕ້ານຟາດຊິດຍີ່ປຸ່ນລະເບີດຂຶ້ນຢ່າງຮຸນແຮງ ແລະ ຂະຫຍາຍຕົວຢ່າງກວ້າງຂວາງໃນທົ່ວປະເທດ. ຈາກນະຄອນຫຼວງວຽງຈັນໄປສູ່ແຂວງຕ່າງໆ ມາຮອດວັນທີ 23 ສິງຫາ ປີ 1945 ຊາວນະຄອນຫຼວງວຽງຈັນຫຼາຍພັນຄົນໄດ້ໂຮມຊຸມນຸມຄັ້ງຍິ່ງ ໃຫຍ່ທີ່ສະຫນາມກິລາແຫ່ງຊາດ ປະກາດຍຶດອໍານາດຢູ່ນະຄອນຫຼວງວຽງຈັນກໍຄືຍຶດອໍານາດທົ່ວປະເທດ ຈາກຟາດຊິດຍີ່ປຸ່ນ ແລະ ລ່າເມືອງ ຂຶ້ນຝຣັ່ງ. ຟາດຊິດຍີ່ປຸ່ນຍອມຈໍານົນຢ່າງບໍ່ມີເງື່ອນໄຂ ເພາະເວລາ ນັ້ນຍີ່ປຸ່ນກໍ່ຖືກປະລາໄຊໃນສົງຄາມໂລກຄັ້ງທີ 2 ຢ່າງຫນັກຫນ່ວງ.

ມາໃນວັນທີ 10 ຕຸລາ ຄະນະກໍາມະການປະຊາຊົນໄດ້ເປີດກອງປະຊຸມເປີກສາຫາລືເລື່ອງ ການລຸກຮື້ຂຶ້ນ ປະກາດເອກະລາດຂອງລາວ. ພ້ອມທັງເປີກສາການເລືອກຕັ້ງຄະນະລັດຖະບານລາວ ເອກະລາດ. ໃນລັດຖະ ບານຄັ້ງນີ້ໄດ້ເລືອກຕັ້ງພະຍາຄາມ້າວ ວິໄລ (ເຈົ້າແຂວງແຂວງວຽງຈັນ) ເປັນນາຍົກລັດຖະມົນຕີ ແລະ ມີຄະນະ ລັດຖະບານປະກອບທັງຫມົດ 10 ທ່ານ.

ມາຮອດເຊົ້າວັນທີ 12 ຕຸລາ 1945 ຊາວນະຄອນຫຼວງວຽງຈັນເຕົ້າໂຮມມິດຕິ່ງຄັ້ງຍິ່ງໃຫຍ່ຢູ່ ຕໍ່ຫນ້າໂຮງການ ເຈົ້າແຂວງ ເພື່ອຟັງຄໍາຖະແຫຼງການປະກາດຄວາມເປັນເອກະລາດ, ອິດສະລະພາບ ຂອງລາວ, ປະກາດສ້າງຕັ້ງ ລັດຖະບານລາວເອກະລາດຢ່າງເປັນທາງການ.

## 4. ການປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງແ ລະ ການຕໍ່ສູ້ຂອງປະຊາຊົນລາວ (ຄ.ສ 1945-1954).

### 4.1. ພວກລ່າເມືອງຂຶ້ນຝຣັ່ງກັບຄືນຮຸກຮານລາວຄັ້ງທີ2ໃນປີ 1946

ພາຍຫຼັງປະກາດເອກະລາດ ແລະ ສ້າງຕັ້ງລັດຖະບານລາວເອກະລາດຄັ້ງທໍາອິດໃນວັນທີ 12 ຕຸລາ ປີ 1945. ຟາດຊິດຍີ່ປຸ່ນຖືກປະລາໄຊໃນສົງຄາມໂລກຄັ້ງທີ II ແລະ ຖອນກໍາລັງອອກຈາກອິນດູຈີນຢ່າງບໍ່ມີ ເງື່ອນໄຂ, ພວກລ່າເມືອງຂຶ້ນຝຣັ່ງກັບຄືນມາຮຸກຮານລາວອີກເປັນຄັ້ງທີ 2 ໃນເດືອນ 3 ປີ 1946 ແລະ ວາງແອກ ປົກຄອງລ່າເມືອງຂຶ້ນຢູ່ລາວກໍຄືອິນດູຈີນ. ເພື່ອຕໍ່ຕ້ານກັບລ່າເມືອງຂຶ້ນຝຣັ່ງ, ກໍາລັງປະຕິວັດລາວພາຍໃຕ້ການນໍາ ພາຂອງອົງຄະນະ ພັກແຄ້ວນລາວໄດ້ປັບປຸງກໍາລັງທາງດ້ານການເມືອງ ແລະ ການທະຫານໃຫ້ເຕີບໃຫຍ່ເຂັ້ມແຂງ ຄື:

- ແຕ່ປີ 1947 - 1950 ເຂດທີ່ຫມັ້ນຕໍ່ຕ້ານໄດ້ຮັບການກໍ່ສ້າງຂຶ້ນຫຼາຍແຫ່ງແຕ່ເຫນືອຫາໃຕ້, ແຕ່ ຕາເວັນອອກຫາຕາເວັນຕົກ.
- ກໍາລັງປະກອບອາວຸດອິດສະຫຼະໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ພາຍໃຕ້ການນໍາພາຂອງ ທ່ານ ໄກສອນ ພົມວິຫານ.
- ແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານໄດ້ຮັບການກໍ່ສ້າງຂຶ້ນໃນວັນທີ 13 / 8/ 1950 ເຊິ່ງ ເປັນຕົ້ນກໍາເນີດຂອງກອງທັບປະຊາຊົນລາວ ໃນປັດຈຸບັນ.

- ກ້າວເຂົ້າສູ່ລະດູແລ້ງ ໃນປີ 1953 - 1954, ກອງທັບປະຊາຊົນ ລາວສົມທົບກັບສະໜາມຮົບຫວຽດນາມ ໂດຍສະເພາະສະໜາມຮົບດຽນບຽນຟູ ໄດ້ທັບມ້າງກອງທະຫານຝຣັ່ງ ເຊິ່ງມີຈັກ ກະພັດອາເມຣິກາຊ່ວຍໜູນຖືກປະລາໄຊຢ່າງເຈັບແສບ ໃນວັນທີ 7 ພຶດສະພາ ປີ 1954. ເຫດການດັ່ງກ່າວນັ້ນ ໄດ້ສ້າງເງື່ອນໄຂດີໃຫ້ແກ່ກອງປະຊຸມສາກົນເປີດຂຶ້ນ ເພື່ອເຈລະຈາ ບັນຫາອິນດູຈີນ.

**4.2. ກອງປະຊຸມເຊີແນວ 1954 ເນື້ອໃນຄວາມໝາຍປະຫວັດສາດສັນຍາເຊີແນວຕໍ່ລາວ, ຕໍ່ອິນດູຈີນ ແລະ ຕໍ່ໂລກ.**

**ກ. ກອງປະຊຸມເຊີແນວ**

ຄ.ສ. 1954 ກອງປະຊຸມເຊີແນວ ໄດ້ເລີ່ມເປີດຂຶ້ນໃນວັນທີ 26 ເມສ ຄສ 1954 ເຊິ່ງແມ່ນສະຫະພາບໂຊຫວຽດ ແລະ ອັງກິດເປັນປະທານຄູ່ຂອງກອງປະຊຸມ, ນອກນີ້ຍັງມີສະຫະລັດອາເມຣິກາ, ເກົາຫຼີໃຕ້... ໃນເບື້ອງຕົ້ນກອງປະຊຸມໄດ້ຄົ້ນຄ້ວາກ່ຽວກັບ ບັນຫາເກົາຫຼີ ເຊິ່ງໄດ້ດຳເນີນມາຮອດວັນທີ 7 ພຶດສະພາ ຄ.ສ 1954 ການຄົ້ນຄ້ວາກ່ຽວບັນຫາເກົາຫຼີໄດ້ສິ້ນສຸດລົງ, ໃນຂະນະນັ້ນພໍດີຂ່າວໄຊຊະນະຂອງກອງທັບ ແລະ ປະຊາຊົນຫວຽດນາມໃນສະໜາມຮົບດຽນບຽນຟູໄດ້ມາເຖິງກອງປະຊຸມ. ທ່ານ ໂມໂລຕອບ ຫົວໜ້າຜູ້ແທນສະພາບໂຊຫວຽດໄດ້ສະເໜີໃຫ້ກອງປະຊຸມສືບຕໍ່ຢູ່ອິນດູຈີນ, ພ້ອມນັ້ນ ທ່ານຍັງໄດ້ສະເໜີໃຫ້ເຊີນເອົາຜູ້ແທນຂອງລາວ, ຫວຽດນາມ ເຂົ້າຮ່ວມກອງປະຊຸມ. ຄຳສະເໜີດັ່ງກ່າວໄດ້ຮັບການສະໜັບສະໜູນຈາກຄະນະຜູ້ແທນທີ່ຮັກຫອມສັນຕິພາບ, ສະນັ້ນ ກອງປະຊຸມແກ້ໄຂບັນຫາອິນດູຈີນ ຈຶ່ງໄດ້ໄຂຂຶ້ນ ໃນວັນທີ 8 ພຶດສະ. ໂດຍມີຜູ້ແທນຂອງລັດຖະບານປະເທດຕ່າງໆເຂົ້າຮ່ວມ ເຊັ່ນ ສະຫະພາບໂຊຫວຽດ, ອັງກິດ, ສາທາລະນະລັດປະຊາຊົນຈີນ, ສະຫະລັດອາເມຣິກາ, ຝຣັ່ງ, ສາທາລະນະລັດປະຊາທິປະໄຕຫວຽດນາມແລະ ພາກໃຕ້ຫວຽດນາມ, ກຳປູເຈຍ ແລະ ລາຊາອານາຈັກລາວ, ໂດຍຜູຍ ຊະນະນິກອນ (ລັດຖະມົນຕີກະຊວງການຕ່າງປະເທດເປັນຫົວໜ້າຄະນະ) ທີ່ກອງປະຊຸມ ທ່ານ ຟາມວັນດົງ ຫົວໜ້າຄະນະຜູ້ແທນ ສ. ຫວຽດນາມ ໄດ້ສະເໜີໃຫ້ກອງປະຊຸມເຊີນເອົາຜູ້ແທນຂອງກຳລັງຮັກຊາດລາວ ແລະ ຂະແມຕໍ່ຕ້ານເຂົ້າຮ່ວມ, ແຕ່ ຜູຍ ຊະນະນິກອນ ໄດ້ປະຕິບັດຕາມຄຳສັ່ງຂອງອາເມຣິກາທຳການປະຕິເສດລັດຖະບານລາວຕໍ່ຕ້ານຢ່າງຮຸນແຮງ, ພ້ອມດຽວກັນບັນດາຫາງສຽງຂອງຝ່າຍຕາເວັນຕົກກໍ່ຄັດຄ້ານໄປຕາມໆກັນ ສະນັ້ນ, ຜູ້ແທນຂອງຝ່າຍກຳລັງຮັກຊາດລາວ ແລະ ຂະແມຕໍ່ຕ້ານຈຶ່ງບໍ່ໄດ້ເຂົ້າຮ່ວມໂຕະປະຊຸມໂດຍກົງ.

ໃນການເຈລະຈາຜູ້ແທນຝຣັ່ງພະຍາຍາມບິດເບືອນບໍ່ຍອມຮັບຮູ້ການປະລາໄຊຂອງພວກເຂົາຢູ່ອິນດູຈີນ , ສ່ວນສະຫະລັດອາເມຣິກາພັດມີຄວາມຕ້ອງການໃຫ້ລູກມືຂອງເຂົາຂຶ້ນກຳອຳນາດ ຢູ່ລາວ, ກຳປູເຈຍ ແລະ ພາກໃຕ້ຫວຽດນາມ ເພື່ອເຂົາຈະເຂົ້າຄວບຄຸມບັນຊາໄດ້ໂດຍສະດວກໃນການປາບປາມກຳລັງປະຕິວັດ ແລະ ເຮັດໃຫ້ປະເທດເຫຼົ່ານັ້ນຂຶ້ນກັບພວກເຂົາໂດຍກົງ, ແຕ່ໃນຂະນະດຽວກັນນັ້ນ ອັງກິດ ພັດມີຄວາມຕ້ອງການຢຸດຕິສົງຄາມຢູ່ອິນດູຈີນ, ເພາະອັງກິດຢ້ານວ່າຝຣັ່ງ ແລະ ອາເມຣິກາຈະມີອິດທິພົນກ້ວາງຂວາງໃນຂົງເຂດອາຊີຕາເວັນອອກ ສ່ຽງໃຕ້ເຊິ່ງເປັນການແຕະຕ້ອງສັດ ຜົນປະໂຫຍດຂອງອັງກິດ ຢູ່ປະເທດເມືອງຂຶ້ນຂອງພວກເຂົາໃນຂົງເຂດດັ່ງກ່າວ. ສ່ວນຜູ້ແທນຂອງ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ກໍໄດ້ພະຍາຍາມສູ້ຊົນໃຫ້ຝຣັ່ງຖອນກອງທະຫານອອກຈາກອິນດູຈີນ, ມອບເອກະລາດໃກ້ແກ່ສາມປະເທດຄືຫວຽດນາມ, ລາວ ແລະ ກຳປູເຈຍ

ເຊິ່ງທັດສະນະດັ່ງກ່າວນັ້ນ ໄດ້ຮັບການສະໜັບສະໜູນຈາກ ສະຫະພາບໂຊຫວຽດ ແລະ ປະເທດທີ່ຮັກຫອມສັນຕິພາບ ຕະຫຼອດຮອດປະຊາຊົນຝຣັ່ງກໍ່ໄດ້ໃຫ້ການສະໜັບສະໜູນ, ການເຈລະຈາແກ່ຍາວຮອດວັນທີ 21 ກໍລະກົດ ຄສ 1954 ຜູ້ແທນບັນດາປະເທດຈຶ່ງໄດ້ພ້ອມກັນ ລົງນາມໃນສັນຍາວ່າດ້ວຍການຢຸດຕິສົງຄາມອິນດູຈີນ ໂດຍທ່ານຜູ້ຕາງໜ້າໃຫ້ແກ່ຝ່າຍກຳລັງຮັກຊາດຂອງສາມຊາດອິນດູຈີນ ແມ່ນທ່ານຮອງລັດຖະມົນຕີກະຊວງປ້ອງກັນປະເທດຫວຽດນາມ ແລະ ຝ່າຍຝຣັ່ງແມ່ນນາຍພົນ ອາການທະຫານສູງສຸດຂອງກາລັງທັບຝຣັ່ງເປັນຜູ້ລົງນາມໃນສັນຍາດັ່ງກ່າວ.

**ເນື້ອໃນຂອງສັນຍາເຊີແນວ**

**ເນື້ອໃນສັນຍາເຊີແນວຕໍ່ກັບອິນດູຈີນ**

- ປະເທດທີ່ເຂົ້າຮ່ວມກອງປະຊຸມ ເຊີແນວ ຮັບຮອງເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ 3 ປະເທດ ອິນດູຈີນ ລາວ, ຫວຽດນາມ ແລະ ກຳປູເຈຍ
- ເພື່ອຢຸດຕິສົງຄາມ ແລະ ນຳເອົາສັນຕິພາບມາສູ່ຫວຽດນາມນັ້ນ, ກອງປະຊຸມໄດ້ເຫັນດີໃຫ້ທັງສອງຝ່າຍປະຕິບັດການຢຸດຍິງ, ສົ່ງສະເລີຍເສິກ, ຮັບປະກັນບໍ່ໃຫ້ມີການຈຳແນກຝ່າຍໃດ ຝ່າຍໜຶ່ງ, ບໍ່ໃຫ້ແກ້ແຄ້ນບຸກຄົນທີ່ຮ່ວມງານກັບຝ່າຍໃດຝ່າຍໜຶ່ງ ເປັນເຂດປອດທະຫານຊົ່ວຄາວໄດ້ກຳນົດເອົາເສັ້ນຂະໜານທີ່ 17 ອົງສາເໜືອ.
- ຫ້າມບໍ່ໃຫ້ສົ່ງທະຫານ ຫຼື ພົນລະເຮືອນເຂົ້າອິນດູຈີນ, ຫ້າມບໍ່ໃຫ້ຕ່າງປະເທດຕັ້ງຖານທັບ ຢູ່ອິນດູຈີນ, ບໍ່ອະນຸຍາດໃຫ້ຊາດໃດໃຊ້ດິນແດນອິນດູຈີນ ເພື່ອກໍ່ສົງຄາມຮຸກຮານປະເທດອື່ນ ແລະ ບໍ່ໃຫ້ 3 ປະເທດ ອິນດູຈີນ ເຂົ້າຮ່ວມກຸ່ມການທະຫານໃດໆ.

**ເນື້ອໃນສັນຍາເຊີແນວກ່ຽວກັບລາວ**

ສັນຍາເຊີແນວໄດ້ກຳນົດເນື້ອໃນ ກ່ຽວກັບປະເທດລາວມີ 6 ບັນຫາໃຫຍ່, ລວມມີ 40 ມາດຕາ ເຊິ່ງໄດ້ເນັ້ນໜັກດັ່ງນີ້:

- ການຢຸດຍິງ ແລະ ຖອນທະຫານຕ່າງດ້າວອອກຈາກລາວ ໃຫ້ທຸກຝ່າຍເລີ່ມປະຕິບັດແຕ່ 8 ໂມງເຊົ້າເວລາທ້ອງຖິ່ນຂອງວັນທີ 6 ສິງຫາ ປີ ຄ.ສ 1954 ເປັນຕົ້ນໄປ, ສ່ວນການຖອນທະຫານຕ່າງດ້າວອອກຈາກລາວນັ້ນໃຫ້ສຳເລັດພາຍໃນກຳນົດ 120 ວັນ ນັບແຕ່ວັນທີສັນຍາມີຜົນບັງຄັບໃຊ້ເປັນຕົ້ນໄປ.
- ຫ້າມບໍ່ໃຫ້ກອງທະຫານຕ່າງດ້າວ ໃດໆເຂົ້າມາແຊກຊຶມ ແລະ ຫ້າມເອົາອາວຸດຍຸດທະພັນໃດໆເຂົ້າມາປະເທດລາວ ຍົກເວັ້ນແຕ່ອາວຸດທີ່ຈຳເປັນແກ່ການປ້ອງກັນຊາດ. ຖ້າຫາກເອົາເຂົ້າມາກໍໃຫ້ເອົາໄວ້ຕາມຈຸດຕ່າງໆ ເຊັ່ນ ຫຼວງພະບາງ, ຊຽງຂວາງ, ວຽງຈັນ, ເຊໂນ, ປາກເຊ, ສະຫວັນນະເຂດ ແລະ ເຊໂປນ. ການແຍກກຳລັງ ແລະ ກຳນົດທີ່ຕັ້ງຂອງທະຫານ, ໃນໄລຍະເວລາລໍຖ້າການຮວມລາວ, ກອງທະຫານຂອງຝ່າຍປະເທດລາວໃຫ້ໄປເຕົ້າໂຮມຊົ່ວຄາວ ຢູ່ 2 ແຂວງຄື ແຂວງຜົ້ງສາລີ ແລະ ຊຳເໜືອ, ສ່ວນຜູ້ທີ່ຖືກປົດປ່ອຍອອກຈາກກອງທະຫານນັ້ນມີສິດກັບຄືນບ້ານເດີມ ຫຼື ຈະດຳລົງຊີວິດຢູ່ແຂວງໃດແຂວງໜຶ່ງກໍໄດ້. ສະເລີຍເສິກທີ່ຕ່າງຝ່າຍຈັບໄດ້ ແລະ ພົນລະເຮືອນທີ່ຖືກກັກຂັງໃນປາງສົງຄາມນັ້ນໃຫ້ປ່ອຍ

ຕົວພາຍໃນກຳນົດ 30 ວັນ. ພ້ອມທັງຮັບປະກັນສິດເສລີພາບຂອງເຂົາເຈົ້າສ່ວນສະເລີຍເສິກທີ່ເປັນຊາວຕ່າງດ້າວນັ້ນມອບໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອຫາວິທີສົ່ງພວກກ່ຽວກັບບ້ານເດີມ.

- ວິທີການແກ້ໄຂກໍລະນີຜິດພາດແມ່ນໃຫ້ຖືເອົາສຽງເອກະສັນກັນ, ພ້ອມນັ້ນຕ້ອງຈັດຕັ້ງຄະນະກຳມະການປະສົມ ແລະ ຄະນະກຳມະການກວດກາສາກົນເຊິ່ງປະກອບດ້ວຍ: ການາດາ ແລະ ໂປໂລຍ, ໃນນັ້ນ ແມ່ນຜູ້ຕາງໜ້າ ອິນເດຍ ເປັນປະທານ ຄະນະກຳມະການກວດກາສາກົນປະກອບດ້ວຍກອງທະຫານທີ່ມີທີ່ຕັ້ງຢູ່ປາກເຊ, ເຊໂນ, ວຽງຈັນ, ຊຽງຂວາງ, ຜົ້ງສາລີ ແລະ ສິບຮາວ (ແຂວງຫົວພັນ). ໃນກໍລະນີແກ້ໄຂທ່ວາງຄະນະກຳມະການດ້ວຍກັນບໍ່ໄດ້ໃຫ້ສົ່ງບັນຫານັ້ນຂຶ້ນໄປຫາປະທານຮ່ວມເຊິ່ງມີຫວຽດ ແລະ ອັງກິດ ເພື່ອຮຽກໂຮມກອງປະຊຸມໃຫຍ່ແກ້ໄຂບັນຫານັ້ນ.
- ຕ້ອງຮັບປະກັນສິດສະເໝີພາບ, ປະຊາທິປະໄຕ ໃຫ້ແກ່ປະຊາຊົນ ແລະ ໃຫ້ທຳການເລືອກຕັ້ງຢ່າງມີປະສິດທິພາບໃນປະເທດລາວໃນ ຄ ສ 1955 ໂດຍໃຫ້ມີຜູ້ແທນຂອງຝ່າຍແນວລາວອິດສະຫຼະເຂົ້າຮ່ວມ ເພື່ອຮ່ວມປະເທດລາວ ໃຫ້ເປັນເອກະພາບ.
- ສັນຍາດັ່ງກ່າວນີ້ ມີຜົນສັກສິດ ແລະ ເລີ່ມປະຕິບັດແຕ່ເວລາ 00 ໂມງ ຂອງວັນທີ 20 ກໍລະ ກົດ ຄ.ສ 1954 ເປັນຕົ້ນໄປ.

**ຄວາມໝາຍປະຫວັດສາດຂອງສັນຍາເຊີແນວ**

- ຕໍ່ລາວສັນຍາເຊີແນວໄດ້ຕັດສິນໃຫ້ຢຸດເຊົາສົງຄາມ ແລະ ສ້າງສັນຕິພາບຢູ່ອິນດູຈີນ ແລະ ໄດ້ຮັບຮູ້ເອກະລາດອະທິປະໄຕ ແລະ ຜືນແຜນດິນອັນຄົບຖ້ວນຂອງລາວ. ສັນຍາເຊີແນວ ໄດ້ກຳນົດໄວ້ວ່າ ປີ ຄ.ສ. 1955 ຈະປະຕິບັດການເລືອກຕັ້ງຢ່າງມີສິດເສລີພາບຢູ່ໃນລາວ ເຊິ່ງມີແນວລາວອິດສະຫຼະເຂົ້າຮ່ວມນຳ ເພື່ອປະຕິບັດຄວາມຖືກຕ້ອງປອງດອງຊາດ ກອງທັບຝຣັ່ງ ຕ້ອງຖອນອອກຈາກລາວຕາມກຳນົດວັນເວລາທີ່ບົ່ງໄວ້.
- ຕໍ່ອິນດູຈີນ ສັນຍາເຊີແນວເປັນໄຊຊະນະອັນໃຫຍ່ຫຼວງຂອງປະຊາຊົນອິນດູຈີນ. ການຕໍ່ສູ້ຕ້ານຝຣັ່ງຂອງປະຊາຊົນເຮົາ ໄດ້ຢຸດຕິລົງດ້ວຍໄຊຊະນະອັນສະຫງ່າງາມ ສັນຍາເຊີແນວ ໄດ້ ຮັບຮູ້ເອກະລາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ 3 ຊາດອິນດູຈີນ.
- ຕໍ່ໂລກ ສັນຍາເຊີແນວມັນເປັນການໄຂສັງກາດໃໝ່ໃນປະຫວັດສາດການຕໍ່ສູ້ຂອງການປະ ຕິວັດໂລກ ແລະ ມັນຍັງເປັນໄຊຊະນະຂອງທຸກກຳລັງສັນຕິພາບ ປະຊາທິປະໄຕໃນໂລກ ແລະ ເປັນການປຸກລະດົມອັນເຂັ້ມແຂງຕໍ່ປະຊາຊົນທຸກປະເທດ ທີ່ຖືກກົດຂີ່ຂູດຮີດທີ່ພວມ ຕໍ່ສູ້ປົດປ່ອຍຕົວເອງໃຫ້ຫຼຸດພົ້ນອອກຈາກແອກລ່າເມືອງຂຶ້ນ.

# ບົດທີ5

# ການຮຸກຮານລາວຂອງຈັກກະພັດອາເມລິກາ

## 1. ກົນອຸບາຍຢຶດຄອງລາວຂອງຈັກກະພັດອາເມລິກາ

### ການທຳລາຍສັນຍາເຊີແນວຂອງຈັກກະພັດອາເມຣິກາ

ສັນຍາເຊີແນວໄດ້ເຮັດໃຫ້ສົງຄາມຢູ່ອິນດູຈີນທີ່ຍືດຍາວນັ້ນສິ້ນສຸດລົງ. ແຕ່ຈັກກະພັດອາເມຣິກາຍັງບໍ່ຍອມປະລະກົນຍຸດທະສາດຢຶດຄອງອິນດູຈີນພາຍຫຼັງທີ່ພວກລ່າເມືອງຂຶ້ນຝຣັ່ງຖືກປະລາໄຊ ຢູ່ອິນດູຈີນແລ້ວ ຈັກກະພັດອາເມຣິກາໂດດເຂົ້າມາແທນທີ່ເພື່ອຢາກເຮັດໃຫ້ລາວກາຍເປັນເມືອງຂຶ້ນ ແບບໃຫມ່ ແລະ ເປັນຖານທັບເພື່ອເປັນແປ້ນຢັນໃນການບຸກຕີປະເທດສາທາລະນະລັດປະຊາທິປະໄຕ ຫວຽດນາມ ແລະ ສາທາລະນະລັດປະຊາຊົນຈີນ, ຕ້ານຂະບວນການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນຢູ່ໃນເຂດອາຊີອາຄະເນ. ເພື່ອປະຕິບັດຍຸດທະສາດດັ່ງກ່າວນັ້ນ ພວກເຂົາໄດ້ດຳເນີນກົນອຸບາຍຕ່າງໆ ເພື່ອເຂົ້າມາແທນບ່ອນຝຣັ່ງຢູ່ອິນດູຈີນ. ວັນທີ 8 ກັນຍາ ຄ.ສ. 1954 ພວກຈັກກະພັດອາເມຣິກາໄດ້ສ້າງຕັ້ງກຸ່ມທະຫານຊີອາໂຕ (SEATO) ເນື້ອແທ້ແມ່ນກຸ່ມທະຫານເພື່ອຄວບຄຸມບັນດາປະເທດໃນອາຊີອາຄະເນເອົາລາວ, ພາກໃຕ້ຫວຽດນາມ ແລະ ກຳປູເຈຍເຂົ້າຢູ່ໃນ “ອາລັກຂາ” ຂອງກຸ່ມດັ່ງກ່າວ ພວກເຂົາອອກຄຳສັ່ງໃຫ້ລູກມືອອກປາບປາມຄົນຕໍ່ຕ້ານເກົ່າບຸກໂຈມຕີຍຶດເອົາສອງແຂວງເຕົ້າໂຮມ ແລະ ທຳລາຍການເຈລະຈາລະຫວ່າງຝ່າຍລາຊະອາ ນາຈັກກັບຝ່າຍປະເທດລາວ.

ໃນວັນທີ 23 ພະຈິກ 1954 ເຂົາໄດ້ຈັດຕັ້ງລັດຖະບານໃຫມ່ທີ່ນິຍົມອາເມຣິກາຂຶ້ນໂດຍ ແມ່ນກະຕ່າຍ ໂດນສະໂສລິດ ເປັນນາຍົກລັດຖະມົນຕີ, ເດືອນກຸມພາ 1955 ກະຕ່າຍໄດ້ຕົກລົງຈັດຕັ້ງການປ່ອນບັດຂັດເລືອກຜູ້ແທນລາຊະດອນຂຶ້ນເພື່ອຫວັງຂັດຂວາງ ແລະ ປິດລ້ອມແນວລາວອິດສະ ຫຼະຄ່ຽງຄູ່ກັບການສັ່ງໃຫ້ລູກມືບຸກໂຈມຕີ ກາໍລັງປະຕິວັດໂດຍກົງ ຈັກກະພັດອາເມຣິກາຍັງໄດ້ສົ່ງ “ການຊ່ວຍເຫຼືອ” ທາງດ້ານທະຫານ ແລະ ດ້ານເສດຖະກິດ ເພື່ອກຳສິດກວດກາທຸກໆການເຄື່ອນໄຫວຂອງອຳນາດການປົກຄອງຫຸ່ນວຽງຈັນ. ເດືອນເມສາ 1955

### ສັນຍາວຽງຈັນວັນທີ 2 ພະຈິກ 1957 (ການຮວມລາວຄັ້ງທີ1)

ໄປພ້ອມໆກັນກັບການປະລາໄຊໃນການປຸກຕີບຽດຍຶດເຂດທີ່ຫມັ້ນສອງແຂວງ ຊຳເຫນືອ, ຜົ້ງສາລີ ຕະຫຼອດໄລຍະ 3 ປີ ຂອງຈັກກະພັດອາເມຣິກາ, ແນວລາວຮັກແນວທາງນະໂຍບາຍເຮັດໃຫ້ລາວເປັນປະເທດສັນຕິພາບເປັນກາງເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນາຖາວອນ ຍ້ອນນະໂຍບາຍຖືກຕ້ອງກັບຄວາມມຸ້ງຫວັງຂອງ ຝ່າຍແນວລາວຮັກຊາດຈຶ່ງບໍ່ພຽງແຕ່ເຕົ້າໂຮມເອົາປະຊາຊົນຜູ້ອອກແຮງງານຈຳນວນຫຼວງຫຼາຍເທົ່ານັ້ນແຕ່ຍັງໄດ້ຍາດແຍ່ງເອົາຄົນຊັ້ນກາງ ແລະ ດູດດຶງໄດ້ກຸ່ມຄົນທີ່ຢູ່ໃນວົງການຂັ້ນນຳຂັ້ນສູງຕະຫຼອດຮອດວົງສານຸວົງຂອງພະເຈົ້າຊີວິດຜູ້ຮັກຊາດຊາດໄດ້ສະຫນັບສະຫນູນແນວທາງດັ່ງກ່າວເຮັດຣິກາ ແລະ ລູກມືຖືກໂດດດ່ຽວທາງດ້ານການເມືອງ. ສະພາບການນັ້ນມັນໄດ້ບັງຄັບໃຫ້ລັດຖະບານປະຕິການ ທີ່ເປັນລູກມືຂອງອາເມຣິກາ ເຊິ່ງແມ່ນ ກະຕ່າຍ ເປັນນາຍົກຈຳເປັນຕ້ອງລາອອກຈາກແຫນ່ງ ໃນວັນທີ 14 ກຸມພາ ຄ.ສ 1956 ລັດຖະບານຂອງ ທ່ານ ສຸວັນນະພູມມາ ໄດ້ສ້າງຕັ້ງຂຶ້ນແທນ ລັດຖະບານນີ້ມີນະໂຍບາຍເຈລະຈາກັບຝ່າຍ

ແນວລາວຮັກຊາດ ເພື່ອໃຫ້ປະເທດລາວມີສັນຕິພາບ ແລະ ເປັນກາງແຕ່ຖືກອາເມຣິກາ ແລະ ລູກມືຂັດຂວາງເຮັດໃຫ້ການເຈລະຈາຕ້ອງຢຸດຕິເປັນເວລາໜຶ່ງປີແລ້ວ.

ແຕ່ຍ້ອນຖືກປະລາໄຊຢ່າງໜັກໃນດ້ານການທະຫານ ແລະ ຖືກລ້ອມປ່ຽວດ້ານການເມືອງມາ ໃນວັນທີ 2 ພະຈິກ 1957 ລັດຖະບານລາຊະອານາຈັກຈຳເປັນຕ້ອງເຊັນສັນຍາວຽງຈັນຍຸດຕິການປະທະກັນ, ເຫັນດີໃຫ້ປະເທດລາວເດີນຕາມເສັ້ນທາງສັນຕິພາບເປັນກາງ, ຮັບປະກັນຈະບໍ່ແກ້ແຄ້ນຄົນຕໍ່ຕ້ານເກົ່າ. ຮັບຮູ້ຖານະອັນຖືກກົດໝາຍຂອງແນວລາວຮັກຊາດ, ສ້າງຕັ້ງລັດຖະບານປະສົມແຫ່ງ ຊາດຂຶ້ນໂດຍມີແນວລາວຮັກຊາດເຂົ້າຮ່ວມ, ຮັບເອົາຄຳສະເໜີຂອງແນວລາວຮັກຊາດກ່ຽວກັບການດັດແປງກົດໝາຍເລືອກຕັ້ງ, ດຳເນີນການເລືອກຕັ້ງເພີ່ມເຕີມຮັບປະກັນສິດເສລີພາບປະຊາທິປະໄຕ ປະຊາຊົນຕາມແຜນນະໂຍບາຍຂອງແນວລາວຮັກຊາດ. ນັ້ນແມ່ນໄຊຊະນະອັນໃຫຍ່ຫຼວງຂອງການ ປະຕິວັດ. ໃນວັນທີ 19 ພະຈິກ 1957 ສະພາຜູ້ແທນລາສະດອນກໍໄດ້ຮັບຮອງເອົາຄະນະລັດຖະບານ ປະສົມ ແຫ່ງຊາດຄັ້ງທຳອິດຢ່າງເປັນທາງການ.

## 2. ການດຳເນີນການປົກຄອງລາວຂອງຈັກກະພັດອາເມລິກາ ແລະ ຂະບວນການຕໍ່ສູ້ຂອງປະຊາຊົນລາວໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວແຕ່ປີ 1955-1973

ພາຍຫຼັງເຊັນສັນຍາວຽງຈັນບໍ່ທັນຮອດໜຶ່ງປີ ຈັກກະພັດອາເມຣິກາໄດ້ໃຫ້ລູກມືຂອງເຂົາໂຄ່ນລົ້ມລັດຖະບານປະສົມແຫ່ງຊາດ ໃນວັນທີ 18 ສິງຫາ 1958 ແລ້ວຈັດຕັ້ງລັດຖະບານປະຕິການຂຶ້ນແທນ ໂດຍແຕ່ງໃຫ້ ຜູຍ ຊະນະນິກອນ ເປັນນາຍົກລັດຖະມົນຕີ, ນັບແຕ່ນັ້ນມາພວກເຂົາໄດ້ເພີ່ມທະວີການທຳລາຍປາບປາມຂະບວນການຮັກຊາດຂອງປະຊາຊົນລາວ ເຂົາໄດ້ໃຊ້ອົງກອນທີ່ເອີ້ນວ່າ "ຄະນະກຳມະການປ້ອງກັນຜົນປະໂຫຍດຂອງຊາດ" ເປັນເຄື່ອງມືປາບປາມຂະບວນການຮັກຊາດ. ຈັກກະພັດອາເມຣິກາ ແລະ ຜູຍຊະນະນິກອນ ໄດ້ທຳລາຍສັນຍາວຽງຈັນຢ່າງເປີດແປນຄື ຈັບກຸມຄຸມຂັງຂ້າຟັນນັກຮົບປະຕິວັດ ແລະ ພະນັກງານແນວລາວຮັກຊາດເປັນພັນໆຄົນ, ປິດລ້ອມ ແລະ ເກາະຜິດກັບທະຫານຝ່າຍປະເທດລາວທັງສອງກອງພັນ (ກອງພັນທີ 1 ແລະ ກອງພັນທີ 2 ຂອງຝ່າຍແນວລາວຮັກຊາດ) ເພື່ອຫວັງດັບສູນກຳລັງປະກອບອາວຸດປະຕິວັດ. ຍິ່ງກວ່ານັ້ນພວກເຂົາຍັງຈັບກຸມຄຸມຂັງທ່ານຜູ້ນຳຂອງກຳລັງປະຕິວັດລາວຈຳນວນ 16 ທ່ານ, ການກະທຳດັ່ງກ່າວນັ້ນລ້ວນແຕ່ແມ່ນເລ່ກົນ ອັນໂຫດຫ້ຽມຂອງຈັກກະພັດອາເມຣິກາ ແລະ ລູກມື ທີ່ຫວັງ ຈະດັບສູນກຳລັງປະຕິວັດເພື່ອດັບມອດແປວໄຟກູ້ຊາດຕ້ານຈັກກະພັດອາເມຣິກາ ທີ່ພວມລຸກຂຶ້ນ ໃນທົ່ວປະເທດລາວ.

### ສັນຍາເຊີແນວກ່ຽວກັບລາວ

ມາຮອດວັນທີ 16 ມິຖຸນາ ຄ.ສ 1961 ກອງປະຊຸມເຊີແນວກ່ຽວກັບລາວໄດ້. ໂດຍມີ 14 ປະເທດເຂົ້າຮ່ວມ. ແຕ່ໃນກອງປະຊຸມບໍ່ມີຜູ້ແທນປະເທດລາວທີ່ຖືກຕ້ອງຕາມກົດໝາຍ. ມາໃນວັນທີ 22 ມິຖຸນາ ປີ 1961 ຈຶ່ງໄດ້ໄຂກອງປະຊຸມ 3 ສະເດັດຂຶ້ນ ຢູ່ຊູຣິກ (ນຳ ໂດຍມີສະເດັດ ເຈົ້າສຸພານຸວົງ, ເຈົ້າສຸວັນນະພູມມາ ແລະ ເຈົ້າບຸນອູ້ມ. ກອງປະຊຸມໄດ້ ຖະແຫຼງການຮ່ວມປະກອບມີເນື້ອໃນໃຫຍ່ຄື ຕົກລົງຈັດຕັ້ງລັດຖະບານປະສົມທີ່ປະກອບ ຂອງສາມຝ່າຍຢ່າງສົມສ່ວນ, ລັດຖະບານນີ້ມີລັກສະນະຊົ່ວຄາວ ແລະ ເດີນຕາມໂຄງການ

ການເມືອງ 5 ຂໍ້ ເຊິ່ງຮັບປະກັນສິດເສລີພາບ, ປະຊາທິປະໄຕຂອງປະຊາຊົນ, ຮັບປະກັນຄວາມເປັນ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ມາຮອດວັນທີ 23 ກໍລະກົດ ຄ.ສ 1962 ສົນທິສັນຍາເຊີແນວກ່ຽວກັບລາວຈຶ່ງໄດ້ຮັບການລົງນາມ, ຄະນະຜູ້ແທນ 14 ປະເທດໄດ້ຮັບຮອງເອົາເອກະສານພື້ນຖານວ່າດ້ວຍຄວາມເປັນກາງ ວ່າດ້ວຍຄະນະກຳມະການສາກົນກວດກາການປະຕິບັດຖະແຫຼງການ ແລະ ຮັບຮູ້ລັດຖະບານຊົ່ວຄາວແຫ່ງຊາດຂອງລາວ. ສົນທິສັນຍາເຊີແນວ ປີ 1962 ແມ່ນສົນທິສັນຍາກົນທີ່ໄດ້ຮັບຮູ້ອະທິປະໄຕ ເອກະລາດແຫ່ງຊາດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວເປັນເທື່ອທີ 2. ມັນແມ່ນໄຊຊະນະອັນໃຫຍ່ຫຼວງທີ່ເປັນຂີດໝາຍແຫ່ງບາດກ້າວຂະຫຍາຍຕົວໃໝ່ຢ່າງກະໂດດຂັ້ນຂອງການປະຕິວັດລາວ.

**ການເຊັນສັນຍາ ແລະ ອະນຸສັນຍາວຽງຈັນ ຄ.ສ 1973**

ເຖິງວ່າກຳລັງປະຕິວັດຈະຢືນຢູ່ໃນທ່າມີໄຊກໍຕາມ ແຕ່ດ້ວຍຄວາມບໍລິສຸດຕໍ່ປະເທດຊາດ ແລະ ປະຊາຊົນໃນວັນທີ 6 ມີນາ 1970 ແນວລາວຮັກຊາດໄດ້ປະກາດຖະແຫຼງການ 5 ຂໍ້ກ່ຽວກັບການ ແກ້ໄຂບັນຫາລາວໂດຍສັນຕິວິທີ ທ້າຍເດືອນ ກໍລະກົດ ໃນປີ ຄ.ສ. 1970 ທ່ານ ສຸພານຸວົງ ປະທານຄະນະກຳມະການແນວລາວຮັກຊາດໄດ້ແຕ່ງຕັ້ງໃຫ້ ເຈົ້າ ສຸກວົງສັກ ເປັນຜູ້ຕາງໜ້າພິເສດ ເຂົ້າມາວຽງຈັນ ເພື່ອພົບປະເຈລະຈາກັບທ່ານ ສຸວັນນະພູມມາ. ຜ່ານການພົບປະເຈລະຈາທັງສອງ ຝ່າຍກໍເຫັນດີເອົາຄັງໄຂເປັນບ່ອນພົບປະກັນ ຂອງຜູ້ຕາງໜ້າທີ່ມີອຳນາດເຕັມຂອງສອງຝ່າຍ.

ມາຮອດວັນທີ 17 ຕຸລາ ຄ.ສ. 1972 ຄະນະຜູ້ແທນຂອງກຳລັງຮັກຊາດໂດຍແມ່ນ ທ່ານ ພູມ ສີປະເສີດ ເປັນຫົວໜ້າໄດ້ເດີນທາງມາວຽງຈັນເພື່ອທຳການເຈລະຈາກັບຝ່າຍວຽງຈັນ ຈາກນັ້ນ ຝ່າຍວຽງຈັນກໍໄດ້ກີດກັ້ນການຕົກລົງເຊັນສັນຍາດ້ວຍເຫດຜົນບໍ່ພຽງພໍ, ດັ່ງນັ້ນ, ໃນກອງປະຊຸມແຕ່ລະເທື່ອ ຜູ້ແທນຂອງກຳລັງຮັກຊາດໄດ້ເປີດເຜີຍເລ່ກົນ, ເຈດຈຳນົງອັນມືດມົນຂອງຈັກກະພັດອາ ເມຣິກາ ແລະ ລູກມື ພ້ອມນັ້ນກໍຊີ້ແຈງແນວທາງນະໂຍບາຍຂອງກຳລັງຮັກຊາດ - ບົດປາໄສຂອງ ທ່ານ ພູມ ສີປະເສີດ ທີ່ອ່ານໃນກອງປະຊຸມແຕ່ລະຄັ້ງມັນໄດ້ດຶງດູດຄວາມສົນໃຈ ແລະ ໄດ້ຮັບການ ສະໜັບສະໜູນຈາກມວນຊົນທຸກຊັ້ນຄົນໃນນະຄອນວຽງຈັນ ແລະ ແຫ່ງອື່ນໆ ສິ່ງນີ້ມັນໄດ້ເປັນ ກຳລັງແຮງອັນໜຶ່ງທີ່ໜີບຝ່າຍລັດຖະບານວຽງຈັນໃຫ້ຍອມຕົກລົງ ແລະ ເຊັນສັນຍາສະຫງົບເສິກ ໃນວັນທີ 21 ກຸມພາ ຄ. ສ. 1973. ການເຊັນສັນຍາຄັ້ງນີ້ ແມ່ນໄຊຊະນະອັນຍິ່ງໃຫຍ່ຂອງຊາດ ແລະ ປະຊາຊົນລາວແມ່ນຜົນຂອງການຕໍ່ສູ້ອັນທໍລະຫົດອົດທົນ ແລະ ເຕັມໄປດ້ວຍການເສຍສະຫຼະຂອງປະຊາຊົນລາວ ພາຍຫຼັງການເຊັນສັນຍາຄົນລາວທຸກຊົນເຜົ່າໄດ້ມີຄວາມປິຕິຊົມຊື່ນຫາສິ່ງໃດປຽບບໍ່ໄດ້, ສ່ວນຈັກກະພັດອາເມຣິກາ ແລະ ກຸ່ມປະຕິການຂວາຈັດຢູ່ໃນລາວຄັ້ງນີ້ແມ່ນການປະລາໄຊອັນໜັກໜ່ວງ ແລະ ອັບອາຍຂາຍໜ້າຂອງພວກເຂົາ. ດັ່ງນັ້ນເຖິງວ່າຈະມີສັນຍາແລ້ວກໍຕາມ ພວກເຂົາກໍບໍ່ໄດ້ລົດລະຄວາມພະຍາຍາມ ແລະ ຫວັງມ້າງເພສັນຍາເປັນຕົ້ນແມ່ນໄດ້ສົມຮູ້ຮ່ວມຄິດກັນເຮັດລັດຖະປະຫານໃນວັນທີ 20 ສິງຫາ 1973 ເພື່ອໂຄ່ນລົ້ມລັດຖະບານຂອງ ທ່ານ ສຸວັນນະພູມມາ ແນໃສ່ລົບລ້າງສັນຍາທີ່ໄດ້ເຊັນກັນ, ແຕ່ຍ້ອນຄວາມຕື່ນຕົວ, ຮູ້ຖືກຂອງນາຍພົນທະຫານວຽງຈັນ ແຜນການລັດຖະປະຫານຂອງເຂົາຈຶ່ງຖືກປະລາລົງຈາກນັ້ນການເຈລະຈາໄດ້ດຳເນີນຕໍ່ໄປ.

ມາເຖິງວັນທີ 14 ກັນຍາ 1973 ອະນຸສັນຍາກໍໄດ້ຮັບການເຊັນກັນເຊິ່ງມີເນື້ອ ຫາສຳຄັນທີ່ຢັ້ງຢືນເຖິງການຟື້ນຟູສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດຢູ່ລາວ. ໃນນັ້ນໄດ້ກຳນົດການສ້າງຕັ້ງລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດຕົກລົງເອົາສອງນະຄອນຄື ວຽງຈັນ ແລະ ຫຼວງພະບາງເປັນກາງ ແລະ ອື່ນໆ.

**ການຕໍ່ສູ້ຂອງປະຊາຊົນລາວຫຼັງເຊັນສັນຍາ ແລະ ອະນຸສັນຍາ**

ເມື່ອສັນຍາ ແລະ ອະນຸສັນຍາວຽງຈັນໄດ້ເຊັນກັນແລ້ວ, ຝ່າຍບັນດາກຳລັງຮັກຊາດກໍໄດ້ເລັ່ງທວງ ແລະ ຊຸກດັນໃຫ້ຝ່າຍລັດຖະບານວຽງຈັນ ຕ້ອງຮີບຮ້ອນປະຕິບັດສັນຍາຢ່າງເຂັ້ມງວດ, ດັ່ງນັ້ນ ໃນບໍ່ດົນຄະນະປະສົມສູນກາງປະຕິບັດສັນຍາກໍໄດ້ຈັດຕັ້ງກອງທະຫານປະສົມ ແລະ ຕຳຫຼວດປະສົມ ຢູ່ໃນສອງຕົວເມືອງວຽງຈັນ ແລະ ຫຼວງພະບາງ ກໍໄດ້ອອກປະຈຳການ ແລະ ປະຕິບັດໜ້າທີ່, ວັນທີ 3 ເມສາ 1974 ສະເດັດເຈົ້າ ສຸພານຸວົງ ໄດ້ເດີນທາງແຕ່ວຽງໄຊ ເຖິງວຽງຈັນ ເພື່ອກຽມຈັດຕັ້ງລັດຖະບານປະສົມ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ ການເດີນທາງຂອງທ່ານຄັ້ງນີ້ໄດ້ມີປະຊາຊົນ ຫຼາຍໝື່ນຄົນໃນນະຄອນຫຼວງວຽງຈັນໄປຕ້ອນຮັບທີ່ເດີ່ນບິນວັດໄຕ ແລະ ຕາມສາຍທາງມາສູ່ທີ່ພັກ ຂອງເພິ່ນ, ບັນດາຜູ້ຄົນທີ່ໄປຕ້ອນຮັບນັ້ນ ໃຜໆກໍປິຕິຊົມຊື່ນຢ່າງລົ້ນເຫຼືອ ຍ້ອນຄວາມດີໃຈທີ່ໄດ້ເຫັນ ຜູ້ນຳພາຂອງການປະຕິວັດເຂົ້າມາເພື່ອແກ້ໄຂສະພາບຄວາມບໍ່ສະຫງົບສຸກຢູ່ລາວ.

## 3.ການລຸກຮື້ຂຶ້ນຍຶດອຳນາດ 23 ສິງຫາ 1975 ແລະ ການສະຖາປະນາສາທາລະນະລັດປະຊາທິປະໄຕປະຊະຊົນລາວວັນທີ 2 ທັນວາ 1975.

ວັນທີ 5 ເມສາ 1974 ລັດຖະບານປະສົມຊົ່ວຄາວແຫ່ງຊາດໂດຍແມ່ນ ທ່ານ ສຸວັນນະພູມາ ເປັນນາຍົກລັດຖະມົນຕີ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ ໂດຍແມ່ນ ທ່ານ ສຸພານຸວົງ ເປັນປະທານໄດ້ຈັດຕັ້ງຂຶ້ນຢ່າງເປັນທາງການ.

ອົງການປະສົມ ແລະ ບັນດາມາດຕາຕ່າງໆໃນສັນຍາ ແລະ ອະນຸສັນຍາໄດ້ເປັນເງື່ອນໄຂ ຈຳກັດອຳນາດຜະເດັດການຂອງພວກປະຕິການຝ່າຍວຽງຈັນ ພ້ອມນັ້ນກໍເປັນອາວຸດທີ່ທຳລາຍຊົກໂສ້ຂອງຈັກກະພັດອອກຈາກປະຊາຊົນໃນເຂດປົກຄອງຂອງຝ່າຍວຽງຈັນ ເປັນຕົ້ນແມ່ນໃນສອງຕົວເມືອງວຽງຈັນ ແລະ ຫຼວງພະບາງ. ດັ່ງນັ້ນ, ປະຊາຊົນໃນແຫ່ງດັ່ງກ່າວທີ່ເຄີຍຖືກຫນີບເຕັງກົດຂີ່ ຂູດຮີດມາເປັນເວລານານນັ້ນຮອດເວລານີ້ໄດ້ມີບ່ອນອີງ ຈຶ່ງໄດ້ດຳເນີນການຕໍ່ສູ້ທວງເອົາສິດເສລີພາບໃຫ້ແກ່ຕົນ. ຂະບວນການຕໍ່ສູ້ໄດ້ເປັນກະແສຟອງຟົດເດືອດຂຶ້ນເລື້ອຍໆ ແລະ ແຜ່ຂະຫຍາຍໄປທົ່ວທຸກແຂວງໃນທົ່ວປະເທດລາວ.

ໂອກາດທີ່ດີຂອງຝ່າຍກຳລັງປະຕິວັດໄດ້ມາເຖິງແລ້ວ, ພັກປະຊາຊົນປະຕິວັດລາວໄດ້ວາງທິດທາງໃນການຍຶດອຳນາດໃນທົ່ວປະເທດ ໂດຍການສົມທົບສາມບາດຄ້ອນຍຸດທະສາດໄປພ້ອມໆ ກັນຄື: 1)ຂະບວນການລຸກຮື້ຂຶ້ນຂອງປະຊາຊົນ, 2)ການລຸກຮື້ຂຶ້ນປະກາດແຍກຕົວຂອງກຳລັງປະກອບ ອາວຸດໃນກອງທັບແຫ່ງຊາດຝ່າຍວຽງຈັນ ແລະ 3)ການເຄື່ອນໄຫວຂອງກອງທັບປົດປ່ອຍປະຊາຊົນລາວ.

ດັ່ງນັ້ນມາເຖິງວັນທີ 24 ທັນວາ 1974 ປະຊາຊົນ ແລະ ກອງທະຫານຝ່າຍຂວາກອງຫນຶ່ງ ຢູ່ຕົວ ເມືອງຫ້ວຍຊາຍກໍໄດ້ລຸກຂຶ້ນປະກາດຕົນຂຶ້ນກັບລັດຖະບານປະສົມ, ຕໍ່ມາວັນທີ 6 ມັງກອນ 1975 ປະຊາຊົນເມືອງຫນອງບົກ ແຂວງຄໍາມ່ວນ ກໍໄດ້ລຸກຮື້ຂຶ້ນຕໍ່ສູ້ທວງເອົາສິດໃນການປົກຄອງ ຢູ່ແຂວງຄໍາມ່ວນມາເຖິງຕົ້ນປີ 1975 ໂດຍໄດ້ຮັບການເຊີດຊູກໍາລັງ ຈາກໄຊຊະນະຂອງການປະຕິ ວັດກໍາປູເຈຍ ແລະ ຫວຽດນາມ, ປະຊາຊົນລາວຍິ່ງດ ໍາເນີນການຕໍ່ສູ້ຮຸນແຮງຂຶ້ນຊັກໃຊ້ໃນໂອກາດ ແລະ ເງື່ອນໄຂເຫມາະສົມນີ້ ສູນກາງພັກປະຊາຊົນປະຕິວັດລາວໄດ້ວາງມະຕິຕົກລົງກ່ຽວກັບການ ຢຶດອໍານາດໃນທົ່ວປະເທດ, ຫຼັງຈາກນັ້ນປະຊາຊົນ, ນັກຮຽນ, ນັກສຶກສາ, ຂ້າລາຊະການ, ທະຫານ ຕໍາຫຼວດ ຝ່າຍຂວາຢູ່ແຕ່ລະບ່ອນໃນເຂດປົກຄອງຂອງພວກປະຕິການກໍໄດ້ລຸກຂຶ້ນຕໍ່ສູ້ໃນຂັ້ນຕົ້ນ ແມ່ນເຮັດການປະທ້ວງກ້າວຂຶ້ນຢຶດອໍານາດເປັນຂັ້ນໆແຕ່ຂັ້ນກອງຮ້ອຍຮອດກອງພັນ, ແຕ່ຂັ້ນບ້ານຮອດຂັ້ນຕາແສງ ເມືອງ ແລະ ແຂວງ.

ມາໃນວັນທີ 23 ສິງຫາ 1975 ພິທີຢຶດອໍານາດບ່ອນສຸດ ທ້າຍຖືກຈັດຕັ້ງຂຶ້ນທີ່ນະຄອນ ຫຼວງວຽງຈັນ. ມີປະຊາຊົນມາຮ່ວມຈໍານວນ 300.000 ກວ່າຄົນ, ໃນ ພິທີຄັ້ງຍິ່ງໃຫຍ່ນີ້ໄດ້ມີຄວາມຫມາຍ ແລະ ສະແດງເຖິງອໍານາດການປົກຄອງປະຕິການຢູ່ທົ່ວທຸກແຫ່ງໃນປະເທດລາວ ຖືກໂຄ່ນ ລົ້ມຢ່າງສິ້ນເຊີງ, ປະຊາຊົນຢູ່ເຂດຕ່າງໆກໍໄດ້ຈັດ ຕັ້ງອໍານາດການ ປົກຄອງຂອງຕົນຂຶ້ນຊົ່ວຄາວ ເຖິງຕົ້ນເດືອນພະຈິກ 1975 ທົ່ວປະເທດໄດ້ມີການປ່ອນບັດຄັດເລືອກຜູ້ແທນປະຊາຊົນ ແລະ ອໍານາດການປົກຄອງຢູ່ຂັ້ນຕາແສງ, ເມືອງ ແລະ ແຂວງ ວັນທີ 1 ທັນວາ 1975 ບັນດາຜູ້ຕາງຫນ້າຂອງ ຜູ້ແທນປະຊາຊົນທຸກເຂດແຂວງໃນທົ່ວປະເທດ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ທີ່ນະຄອນຫຼວງວຽງຈັນ, ກອງປະຊຸມຄັ້ງນີ້ ໄດ້ຮັບຮອງເອົາໃນສະເພາະບັນລັງຂອງ ເຈົ້າຊີວິດສີສະຫວ່າງວັດທະນາ, ປະກາດຍຸບເລີກລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ. ລົງມະຕິກ່ຽວກັບທຸງຊາດ, ພາສາຊາດ, ປະກາດລົບລ້າງລະບອບລາຊາທິປະໄຕ ໃນລາວ ແລະ ສະຖາປະນາປະເທດລາວເປັນປະເທດສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ກອງປະຊຸມຍັງໄດ້ແຕ່ງຕັ້ງສະເດັດເຈົ້າສຸພານຸວົງເປັນປະທານປະເທດ, ແຕ່ງຕັ້ງຄະນະລັດຖະບານໂດຍ ແມ່ນ ທ່ານ ໄກສອນ ພົມວິຫານເປັນນາຍົກລັດຖະມົນຕີທັງເປັນເລຂາທິການໃຫຍ່ ຂອງພັກປະຊາຊົນປະຕິວັດລາວ, ແຕ່ງຕັ້ງສະມາຊິກສະພາປະຊາຊົນສູງສຸດ ໂດຍແມ່ນ ສະເດັດເຈົ້າສຸພານຸເປັນປະທານ ແລະ ຍັງໄດ້ຜ່ານມະຕິອື່ນໆອີກ.

ຜົນສໍາເລັດຂອງກອງປະຊຸມດັ່ງກ່າວນັ້ນ ແມ່ນເປັນຂີດຫມາຍປະຫວັດສາດຂອງຊາດລາວເຮົາທີ່ຫຼຸດພົ້ນອອກຈາກລະບອບສັກດີນາ ແລະ ລະບອບຫົວເມືອງຂຶ້ນ, ກາຍເປັນປະເທດທີ່ ມີເອກະລາດ ປະຊາທິປະໄຕຢ່າງແທ້ຈິງ.

# ພາກທີ II ພູມສາດ
# ບົດທີ6
# ລະບົບສຸລິຍະຈັກກະວານ Solar System

## 1. ຄວາມໝາຍຂອງລະບົບສຸລິຍະຈັກກະວານ

ລະບົບສຸລິຍະຈັກກະວານໝາຍເຖິງຂອບເຂດທີ່ກວ້າງຂວາງບໍ່ມີບ່ອນສິ້ນສຸດ, ແມ່ນທຸກສິ່ງທຸກຢ່າງທີ່ມີຢູ່, ທີ່ລວມຕົວກັນຢູ່ ແລະ ຄົງຕົວໃນຂົງເຂດດຽວກັນ ຫຼື ຈະເວົ້າອີກຢ່າງໜຶ່ງກໍ່ຄືລະບົບສຸລິຍະຈັກກະວານແມ່ນເທສະອັນກວ້າງໃຫຍ່ເຊິ່ງພວກເຮົາບໍ່ສາມາດຈະກຳນົດຂອບເຂດຂອງມັນໄດ້.

ລະບົບສຸລິຍະຈັກກະວານແມ່ນພື້ນທີ່ປະກອບດ້ວຍບັນດາລະບົບດາວ ແລະ ເທຫະວັດຖຸທີ່ມີຈຳນວນມະຫາສານ, ບໍ່ສາມາດນັບອ່ານໄດ້ດ້ວຍຕາເປົ່າ ຫຼື ກ້ອງສ່ອງດາວໄດ້ຢ່າງງ່າຍດາຍ. ບັນດາເທຫະວັດຖຸເຫຼົ່ານັ້ນປະກອບມີດາວເຄາະ ແລະ ດາວຣິກ ຫຼື ວັດຖຸອື່ນໆໃນທ້ອງຟ້ານັບທັງຝຸ່ນລະອອງ, ເມກ, ໝອກ, ວັດຖຸອຸກາບາດ, ດາວຫາງ... ໃນນັ້ນລະບົບຕາເວັນກໍ່ແມ່ນລະບົບດາວອັນໜຶ່ງເຊິ່ງແມ່ນພາກສ່ວນໜຶ່ງຂອງກາແລັກຊີທາງຊ້າງເຜືອກ ໂດຍທີ່ກາແລັກຊີນີ້ກໍ່ແມ່ນສ່ວນໜຶ່ງຂອງລະບົບສຸລິຍະຈັກກະວານ. ດັ່ງນັ້ນ, ຈິ່ງເວົ້າໄດ້ວ່າລະບົບສຸລິຍະຈັກກະວານແມ່ນເທສະທີ່ໃຫຍ່ທີ່ສຸດແມ່ນແຕ່ ກາແລັກຊີທາງຊ້າງເຜືອກທີ່ວ່າໃຫຍ່ແລ້ວຍັງເປັນພາກສ່ວນໜຶ່ງຂອງລະບົບສຸລິຍະຈັກກະວານ. ເຊິ່ງວັດຖຸທຸກສິ່ງຢ່າງໃນລະບົບສຸລິຍະຈັກກະວານລ້ວນແຕ່ມີການເຄື່ອນເໜັງແຕ່ມີທິດໃນການໂຄຈອນສະເພາະຂອງໃຜມັນ






## 2. ອົງປະກອບຂອງລະບົບສຸລິຍະຈັກກະວານ

ລະບົບສຸລິຍະຈັກກະວານແມ່ນກຸ່ມດາວໜຶ່ງເຊິ່ງປະກອບດ້ວຍດວງດາວທີ່ສຳຄັນຕ່າງໆເຊັ່ນ: ດວງຕາເວັນ ເປັນສູນກາງຂອງລະບົບສຸລິຍະຈັກກະວານໃນນີ້ປະກອບມີຄື:

1) ດາວເຄາະ ໝາຍເຖິງເທຫະວັດຖຸທີ່ບໍ່ມີແສງສະຫວ່າງໃນຕົວ (ສ່ວນແສງສະຫວ່າງທີ່ແນມເຫັນແມ່ນແສງຂອງຕາເວັນ)
2) ດາວບໍລິວານ ແມ່ນດາວເຄາະຊະນິດໜຶ່ງທີ່ເປັນບໍລິວານຂອງດາວເຄາະຕ່າງໆໃນລະບົບສຸລິຍະຈັກກະວານ ເຊິ່ງມີລັກສະນະຄ້າຍຄືດວງຈັນທີ່ເປັນບໍລິວານຂອງຂອງໂລກເຮົາ ແລະ ເສັ້ນທາງໂຄຈອນອ້ອມດາວເຄາະຕ່າງໆໃນລະບົບສຸລິຍະຈັກກະວານ.
3) ດາວເຄາະນ້ອຍ ເປັນດາວທີ່ມີຂະໜາດນ້ອຍທີ່ສຸດຕາມປົກກະຕິແລ້ວຈະມີເສັ້ນຜ່າກາງ ໘໐໐ ກິໂລແມັດ.
4) ດາວຫາງ ປະກອບດ້ວຍສ່ວນຫົວທີ່ເປັນຂອງແຂງ ແລະ ມີສ່ວນຫາງທີ່ແກ່ຍາວອອກໄປຫລາຍລ້ານກິໂລແມັດ, ສ່ວນຫາງຂອງມັນປະກອບດ້ວຍອາຍກາສ ( Gas ) ຫລາຍຊະນິດ ເສັ້ນທາງໂຄຈອນອ້ອມດວງຕາເວັນແມ່ນຄົງທີ່ (ໂຄຈອນຕາມແບບເດີມຕະຫລອດເວລາ)



ດາວຫາງ

5) ອຸກະບາດ ( ດາວສະເດັດ ) ເປັນດາວຂະໜາດນ້ອຍ ຢູ່ກະແຈກກະຈາຍໃນລະບົບສຸລິຍະຈັກກະວານ ດາວນີ້ຖ້າເຄື່ອນຕົວເຂົ້າສູ່ບັນຍາກາດຂອງໂລກຈະເກີດການເຜົາໄໝ້ເປັນແສງສະຫວ່າງຮຸ່ງຂຶ້ນເຊິ່ງສະທ້ອນໃຫ້ມະນຸດເຫັນເປັນແສງຍາວໆ ເຊິ່ງພວກເຮົານິຍົມກັນເອີ້ນວ່າ: ດາວສະເດັດ ຫລື ດາວຕົກ.





**ອຸກາບາດ**




ດາວເຄາະທັງ 8 ດວງ

3. ດວງຕາເວັນ Sun



ດວງຕາເວັນເປັນດາວຣຶກໃຫຍ່ເປັນສູນກາງຂອງລະບົບສຸລິຍະຈັກກະວານ, ເປັນດາວທີ່ມີກຸ່ມກ້ອນທາດອາຍກົມໆ, ມົນໆ ເຊິ່ງເປືອກນອກກຳລັງລຸກໄໝ້ເປັນແປວໄຟຢູ່ ມີຄວາມຮ້ອນລະຫວ່າງ 5.500 – 6.000 $C^0$ ຖ້າເລິກເຂົ້າໄປປະມານ 8.000 ກິໂລແມັດຄວາມຮ້ອນອາດເພີ່ມຂຶ້ນສູງປະມານ 160.000 $C^0$ ດວງຕາເວັນເປັນແມ່ນມີຂະໜາດໃຫຍ່ກວ່າ ໜ່ວຍໂລກຫລາຍເທົ່າຄື: ມີເສັ້ນຜ່າກາງປະມານ 1.400.000 ກິໂລແມັດ ເຊິ່ງຍາວກວ່າເສັ້ນຜ່າກາງຂອງໜ່ວຍໂລກ 100 ເທົ່າ. ສະເລ່ຍຕຳແໜ່ງການໂຄຈອນຂອງໂລກຈະຫ່າງໄກຈາກດວງຕາເວັນປະມານ 150.000.000 ກິໂລແມັດ ດັ່ງນັ້ນ, ຈຶ່ງເປັນເຫດໃຫ້ແນມເຫັນຄືວ່າໜ່ວຍນ້ອຍ.

ພະລັງຄວາມຮ້ອນ ແລະ ແສງສະຫວ່າງທີ່ແຜ່ລັງສີອອກສູ່ຜິວຂອງດວງຕາເວັນແມ່ນ ການປະຕິກິລິຍາທີ່ເກີດພາຍໃນຜິວຂອງມັນທີ່ມີຄວາມກົດດັນສູງ ອາຕອມຂອງທາດ ຮີໂດແຊນ ປ່ຽນເປັນຮີລີອອມ ໂດຍຂະບວນການລວມຕົວກັນຄ້າຍຄືກັບປະຕິກິລິຍາທີ່ເກີດຂຶ້ນຂອງປະລະມານູ, ພະລັງງານຄວາມຮ້ອນອັນມະຫາສານທີ່ສົ່ງອອກມາຈາກພື້ນຜິວຂອງມັນໂດຍອ້ອມຮອບເທົ່າກັບຄວາມໄວຂອງແສງ **ຕົວຢ່າງ**: ພະລັງງານທີ່ໂລກໄດ້ຮັບຈາກດວງຕາເວັນມີຄ່າພຽງແຕ່ 1/ 2.000.000.000 ຂອງພະລັງງານ ທັງໝົດທີ່ແຜ່ລັງສີອອກມາຈາກດວງຕາເວັນ.

## 4. ດາວບໍລິວານທັງ 8 ຂອງດວງຕາເວັນ

### 1) ດາວພຸດ Mercury

Mercury ເປັນດາວເຄາະທີ່ຢູ່ໃກ້ດວງຕາເວັນທີ່ສຸດ ແລະ ຍັງນ້ອຍທີ່ສຸດໃນລະບົບສຸລິຍະມັນຫ່າງຈາກດວງອາທິດ 57,9 ລ້ານກິໂລແມັດ ຫຼື ເກືອບເທົ່າ 58 ລ້ານກິໂລແມັດ, ມັນມີເສັ້ນຜ່າສູນກາງ 4,879 ກິໂລແມັດ, ນ້ອຍກວ່າໜ່ວຍໂລກເຖິງສາມເທົ່າ. Mercury ໃຊ້ເວລາພຽງ 88 ວັນໃນການປິ່ນອ້ອມດວງອາທິດ , ໃຊ້ເວລາໝູນປິ່ນອ້ອມຕົວມັນເອງ 180 ວັນ. ດາວພຸດບໍ່ມີດວງຈັນໂຄຈອນອ້ອມມັນ. ພື້ນຜິວທັງໝົດຂອງມັນຖືກປົກຄຸມດ້ວຍຫີນແຂງ, ສະນັ້ນມັນຄ້າຍຄືກັບດວງຈັນ. ເຖິງແມ່ນວ່າອຸນຫະພູມສາມາດບັນລຸເຖິງ 467 ° C,

ມີຄວາມໄວການ rotation ໝູນວຽນຊ້າດັ່ງກ່າວ, ພື້ນຜິວສ່ວນຫຼາຍຢູ່ຫ່າງຈາກແສງແດດຫຼາຍມື້, ສະນັ້ນ ອຸນຫະພູມສາມາດຫຼຸດລົງເຖິງ - 180 ° C.



ດາວພຸດ

2) ດາວສຸກ Venus

ດາວສຸກຢູ່ໃກ້ດວງຕາເວັນສາມາດເບິ່ງເຫັນໄດ້ດ້ວຍຕາເປົ່າໃຫຍ່ເປັນອັນດັບ 6 ເນື່ອງຈາກຂະໜາດຂອງມວນສານຄວາມໜາແໜ້ນ ແລະ ອົງປະກອບຂອງທາດຕ່າງໆມີຄວາມຄ້າຍຄືກັນກັບໂລກຫຼາຍຈິ່ງໄດ້ຊື່ວ່າເປັນຝາແຝດຂອງໜ່ວຍໂລກ. ຊາວໂຣມັນຮຽກດາວນີ້ວ່າດາວແຫ່ງຄວາມຮັກ. ຖ້າເຫັນດາວສຸກໃນເວລາຫົວຄໍ່າໃນທິດຕາເວັນຕົກເອີ້ນວ່າດາວປະຈຳເມືອງ Evening star ຖ້າເຫັນດາວສຸກໃນເວລາຍາມໃກ້ຈະແຈ້ງໃນທິດຕາເວັນອອກເອີ້ນວ່າດາວເຊົ້າ Morning star ຊັ້ນບັນຍາກາດສ່ວນໃຫຍ່ຂອງດາວສຸກເປັນແກດສ. ດາວສຸກໝູນຮອບຕົວມັນເອງຈາກທິດຕາເວັນອອກຫາທິດຕາເວັນຕົກ ບໍ່ມີດວງຈັນເປັນບໍລິວານ. ດາວສຸກມີເສັ້ນຜ່າສູນກາງ 12.104 ກິໂລແມັດ ໝູນອ້ອມຕົວມັນເອງຮອບ 1 ໃຊ້ເວລາ 224 ວັນ ແລະ ມີທິດທາງໃນການໝູນປິ່ນຕ່າງຈາກດາວເຄາະດວງອື່ນ ເພາະປິ່ນອ້ອມຕົວເອງຕາມລວງຂອງເຂັມໂມງ.



3) ໜ່ວຍໂລກ (Earth)

ໂລກມີອາຍຸປະມານ 4.600 ລ້ານປີ ໃຫຍ່ເປັນອັນດັບ 5 ໂລກມີສາຍາວ່າ ເປັນດາວເຄາະສີຟ້າ ເນື່ອງຈາກວ່າເນື້ອທີ່ສ່ວນໃຫຍ່ເປັນນ້ຳກວມເຖິງ 71% ແລະ ມີເນື້ອທີ່ດິນພຽງແຕ່ 29% ໂລກເປັນດາວເຄະດວງດຽວທີ່ມີສິ່ງທີ່ມີຊີວິດອາໄສຢູ່ ເນື່ອງຈາກມີຊັ້ນບັນຍາກາດ ແລະ ຢູ່ຫ່າງຈາກດວງຕາເວັນໃນໄລຍະທີ່ເໝາະສົມພໍດີຕໍ່ກັບການຈະເລີນເຕີບໂຕ ແລະ ການດຳລົງຊີວິດຂອງສິ່ງທີ່ມີຊີວິດ, ມີດວງຈັນເປັນບໍລິວານ 1 ດວງ.



ໜ່ວຍໂລກ

4) ດາວອັງຄານ Mars



ດາວອັງຄານສາມາດເບິ່ງເຫັນດ້ວຍຕາເປົ່າໃຫຍ່ເປັນອັນດັບ 7 ມີຂະໜາດນ້ອຍກວ່າໂລກ, ເສັ້ນຜ່າສູນກາງ 6.794 ກິໂລແມັດ ພື້ນຜິວເປັນຫີນສີແດງ ຈິ່ງຖືກຂະໜານນາມວ່າເປັນດາວເຄາະ ສີແດງ , ຫີນຢູ່ດາວອັງຄານ

ເປັນສີແດງ ຍ້ອນການເຂົ້າຂີໝ້ຽງ ສ່ວນທ້ອງຟ້າຢູ່ດາວອັງຄານເປັນສີບົວຍ້ອນຝຸ່ນຈາກຫີນແດງນີ້ເຮັດໃຫ້ພື້ນຜີວຂອງດາວອັງຄານເປັນຄືກັບທະເລແດງ ຢູ່ຫ່າງຈາກໂລກເຮົາພຽງແຕ່ 35 ລ້ານໄມ. ດາວອັງຄານປິ່ນອ້ອມຕົວມັນເອງໃນ 1 ຮອບໃຊ້ເວລາ 24.6 ຊົ່ວໂມງ, ແກນດາວອັງຄານອ່ຽງ 25ອົງສາ, ດາວອັງຄານມີດວງຈັນເປັນດາວບໍລິວານ 2 ດວງ ຄື: ໂຟບອສ ແລະ ດີມອສ, ມີອຸນະພູມຂ້ອນຂ້າງເຢັນ ປະມານ -65 ອົງສາເຊ.

5) ດາວພະຫັດ Jupiter



ດາວພະຫັດຖືກເອີ້ນວ່າດາວເຄາະຍັກເນື່ອງຈາກເປັນດາວຂະໜາດໃຫຍ່ທີ່ສຸດໃນລະບົບສຸລິຍະຈັກກະວານມີຂະໜາດໃຫຍ່ກວ່າໂລກ 11 ເທົ່າ ປິ່ນອ້ອມຕົວມັນເອງ 1 ຮອບໃຊ້ເວລາ 9, 8 ຊົ່ວໂມງ ສາມາດເບິ່ງເຫັນດ້ວຍຕາເປົ່າ ປິ່ນອ້ອມຕົວມັນເອງໜຶ່ງຮອບໃຊ້ເວລລາ 9.8 ຊົ່ວໂມງເປັນການໝູນປິ່ນທີ່ໄວ ແລະ ໃຊ້ເວລາປິ່ນອ້ອມດວງຕາເວັນ 1 ຮອບເທົ່າກັບ 12 ປີ. ນັກດາລາສາດໄດ້ອະທິບາຍວ່າ ດາວພະຫັດເປັນກຸ່ມກ້ອນກາສຂະໜາດໃຫຍ່ ທີ່ບໍ່ມີວັດຖຸຂອງແຂງຄືກັບໂລກເປັນດາວເຄາະທີ່ມີດວງຈັນເປັນບໍລິວານຫຼາຍເຖິງ 63 ດວງ.

6) ດາວເສົາ Saturn

ຖືກຂະໜານນາມວ່າເປັນດາວແຫ່ງເທບພະເຈົ້າແຫ່ງການກະເສດ, ມີຂະໜາດໃຫຍ່ເປັນອັນດັບ 2, ເປັນດາວເຄາະທີ່ມີຄວາມສວຍງາມທີ່ສຸດ, ສາມາດເບິ່ງເຫັນດ້ວຍຕາເປົ່າ. ດາວເສົາເປັນດາວເຄາະດວງດຽວທີ່ມີຄວາມໜາແໜ້ນໜ້ອຍກວ່ານໍ້າ, ປິ່ນອ້ອມຕົວມັນເອງຮອບ 1 ໃຊ້ເວລາ 10,2 ຊົ່ວໂມງ ແລະ ໂຄຈອນອ້ອມດວງຕາເວັນ 1 ຮອບໃຊ້ເວລາ 29 ປີ. ລັກສະນະເດັ່ນຂອງດາວເສົາແມ່ນມີວົງແຫວນອ້ອມຮອບ ເຊິ່ງວົງແຫວນຂອງດາວເສົາແມ່ນກ້ອນຫີນ ແລະ ນໍ້າແຂງທີ່ສະທ້ອນແສງຈາກດວງຕາເວັນໄດ້ຈຶ່ງເຮັດໃຫ້ເບິ່ງເຫັນວົງແຫວນໄດ້ຢ່າງຊັດເຈນ ມີດວງຈັນຈຳນວນ 60 ດວງເປັນດາວບໍລິວານ.



### 7) ດາວມະລຶດຕະຍູ Uranus

ດາວມະລຶດຕະຍູ ເປັນດາວເຄາະທີ່ມີກາສຂະໜາດໃຫຍ່, ມີດວງຈັນເປັນດາວບໍລິວານ 27 ດວງໝູນອ້ອມຕົວມັນເອງຮອບ 1 ໃຊ້ເວລາ 16,8 ຊົ່ວໂມງ ແລະ ປິ່ນອ້ອມດວງຕາເວັນຮອບໜຶ່ງໃຊ້ເວລາ 84 ປີ ດາວມະລຶດຕະຍູປະກອບດ້ວຍກາສ ແລະ ຂອງແຫຼວຄືກັບດາວພະຫັດ ແລະ ດາວເສົາ ດາວມະລຶດຕະຍູມີຂະໜາດໃຫຍ່ອັນດັບ 3 ຮອງຈາກດາວພະຫັດ ແລະ ດາວເສົາ ບໍ່ສາມາດເບິ່ງເຫັນດ້ວຍຕາເປົ່າ ຕ້ອງອາໄສກ້ອງຊ່ອງດາວໃນວັນທີ່ທ້ອງຟ້າແຈ້ງສະຫວ່າງ



**ດາວມະລຶດຕະຍູ Uranus**

8) ດາວເກດ **Neptune.**

ດາວເກດ ຫຼື ດາວເນບຈູນ ເປັນດາວເຄາະດວງສຸດທ້າຍ ເປັນດາວປຫ່າງເທບພະເຈົ້າທາງທຳເລ ໂຄງສ້າງຄ້າຍຄືກັບດາວ ຢູເຣນັສ ທຸກປະການ ອາດສາມາດເວົ້າວ່າເປັນດາວຝາແຝດກັນ ແຕ່ ດາວເກດມີຂະໜາດນ້ອຍກວ່າ, ມີມອນສານຫຼາຍກວ່າ ແລະ ມີແກສ ສີຟ້າໃຫຍ່ເປັນອັນດັບ 4ມີເສັ້ນຜ່ານສູນກາງເທົ່າ 5.000 ກິໂລແມັດບັນຈຸໂລກໄດ້ 60 ໜ່ວຍ ໃຊ້ເວລາໂຄຈອນອ້ອມຕົວມັນເອງ 16 ຊົ່ວໂມງ ແລະ ປິ່ນອ້ອມດວງຕາເວັນ 165 ປີ ຢູ່ໄກຈາກໜ່ວຍໂລກຈິນບໍ່ສາມາດແນມເຫັນດ້ວຍຕາເປົ່າດວງຈັນຂອງດາວເກດມີ 13 ດວງທີ່ມີຄວາມສວຍງາມທີ່ສຸດໃນລະບົບສຸລິຍະຈັກກະວານ.



ດາວເກດ **Neptune.**

# ບົດທີ7

# ໜ່ວຍໂລກແລະການໂຄຈອນຂອງໜ່ວຍໂລກ

## 1. ຮູບຮ່າງ ແລະ ຂະໜາດຂອງໜ່ວຍໂລກ

ຕັ້ງແຕ່ບູຮານນະການມະນຸດໄດ້ສຳນຶກວ່າໜ່ວຍໂລກເປັນຮູບໜ້າພຽງ, ຈົນມາຮອດໄລຍະມາແຊນລັງໄດ້ມີການເດີນທາງອ້ອມໂລກໃນປີ 1519-1521 ຈຶ່ງສາມາດຢັ້ງຢືນໄດ້ວ່າ: ໜ່ວຍໂລກເປັນຮູບມົນກົມ. ມາຮອດປີ 1672 ທ່ານ ຣິເຊ ສັງເກດພົບວ່າ: ໂມງເວລາລະຫວ່າງ ກຸຍແຢນ ອາເມລິກາໃຕ້ ກັບ ປາຣີ ຢູ່ເອີຣົບ ຫລຸດລົ່ນກັນ 2 ນາທີ ກັບ 28 ວິນາທີ /ວັນ , ທ່ານ ກຸຍແຢນ ແລະ ທ່ານ ນິວເຕີນ ໄດ້ພິສູດປະກົດການນັ້ນ . ຍ້ອນແຮງດຶງດູດຫລຸດລົ່ນກັນລະຫວ່າງ ປາຣີ ແລະ ກຸຍແຢນ ຈາກຂໍ້ມູນສະຫລຸບນັ້ນ, ເຂົາເຈົ້າສັນນິຖານໄດ້ວ່າ: ໜ່ວຍໂລກເປັນຮູບມົນກົມ ມັນເປັນຮູບມົນກົມເປ່ມຢູ່ 2 ຂົ້ວໂລກ ແລະ ສວດອອກຢູ່ເສັ້ນສູນສູດ , ບັນດານັກທໍລະນີສາດຝຣັ່ງ ໃນສັດຕະວັດທີ XVIII ສັນນິຖານ ແລະ ຢືນຢັນວ່າ: ໜ່ວຍໂລກເປັນ ຮູບມົນກົມເປ່ມແອນລິບໂຊອິດ. ໜ່ວຍໂລກເປັນຮູບມົນກົມເປ່ມມີຜົນກະທົບຕໍ່ບາງປະກົດການເຄື່ອນໝູນຂອງໜ່ວຍໂລກສະແດງອອກດັ່ງນີ້:

- ເຮັດໃຫ້ໜ້າໂລກໄດ້ຮັບແສງສະຫວ່າງຕ່າງກັນ ( ເຄິ່ງໜຶ່ງແຈ້ງ ແລະ ອີກເຄິ່ງໜຶ່ງມືດ )ໝາຍຄວາມວ່າ : ມູມແສງສະຫວ່າງຂອງແຕ່ລະອິງສາຈະແຕກຕ່າງກັນແລະແສງສະຫວ່າງຈະຄ່ອຍຫລຸດຜ່ອນລົງຕັ້ງແຕ່ເສັ້ນສູນສູດເຖິງຂົ້ວໂລກແລະຈະມີລະດູການທີ່ແຕກຕ່າງກັນອອກໄປ ເຊັ່ນດຽວກັນລະຫວ່າງເຄິ່ງໂລກເໜືອກັບເຄິ່ງໂລກໃຕ້.
- ລັກສະນະທີ່ມົນກົມເປ່ມແວບລົງທັງ ສອງ ຂົ້ວໂລກ ແລະ ສວດອອກ ຢູ່ເຂດເສັ້ນສູນສູດໄດ້ເຮັດໃຫ້ລະດັບຄວາມໄວ ການໝູນປິ່ນຂອງໜ່ວຍໂລກມີລັກສະນະຊ້າລົງ ຖ້າທຽບໃສ່ລັກສະນະມົນກົມ ເນື່ອງຈາກແຮງຮຸກຖູບັນຍາກາດຈະຫລາຍກວ່າ.ນອກຈາກມົນກົມ, ກົມເປ່ມທີ່ກ່າວມາຂ້າງເທິງນັ້ນ ໜ່ວຍໂລກຍັງມີລັກສະນະເຊໂອອິດ ມີລັກສະນະຫລຸບສວດຂອງໜ້າໂລກ, ຮູບຮ່າງນີ້ຕາມຂໍ້ມູນ ໄດ້ຈາກພາບຖ່າຍທາງ ດາວທຽມ. ສາມາດວັດແທກໄດ້ ຢູ່ເສັ້ນຂະໜານທີ 35 ອົງສາ ເໜືອ ໜ້າຂອງໜ່ວຍໂລກຕາມຮູບເຊໂອອິດ ຕໍ່າ ກວ່າ ໜ້າໂລກ ຕາມຮູບ ແອນລິບ ກົງກັນຂ້າມ ຢູ່ເສັ້ນຂະໜານ35 ອົງສາໃຕ້ ໜ້າໂລກ ໜ້າໂລກຕາມຮູບແອນລິບເຖິງ 20 ແມັດ . ສ່ວນຂົ້ວໂລກເໜືອພັດ ສູງກວ່າ 15 ແມັດ , ຂົ້ວໂລກໃຕ້ ພັດຫລຸດ 20 ແມັດ. ດັ່ງນັ້ນ, ສາມາດປຽບທຽບຮູບຮ່າງຂອງໜ່ວຍໂລກ ຮູບເຊໂອອິດ ແລະ ແອນລິບ ເຄິ່ງຄືກັນ, ລັກສະນະເຊໂອອິດັ່ງກ່າວ, ສະແດງໃຫ້ເຫັນວ່າເຄິ່ງໂລກເໜືອມີແຜ່ນດິນຫລາຍກວ່າເຄິ່ງໂລກໃຕ້.

ໜ່ວຍໂລກທີ່ເຮົາດຳລົງຢູ່ແມ່ນໜຶ່ງໃນດາວເຄາະທັງ 8 ດວງ ຂອງລະບົບສຸລິຍະຈັກກະວານເຊິ່ງເປັນດາວເຄາະທີ່ມີຂະໜາດໃຫຍ່ພໍປານກາງເຊິ່ງສະແດງອອກຕາມຕົວເລກລຸ່ມນີ້:

- ລວງຮອບ 2 ຂົ້ວໂລກເໜືອ- ໃຕ້ ຍາວ 40. 008 ລ້ານ ກິໂລແມັດ
- ວົງຮອບຕາມເສັ້ນສູນສູດ 40. 075 ກິໂລແມັດ

- ລັດສະໜີແຕ່ໃຈກາງເຖິງເສັ້ນສູນສູດ 6.378.388 ກິໂລແມັດ
- ລັດສະໜີແຕ່ໃຈກາງຂົ້ວໂລກເໜືອ-ໃຕ້ 6.356.912 ກິໂລແມັດ
- ບໍລິມາດ 1.083.320.000.000 ກມ$^3$
- ເນື້ອທີ່ 510.200.000 ກມ$^2$



ໜ່ວຍໂລກ

## 2. ການໂຄຈອນຂອງໜ່ວຍໂລກ

ໜ່ວຍໂລກເປັນແມ່ນໜຶ່ງໃນຈຳນວນດາວເຄາະທັງ 8 ດວງໃນລະບົບສຸລິຍະຈັກກະວານ ການໝູນປິ່ນ ຫຼື ການໂຄຈອນຂອງໜ່ວຍໂລກມີ 4 ແບບຄື:



1) ໝູນປິ່ນອ້ອມຕົວເອງ
2) ໂຄຈອນອອ້ມຕາເວັນ
3) ເຄື່ອນທີ່ກັບລະບົບສຸລິຍະຈັກະວານ
4) ເຄື່ອນໝູນໄປກັບຂະບວນກາລັກຊີທາງຊ້າງເຜືອກ (ກຸ່ມດາວ )

**2.1. ການໝູນປິ່ນອ້ອມຕົວມັນເອງຂອງໜ່ວຍໂລກ**

ໜ່ວຍໂລກໝູນອ້ອມຕົວເອງຕາມແກນສຳນຶກແຕ່ທິດຕາເວັນຕົກ- ຕາເວັນອອກ ( ໝູນປິ່ນກົງກັນຂ້າມກັບທິດເຂັມໂມງເດີນ ) ດັ່ງນັ້ນ, ຈຶ່ງມີປະກົດການກາງເວັນ- ກາງຄືນ (ຜູ້ຄົ້ນພົບ ທ່ານ ໂກແປກນິກ ໂປໂລຍ 1473-1543 ). ໜ່ວຍໂລກປິ່ນອ້ອມຕົວເອງໃຊ້ເວລາ 23 ຊົ່ວໂມງ 56 ນາທີ 4.09 ວິນາທີ, ຊ່ວງເວລາດັ່ງກ່າວ, ເອີ້ນວ່າ: ວັນດາລາຄະຕິ ເຊິ່ງເວລາດັ່ງກ່າວແມ່ນຕ່າງກັບເວລາທີ່ພວກເຮົາໃຊ້ທຸກວັນຄື: 1 ວັນມີ 24 ຊົ່ວໂມງ ເອີ້ນວ່າ: ວັນສຸລິຍະຄະຕິ ໜ່ວຍໂລກໝູນປິ່ນອີກ 3 ນາທີ 55.51 ວິນາທີ ຈຶ່ງເທົ່າກັບ 24 ຊົ່ວໂມງ. ວັນສຸລິຍະຄະຕິແມ່ນກຳນົດເອົາເວລາແສງສະຫວ່າງຢູ່ຊື່ຫົວເຮົາໝູນໄປອີກຈົນມາຊື່ເຮົາອີກຄັ້ງໜຶ່ງ. ໜ່ວຍໂລກປິ່ນອ້ອມຕົວເອງດ້ວຍຄວາມໄວປະມານ 1.666 ກິໂລແມັດ/ຊົ່ວໂມງ (ຢູ່ເຂດເສັ້ນສູນສູດ ).

**3.2 ການໝູນປິ່ນຂອງຫນ່ວຍໂລກອ້ອມຕາເວັນ**

ໜ່ວຍໂລກປິ່ນອ້ອມຕາເວັນດ້ວຍຄວາມໄວສະເລ່ຍປະມານ 29.745 ກິໂລແມັດ/ວິນາທີ ຫລື 107.000 ກິໂລແມັດຕໍ່ຊົ່ວໂມງ. ໃຊ້ເວລາ 365 ວັນ 6 ຊົ່ວໂມງ 9 ນາທີ ຕໍ່ 1 ຮອບດ້ວຍໄລຍະທາງຍາວເຖິງ 965 ລ້ານກິໂລແມັດຕໍ່1ຮອບ, ຊ່ວງເວລາດັ່ງກ່າວ, ກຳນົດເປັນຫົວໜ່ວຍຂອງປະທິທິນ , ຖ້າກຳນົດເອົາພຽງແຕ່ 365 ວັນ ຈະເຮັດໃຫ້ວັນ, ເດືອນເຄື່ອນຍ້າຍບໍ່ກົງກັບລະດູການ.

**ຕົວຢ່າງ:** 21 ມີນາ ຈະມີແສງຕາເວັນຕັ້ງສາກໃສ່ ເສັ້ນສູນສູດ ຖ້ານັບເອົາແຕ່ 365 ວັນ ວັນຈະໄປໄວກວ່າຕົວຈິງ ແລະ ໃນປີຕໍ່ໄປຂອງ ວັນທີ 21 ມີນາ ແສງຕາເວັນ ຈະບໍ່ຕັ້ງສາກໃສ່ເສັ້ນສູນສູດອີກ. ດັ່ງນັ້ນ, ລະດູການຈຶ່ງເຄື່ອນໄປເລື້ອຍໆ ສະນັ້ນ, ເພື່ອບໍ່ໃຫ້ວັນ, ເດືອນ ເຄື່ອນໄວກວ່າຕົວຈິງເພິ່ນຈຶ່ງກຳນົດເອົາຫົວໜ່ວຍຂອງປີ ແມ່ນ 365 ວັນ 6 ຊົ່ວໂມງ ແລະ 9 ນາທີ ເພື່ອສະດວກໃນການຄິດໄລ່ດັ່ງລຸ່ມນີ້:

ປີໜຶ່ງໄລ່ເອົາ 365 ວັນ ເສດ 6 ຊົ່ວໂມງ 9 ນາທີ ເພິ່ນເກັບສະສົມເອົາໄວ້ ເມື່ອຮອດ 24 ຊົ່ວໂມງ ( ມື້ໜຶ່ງ) ແລ້ວຈຶ່ງຕື່ມໃສ່ 365 ມື້ ເປັນ 366 ມື້ ແລ້ວເອີ້ນປີ 366 ມື້ນັ້ນວ່າ: ປີ ອະທິກະສຸລະທິນ ໝາຍຄວາມວ່າ 4 ປີໃດ ຈະມີ 3 ປີ 365 ວັນ ແລະ ອີກ 1 ປີ, ມີ 366 ວັນ.

ວົງໂຄຈອນໜ່ວຍໂລກອ້ອມຕາເວັນເປັນຮູບ ວົງຣີ (ແອນລິບ ) ຈຶ່ງເຮັດໃຫ້ໄລຍະຫ່າງໂລກ ກັບຕາເວັນ ມີການປ່ຽນແປງ . ສຳລັບໂລກເຮົາໃກ້ຕາເວັນທີ່ສຸດແມ່ນ 147.000.000 ກິໂລແມັດ ເຊິ່ງກົງກັບ ວັນທີ 3 ເດືອນ ມັງກອນ , ສ່ວນໄລຍະທີ່ໄກສຸດແມ່ນ 152.000.000 ກິໂລແມັດ ກົງກັບ ວັນທີ 5 ກໍລະກົດ , ມັນໂຄຈອນອ້ອມຕາເວັນມີຄວາມໄວສະເລ່ຍ 29.745 ກິໂລແມັດ ຕໍ່ ວິນາທີ. ຖ້າໜ່ວຍໂລກຫຍັບເຂົ້າໃກ້ຕາເວັນເທົ່າໃດ ຄວາມໄວຍິ່ງເພີ່ມຂຶ້ນ 30.3 ກິໂລແມັດຕໍ່ວິນາທີ, ໂລກໂຄຈອນໃນລະດັບຫງ່ຽງ $66^{o}\ 33^{/}$ ທຽບໃສ່ໜ້າ

ພຽງອິງໂຄຈອນ . ແລະ 23°27′ ທຽບໃສ່ແນວຕັ້ງ ຍ້ອນແກນຂອງໂລກຫງ່ຽງ ແລະ ໝູນອ້ອມຕາເວັນ ສະນັ້ນ, ຈະມີປາກົດການຕ່າງໆບົນໂລກເຮົາ.

## 3. ຜົນຕ່າງໆທີ່ເກີດຈາກການໂຄຈອນຂອງໜ່ວຍໂລກ

### 3.1. ຜົນທີ່ເກີດຈາກການທີ່ໜ່ວຍໂລກໝູນປິ່ນອ້ອມຕົວມັນເອງ

**1) ປະກົດການກາງເວັນ ແລະ ກາງຄືນ**

ໜ່ວຍໂລກປິ່ນອ້ອມຕົວເອງຕາມແກນສໍານຶກ ແຕ່ທິດຕາເວັນຕົກ - ຕາເວັນອອກ, ໜ່ວຍໂລກເປັນຮູບກົມເຮັດໃຫ້ແຕ່ລະຈຸດເທິງໜ້າໂລກສັບປ່ຽນກັນຮັບແສງສະຫວ່າງຈາກດວງອາທິດແຕກຕ່າງກັນ ນັ້ນໝາຍຄວາມວ່າທຸກໆຈຸດເທິງໜ້າໂລກບໍ່ສາມາດຮັບແສງຈາກດວງອາທິດໃນເວລາດຽວກັນໄດ້ ໂດຍສະເພາະ ເຄິ່ງໂລກຕາເວັນຕົກ ແລະ ເຄິ່ງໂລກຕາເວັນອອກ , ເຄິ່ງໂລກໃດໄດ້ຮັບແສງກ່ອນຈະເປັນກາງເວັນ. ສ່ວນດ້ານທີ່ກົງກັນຂ້າມກໍ່ຈະເປັນກາງຄືນ ຈາກປາກົດການນີ້ມະນຸດ ແລະ ສິ່ງທີ່ມີຊີວິດຕ້ອງປັບຕົວໃຫ້ເຂົ້າກັບທໍາມະຊາດ.




ປະກົດການກາງເວັນ ແລະ ກາງຄືນ Day and night

**2) ຄວາມແຕກຕ່າງທາງດ້ານເວລາ**

ຕາມທໍາມະດາແລ້ວເພິ່ນອີງໃສ່ທີ່ຕັ້ງຂອງດວງຕາເວັນເພື່ອກໍານົດເວລາ ຫຼື ໂມງໃນຈຸດໃດໜຶ່ງເທິງໜ້າໂລກເຊັ່ນ: ເວລາທ່ຽງວັນແມ່ນເວລາທີ່ດວງຕາເວັນຢູ່ເຊິ່ງຫົວຂອງຄົນເຮົາ ແຕ່ເນື່ອງຈາກວ່າໜ່ວຍໂລກປິ່ນອ້ອມຕົວມັນເອງຕາເວັນຈຶ່ງບໍ່ສາມາດຢູ່ເຊິ່ງຫົວຂອງຄົນເຮົາໄດ້ທຸກຈຸດໃນເວລາດຽວກັນໄດ້ຈຶ່ງພາໃຫ້ເກີດມີຄວາມແຕກຕ່າງທາງດ້ານເວລາເທິງໜ້າໂລກ. ເມື່ອເປັນແນວນັ້ນເພິ່ນຈຶ່ງກໍານົດເວລາປະຈໍາເຂດຂຶ້ນເຊິ່ງແບ່ງໂລກອອກເປັນ 24 ເຂດ (ຕາມເສັ້ນແວງ) ແຕ່ລະເຂດມີ 15 ອົງສາເສັ້ນແວງ ເອີ້ນວ່າບົວໂມງ ເຊິ່ງໃນໂລກມີທັງໝົດ 24 ບົວໂມງ. ເພິ່ນກໍານົດຕົວເລກໃສ່ແຕ່ລະບົບໂມງແຕ່ 0 ຫາ 23 ແລະ ບົວໂມງທີ 0 ມີເສັ້ນແວງເຄົ້າ 0 ອົງສາຜ່ານເມືອງກຣີນວິດ Greenwich ປະເທດ ອັງກິດ. ພາຍຫຼັງແບ່ງໂລກເປັນ 24 ບົວໂມງແລ້ວໃນທາງປະຕິບັດຕົວຈິງ ເວລາເດີນທາງອອກຈາກບົວໂມງທີ 1 ໄປຫາອີກບົວໂມງ 1 ເວລາຈະປ່ຽນ 1 ຊົ່ວໂມງ. ສະນັ້ນ, ຖ້າ

ເດີນທາງໄປທາງທິດຕາເວັນອອກຕ້ອງບິດເຂັມໂມງໄປທາງໜ້າ 1 ຊົ່ວໂມງ ແຕ່ຖ້າເດີນທາງມາທາງທິດຕາເວັນຕົກຕ້ອງບິດເຂັມໂມງຖອຍລົງມາ 1 ຊົ່ວໂມງ ຖ້າຜ່ານເສັ້ນແວງທີ 180 ອົງສາຕ້ອງໄດ້ປ່ຽນວັນທີ.




**3) ກຳລັງແຮງໜີສູນ ແລະ ກຳລັງແຮງໂກຣິໂອລິສ**

ກຳລັງແຮງໜູສູນແມ່ນກຳລັງແຮງອັນໜຶ່ງທີ່ພະຍາຍາມອ່ຽງວັດຖຸອອກຈາກສູນກາງຂອງມັນ ກຳລັງແຮງໜີສູນມີຫຼາຍຢູ່ເສັ້ນສູນສູດ ແລະຫຼຸດລົງໄປເລື້ອຍໆເມື່ອອອກຫ່າງຈາກເສັ້ນສູນສູນລົງໄປທາງເໜືອ ແລະ ທາງໃຕ້

ສ່ວນກຳລັງແຮງໂກຣິໂອລິສ Coriolis ແມ່ນກຳລັງແຮງທີ່ເຮັດໃຫ້ວັດຖຸພວມເຄື່ອນທີ່ຢູ່ ໂດຍສະເພາະແມ່ນວັດຖຸທີ່ເປັນຂອງແຫຼວ ມີການອ່ຽງໄປທາງຂວາຢູ່ເຟື້ອງໂລກຕາເວັນດໜືອ ແລະ ອ່ຽງໄປທາງຊ້າຍຢູ່ເຟື້ອງໂລກໃຕ້ຕົວຢ່າງ: ການສຽດເຊາະຂອງແມ່ນ້ຳຕ່າງໆຢູເຟື້ອງໂລກເໜືອມັນຈະສຽດເສາະຢູ່ທາງຝັ່ງເບື້ອງຂວາມີຫຼາຍກວ່າຝັ່ງຊ້າຍມີ ເຊັ່ນ: ແມ່ນ້ຳຂອງ.

### 3.2. ຜົນທີ່ເກີດຈາກການທີ່ໜ່ວຍໂລກປິ່ນອ້ອມດວງຕາເວັນ

### 1) ປະກົດການຄືນສັ້ນວັນຍາວ ແລະ ຄືນຍາວວັນສັ້ນ

ປາກົດການນີ້ເກີດຈາກການທ່ຽງຂອງແກນໂລກ ແລະ ການໂຄຈອນຂອງໂລກອ້ອມຕາເວັນເຊິ່ງພາໃຫ້ເກີດມີປາກົດການຄ້າຍຄືວ່າ: ດວງຕາເວັນເຄື່ອນສູ່ທ້ອງຟ້າເຄິ່ງໂລກເໜືອ ແລະ ເຄື່ອນລົງສູ່ທ້ອງຟ້າເຄິ່ງໂລກໃຕ້ ຈາກປາກົດການນີ້ ພາໃຫ້ເກີດມີຄືນສັ້ນ-ວັນຍາວ ຢູ່ແຕ່ລະເຄິ່ງໂລກເໜືອ-ໃຕ້ເຊັ່ນ:

- ວັນທີ 21 ມີນາ ເອີ້ນກັນວ່າ: ວັນອະສັນຕະວິສຸວັດ ແລະ ວັນທີ 23 ເດືອນກັນຍາເອີ້ນວ່າ: ວັນສາລະທະວິສຸວັດ . ໃນ 2 ວັນທີ່ແສງຕາເວັນຕັ້ງສາກຢູ່ເສັ້ນສູນສູດ ດັ່ງນັ້ນ, 2 ວັນນີ້ ກາງເວັນ ແລະ ກາງຄືນ ຢູ່ 2 ເຄິ່ງໂລກ, ມີຄວາມຍາວເທົ່າກັນຄື 12 ຊົ່ວໂມງ.
- ວັນທີ 21 ມີນາເປັນວັນເຂົ້າສູ່ລະດູບານໃໝ່ຂອງເຄິ່ງໂລກເໜືອ, ແຕ່ເປັນວັນເຂົ້າສູ່ລະດູໃບໄມ້ຫລົ່ນຂອງເຄິ່ງໂລກໃຕ້.
- ວັນທີ 23 ກັນຍາ ເປັນວັນເຂົ້າສູ່ລະດູໃບໄມ້ຫລົ່ນຂອງເຄິ່ງໂລກເໜືອ ແຕ່ເປັນວັນເຂົ້າສູ່ລະດູບານໃໝ່ຂອງເຄິ່ງໂລກໃຕ້.
- ວັນທີ 21 ມິຖຸນາ ເອີ້ນວ່າ: ວັນຄີສາມາຍັນ ເປັນວັນທີ່ແສງຕາເວັນຕັ້ງສາກຢູ່ເສັ້ນອາຍັນເໜືອ ( $23^{o}27^{/}$ ເໜືອ ) ເຄິ່ງໂລກເໜືອມີກາງເວັນຍາວທີ່ສຸດ ແລະ ມີຄືນສັ້ນທີ່ສຸດວັນນັ້ນຢູ່ເຄິ່ງໂລກເໜືອ ເສັ້ນຂະໜານທີ $66^{o}33^{/}$ ເໜືອ-ຂົ້ວໂລກເໜືອ ແມ່ນໄດ້ຮັບແສງສະຫວ່າງຕະຫລອດ 24 ຊົ່ວໂມງ. ກົງກັນຂ້າມເຄິ່ງໂລກໃຕ້ໃນເຂດເສັ້ນຂະໜານທີ $66^{o}33^{/}$ ໃຕ້ເຖິງຂົ້ວໂລກໃຕ້ແມ່ນບໍ່ໄດ້ຮັບແສງສະຫວ່າງຕະຫລອດ 24 ຊົ່ວໂມງ
- ວັນທີ 22 ທັນວາ ເອີ້ນວ່າ: ວັນເຫສາມາຍັນ ເປັນວັນທີ່ແສງຕາເວັນຕັ້ງສາກຢູ່ເສັ້ນອາຢັນໃຕ້ $23^{o}27^{/}$ໃຕ້ ໃນມື້ນັ້ນເຄິ່ງໂລກໃຕ້ມີກາງເວັນ ຍາວທີ່ສຸດແຕ່ ກາງຄືນສັ້ນທີ່ສຸດຕັ້ງແຕ່ເສັ້ນຂະໜານທີ$66^{o}33^{/}$ໃຕ້ລົງໄປເຖິງຂົ້ວໂລກໃຕ້ເປັນກາງເວັນຕະຫລອດ 24 ຊົ່ວໂມງ.ແລະ ເຄິ່ງໂລກເໜືອ ແມ່ນ ກົງກັນຂ້າມກັນ.( ແນະນຳນັກຮຽນໄປເບິ່ງ ຕາຕະລາງຈຳນວນຊົ່ວໂມງທີ່ກາງເວັນຍາວ ແລະ ກາງຄືນສັ້ນ ຂອງ 2 ເຄິ່ງໂລກ ໃນປື້ມພູມສາດ1 ໜ້າທີ 24).

**2)ລະດູການຕ່າງໆ**

ໃນ 1 ປີໜ່ວຍໂລກໝູນອ້ອມຕົນເອງໄດ້ຫລາຍຮອບ ແລະ ໂຄຈອນອ້ອມຕາເວັນໄດ້ 1 ຮອບຍ້ອນການອ່ຽງຂອງແກນໂລກເຮັດໃຫ້ແຕ່ລະຈຸດເທິງໜ້າໂລກແຕກຕ່າງກັນ ແລະ ບໍ່ຄົງທີ່ ດັ່ງນັ້ນ, ຈິ່ງເຮັດໃຫ້ມີລະດູການແຕກຕ່າງກັນຄື:

**ສຳລັບເຟື້ອງໂລກເໜືອ**

| | |
|---|---|
| 9) ລະດູບານໃໝ່ | ວັນທີ 21 ມີນາ - 20 ມິຖຸນາ (91 ວັນກັບ 19 ຊມ) |
| 10) ລະດູຮ້ອນ | ວັນທີ 21 ມິຖຸນາ - 22 ກັນຍາ ( 94 ວັນກັບ 15 ຊມ) |
| 11) ລະດູໃບໄມ້ຫລົ່ນ | ວັນທີ23 ກັນຍາ - 22 ທັນວາ (89 ວັນ ກັບ 20 ຊມ) |
| 12) ລະດູໜາວ | ວນທີ 22 ທັນວາ - 20 ມີນາ(89 ວັນ) |

**ສຳລັບເຟື້ອງໂລກໃຕ້**

| | |
|---|---|
| 13) ລະດູບານໃບໄມ້ຫຼົ່ນ | ວັນທີ 21 ມີນາ - 20 ມິຖຸນາ (91 ວັນກັບ 19 ຊມ) |
| 14) ລະດູໜາວ | ວັນທີ 21 ມິຖຸນາ - 22 ກັນຍາ ( 94 ວັນກັບ 15 ຊມ) |
| 15) ລະດູໃບໄມ້ປົ່ງ | ວັນທີ23 ກັນຍາ - 22 ທັນວາ (89 ວັນ ກັບ 20 ຊມ) |

16) ລະດູຮ້ອນ				ວັນທີ 22 ທັນວາ - 20 ມີນາ(89 ວັນ)

## ການໂຄຈອນຂອງດວງຈັນອ້ອມໜ່ວຍໂລກ

ດວງເດືອນເປັນດາວບໍລິວານຂອງໜ່ວຍໂລກມັນປິ່ນອ້ອມຕົວມັນເອງແລ້ວມັນຍັງໂຄຈອນອ້ອມໜ່ວຍໂລກ ພ້ອມນີ້ດວງຈັນຍັງເຄື່ອນທີ່ໄປພ້ອມກັບລະບົບສຸລິຍະຈັກກະວານ ແລະ ເຄື່ອນໄປພ້ອມກັບກຸ່ມດາວ ( ກາລັກຊີ ຫລື ທົ່ນທາງຊ້າງເຜືອກ ) ການປິ່ນອ້ອມຕົວເອງແມ່ນຊ້າໆມູມອ່ຽງ $6^{o}5^{/}$ ກັບເສັ້ນຕັ້ງສາກ, ກັບໜ້າພຽງວົງໂຄຈອນຂອງມັນໃຊ້ເວລານານກັບໂຄຈອນອ້ອມໂລກຄື: 27 ວັນ 7 ຊົ່ວໂມງ 43 ນາທີຫລື 11, 5 ວິນາທີ/1 ຮອບການໂຄຈອນຂອງດວງຈັນອ້ອມໜ່ວຍໂລກພາໃຫ້ເກີດມີປາກົດການເທິງໜ້າໂລກຄື

- **ປະກົດການເດືອນຂຶ້ນ-ເດືອນແຮມ**

ດວງຈັນ ແລະ ໜ່ວຍໂລກຕ່າງກັນກໍ່ມີກາງເວັນ ແລະ ກາງຄືນຄືກັນ ເພາະຕ່າງກໍໄດ້ຮັບແສງຕາເວັນຄືກັນດວງເດືອນສ່ວນທີ່ໄດ້ຮັບແສງສະຫວ່າງນານເຖິງ 14 ວັນ ອຸນຫະພູມສູງປະມານ 130 ອົງສາເຊ ສ່ວນທີ່ບໍ່ໄດ້ຮັບແສງກໍ 14 ວັນເຊັ່ນດຽວກັນແຕ່ມີອຸນຫະພູມຕໍ່າຫລາຍ- 150 ອົງສາເຊ.

ການເຄື່ອນໝູນຂອງເດືອນຢູ່ແຕ່ລະຈຸດເມື່ອທຽບໃສ່ທີ່ຕັ້ງຂອງໂລກ ແລະ ດວງຕາເວັນຈະຫລຽວເຫັນເດືອນໃນຮູບຮ່າງ ແລະ ຂະໜາດຕ່າງໆ ຫລື ຈະບໍ່ເຫັນເດືອນໃນເວລາໃດໜຶ່ງເຊັ່ນ: ໃນເວລາເດືອນຢູ່ໃນຕໍາແໜ່ງກົງກັນຂ້າມກັບຕາເວັນສົມທຽບໃສ່ໜ່ວຍໂລກເຊິ່ງເປັນໄລຍະທີ່ໄກສຸດຈາກຕາເວັນເຮົາຈະເຫັນເດືອນແຈ້ງສະຫວ່າງເຕັມດວງນັ້ນເອີ້ນ: ເດືອນເພັງ, ຈາກນັ້ນເດືອນກໍຈະໂຄຈອນເຂົ້າໃກ້ຕາເວັນໄປທຸກວັນ ພ້ອມກັນນີ້ສ່ວນທີ່ແຈ້ງສະຫວ່າງຂອງມັນກໍຈະນ້ອຍລົງໄປທຸກວັນ ຈົນໃນທີ່ສຸດກໍຈະບໍ່ເຫັນເດືອນເອີ້ນວ່າ: ເດືອນດັບ ( ຫລື ໃນຕໍາແໜ່ງເດືອນດັບໄປເຖິງຕໍາແໜ່ງເດືອນເພັງ ນິຍົມເອີ້ນ: ເດືອນຂຶ້ນ ຫລື ອອກໃໝ່ ແລະ ໃນຊ່ວງເດືອນເພັງໄປເຖິງຕໍາແໜ່ງເດືອນດັບ ເອີ້ນ: ເດືອນແຮມ



- ປະກົດການສຸລິຍະຄາດ ແລະ ຈັນທະຄາດ

ໃນຂະນະທີ່ໂລກໂຄຈອນອ້ອມດວງຕາເວັນຢູ່ນັ້ນ, ດວງເດືອນກໍ່ໂຄຈອນອ້ອມໜ່ວຍໂລກ ແລະ ຕິດຕາມໂລກເຊັ່ນດຽວກັນ. ດັ່ງນັ້ນ, ຈິ່ງມີບາງຄັ້ງທີ່ໂລກໂຄຈອນມາຢູ່ໃນຕໍາແໜ່ງລະຫວ່າງກາງ ດວງຕາເວັນ ກັບ ດວງເດືອນ ແລະ ບັງແສງຕາເວັນບໍ່ໃຫ້ສ່ອງໃສ່ເດືອນເອີ້ນປາກົດການນີ້ວ່າ: ຈັນທະຣຸປະຣາຄາ ຫລື ຈັນທະຄາດ ( ກົບກິນເດືອນ ) ຈະມີຂຶ້ນ 14-15 ຄ່ຳ ຫລື ແຮມ 1 ຄ່ຳເທົ່ານັ້ນ.




**ຈັນທະຄາດ ( ກົບກິນເດືອນ )**

ກົງກັນຂ້າມໃນບາງຄັ້ງເດືອນກໍໂຄຈອນມາຢູ່ໃນຕໍາແໜ່ງລະຫວ່າງກາງດວງຕາເວັນ ແລະ ໜ່ວຍໂລກ ບັງແສງຕາເວັນບໍ່ໃຫ້ຊ່ອງໃສ່ໂລກ ເອີ້ນປາກົດການນີ້ວ່າ: ສຸລິຍຸປະຣາຄາ ຫລື ສຸລິຍະຄາດ ( ກົບກິນຕາເວັນ )ຈະມີຂຶ້ນໃນ 14-15ຄ່ຳ ຫລື ຂຶ້ນ 1 ຄ່ຳເທົ່ານັ້ນ.



- **ປະກົດການນ້ຳທະເລຂຶ້ນ-ລົງ**

ນອກຈາກປກົດການທີ່ກ່າວມານັ້ນ, ດວງຈັນກໍ່ຍັງມີອິດທິພົນຕໍ່ໂລກເຮົາອີກນັ້ນກໍ່ຄືເຮັດໃຫ້ເກີດມີປະກົດການນ້ຳຂຶ້ນ-ລົງ ບໍ່ແມ່ນນ້ຳໃນຫ້ວຍຮ່ອງໜອງບຶງ ແມ່ນ້ຳລຳເຊ ແຕ່ແມ່ນນ້ຳໃນທະເລ ແລະ ມະຫາສະໝຸດທີ່ກວ້າງໃຫຍ່ໄພສານ ເຊິ່ງປະກົດການນີ້ຜູ້ທີ່ດຳລົງຊີວິດຕາມແຄມທະເລ ແລະ ມະຫາສະໝຸດຈະພົບເຫັນເປັນປະຈຳ. ການທີ່ດວງຈັນໂຄຈອນອ້ອມໂລກເຮັດໃຫ້ແຮງດຶງດູດຂອງດວງຈັນດູດເອົາບໍລິມາດຂອງນ້ຳໃນທະເລ ແລະ ມະຫາສະໝຸດທີ່ຢູ່ເຊິ່ງກັນກັບດວງຈັນໃຫ້ສວດຂຶ້ນ ການສວດຂອງນ້ຳຈະປ່ຽນແປງໄປຕາມການໝູນປິ່ນຂອງໜ່ວຍໂລກອ້ອມຕົວມັນເອງ ໃນມື້ໜຶ່ງໃຊ້ເວລາ 24 ຊົ່ວໂມງ ຍ້ອນໜ່ວຍໂລກປິ່ນອ້ອມຕົວມັນເອງຕາມທິດໂຄຈອນຂອງດວງເດືອນອ້ອມໂລກ ໃນມື້ໜຶ່ງນ້ຳທະເລຈະຂຶ້ນ 1 ຄັ້ງ ແລະ ລົງ 1 ຄັ້ງ ໃນເດືອນໜຶ່ງນ້ຳທະເລຈະຂຶ້ນສູງສຸດ 2 ຄັ້ງຄືໃນວັນເດືອນເພັງ ແລະ ເດືອນດັບເວລານີ້ ດວງເດືອນ ແລະ ໂລກໄດ້ໂຄຈອນໃນຕຳແໜ່ງທີ່ຊື່ກັບຕາເວັນ ເວລາທີ່ດວງຕາເວັນເຄື່ອນອອກຈາກແນວເສັ້ນຊື່ດຽວກັນນ້ຳທະເລກໍ່ຈະຫຼຸດລົງ ຈາກນັ້ນເມື່ອຕາເວັນໂຄຈອນໃນມຸມ 90 ອົງສານ້ຳກໍ່ຈະຂຶ້ນຫຼາຍແຕ່ບໍ່ເທົ່າກັບວັນທີ່ດວງເດືອນ ແລະ ດວງຕາເວັນຢູ່ໃນເສັ້ນຊື່ດຽວກັນ.

# ບົດທີ8

# ທີ່ຕັ້ງ, ພູມສັນຖານ ແລະ ພູມອາກາດຂອງປະເທດລາວ

## 1. ທີ່ຕັ້ງ, ຂອບເຂດ ແລະ ຊາຍແດນ

### 1.1. ທີ່ຕັ້ງ ແລະ ເຂດແດນ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຕັ້ງຢູ່ໃຈກາງຂອງເຂດອາຊີອາຄະເນ ຫຼື ອາຊີ ຕາເວັນອອກສຽງໃຕ້ ເຊິ່ງເປັນເຂດຮ້ອນຊຸ່ມມໍລະສຸມ; ອີງຕາມຈຸດມາດຕະຖານທາງດ້ານພູມມີສາດຂອງໂລກ. ສ.ປ.ປ. ລາວ ຕັ້ງຢູ່ເຟື້ອງໂລກເຫນືອ ແລະ ນອນຢູ່ໃນເຂດບົວໂມງທີ 7 ຂອງຊີກໂລກຕາເວັນອອກ. ທິດເຫນືອສຸດຢູ່ເຂດບ້ານລານຕຸຍ, ເມືອງຍອດອູ, ແຂວງຜົ້ງສາລີກົງກັບເສັ້ນຂະຫນານ ທີ 22 ອົງສາ 30" ເຫນືອ, ທິດໃຕ້ສຸດຢູ່ບ້ານຂົ້ນາກ, ເມືອງໂຂງ, ແຂວງຈຳປາສັກ ເສັ້ນຂະຫນານທີ13ອົງສາ 54 ເຫນືອ, ຕາເວັນອອກສຽງໃຕ້ເຊະຫມານ, ແຂວງອັດຕະປື ເສັ້ນແວງທີ 106° 38' ຕາເວັນອອກ, ທິດຕາເວັນ ອອກສຽງເຫນືອ ນາປາວ ບ້ານເຕົ່າ ແຂວງຫົວພັນ ກົງກັບເສັ້ນແວງທີ 104 ອົງສາ 59 ລິບດາ ຕາເວັນອອກທິດຕາ ເວັນຕົກ ແມ່ນຢູ່ເຂດບ້ານຄອນ, ແຂວງບໍ່ແກ້ວກົງກັບເສັ້ນແວງທີ100 ອົງສ 05' ຕາເວັນອອກ..

ສ.ປ.ປ.ລາວ ຕັ້ງຢູ່ແຫຼມອິນດູຈີນ ເປັນເຂດເຊື່ອມຕໍ່ລະຫວ່າງທະວີບອາຊີກັບ ທະວີບໂອເຊອານີ້ ເປັນທາງຄົບລະຫວ່າງ ພາກພື້ນອາຊີຕາເວັນອອກກັບອາຊີຕາເວັນຕົກ, ອາຊີຕາເວັນອອກ ໄກກັບ ອາຊີຕາເວັນອອກສຽງໃຕ້, ສ.ປ.ປ.ລາວ ເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ, ດ້ວຍທີ່ຕັ້ງດັ່ງກ່າວ ສ.ປ.ປ.ລາວ ຈຶ່ງມີຊາຍແດນຕິດກັບ 5 ປະເທດດັ່ງນີ້ "ທິດເຫນືອຕິດກັບ ສາທາລະນະ ລັດປະຊາຊົນຈີນ ມີຊາຍແດນຍາວ 505 ກມ, ທິດຕາເວັນອອກຕິດກັບສາທາລະນະລັດສັງຄົມນິຍົມຫວຽດນາມມີ ຊາຍແດນຍາວ 2.069 ກມ, ທິດຕາເວັນຕົກ ຕິດກັບລາຊະອານາຈັກໄທມີຊາຍແດນຍາວ1.835 ກມ, ທິດຕາເວັນຕົກສຽງເຫນືອຕິດກັບສະຫະພາບມຽນມ້າ ມີຊາຍແດນ ຍາວ 236 ກມ ແລະ ທິດໃຕ້ຕິດກັບລາຊະອານາຈັກ ກຳປູເຈຍມີຊາຍແດນຍາວ 535 ກມ"

ຍ້ອນ ສປປລາວ ມີເສັ້ນຊາຍແດນຕິດກັບຫຼາຍປະເທດທີ່ມີຄວາມແຕກຕ່າງ ທາງດ້ານເສດຖະກິດ, ວັດທະນະທຳ - ສັງຄົມ ແລະ ການເມືອງ. ສະນັ້ນ, ຈຶ່ງເປັນຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກບາງປະການດັ່ງນີ້:

- **ຂໍ້ສະດວກ**

ສ້າງເງື່ອນໄຂໃຫ້ແກ່ການແລກປ່ຽນຮ່ວມມື ລະຫວ່າງປະເທດເຮົາກັບບັນດາປະເທດເພື່ອນ ບ້ານໃກ້ຄຽງລະຫ່ວາງປະເທດຕ່າງໆ ທີ່ອ້ອມຂ້າງປະເທດລາວເຮົາໄດ້ສະດວກຂຶ້ນ ເປັນຕົ້ນແມ່ນ ການພົວພັນ ເຊັ່ນ ດ້ານເສດຖະກິດ, ວັດທະນະທຳ - ສັງຄົມ. - ສ້າງເງື່ອນໄຂແກ່ ສ.ປ.ປ.ລາວ ໃຫ້ສາມາດຕິດຕໍ່ພົວພັນກັບປະເທດຕ່າງໆໃນໂລກເພື່ອແລກປ່ຽນ ແລະ ການຮ່ວມມືດ້ານການຄ້າ ແລະ ເຕັກນິກ - ວິທະຍາສາດ, ນຳເອົາຄວາມກ້າວຫນ້າທັນສະໄຫມຂອງຕ່າງປະເທດເຂົ້າສູ່ລາວໄດ້ໂດຍສະດວກ.

- **ຂໍ້ຫຍຸ້ງຍາກ**

ເກີດມີບັນຫາດ້ານຊາຍແດນ ເປັນບ່ອນລີ້ຊ້ອນ ແລະ ສວຍໂອກາດເຄື່ອນໄຫວກໍ່ກວນຄວາມບໍ່ສະຫງົບຢູ່ຕາມເຂດຊາຍແດນ ເຊັ່ນ ການປຸ້ຈີ້, ຄ້າ - ຂາຍຂອງເຖື່ອນ, ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ປະຊາຊົນກໍຄືການ

ສ້າງສາພັດທະນາປະເທດຂອງລາວເຮົາ, ນອກນັ້ນການພົວພັນ - ຄ້າຂາຍ ຫຼື ແຫຼ່ງລາຍຮັບທາງທະເລກໍມີຄວາມຫຍຸ້ງຍາກ.

## 2. ຮູບຮ່າງ ແລະ ເນື້ອທີ່ຂອງປະເທດລາວ

ສ.ປ.ປ.ລາວ ເປັນປະເທດທີ່ມີຮູບຮ່າງຍາວຢຽດຕາມທິດຂອງເສັ້ນແວງລວງຍາວແຕ່ເໜືອ ເຖິງໃຕ້ ປະມານ1000 ກມ, ທີ່ມີລັກສະນະຄ້າຍດອກບົວເຊິ່ງກວ້າງທາງພາກເໜືອປະມານ 500 ກມ, ກົງກັບເສັ້ນຂະໜານທີ 20° ເໜືອ ແລະ ຄ່ອຍໆ ແຄບເຂົ້າທາງພາກກາງມີພຽງແຕ່ປະມານ 150 ກມ ແລະ. ທາງພາກໃຕ້ ກວ້າງ ປະມານ 200 ກມ, ກົງກັບເສັ້ນຂະໜານທີ 10 ເໜືອ. ຍ້ອນ ສ.ປ.ປ.ລາວ ມີທັງທີ່ຕັ້ງຄືດັ່ງກ່າວມາຂ້າງເທິງນັ້ນຈຶ່ງເຮັດໃຫ້ມີຄວາມແຕກຕ່າງກັນທາງດ້ານສະພາບແວດລ້ອມທຳມະຊາດໂດຍສະເພາະແມ່ນພູມອາກາດ, ແມ່ນລຳເຊ, ດິນ, ພືກສາຊາດ ແລະ ສັດ.




ແຜນທີ່ລາວ

ສ.ປ.ປ.ລາວ ມີເນື້ອທີ່ທັງໝົດ 236.800 ກມ$^2$ , ຖ້າຈະສົມທຽບໃສ່ກັບປະເທດອື່ນໃນໂລກ ແລະ ໃນອາຊີອາຄະເນແມ່ນ ສ.ປ.ປ.ລາວມີເນື້ອທີ່ຢູ່ໃນລະດັບກາງແຕ່ຖ້າຈະສົມທຽບດ້ານຄວາມໜາແໜ້ນຂອງ

ປະຊາກອນ ແລ້ວເຫັນວ່າປະເທດລາວເປັນປະເທດດຽວໃນອາຊີອາຄະເນທີ່ມີເນື້ອ ທີ່ກວ້າງຂວາງ ແລະ ຍັງຫວ່າງເປົ່າຫຼາຍ, ເນື້ອທີ່ສ່ວນໃຫຍ່ຍັງບໍ່ທັນໄດ້ຮັບການຂຸດຄົ້ນບຸກເບີກ ແລະ ນຳໃຊ້.

ສັງລວມແລ້ວ, ທີ່ຕັ້ງພູມີສາດຂອງປະເທດໄດ້ສ້າງເງື່ອນໄຂສະດວກຫຼາຍຢ່າງໃຫ້ແກ່ການ ພັດທະນາທາງດ້ານເສດຖະກິດ - ສັງຄົມຂອງລາວໃນອານາຄົດໃຫ້ຈະເລີນຮຸ່ງເຮືອງ ເປັນຕົ້ນແມ່ ເປັນປະເທດທີ່ນອນຢູ່ໃຈກາງຂອງຫຼາຍປະເທດສ້າງຄວາມສະດວກແກ່ການພົວພັນລະຫວ່າ ໃນພາກພື້ນອາຊີອາຄະເນ, ຍັງມີເນື້ອທີ່ກວ້າງເມື່ອທຽບກັບຈຳນວນປະຊາກອນ. ສະພາບທາງທຳມະຊາດໄດ້ປະກອບໃຫ້ແກ່ປະເທດເຮົາມີຊັບພະຍາກອນພື້ນດິນ ແລະ ເທິງໜ້າດິນຫຼາຍຊະນິດທີ່ອຸດົມສົມບູນ ນອກຈາກນັ້ນກໍ່ເປັນປະເທດທີ່ມີສະພາບອາກາດເໝາະສົມສຳລັບການດຳລົງຊີວິດ ແລະ ການຜະລິດຂອງປະຊາກອນລາວ ໃນດ້ານທີ່ຕັ້ງພູມີປະເທດນີ້ນອກຈາກຈະມີຄວາມສະດວກແລ້ວກໍ່ຍັງມີຄວາມຫຍຸ້ງຍາກໃນການພົວພັນແລກປ່ຽນສິນຄ້າກັບຕ່າງປະເທດ.

## 3. ພູມສັນຖານຕົ້ນຕໍຂອງປະເທດລາວ

### 3.1. ລັກສະນະຂອງພູມສັນຖານ

ພູມສັນຖານຂອງ ສປປ ລາວ ມີຫຼາຍຮູບແບບ ເຊັ່ນ ມີພູສູງ, ຈອມພູ, ພູເນີນ, ເຫວ, ພູຕ່ຳ, ພູພຽງ ແລະ ມີທົ່ງພຽງສະຫຼັບສັບຊ້ອນກັນໄປ. ແຕ່ເບິ່ງແລ້ວປະເທດລາວເປັນປະເທດທີ່ມີ ພູມສັນຖານຫຼາຍປະເພດ ແຕ່ໄດ້ແບ່ງເປັນ 3 ຂັ້ນຄື ພູສູງ, ພູພຽງ ແລະ ທົ່ງພຽງ. ຖ້າສົມທຽບໃສ່ເນື້ອທີ່ທັງຫມົດໃນທົ່ວປະເທດແລ້ວ, ພູ ແລະ ພູພຽງກວມເນື້ອທີ່ປະມານ 4/5, ໃນນັ້ນພູທີ່ມີຈອມສູງເຖິງ 1000 ແມັດ ຂຶ້ນໄປກວມເນື້ອທີ່ປະມານ 30% ຈອມພູທີ່ສູງກວ່າໝູ່ແມ່ນ ຈອມພູເບັ້ຍສູງເຖິງ 2.820 ແມັດ. ສາຍພູດັ່ງກ່າວສ່ວນຫຼາຍ ແມ່ນເຕົ້າໂຮມກັນຢູ່ທາງພາກ ເໜືອ ແລະ ພາກຕາເວັນອອກ, ພູຕ່ຳ ແລະ ພູພຽງ ເຊິ່ງຢູ່ໃນລະດັບແຕ່ 200 -1000 ແມັດ ກວມເນື້ອທີ່ 50%, ມີຢູ່ທົ່ວທຸກເຂດຂອງປະເທດ. ສ່ວນຫຼາຍລະດັບຕ່ຳກວ່າ 200 ແມັດ ແມ່ນເຂດທົ່ງພຽງທີ່ກວມເອົາ 20%, ສ່ວນໃຫຍ່ປະກອບເປັນທົ່ງຍາວຢຽດລຽບຕາມແຄມແມ່ນ້ຳຂອງຕັ້ງແຕ່ແຂວງວຽງຈັນ ຫາຊາຍແດນລາວ - ກຳປູເຈຍ.

ປະເທດລາວມີພູມສັນຖານສູງກວມເອົາເນື້ອທີ່ສ່ວນໃຫຍ່ຂອງປະເທດ ຄືດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນກໍຍ້ອນໄດ້ຮັບຜົນສະທ້ອນຕົ້ນຕໍ ແລະ ຍາວນານຈາກການເຄື່ອນເຫນັງເຕັກໂຕນິກ (ກຳລັງແຮງໃຕ້ເປືອກໂລກ ຫຼື ກຳລັງແຮງພາຍໃນທັງເກົ່າ ແລະ ໃຫມ່) ການເຄື່ອນໄຫວຈາກກຳລັງແຮງພາຍນອກ ໄດ້ເຮັດໃຫ້ພູມສັນຖານສູງຖືກສຽດເຊາະແລ້ວຕ່ຳລົງ ກາຍເປັນພູມສັນຖານຮາບພຽງກວ່າ ໂດຍສະເພາະແມ່ນພື້ນຖານເກົ່າແກ່.

ລັກສະນະທີ່ເດັ່ນຂອງພູມສັນຖານລາວ ແມ່ນຄວາມແຕກຕ່າງກັນລະຫວ່າງພາກເຫນືອ ກັບ ພາກໃຕ້, ພູສູງສ່ວນຫຼາຍແມ່ນເຕົ້າໂຮມຢູ່ທາງພາກເຫນືອ. ສາຍພູຕົ້ນຕໍມີລັກສະນະເປັນຮູບວີເຊີ່ງ ແຜ່ອອກຈາກຈຸດສຸມຢູ່ທິດເຫນືອ (ແຂວງ ຜົ້ງສາລີ, ແລ້ວເນັ່ງລົງສູ່ທາງພາກໃຕ້)

ສາຍພູເຫຼົ່ານີ້ແຍກອອກເປັນສອງທິດຄື ທິດຕາເວັນຕົກສ່ຽງເຫນືອຫາຕາເວັນອອກສ່ຽງໃຕ້ (ທິດເນັ່ງຂອງສາຍພູຫຼວງ) ແລະ ທິດຕາເວັນອອກສ່ຽງເຫນືອຫາຕາເວັນຕົກສ່ຽງໃຕ້ (ສາຍພູຮູບກົ່ງຄັນທະນູທີ່ຂະຫນານກັນໄປຢູ່ພາກຕາເວັນຕົກສ່ຽງເຫນືອ); ສ່ວນຢູ່ພາກໃຕ້ເລີ່ມແຕ່ເຂດລ້ອງ ນ້ຳກະດິງລົງໄປ, ທາງທິດຕາເວັນອອກຂອງສາຍພູຫຼວງຢູ່ທາງດ້ານໃຕ້ພູມສັນຖານມີລັກສະນະຮາບພຽງ.

ລັກສະນະຫຼາຍຮູບຫຼາຍແບບຂອງພູມສັນຖານໄດ້ເຮັດໃຫ້ປະເທດລາວປະກອບດ້ວຍຫຼາຍຫົວຫນ່ວຍທຳມະຊາດທີ່ເປັນເອກະລັກ ແລະ ສຳພັນກັນຢ່າງສະໜິດແຫນ້ນ, ໃນນັ້ນມີທັງເຂດພູສູງຊັນທີ່ມີປ່າໄມ້ຂຽວຕຶບປົກຫຸ້ມ, ມີທັງເຂດພູມສັນຖານກາກສະເຕີ ເຊິ່ງປະກອບດ້ວຍພູຫີນປູນອັນແຫຼມຄົມ, ມີຖ້ຳນ້ອຍ

ແລະ ໃຫຍ່ຫຼາຍແຫ່ງຖືກສາຍນ້ຳລອດພື້ນ ເຊາະຄວັດເປັນຮູບອັນສວຍງາມ ມີເຂດພູຕ່ຳເປັນຄື້ນຖືກນ້ຳເຊາະ ຫ້ຽນເປັນຮ່ອງມີທັງພູພຽງ ແລະ ທົ່ງພຽງອັນກວ້າງໃຫຍ່, ເປັນທົ່ງຫຍ້າກວ້າງຂວາງ ມີນ້ຳໂຕນຕາດຕາມຜາ....ອັນໄດ້ສ້າງເປັນທິວທັດທຳມະຊາດທີ່ງົດງາມ, ສ້າງເງື່ອນໄຂແກ່ການພັດທະນາເສດຖະກິດ, ການທ່ອງທ່ຽວຂອງລາວໃນປັດຈຸບັນກໍ່ຄືອະນາຄົດອັນຍາວນານອີກ.

### 3.2. ປະເພດພູມສັນຖານ

ພູມສັນຖານຂອງລາວປະກອບດ້ວຍ 3 ປະເພດຕົ້ນຕໍດັ່ງນີ້:

#### 1) ພູ ແລະ ສາຍພູ

ບັນດາການເຄື່ອນເຫນັງເຕັກໂຕນິກ, ມີລະດັບຄວາມຮຸນແຮງແຕກຕ່າງກັນໃນແຕ່ລະເຂດ. ແລະ ໄດ້ປະກອບສ້າງທໍລະນີສັນຖານທີ່ບໍ່ສະຫມໍ່າສະເຫມີກັນ, ລັກສະນະນັ້ນສະແດງອອກໃນການຫຼຸດລົ່ນກັນທາງດ້ານຄວາມສູງລະຫວ່າງເຂດຕ່າງໆໃນທົ່ວປະເທດ.

ພູ ແລະ ສາຍພູຂອງປະເທດລາວແບ່ງອອກເປັນ 3 ເຂດຄື: ເຂດສາຍພູຫຼວງ, ເຂດພູພາກຕາເວັນຕົກສ່ຽງເຫນືອ ແລະ ເຂດພູພາກໃຕ້.

ໜອງຄ້າງ, ພູພຽງລະແວ...

| ຊື່ພູ | ທີ່ຕັ້ງຢູ່ແຂວງ | ລະດັບສູງ(ມ) |
|---|---|---|
| ພູເບ້ຍ | ຊຽງຂວາງ | 2820 |
| ພູຊາວ | ຊຽງຂວາງ | 2690 |
| ພູສາມສຸມ | ຊຽງຂວາງ | 2620 |
| ພູຫວ ດ | ຫົວພັນ | 2452 |
| ພູລອຍ | ຫຼວງພະບາງ | 2257 |
| ພູສັນ | ຊຽງຂວາງ | 2218 |
| ພູເລົາບີ | ຫຼວງພະບາງ | 2079 |
| ພູປານ | ຫົວພັນ | 2079 |
| ພູເຂົ້າໝຽງ | ໄຊຍະບູລີ | 2007 |
| ພູສັນປັນຕາ | ຫຼວງພະບາງ | 1972 |
| ພູນາແມວ | ອຸດົມໄຊ | 1937 |
| ພູຜາຂາວ | ຫຼວງພະບາງ | 1870 |
| ພູດອຍຈີ້ | ຜົ້ງສາລີ | 1842 |
| ພູເລັບ | ຊຽງຂວາງ | 1761 |
| ພູສັງ | ວຽງຈັນ | 1666 |
| ພູຈຳປາເຕົາ | ຫຼວງນ້ຳທາ | 1588 |
| ພູພຽງບໍລະເວນ | ຈຳປາສັກ | 1284 |
| ພູເຂົາຄວາຍ | ວຽງຈັນ | 1026 |

❖ **ເຂດສາຍພູຫຼວງ**

ເປັນເຂດພູທີ່ມີລັກສະນະລະດັບສູງກວ່າໝູ່ໃນປະເທດລາວ, ພູຫຼາຍຫນ່ອຍມີຈອມສູງກາຍ 2.000 ແມັດ ພູສ່ວນຫຼາຍເນັ່ງແຕ່ທິດຕາເວັນຕົກສ່ຽງເໜືອ ຫາ ຕາເວັນອອກສ່ຽງໃຕ້ທີ່ສອດຄ່ອງ ກັບທິດເນັ່ງຂອງຮອຍພັບກີບ ແລະ ຮອຍແຕກເລື່ອນຂອງຊີງເຂດນີ້. ພູເຂດນີ້ລວມມີທັງຈອມພູກົ່ງເຊິ່ງເປັນພູທີ່ປະກອບດ້ວຍຫີນຊາ, ມີທັງພູຫີນປູນທີ່ມີຈອມແຫຼມ ແລະ ຜາສູງຊັນກັນດານ.

❖ ເຂດຕາເວັນຕົກສຽງເໜືອ

ພູສູງກວ່າ 2000 ແມັດ ມີຈຳນວນໜ້ອຍ, ພູສ່ວນຫຼາຍມີຈອມກົ່ງ, ປະກອບສ້າງດ້ວຍຫີນຊາ ແລະ ຫີນກະດານຍຸກເມໂຊໂຊອິກ ບາງບ່ອນກໍ່ປະປົນກັບຫີນພູໄຟ, ນອກຈາກນັ້ນຍັງມີພູຫີນປູນຍຸກປາເລໂອໂຊອິກ ຕອນປາຍຢັງຢາຍກັນເປັນຈຸດນ້ອຍລຽບຕາມບັນດາຮອຍແຕກເລື່ອນ, ຢູ່ເຂດນີ້ສາຍພູເນັ່ງຕາມທິດຕາເວັນອອກສຽງເໜືອ - ຕາເວັນຕົກສ່ຽງໃຕ້ເຊິ່ງສອດຄ່ອງກັບທິດເນັ່ງຕົ້ນຕໍ ຂອງບັນດາຮອຍພັບກົບຄື ກົບໂນນຊຽງແສນ, ລະບົບກົບຫຼຸບນ້ຳແບ່ງ - ບຸນໃຕ້, ລະບົບກົບໂນນນ້ຳອູ - ແມ່ນ້ຳຂອງ, ຮອຍແຕກເລື່ອນຕ່າງໆ ກໍເນັ່ງຕາມທິດດຽວກັນນີ້, ພູ ແລະ ສາຍພູທີ່ປະກອບ ສ້າງຂຶ້ນຢູ່ເຂດສາຍພູຫຼວງ ແລະ ເຂດພູພາກຕາເວັນຕົກສ່ຽງເໜືອນີ້ແມ່ນຍ້ອນໄດ້ຮັບຜົນສະທ້ອນ ຈາກການປະກອບສ້າງເປັນພູທີ່ຜ່ານຫຼາຍໄລຍະ ໂດຍສະເພາະແລ້ວແມ່ນໄລຍະການປະກອບສ້າງ ສາຍພູຫິມະໄລ, ພູເຫຼົ່ານີ້ເປັນພູທີ່ໜຸ່ມຄື ຢູ່ເຂດແຄມຮ່ອງທະເລເກົ່າ.

❖ ເຂດພູພາກໃຕ້

ສ່ວນຫຼາຍເປັນພູພຽງ, ສ່ວນພູສູງເຕົ້າໂຮມຢູ່ທາງທິດຕາເວັນອອກຂອງເຂດນີ້ເຊິ່ງເປັນເຂດ ຊາຍແດນລາວ - ຫວຽດນາມ ພາກຕາເວັນຕົກຂອງສາຍພູສູງມີພູພຽງຫຼາຍແຫ່ງ ເຊິ່ງມີພູພຽງກາ ແກ່ຂອງພື້ນພະລານອິນດູຈີນ ພູ ແລະ ພູພຽງເຫຼົ່ານີ້ປະກົດຂຶ້ນ ຍ້ອນການຍູ້ຂຶ້ນຂອງເຂດແຄມທະເລດ້ານຕາເວັນອອກຂອງແຫຼມອິນດູຈີນ ເພື່ອທົດແທນການຍຸບລົງທີ່ເກີດຂຶ້ນຢ່າງຮຸນແຮງ " ບົວລະພາ.




2) ພູພຽງ

ປະເທດລາວປະກອບມີພູພຽງຫຼາຍຫນ່ວຍ ແລະ ຕັ້ງຢູ່ແຕ່ລະເຂດຂອງທ້ອງຖິ່ນ ມີເງື່ອນໄຂທຳມະຊາດ , ດິນຟ້າອາກາດແຕກຕ່າງກັນ ພູພຽງທີ່ໃຫຍ່ ແລະ ສຳຄັນມີດັ່ງນີ້:

❖ ພູພຽງເມືອງພວນ

ເປັນພູພຽງທີ່ມີເນື້ອທີ່ກວ້າງ ປະມານ 2.000 ກມ$^2$. ຢູ່ໃນລະດັບສູງສະເລ່ຍ 1.200 ແມັດ ພູພຽງດັ່ງກ່າວນີ້ ມີພູສູງອ້ອມຮອບເກືອບທຸກດ້ານທິດໃຕ້ຂອງພູພຽງນີ້ແມ່ນ ພູຫນ້ຽງ, ພູເບ້ຍ ແລະ ພູຊາວ, ທິດຕາເວັນອອກສ່ຽງເໜືອແມ່ນພູສັນ, ຍ້ອນຖືກອ້ອມຮອບດ້ວຍສາຍພູ. ດັ່ງນັ້ນ, ເຂດໃຈກາງຂອງພູພຽງນີ້ຈຶ່ງມີລັກສະນະຫຼູບ ແລະ ຮາບພຽງເຊັ່ນ ທົ່ງໄຫຫີນ, ທົ່ງພຽງບ້ານບານ. ຍ້ອນເປັນເປັນເຂດພູມສັນຖານສູງ, ພູພຽງຊຽງຂວາງຈຶ່ງ

ເປັນຕົ້ນກຳເນີດຂອງສາຍນ້ຳຫຼາຍສາຍ ເຊັ່ນ: ນ້ຳເນີນ, ນ້ຳໂມ້, ນ້ຳຊັນ, ນ້ຳງຽບ... ແລ້ວໄຫຼປ່ອງໃສ່ແມ່ນ້ຳຂອງ ແລະ ໄຫຼປ່ອງໃສ່ທະເລຫວຽດນາມ.

ພູພຽງເມືອງພວນເປັນພູພຽງທີ່ມີປ່າໄມ້ໃບເຂັມ ແລະ ທົ່ງຫຍ້າຂະຫຍາຍຕົວດີ. ໃນລະດູແລ້ງອຸນຫະພູມລົງຕ່ຳຫຼາຍ ແລະ ຂາດເຂີນນ້ຳອັນໄດ້ສ້າງຄວາມຫຍຸ້ງຍາກແກ່ການດຳລົງຊີວິດ.

❖ **ພູພຽງນາກາຍ**

ເປັນພູພຽງທີ່ມີລະດັບສູງສະເລ່ຍແຕ່ 600 - 800 ແມັດ, ເຊິ່ງມີຮູບຮ່າງກວ້າງທາງພາກຕາເວັນຕົກສ່ຽງເໜືອແລ້ວຄ່ອຍໆແຄບເຂົ້າທາງພາກຕາເວັນອອກສຽງໃຕ້, ເປັນພູພຽງທີ່ແລ່ນຕາມທິດຂອງສາຍພູຫຼວງ. ພູພຽງແຫ່ງນີ້ປະກອບດ້ວຍພູມສັນຖານກາກສະເຕີທີ່ຕິດຕໍ່ກັນເປັນບໍລິເວນກວ້າງຂວາງສົມຄວນ, ເປັນພູພຽງທີ່ຮາບພຽງ ແລະ ມີລັກສະນະຄ້ອຍຊັນແຕ່ທິດຕາເວັນອອກຫາທິດຕາເວັນຕົກ. ພາກຕາເວັນອອກຂອງພູພຽງນີ້ ແມ່ນສາຍພູຫຼວງທີ່ສູງຊັນ, ແຕ່ມີກິ່ວມູຍາ (Mugia) ສູງພຽງ 418 ແມັດ ເຊິ່ງເປັນບ່ອນກິ່ວ ແລະ ມີສາຍທາງເລກ 8 ຜ່ານອອກສູ່ປະເທດຫວຽດນາມ.

ພູພຽງນາກາຍປະກອບດ້ວຍທົ່ງຫຍ້າອັນກວ້າງຂວາງ ແລະ ມີດິນຫີນປູນທີ່ອຸດົມສົມບູນສ້າງເງື່ອນໄຂໃຫ້ແກ່ການປູກຝັງ ແລະ ລ້ຽງສັດດີທີ່ສຸດ.

❖ **ພູພຽງບໍລະເວນ**

ຕັ້ງຢູ່ທາງພາກຕາເວັນຕົກຂອງພູພຽງຕະໂອຍ, ທິດເໜືອຕິດກັບທົ່ງພຽງລ້ອງນ້ຳເຊໂດນ, ທິດ ຕາເວັນອອກ ແລະ ທິດໃຕ້ຕິດກັບລ້ອງນ້ຳເຊກອງ, ທິດຕາເວັນຕົກຕິດກັບແມ່ນຂອງ, ລະດັບສູງສະເລ່ຍ 1.000 ແມັດ, ຢູ່ພູພຽງບໍລະເວນ ມີພູບາງຫນ່ວຍສູງກວ່າ 1.000 ແມັດ ເຊັ່ນ ພູກະແຕ ສູງ 1.583 ແມັດ, ພູເທວະດາສູງ 1.200 ແມັດ. ພູພຽງບໍລະເວນປະກອບດ້ວຍດິນພູໄຟເກົ່າທີ່ຖືກມອດແລ້ວ (ດິນບາຊານ) ມີສາຍນ້ຳຫຼາຍສາຍໄຫຼອອກຈາກພູພຽງແລ້ວປ່ອງໃສ່ສາຍນ້ຳຕ່າງໆເຊັ່ນ ເຊໂດນຢູ່ທາງດ້ານເໜືອ, ເຊກອງຢູ່ທາງດ້ານຕາເວັນອອກ ແລະ ພາກໃຕ້ພູພຽງບໍລະເວນ ເປັນພູພຽງທີ່ມີດິນປູກຝັງທີ່ອຸດົມສົມບູນ ມີປະລິມານນ້ຳຝົນຫຼາຍ, ມີຄວາມສະດວກແກ່ການກະສິກຳປູກຝັງຂະຫນາດໃຫຍ່ໄດ້ອີກດ້ວຍນອກນັ້ນຢູ່ທາງພາກໃຕ້ຍັງມີພູພຽງອື່ນໆອີກ.

❖ **ພູພຽງກະລຶມ**

ເປັນພູພຽງທີ່ມີລະດັບສູງສະເລ່ຍ 500 ແມັດ ບໍ່ມີຈອມພູສູງກາຍ 1000 ແມັດ ພູມສັນຖານຄ່ອຍໆຕ່ຳລົງຈາກພາກຕາເວັນອອກລົງສູ່ທົ່ງພຽງແມ່ນ້ຳຂອງຢູ່ພາກຕາເວັນຕົກ. ພູພຽງກະລຶມປະກອບດ້ວຍດິນຫີນຊາສີແດງ ດິນຫນຽວ ແລະ ມີສ່ວນຫນຶ່ງທີ່ເປັນດິນແດງຂອງພູໄຟ, ເຫມາະສົມໃນການປູກພືດອຸດສະຫະກຳຫຼາຍຊະນິດ.

❖ **ພູພຽງຕະໂອຍ**

ມີລະດັບສູງສະເລ່ຍແຕ່ 800 – 1.000 ແມັດ ມີພູບາງຫນ່ວຍສູງກວ່າ 1.000 ແມັດ ຫີນແມ່ ຂອງພູພຽງນີ້ແມ່ນຫີນກຣານິດ, ເຊິ່ງປະກອບດ້ວຍດິນຫນຽວ, ດິນແດງປົນດິນຊາຍ, ມີນ້ຳເຊໂດນໄຫຼຜ່ານໃຈກາງຂອງພູພຽງເຊິ່ງມີຄວາມເຫມາະສົມສຳລັບການກະສິກຳ

❖ **ພູພຽງກະເສັງ**

ຕັ້ງຢູ່ພາກຕາເວັນອອກຂອງພູພຽງບໍລະເວນ, ຢູ່ລະຫວ່າງກາງເຊກອງ ແລະ ເຊຂະໜານ, ເປັນພູພຽງ ທີ່ມີພູມສັນຖານສະເລ່ຍສູງກວ່າ 1.000 ແມັດ, ມີພູທີ່ສູງຊັນຫຼາຍໜ່ວຍເຊັ່ນ: ພູອາທວດຢູ່ທິດຕາເວັນອອກ,

(ຊາຍແດນລາວ - ຫວຽດນາມ) ສູງສົມຄວນມີສາຍນ້ຳຫຼາຍສາຍໄຫຼອອກຈາກພູພຽງແລ້ວປ່ອງໃສ່ເຊກອງ ແລະ ເຊຂະໜານ.

ນອກຈາກນີ້ກໍຍັງມີພູພຽງນ້ອຍອີກຫຼາຍແຫ່ງ ເຊັ່ນ ພູພຽງເມືອງສິງ, ພູພຽງຊຽງແສນ, ພູພຽງຫນອງຄ້າງ , ພູພຽງລະແວ...

3) **ທົ່ງພຽງ**

ສ່ວນຫຼາຍເຕົ້າໂຮມຢູ່ແຄມແມ່ນ້ຳຂອງແກ່ຍາວແຕ່ວຽງຈັນຫາດົງກະລໍ (ຊາຍແດນລາວ-ກຳປູເຈຍ) ລະດັບສູງຂອງທົ່ງພຽງຢູ່ລະຫວ່າງ 100 ຫາ 300 ແມັດໜ້າດິນຂອງທົ່ງພຽງມີລັກສະນະເທົ່ງພຽງມີລັກສະນະຮາບພຽງ ແລະ ເປັນຄື້ນເລັກນ້ອຍ, ບາງທົ່ງພຽງຍັງມີໂນນ ແລະ ພູຕໍ່ປັງຢາຍຢູ່ເປັນຈຸດໆທົ່ງພຽງຕ່າງໆ ປະກອບ ຊັ້ນຫີນຕະກອນສະໄໝຈຸລະຊີກ ແລະ ເກຣຕາເຊທີ່ເປັນຊັ້ນຮາບພຽງ ຫຼື ງ່ຽງຫນ້ອຍຫນຶ່ງເນື້ອທີ່ສ່ວນໃຫຍ່ຂອງທົ່ງພຽງຕ່າງໆຖືກປົກຫຸ້ມດ້ວຍດິນສັນດອນເກົ່າ ແລະ ໃຫມ່ເຊິ່ງແມ່ນ້ຳຂອງ ແລະ ສາຂາຂອງມັນນຳມາທັບຖົມເປັນປະຈຳໃນແຕ່ລະປີ.

ທົ່ງພຽງລຽບຕາມແຄມແມ່ນຂອງປະກອບດ້ວຍທົ່ງພຽງໃຫຍ່ 3 ແຫ່ງຄື ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ, ທົ່ງພຽງຈຳປາສັກ, ນອກນັ້ນ ຍັງມີທົ່ງພຽງນ້ອຍອີກຫຼາຍແຫ່ງຢັງຢາຍຕາມທົ່ງພຽງສະຫວັນນະເຂດ, ແຕ່ເຫນືອເຖິງໃຕ້.

❖ **ທົ່ງພຽງວຽງຈັນ**

ທົ່ງພຽງນີ້ເປັນຮູບສາມຫຼ່ຽມເຊິ່ງລວງພົ້ນ (ທິດຕາເວັນອອກ - ທິດຕາເວັນຕົກ) ຍາວປະມານ 80 ກມ, ມີເນື້ອທີ່ປະມານ 400.000 ເຮັກຕາ (ha). ທົ່ງພຽງວຽງຈັນ ຕັ້ງຢູ່ເຂດກົບຫຼຸບ ເຊິ່ງແມ່ນດ້ານເໜືອຂອງເຂດຫຼຸບລາວ-ໄທ-ກຳປູເຈຍ ກົບຫຼຸບດັ່ງກ່າວມີທິດເນັ່ງຕາມທິດເໜືອ-ໃຕ້ ແລະ ຖືກປົກຄຸມດ້ວຍດິນສັນດອນເກົ່າ ແລະ ໃຫມ່ ເຊິ່ງແມ່ນແມ່ນ້ຳຂອງ ແລະ ນ້ຳງື່ມນຳມາທັບຖົມໄວ້.

ຢູ່ທາງເຫນືອຂອງເມືອງວຽງຈັນ (ລຽບຕາມລ້ອງນ້ຳງື່ມ) ຊັ້ນດິນສັນດອນບາງໆໄດ້ປົກເທິງຊັ້ນດິນຫນຽວສີແດງ (ສະໄຫມເກຣຕາເຊ) ທີ່ບໍ່ຊຶມຊັບນ້ຳ ອັນໄດ້ເຮັດໃຫ້ເຂດນີ້ມີຫນອງ ແລະ ບຶງຫລາຍ. ນ້ຳງື່ມໄຫຼຜ່ານທົ່ງພຽງວຽງຈັນດ້ວຍເສັ້ນຄົດໂຄ້ງຫຼາຍ ແລະ ມີທິດໄຫຼເກືອບຂະຫນານກັບແມ່ ນ້ຳຂອງ, ເຂດປາກນ້ຳງື່ມໄດ້ເກີດເປັນທົ່ງພຽງຮູບ 3 ຫຼ່ຽມທີ່ນັບມື້ນັບຂະຫຍາຍກວ້າງອອກເລື້ອຍໆ.

ນອກຈາກເຂດດິນສັນດອນໃຫມ່ອັນອຸດົມສົມບູນ ທີ່ຖືກນ້ຳຖ້ວມໃນລະດູຝົນແລ້ວທົ່ງພຽງວຽງຈັນ ຍັງປະກອບດ້ວຍດິນສັນດອນເກົ່າທີ່ບັນຈຸຫີນຫນາມຫນໍ່ໂດຍສະເພາະ ແມ່ນຢູ່ເຂດໃຈກາງຂອງທົ່ງພຽງເຂດຫ່າງໄກຈາກແມ່ນ້ຳຂອງ ແລະ ສາຍນງື່ມທີ່ບໍ່ຖືກນ້ຳຖ້ວມປະຈຳໃນແຕ່ລະປີ.

❖ **ທົ່ງພຽງສະຫວັນນະເຂດ**

ເປັນທົ່ງພຽງທີ່ກວ້າງໃຫຍ່ກວ່າຫມູ່ ໃນບັນດາທົ່ງພຽງຂອງປະເທດລາວ ແລະ ກວ້າງກວ່າ ທົ່ງພຽງວຽງຈັນປະມານ 4 ເທົ່າ, ເນື້ອທີ່ສ່ວນໃຫຍ່ຂອງທົ່ງພຽງ ປະກອບດ້ວຍດິນສັນດອນເກົ່າ, ສະຫຼັບສັບຊ້ອນ ດ້ວຍພູຕ່ຳທີ່ເນັ່ງຕາມທິດຕາເວັນອອກ - ຕາເວັນຕົກ ແລະ ເປັນເສັ້ນແບ່ງນ້ຳ ລະຫວ່າງເຊນ້ອຍຢູ່ທາງເຫນືອກັບເຊຈຳພອນ - ເຊຊັງຊອຍຢູ່ທາງໃຕ້, ສາຍພູຕ່ຳດັ່ງກ່າວມີລະດັບສູງ ສະເລ່ຍປະມານ 300 ແມັດ, ແຄມດ້ານເຫນືອມີລັກສະນະຊັບປະກອບດ້ວຍຊັ້ນຫີນຕະກອນທີ່ແຂງແກ່ນ ໃນສະໄຫມເກຣຕາເຊປົກຄຸມ, ຢູ່ເທິງຊັ້ນລຸ່ມແມ່ນຊັ້ນ

ຫີນຕະກອນສະໄຫມຈຸຣາຊິກ, ກົງກັນຂ້າມ, ຈ້າຍພູດ້ານໃຕ້ມີລັກສະນະເນີນກວ່າເຊິ່ງປະກອບດ້ວຍຊັ້ນຫີນຕະກອນສະໄຫມເກຣຕາເຊເປັນສ່ວນຫຼາຍ.

ແມ່ນ້ຳຂອງໄຫຼຜ່ານເຂດທົ່ງພຽງນີ້ປະກອບດ້ວຍແກ້ງ ແລະ ຕາດຫຼາຍແຫ່ງ ເຊັ່ນ ແກ້ງກະເບົາ, ແກ້ງເຂັມມະລາດ; ແກ້ງ ແລະ ຕາດນັ້ນແມ່ນຊັ້ນຫີນທັບຫຍໍ່ຂອງພື້ນພະລານທີ່ຖືກຍົກຂຶ້ນໃນຍຸກເມໂຊໂຊອິກ.

❖ **ທົ່ງພຽງຈຳປາສັກ**

ມີເນື້ອທີ່ເກືອບເທົ່າກັບທົ່ງພຽງວຽງຈັນເຊິ່ງເລີ່ມຈາກເຂດເມືອງປາກເຊແລ້ວເປີດກວ້າງອອກຈົນຮອດຊາຍແດນລາວ-ໄທ-ກຳປູເຈຍ. ນອກຈາກກຸ່ມພູຈຳປາສັກ (ຢູ່ໃຕ້ເມືອງປາກເຊ) ເຊິ່ງປະກອບດ້ວຍຫີນຊາສະໄໝເກຣເຕເຊແລ້ວຍັງມີຈອມພູຫຼາຍໜ່ວຍສູງຫວ່າ 1.200 ແມັດ ແລະ ເຂດພູຕ່ຳ (ລະດັບສູງສະເລ່ຍ ປະມານ 650 ແມັດ) ທີ່ປະກອບດ້ວຍຫີນລີໂອອິດສະໄໝຕຣີລາດ ຢູ່ທາງທິດຕາເວັນອອກສ່ຽງໃຕ້ ທົ່ງພຽງຈຳປາສັກມີລັກສະນະຮາບພຽງ ເປັນເຂດທີ່ອຸດົມສົມບູນດີ ຖືກປົກຄຸມດ້ວຍດິນສັນດອນເກົ່າຂອງຍຸກທໍລະນີທີ 4 ແລະ ດິນສັນດອນໃໝ່ຂອງແມ່ນ້ຳຂອງ ແລະ ຮ້ຳເຊໂດນນຳມາທັບຖົມ.

ທົ່ງພຽງຈຳປາສັກຍັງເຊື່ອມຕໍ່ກັບທົ່ງພຽງສາລະວັນ (ລ້ອງນ້ຳເຊໂດນ) ແລະ ທົ່ງພຽງອັດຕະປື (ລ້ອງນ້ຳເຊກອງ-ເຊຂະໜານ). ເຂດໃຕ້ຂອງທົ່ງພຽງຈຳປາສັກແມ່ນ້ຳຂອງກວ້າງເຖິງ 8 ກມ ເຊິ່ງປະກອບດ້ວຍເກາະດອນນ້ອຍໃຫຍ່ຫຼາຍແຫ່ງ (ຖືກຂະໜານນາມວ່າ ສີພັນດອນ) ດອນທີ່ໃຫຍ່ກວ່າໝູ່ແມ່ນດອນໂຂງ ຍາວ 15 ກມ.

ນອກຈາກບັນດາທົ່ງພຽງໃຫຍ່ທີ່ກ່າວມາຂ້າງເທິງນັ້ນແລ້ວ ຍັງມີທົ່ງພຽງນ້ອຍຫຼາຍແຫ່ງຕາມລ້ອງແມ່ນ້ຳຕ່າງໆເຊັ່ນ: ລ້ອງນ້ຳທາ, ນ້ຳເຊືອງ, ນ້ຳແຊງ, ນ້ຳຊັນ, ເຊບັ້ງຫຽງ, ເຊໂດນ, ເຊກອງ, ເຊຂະໜານ...

### 3.3. ເຂດພູມສັນຖານ

ອີງຕາມລັກສະນະຂອງພູມສນຖານລະດັບສູງທິດເນີ້ງຂອງສາຍພູ ແລະ ຂອງລ້ອງແມ່ນ້ຳຕ່າງໆພື້ນແຜ່ນທໍລະນີມີຮອຍພັບກີບ, ຮອຍແຕກເລື່ອນ, ປະເພດຫີນຕ່າງໆ, ຈຸດພິເສດການເຄື່ອນເໜັງເຕັກໂຕນິກທີ່ຜ່ານມາລະດັບຄວາມຮຸນແຮງ, ລະດັບຄວາມປ່ຽນແປງຂອງການຍູ້ຂຶ້ນ ແລະ ຂະບວນວິວັດທາງທຳມະຊາດທີ່ພາໃຫ້ພູມສັນຖານມີການປ່ຽນແປງໃນປັດຈຸບັນສາມາດແບ່ງພູມສັນຖານອອກເປັນ 4 ເຂດຄື:

- ເຂດສາຍພູຫຼວງ
- ເຂດພູພາກຕາເວັນອອກສ່ຽງເໜືອ
- ເຂດພູພຽງພາກໃຕ້
- ເຂດທົ່ງພຽງລ້ອງແມ່ນ້ຳຂອງ

## 4. ລັກສະນະລວມຂອງພູມອາກາດ

ປະເທດລາວຕັ້ງຢູ່ເຂດພູມອາກາດຮ້ອນຊຸ່ມຂອງຊີງເຂດອາຊີອາຄະເນລັກສະນະສະເພາະຂອງພູມອາດກາດເຂດນີ້ຈະແຕກຕ່າງກັບເຂດຮ້ອນອື່ນໆທີ່ນອນຢູ່ໃນເຂດອີງສາຂະໜານດຽວກັນ. ຈຸດພິເສດດ້ານທີ່ຕັ້ງ ແລະ ລັກສະນະລວມຂອງອາກາດໄດ້ສະແດງອອກດັ່ງນີ້:

- ເປັນປະເທດທີ່ມີພູມອາກາດຮ້ອນຊຸ່ມ ແລະ ໄດ້ຮັບອິດທິພົນຈາກລົມປະຈຳລະດູຕະຫຼອດປີເຊິ່ງເປັນການເຄື່ອນຕົວຂອງມວນອາກາດທີ່ມາຈາກ 2 ທິດແຕກຕ່າງກັນເຊັ່ນ:
  - ເດືອນກັນຍາ-ເດືອນກຸມພາ ລາວໄດ້ຮັບອິດທິພົນຈາກມວນອາກາດທີ່ເຄື່ອນມາຈາກເຂດຊີເບຣີ ເປັນມວນອາກາດໜາວພັດມາຈາກແຜ່ນດິນ ແຕ່ເມື່ອເຄື່ອນມາຮອດລາວຄວາມໜາວຈະຫຼຸດລົງ ຍ້ອນປະທະກັບພູມສັນຖານສູງ ແລະ ປະທະກັບມວນອາກາຮ້ອນ ເຮັດໃຫ້ອາກາດເຢັນ ແລະ ແຫ້ງແລ້ງເອີ້ນວ່າລົມມໍລະສຸມໜາວ (ລະດູແລ້ງ).
  - ເລີ່ມແຕ່ທ້າຍເດືອນມີນາເປັນຕົ້ນໄປລາວໄດ້ຮັບອິດທິພົນຈາກມວນອາກາດທີ່ເຄື່ອນມາຈາກພາກໃຕ້ເປັນມວນອາກາດທີ່ເຄື່ອນມາຈາກມະຫາສະໝຸດອິນເດຍ, ປາຊີຟິກ ແລະ ທະເລອັນດາມັນ ເຮັດໃຫ້ອາກາດຮ້ອນຂຶ້ນຕາມລຳດັບ ກະແສອາກາດທີ່ມາປົກຄຸມລາວເອີ້ນວ່າລົມມໍລະສຸມຮ້ອນ ແລະ ມີຝົນຕົກຫຼາຍສົມຄວນ (ລະດູຝົນ)
- ພູມອາກາດໃນລາວມີ 2 ລະດູຈະແຈ້ງຄື: ລະດູແລ້ງ ແລະ ລະດູຝົນທີ່ໄດ້ຮັບອິດທິພົນເຄື່ອນມາຈາກແຜ່ນດິນ ແລະ ມະຫາສະໝຸດ

# 5. ລະດູການແລະກະແສລົມທີ່ພັດຜ່ານລາວ

## 5.1. ລະດູແລ້ງ

ເລີ່ມແຕ່ເດືອນພະຈິກ ຫາເດືອນມີນາ ຫຼື ເມສາ ກະແສລົມພັດຜ່ານລາວຈາກພາກເໜືອ ແລະ ພາກຕາເວັນອອກສ່ຽງເໜືອ ເຄື່ອນມາຈາກສູນຄວາມກົດດັນສູງຊີເບຣີ ຜ່ານແຜ່ນດິນໃຫຍ່ຢູ່ຈີນ, ຫວຽດນາມແລ້ວເຄື່ອນເຂົ້າສູ່ປະເທດລາວ ເມື່ອມາຮອດລາວຈິ່ງເຮັດໃຫ້ອາກາດໜາວ ແລະ ແຫ້ງແລ້ງ. ທ້ອງຟ້າປອດໂປ່ງ, ແຈ່ມໃສ, ຟ້າເປັນສີຄາມ, ກາງເວັນສັ້ນກວ່າກາງຄືນ, ເປັນຊ່ວງທີ່ລາວໄດ້ຮັບແສງແດດຫຼາຍ ໂດຍສະເພາະແມ່ນເຂດທົ່ງພຽງໄດ້ຮັບແສງແດດເຖິງ 8 ຊມ  ເດືອນທີ່ໄດ້ຮັບແສງແດດຫຼາຍແມ່ນເດືອນ ທັນວາ ແລະ ມັງກອນ. ລະດູນີ້ອຸນຫະພູມຕ່ຳ ໂດຍສະເພາະທາງພາກເໜືອ ເຊັ່ນ: ຜົ້ງສາລີ, ອຸດົມໄຊ, ຊຽງຂວາງ, ຫົວພັນ ແລະ ຫຼວງພະບາງ ບາງປີອຸນຫະພູມລົງເຖິງ 0 ອົງສາເຊ

## 5.2. ລະດູຝົນ

ລະດູຝົນເລີ່ມແຕ່ເດືອນພຶດສະພາ ຫາທ້າຍເດືອນກັນຍາ ບາງຄັ້ງແກ່ຍາວຮອດ ເດືອນ ຕຸລາ ກະແສລົມພັດມາຈາກທິດຕາເວັນຕົກສ່ຽງໃຕ້, ທິດຕາເວັນອອກສ່ຽງໃຕ້ ແລະ ທິດໃຕ້ ພັດມາຈາກມະຫາສະໝຸດອິນເດຍ, ປາຊີຟິກ ແລະ ທະເລອັນດາມັນ ແຕ່ສ່ວນຫຼາຍພັດມາຈາກມະຫາສະໝຸດປາຊີຟິກ ຍ້ອນລົມພັດມາກະທົບໃສ່ພູມສັນຖານສູງໃນລາວຈິ່ງເຮັດໃຫ້ກະແສລົມອ່ອນຕົວລົງ ແຕ່ມັນໄດ້ເພີ່ມປະລິມານນ້ຳຝົນເຮັດໃຫ້ຝົນຕົກຫຼາຍໃນບາງບ່ອນຈົນເກີດມີໄພນ້ຳຖ້ວມ. ລະດູຝົນຈະມີກາງເວັນຍາວກວ່າກາງຄືນ, ມີເມກ, ມີຝົນຕົກຫຼາຍໜ້າດິນໄດ້ຮັບແສງແດດໜ້ອຍເດືອນທີ່ໄດ້ຮັບແສງແດດໜ້ອຍທີ່ສຸດແມ່ນເດືອນກໍລະກົດແລະ ເດືອນສິງຫາ ແລະ ເດືອນທີ່ໄດ້ຮັບແສງແດດຫຼາຍແມ່ນເດືອນພຶດສະພາ ແລະ ມິຖຸນາ. ລະດູຝົນອຸນຫະພູມສູງໂດຍສະເພາະຂດທົ່ງພຽງ

## 5.3. ກະແສລົມທີ່ພັດຜ່ານປະເທດລາວ

ໃນຍາມຝົນລົມຂະຫຍາຍຕາມທິດຕາເວັນຕົກສ່ຽງໃຕ້ ຫາທິດຕາເວັນອອກສ່ຽງເໜືອ, ທິດໃຕ້ຫາທິດເໜືອ ແລະ ທິດຕາເວັນອອກສ່ຽງໃຕ່ຫາທິດຕາເວັນຕົກສ່ຽງເໜືອ (ແຕ່ເດືອນມີນາຫາເດືອນສິງຫາ).

ລະດູແລ້ງແຕ່ເດືອນກັນຍາຫາເດືອນກຸມພາມວນອາກາດຈາກຊີເບຣີແຜ່ຂະຫຍາຍແຮງພາໃຫ້ມີລົມພັດມາຈາກໃຈກາງຂອງແຜ່ນດິນສູ່ທະເລ ຢູ່ປະເທດລາວລົມພັດຕາມທິດເໜືອຫາທິດໃຕ້ ແລະ ທິດຕາເວັນອອກສ່ຽງເໜືອຫາຕາເວັນຕົກສ່ຽງໃຕ້.

# ບົດທີ9

# ປະຊາກອນຂອງລາວ

## 1. ໂຄງສ້າງຂອງປະຊາກອນລາວ

ຄົນລາວນອນໃນເຊື້ອຊາດົງໂກໂລອິດ (ຜິວເຫຼືອງ), ບາງເອກະສານກໍ່ເວົ້າວ່າຄົນລາວແມ່ນເຊື້ອຊາດປະສົມລະຫວ່າງມົງໂກໂລອິກ ກັບ ນິກໂກໂລອິດໂອເຊອານີລັກສະນະຮູບຮ່າງພາຍນອກຂອງຄົນລາວແມ່ນຄົນລາວເປັນຄົນດັງແໜບ, ຜົນດໍາ, ຜົມຊື່, ຕາສີເຫຼືອງອ່ອນ, ຮູບຮ່າງບໍ່ໃຫຍ່, ຄວາມສູງສະເລ່ຍຂອງຜູ້ຊາຍແມ່ນ 160 ຊມ ແລະ ເພດຍິງ 150 ຊມ. ຄົນລາວທີ່ດໍາລົງຊີວິດໃນແຕ່ລະພູມມີພາກບໍ່ມີຫຍັງແຕກຕ່າງກັນ ສິ່ງທີ່ຕ່າງກັນກໍ່ມີພຽງສີຜິວ ພາກເໜືອຈະມີຄົນຜິວຂາວເຫຼືອງຫຼາຍກວ່າພາກໃຕ້. ຜູ້ທີ່ຢູ່ພາກໃຕ້ມີສີຜິວດໍາກໍ່າ. ລະຫວ່າງພາກກາງ ແລະ ພາກໃຕ້ຈະມີສໍານຽງສຽງເວົ້າຕ່າງກັນ. ຕາມສະຖິຕິປີ ທ້າຍ 2021 ປະຊາກອນລາວມີປະມານ 7.430.326 ຄົນ ຄວາມໜາແໜ້ນສະເລ່ຍ 25 ຄົນ/ກມ$^2$ ປະກອບມີ 50 ຊົນເຜົ່າ.







## 2. ການເພີ່ມຂຶ້ນແລະຫຼຸດລົງຂອງປະຊາກອນລາວ

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງປະຊາກອນລາວຂຶ້ນກັບອັດຕາການເກີດ, ການຕາຍ ແລະ ການຍ້າຍຖິ່ນ. ການເກີດ ແລະ ການຕາຍ ມີຜົນສະທ້ອນຕໍ່ກັບການປ່ຽນແປງທາງດ້ານໂຄງສ້າງຂອງປະຊາກອນ ອັດຕາການເກີດສູງກໍ່ຈະເຮັດໃຫ້ປະຊາກອນເພີ່ມຂຶ້ນສິ່ງຜົນເຮັດໃຫ້ອັດຕາການເຕີບໃຫຍ່ ແລະ ຂະຫຍາຍຕົວເພີ່ມຂຶ້ນສູງເຊັ່ນກັນ. ກົງກັນຂ້າມຖ້າອັດຕາການຕາຍເພີ່ມຂຶ້ນກໍ່ຈະເຮັດໃຫ້ຈໍານວນປະຊາກອນຫຼຸດລົງ ສະແດງໃຫ້ເຫັນການບໍລິການທາງດ້ານສາທາລະນະສຸກຍັງບໍ່ໄດ້ດີ ທັງສະແດງເຖິງຄຸນນະພາບຊີວິດຂອງປະຊາກອນອີກດ້ວຍ.

ການຍ້າຍຖິ່ນກໍ່ເປັນປັດໄຈໜຶ່ງທີ່ເຮັດໃຫ້ປະຊາການເພີ່ມຂຶ້ນ ແລະ ຫຼຸດລົງ ຖ້າມີຄົນອົບພະຍົບເຂົ້າມາຫຼາຍກໍ່ຈະເຮັດໃຫ້ປະຊາກອນເພີ່ມຂຶ້ນ ແຕ່ກົງກັນຂ້າມຖ້າມີປະຊາກອນອົບພະຍົບອອກນອກປະເທດກໍ່ຈະເຮັດໃຫ້ປະຊາກອນຫຼຸດລົງເຊັ່ນກັນ.

## 3. ການແຈກຢາຍຂອງປະຊາກອນ

### 3.1. ເຂດທີ່ມີປະຊາກອນອາໄສຢູ່ເບົາບາງ

ປະເທດລາວມີພູມີປະເທດຫຼາຍລັກສະນະແຕກຕ່າງກັນ ແລະ ມີປະຊາກອນອາໄສຢູ່ແຕ່ລະເຂດບໍ່ສະໝໍ່າສະເໝີກັນ, ເຂດພູດອຍເປັນເຂດທີ່ມີປະຊາກອນອາໄສຢູ່ໜ້ອຍ ແລະ ຫ່າງໄກກັນເຊັ່ນ: ແຂວງຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ຫົວພັນ, ຊຽງຂວາງ, ເຊກອງອັດຕະປື ແລະ ໄຊສົມບູນ. ບັນດາແຂວງເຫຼົ່ານີ້ມີພູມສັນຖານສູງຊັນ ມີພື້ນທີ່ບາງຈໍານວນເປັນເຂດພູພຽງກວ້າງຂວາງ ແຕ່ຂົງເຂດດັ່ງກ່າວພັດມີຄວາມຫຍຸ້ງຍາກທຸລະກັນດານທາງດ້ານທໍາມະຊາດ, ປະຊາກອນອາໄສຢູ່ໜ້ອຍ ແລະ ບໍ່ໜາໜັ້ນຖ້າທຽບໃສ່ເຂດທົ່ງພຽງ ໃນປັດຈຸບັນເຖິງວ່າຈະມີການພັດທະນາແກ້ໄຂຕາມເຂດຊົນນະບົດແຕ່ກໍ່ຍັງບໍ່ສາມາດແກ້ໄຂການແຈກຢາຍຂອງປະຊາກອນຢູ່ເຂດພູດອຍໄດ້. ຈຸດພິເສດຂອງການແຈກຢາຍປະຊາກອນໃນເຂດພູດອຍບ່ອນໃດມີເສັ້ນທາງຄົມມະນາຄົມບ່ອນນັ້ນຈະກາຍເປັນຈຸດສຸມ ແລະ ບ່ອນເຕົ້າໂຮມປະຊາກອນເປັນຕົ້ນແມ່ນເຂດເທດສະບານແຂວງ ຫຼື ເມືອງ ແລະ ລຽບຕາມແຄມເສັ້ນທາງຫຼວງ.

### 3.2. ເຂດທີ່ມີປະຊາກອນອາໄສຢູ່ຢ່າງໜ້າແໜ້ນ

ເຂດທີ່ມີປະຊາກອນອາໄສຢູ່ຫຼາຍກວ່າໝູ່ແມ່ນເຂດທົ່ງພຽງ ແລະ ເຂດແຄມລ້ອງແມ່ນໍ້າຕ່າງໆ ເປັນຕົ້ນແມ່ນລ້ອງແມ່ນໍ້າຂອງ ແລະ ສາຂາຂອງແມ່ນໍ້າຂອງ. ເຖິງວ່າເນື້ອທີ່ຂອງທົ່ງພອນຈະມີພຽງແຕ່ 1/5 ຂອງເນື້ອທີ່ທົ່ວປະເທດກໍ່ຕາມແຕ່ກໍ່ມີປະຊາກອນອາໄສຢູ່ເຖິງ ¾ ຂອງປະຊາກອນທັງໝົດ ຍ້ອນເຂດດັ່ງກ່າວມີເງື່ອນໄຂສະດວກໃນການທໍາມະຫາກິນ, ປູກຝັງ-ລ້ຽງສັດ. ປະຊາກອນອາໄສຢູ່ຫຼາຍໜ້ອຍແຕກຕ່າງກັນໄປຕາມແຕ່ລະຂົງເຂດທີ່ມີຄວາມສໍາຄັນທາງດ້ານການເມືອງເສດຖະກິດສັງຄົມເຊັ່ນ: ແຂວງ ໄຊຍະບູລີ, ນະຄອນຫຼວງວຽງຈັນ, ບໍລິຄໍາໄຊ, ຄໍາມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ຈໍາປາສັກ ມີປະຊາກອນເຖິງ 2.714.654 ຄົນ ກວມ 60% ຂອງພົນລະເມືອງທົ່ວປະເທດ ແຕ່ກວມເນື້ອທີ່ 47% ຂອງເນື້ອທີ່ທັງໝົດທົ່ວປະເທດ.

# ພາກທີ III

# ວັດທະນະທຳສັງຄົມລາວແລະ ອາຊຽນ

# ບົດທີ10

# ກຸ່ມປະເທດອາຊຽນ

## 1. ປະຫວັດຄວາມເປັນມາ ແລະ ໂຄງຮ່າງການຈັດຕັ້ງອາຊຽນ

1.1. ປະຫວັດຄວາມເປັນມາຂອງອາຊຽນ

ປະຫວັດຄວາມເປັນມາຂອງກຸ່ມອາຊຽນ ແລະ ໂຄງຮ່າງການຈັດຕັ້ງຂອງກຸ່ມອາຊຽນ ASEAN ຫຍໍ້ມາຈາກຄຳສັບໃນພາສາອັງກິດ Association Southeast Asia Nations (ແອສໂຊຊິເອເຊິນ ເຊົາທ໌ອີດສ ເອເຊຍ ເນເຊິນສ໌) ກົງກັບຄຳສັບໃນພາສາລາວທີ່ວ່າ ສາມະຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ ຫຼື ເອີ້ນວ່າກຸ່ມ ອາຊຽນ ເປັນອົງການຮ່ວມມືລະຫວ່າງບັນດາປະເທດໃນເຂດອາຊີອາຄະເນ ຫຼື ອາຊີຕາ ເວັນອອກສ່ຽງໃຕ້. ອົງການດັ່ງກ່າວໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 8 ສິງຫາ 1967 ທີ່ບາງກອກ ປະເທດໄທ ໃນເບື້ອງຕົ້ນມີ 5 ປະເທດເຂົ້າຮ່ວມຄື:

1) ໄທ Thailand
2) ອິນໂດເນເຊຍ Indonesia
3) ສິງກະໂປ Singapore
4) ຟີລິບປິນ Philippines
5) ມາເລເຊຍ Malaysia
6) ວັນທີ 8 ສິງຫາ ປີ ຄ.ສ 1984 ບຣູໄນ Brunie ໄດ້ເຂົ້າຮ່ວມສະມາຊິກທີ6
7) ວັນທີ 8 ມັງກອນ ປີ ຄ.ສ 1995 ຫວຽດນາມ Vietnam ໄດ້ເຂົ້າຮ່ວມສະມາຊິກທີ 7
8) ວັນທີ 23 ກໍລະກົດ ປີ ຄ.ສ 1997 ລາວ Laos PDR ໄດ້ເຂົ້າເປັນສະມາຊິກທີ 8
9) ວັນທີ 23 ກໍລະກົດ ປີ ຄ.ສ 1997 ປະເທດ ມຽນມາ Myanmar ເຂົ້າເປັນສະມາຊິກທີ 9
10) ວັນທີ 31 ເມສາ ປີ ຄ.ສ 1999 ປະເທດ ກຳປູເຈຍເຂົ້າເປັນສະມາຊິກທີ 10

ຈຸດປະສົງຂອງການສ້າງຕັ້ງອາຊຽນ

1) ສົ່ງເສີມການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານເສດຖະກິດ, ວັດທະນະທຳສັງຄົມ, ເຕັກໂນໂລຊີ, ວິທະຍາສາດ ແລະ ການບໍລິການ.
2) ສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງພາຍໃນພາກພື້ນ
3) ເສີມສ້າງຄວາມຈະເລີນຮຸ່ງເຮືອງທາງດ້ານເສດຖະກິດ ແລະ ພັດທະນາທາງດ້ານວັດທະນະທຳໃນພາກພື້ນ.
4) ສົ່ງເສີມໃຫ້ປະຊາຊົນໃນກຸ່ມອາຊຽນມີການເປັນຢູ່ ແລະ ມີຄຸນະພາບຊີວິດທີ່ດີ.

5) ໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນຮູບແບບຂອງການຝຶກອົບຮົມ ແລະ ການວິໄຈ ແລະ ສົ່ງເສີມການສຶກສາໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້.
6) ເພີ່ມປະສິດທິພາບທາງດ້ານກະສິກຳ, ອຸດສະຫະກຳ, ການຂະຫຍາຍການຄ້າ, ຕະຫຼອດຮອດການປັບປຸງການຄົມມະນາຄົມຂົນສົ່ງ.
7) ເສີມສ້າງການຮ່ວມມືຂອງອາຊຽນກັບພາຍນອກ, ອົງການ ແລະ ການຮ່ວມມືໃນພາກພື້ນອື່ນ ແລະ ອົງການລະຫວ່າງປະເທດ.

### 1.2. ໂຄງຮ່າງການຈັດຕັ້ງຂອງອາຊຽນ

ລະບົບການຈັດຕັ້ງຂອງສະມາຄົມປະຊາຊາດອາຊຽນປະກອບດັ່ງຕໍ່ໄປນີ້:

#### 1) ຫົວໜ້າລັດຖະບານອາຊຽນ

ເປັນອົງການທີ່ມີອຳນາດສູງສຸດຂອງອາຊຽນແລະມີການປະຊຸມນຳກັນຢ່າງເປັນທາງການທຸກໆ 3 ປີ ແລະ ບໍ່ເປັນທາງການຢ່າງໜ້ອຍ 1 ຄັ້ງເພື່ອວາງທິດທາງ ແລະ ແຜນການເຄື່ອງໄຫວຂອງອາຊຽນ.

#### 2) ເລຂາທິການໃຫ່ຍ

ມີຖານະຕຳແໜ່ງທຽບເທົ່າລັດຖະມົນຕີ,ມີໜ້າທີ່ແນະນຳ,ສົມທົບຜັນຂະຫຍາຍການເຄື່ອນໄຫວຂອງອາຊຽນແລະຮັບຜິດຊອບຕໍ່ກອງປະຊຸມບັນດາຫົວໜ້າລັດຖະບານແລະກອງປະຊຸມລັດຖະມົນຕີອາຊຽນຕະຫຼອດໄລຍະກອງປະຊຸມລັດຖະມົນຕີອາຊຽນຕະຫຼອດໄລຍະກອງປະຊຸມຂອງຄະນະປະຈຳອາຊຽນ. ນັບແຕ່ປີ ຄ. ສ 1967 ຈົນມາເຖິງປີ 2020 ອາຊຽນມີເລຂາທິການທັງໝົດ 14 ທ່ານ ດັ່ງມີລາຍຊື່ລຸ່ມນີ້:

**ຄົນທີ 1 H.R. Dharsono ເອັດຈ໌. ອາ. ຮາໂຊໂນ**

- ເປັນຄົນປະເທດ ອິນໂດເນເຊຍ
- ດຳລົງຕຳແໜ່ງ ໃນວັນທີ 7 ມິຖຸນາ ຄ.ສ 1776
- ສິ້ນສຸດຕຳແໜ່ງ ວັນທີ 18 ກຸມພາ ຄ.ສ 1978



ຄົນທີ 2 Umarjadi Notowijono ອຸມາຈາກີ ໂນໂຕວິໂຈໂນ

- ເປັນຄົນປະເທດ ອິນໂດເນເຊຍ
- ດຳລົງຕຳແໜ່ງ ວັນທີ 19 ກຸມພາ ຄສ 1978
- ສິ້ນສຸດຕຳແໜ່ງ ວັນທີ 30 ມິຖຸນາ ຄສ ຄສ 1978



ຄົນທີ 3 Datuk Alibin Abdullah

- ເປັນຄົນປະເທດມາເລເຊຍ
- ດຳລົງຕຳແໜ່ງວັນທີ 10 ກໍລະກົດ ຄສ 1978
- ສິ້ນສຸດຕຳແໜ່ງ ວັນທີ 30 ມິຖຸນາ ຄ.ສ 1980



ຄົນທີ 4 Narciso G. Reyes

- ຄົນປະເທດຟີລິບປິນ
- ດາລົງຕຳແໜ່ງ1 ກໍລະກົດ ຄສ 1980
- ສິ້ນສຸດຕຳແໜ່ງ ວັນທີ 1 ກໍລະກົດ 1982



ຄົນທີ 5 Chan Kai Yau ຈັນໄກຢີວ

- ຄົນປະເທດສິງກະໂປ
- ດາລົງຕຳແໜ່ງ18 ກໍລະກົດ ຄສ  1982
- ສິ້ນສຸດຕຳແໜ່ງ 15 ກໍລະກົດ ຄ.ສ 1984



ຄົນທີ 6 Phan Wannamethee ປານ ວັນນະເມທີ

- ຄົນປະເທດ ໄທ
- ຂຶ້ນຮັບຕຳແໜ່ງ ວັນທີ 16 ກໍລະກົດ ຄສ 1984
- ສິ້ນສຸດຕຳແໜ່ງ ວັນທີ 15 ກໍລະກົດ ຄສ 1986



ຄົນທີ 7 Roderic Yong

- ຄົນປະເທດບຣູໄນ
- ດາລົງຕາແໜ່ງ ວັນທີ 16 ກໍລະກົດ ຄສ  1986
- ສິ້ນສຸດຕຳແໜ່ງວັນທີ 16 ກໍລະກົດ ຄສ 1989



ຄົນທີ 8 Rusli Noor

- ອິນໂດເນເຊຍ
- ດາລົງຕຳແໜ່ງ ວັນທີ 17 ກໍລະກົດ ຄສ 1989
- ສິ້ນສຸດຕຳແໜ່ງ ວັນທີ 1 ມັງກອນ ຄສ 1993



ຄົນທີ 9 Dato Ajit Singh

- ຄົນປະເທດມາເລເຊຍ
- ດາລົງຕຳແໜ່ງ ວັນທີ 1 ມັງກອນ ຄສ 1993
- ສິ້ນສຸດຕຳແໜ່ງ ວັນທີ 31 ທັນວາ ຄສ 1997



ຄົນທີ 10 Rodolfo C. Severino Jr.

- ຄົນປະເທດ ຟີລິບປິນ
- ດາລົງຕຳແໜ່ງ 1 ມັງກອນ ຄສ  1998
- ສິ້ນສຸດຕຳ ວັນທີ 31 ທັນວາ ຄສ 2002



ຄົນທີ 11 Ong Keng Yong

- ຄົນປະເທດ ສິງກະໂປ
- ດາລົງຕຳແໜ່ງ 1 ມັງກອນ ຄສ  2003
- ສິ້ນສຸດຕຳແໜ່ງ ວັນທີ 31 ທັນວາ ຄສ 2007



ຄົນທີ 12 Surin Pitsuwan

- ຄົນປະເທດໄທ
- ດາລົງຕໍາແໜ່ງ ວັນທີ 1 ມັງກອນ ຄສ  2008
-ສິ້ນສຸດຕໍາແໜ່ງ 31 ທັນວາ ຄສ 2012



ຄົນທີ 13 Le Luong Minh

- ຄົນປະເທດຫວຽດນາມ
- ດາລົງຕໍາແໜ່ງ ວັນທີ 1 ມັງກອນ ຄສ  2013
- ສິ້ນສຸດຕໍາແໜ່ງ ວັນທີ 31 ທັນວາ ຄສ 2017



**ຄົນທີ 14 ດາໂຕະ ປາດູກາ ລີມຈອກຮອຍ**

- ຄົນປະເທດບຣູໄນ
- ດາລົງຕຳແໜ່ງ ວັນທີ 1 ມັງກອນ 2018




**3) ຄະນະປະຈຳອາຊຽນ**

ແມ່ນອົງການປະຕິບັດນະໂຍບາຍແລະປະສານງານຂອງອາຊຽນ, ມີໜ້າທີ່ລາຍງານໂດຍກົງຕໍ່ກອງປະຊຸມບັນດາລັດຖະມົນຕີການຕ່າງປະເທດເຊິ່ງແມ່ນລັດຖະມົນຕີການຕ່າງປະເທດເຈົ້າພາບຈັດການປະຊຸມ. ນອກຈາກນີ້ຍັງມີໜ້າທີ່ທົບທວນວຽກງານຂອງຄະນະກຳມະການແນໃສ່ຜັນຂະຫຍາຍທິດທາງນະໂຍບາຍທີ່ກອງປະຊຸມບັນດາລັດຖະມົນຕີການຕ່າງປະເທດວາງອອກ.

**4) ກອງເລຂາອາຊຽນ**

ກອງເລຂາອາຊຽນໄດ້ຖືກສ້າງຕັ້ງຂຶ້ນຕາມສັນຍາທີ່ໄດ້ລົງນາມກັນ ໂດຍບັນດາລັດຖະມົນຕີການຕ່າງປະເທດອາຊຽນ ໃນກອງປະຊຸມສຸດຍອດທີ່ບາຫຼີ ປີ 1976 ເພື່ອເພີ່ມທະວີການປະສານສົມທົບ ແລະ ການຜັນຂະຫຍາຍນະໂຍບາຍໂຄງການ ແລະ ການເຄື່ອນໄຫວຂອງໜ່ວຍງານຕ່າງໆຂອງອາຊຽນ ແລະ ເລຂາອາຊຽນໄດ້ມີການປັບປຸງໜ້າວຽກ ແລະ ຜັນຂະຫຍາຍວຽກງານໃຫ້ດີກວ່າເກົ່າ.

**5) ກອງເລຂາອາຊຽນແຫ່ງຊາດ**

ແຕ່ລະປະເທດອາຊຽນມີກອງເລຂາແຫ່ງຊາດ ສັງກັດໃນກະຊວງການຕ່າງປະເທດມີໜ້າທີ່ຈັດຕັ້ງ ແລະຜັນຂະຫຍາຍການເຄື່ອນໄຫວວຽກງານພົວພັນກັບອາຊຽນໃນລະດັບປະເທດມີຕຳແໜ່ງເປັນຫົວໜ້າ.

ນອກຈາກນີ້ອາຊຽນ ຍັງໄດ້ຈັດຕັ້ງຄະນະກຳມະການຖາວອນ ແລະ ຄະນະກຳມະການພິເສດລວມມີ 13 ຄະນະ

1) ຄະນະກຳມະການຖາວອນ ວ່າດ້ວຍ ອາຫານ ແລະ ແສດຖະກິດ.
2) ຄະນະກຳມະການຖາວອນ ວ່າດ້ວຍ ການຂົນສົ່ງສິນຄ້າທາງທະເລ.
3) ຄະນະກຳມະການຖາວອນ ວ່າດ້ວຍ ການຂົນສົ່ງທາງອາກາດ ແລະ ພົນລະເຮືອນ.

4) ຄະນະກຳມະການຖາວອນ ວ່າດ້ວຍ ການຂົນສົ່ງ ແລະ ໂທລະຄົມ ມະນາຄົມ
5) ຄະນະກຳມະການຖາວອນ ວ່າດ້ວຍ ການຄ້າ ແລະ ອຸດສະຫະກຳ.
6) ຄະນະກຳມະການຖາວອນ ວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ.
7) ຄະນະກຳມະການຖາວອນ ວ່າດ້ວຍ ກິດຈະກຳສັງຄົມ ແລະ ວັດທະນະທຳ.
8) ຄະນະກຳມະການຖາວອນ ວ່າດ້ວຍ ການທ່ອງທ່ຽວ.
9) ຄະນະກຳມະການຖາວອນວ່າດ້ວຍສື່ມວນຊົນ.
10) ຄະນະກຳມະການຖາວອນວ່າດ້ວຍການຄັງ.
11) ຄະນະກຳມະການຖາວອນວ່າດ້ວຍການຄົມມະນາຄົມ ການບໍລິການຈະລາຈອນທາງອາກາດ ແລະ ອຸດຕຸນິຍົມ.
12) ຄະນະກຳມະການຖາວອນປະສານງານພິເສດ
13) ຄະນະກຳມະການຖາວອນ ພິເສດແຫ່ງທະນະຄານກາງ ແລະ ເຈົ້າໜ້າທີ່ທາງດ້ານການເງິນ.

## 2. ບັນດາປະເທດສະມາຊິກກຸ່ມອາຊຽນ

### 1. ເນກາບຣູໄນ ດາຣຸສຊາລາມ Brunie

ນະຄອນຫຼວງ ບານດາເຊຣີເບກາວັນ
ເນື້ອທີ່ທີ່ປະເທດ 5 . 770ກິໂລຕາແມັດ
ພົນລະເມືອງ 437.479 ຄົນ )ປີ 2020(
ພາສາທາງການ ມາເລ
ຫົວໜ່ວຍເງິນຕາປະຈຳຊາດ ໂດລາບຣູນາຍ
ສິນຄ້າສົ່ງອອກຕົ້ນຕໍ ນ້ຳມັນ ,ອາຍແກັດສ໌ທຳມະຊາດ

| ທຸງຊາດ | ສັດປະຈຳຊາດ<br>ເສືອໂຄ່ງ | ດອກໄມ້ປະຈຳຊາດ<br>ດອກຊິມເປີ້ |
|---|---|---|
|  |  |  |

### 2. ອິນໂດເນເຊຍ Indonesia

ນະຄອນຫຼວງ ຈາກາຕາ
ເນື້ອທີ່ປະເທດ 1 .904. 569ກິໂລຕາແມັດ
ພົນລະເມືອງ 273.523.615 ຄົນ (2020)
ພາສາທາງການ ພາສາບາຮາຊາອິນໂດເນເຊຍ

ຫົວໜ່ວຍເງິນຕາ ຣູເປຍ

ສິນຄ້າສົ່ງອອກຕົ້ນຕໍ ນໍ້າມັນອາຍແກັດສ໌ ,ຜະລິດຕະພັນຈາກໄມ້ ແລະ ແຜ່ນແພ

ທຸງຊາດ ສັດປະຈຳຊາດ ດອກໄມ້ປະຈຳຊາດ

ມັງກອນໂຄໂມໂດ ດອກກ້ວຍໄມ້ລາຕີ







3.ສ ປ ປ ລາວ Laos P.D.R

ນະຄອນຫຼວງ ວຽງຈັນ

ເນື້ອທີ່ປະເທດ 236 . 800ກິໂລຕາແມັດ

ພົນລະເມືອງ 7.275.560 ຄົນ 20)20(

ພາສາທາງການ ພາສາລາວ

ຫົວໜ່ວຍເງິນຕາປະຈຳຊາດ ກີບ

ສິນຄ້າສົ່ງອອກຕົ້ຕໍ ເຄື່ງນຸ່ງຫົ່ງ ,ແຜ່ນແພ ,ກະແສໄຟຟ້າ ,ໄມ້ທ່ອນ ,ໄມ້ອັດ ,ກາເຟ

ທຸງຊາດ ສັດປະຈຳຊາດຊ້າງ ດອກໄມ້ປະຈຳຊາດ

ດອກຈຳປາ







4.ມາເລເຊຍ Malaysia

ນະຄອນຫຼວງ ກົວລາລຳເປີ

ເນື້ອທີ່ປະເທດ 329. 758ກິໂລຕາແມັດ

ພົນລະເມືອງ 32.365.999 ຄົນ )ປີ 2020(

ພາສາທາງການ ພາສາມາເລເຊຍ

ຫົວໜ່ວຍເງິນຕາປະຈຳຊາດ ຣິງກິດມາເລເຊຍ

ສິນຄ້າສົ່ງອອກຕົ້ນຕໍ ນໍ້າມັນປາມ ,ນໍ້າມັນດິບ ,ຜະລິດຕະພັນເຄື່ອງໄຟຟ້າ ແລະ ເອເລັກໂຕນິກ

ທຸງຊາດ　　ສັດປະຈຳຊາດ　　ດອກໄມ້ປະຈຳຊາດ

ເສືອ　　ດອກໄໜ (ດອກສະບາ)







**5.ມຽນມ້າ Myanmar**

ນະຄອນຫຼວງ　ເນປີດໍ

ເນື້ອທີ່ປະເທດ　678. 500ກິໂລຕາແມັດ

ພົນລະເມືອງ　54.409.800 ຄົນ )ປີ 2020(

ພາສາທາງການ　ມ່ຽນມ້າ

ຫົວໜ່ວຍເງິນຕາປະຈຳຊາດ ຢາດ

ສິນຄ້າສົ່ງອອກຕົ້ນຕໍ　ຜະລິດຕະພັນກະສິກຳ ແລະ ຈາກທະເລ ,ໄມ້ທ່ອນ ,ແຮ່ມາດ ,ເພັດພອຍ.

ທຸງຊາດ　　ສັດປະຈຳຊາດ　　ດອກໄມ້ປະຈຳຊາດ

ເສືອ　　ດອກປະດູ່







**6.ຟີລິບປິນ Philppines**

ນະຄອນຫຼວງ　ມະນີລາ

ເນື້ອທີ່ປະເທດ　678. 500ກິໂລຕາແມັດ

ພົນລະເມືອງ　109.581.078 ຄົນ )ປີ2020(

ພາສາທາງການ　ພາສາຟີລິບປິນໂນ ແລະ ພາສາອັງກິດ

ຫົວໜ່ວຍເງິນຕາປະຈຳຊາດ ເປໂຊຟີລິບປິນ

ສິນຄ້າສົ່ງອອກຕົ້ນຕໍ        ເຄື່ອງນຸ່ງ ,ຜະລິດຕະພັນປະເພດເຄື່ອງສີ່ໄຟຟ້າ ,ຜະລິດຕະພັນອຸດສະຫາກຳເອເລັກໂຕນິກ ແລະ ນ້ຳມັນໝາກພ້າວດິບ.

| ທຸງຊາດ | ສັດປະຈຳຊາດ | ດອກໄມ້ປະຈຳຊາດ |
|---|---|---|
| | ຄວາຍ | ດອກພຸດແກ້ວ |





7.ສິງກະໂປ    Singapore

ນະຄອນຫຼວງ    ສິງກະໂປ

ເນື້ອທີ່ປະເທດ    699 ກິໂລຕາແມັດ

ພົນລະເມືອງ    5.850.342 ຄົນ (2020)

ພາສາທາງການ    ເມເລດ, ຈີນກາງ, ຕາມິນ ແລະ ອັງກິດ

ຫົວໜ່ວຍເງິນຕາປະຈຳຊາດ    ໂດລາສິງກະໂປ Singapore dollar

ສິນຄ້າສົ່ງອອກຕົ້ນຕໍ    ເຄື່ອງໃຊ້ໄຟຟ້າ, ເຄື່ອງກົນຈັກ, ເຄື່ອງປະກອບ, ນ້ຳມັນເຊື້ອໄຟ.

| ທຸງຊາດ | ສັດປະຈຳຊາດ | ດອກໄມ້ປະຈຳຊາດ |
|---|---|---|
| | ສິງໂຕ | ດອກແວນດາ |





8.ໄທ Thailand

ນອນຄອນຫຼວງ    ບາງກອກ

ເນື້ອທີ່ປະເທດ    513.115 ກິໂລຕາແມັດ

ພົນລະເມືອງ    69.799.978 ຄົນ (2020)

ພາສາທາງການ    ພາສາໄທ

ຫົວໜ່ວຍເງິນປະຈຳຊາດ    ບາດ

ສິນຄ້າທີ່ສົ່ງອອກຕົ້ນຕໍ    ຜະລິດຕະພັນ, ແຜ່ນແພ, ເຄື່ອງໃຊ້ໄຟຟ້າຄອມພິວເຕີ

| ທຸງຊາດ | ສັດປະຈຳຊາດ<br>ຊ້າງ | ດອກໄມ້ປະຈຳຊາດ<br>ດອກຄູນ |
|---|---|---|
|  |  |  |

### 9.ຫວຽດນາມ Vietnam

| | |
|---|---|
| ນະຄອນຫຼວງ | ຮ່າໂນ້ຍ |
| ເນື້ອທີ່ປະເທດ | 331.689 ກິໂລຕາແມັດ |
| ພົນລະເມືອງ | 97.338.579 ລ້ານຄົນ (2020) |
| ພາສາທາງການ | ຫວຽດນາມ |
| ຫົວໜ່ວຍເງິນຕາປະຈຳຊາດ | ດົງ |
| ສິນຄ້າສົ່ງອອກຕົ້ນຕໍ | ເຂົ້າ, ນ້ຳມັນດິບ, ກຸ້ງ, ແຜ່ນແພ, ກາເຟ, ຢາງພາລາ ແລະ ເຄື່ອງນຸ່ງ. |

| ທຸງຊາດ | ສັດປະຈຳຊາດ<br>ຄວາຍ | ດອກໄມ້ປະຈຳຊາດ<br>ດອກບົວຫຼວງ |
|---|---|---|
|  |  |  |

### 10.ກຳປູເຈຍ Cambodia

| | |
|---|---|
| ນະຄອນຫຼວງ | ພະນົມເປັນ |
| ເນື້ອທີ່ປະເທດ | 181.040 ກິໂລຕາແມັດ |
| ພົນລະເມືອງ | 16.718.965 ຄົນ (2020) |
| ພາສາທາງການ | ຂະເໝນ |
| ຫົວໜ່ວຍເງິນຕາປະຈຳຊາດ: | ລຽວ |
| ສິນຄ້າສົ່ງອອກຕົ້ນຕໍ | ໄມ້ທ່ອນ, ຢາງພາລາ, ຜະລິດຕະພັນກະສິກຳ, ຜະລິດຕະພັນເພັດພອຍ. |

| ທຸງຊາດ | ສັດປະຈຳຊາດ<br>ງົວກະທິງ ກູປີ | ດອກໄມ້ປະຈຳຊາດ<br>ດອກລຳດວນ |
| --- | --- | --- |
|  |  |  |

## ວາລະກອງປະຊຸມສຸດຍອດອາຊຽນ ASEAN Summeet ນັບແຕ່ປີ 1967-2020

ນັບແຕ່ປີ ຄ.ສ 1967ມາຈົນຮອດ ປີ 2020 ສະມາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ ໄດ້ຈັກອງປະຊຸມສຸດຍອດອາຊຽນຂຶ້ນ ເຖິງ 36 ຄັ້ງ ຄື:

| ກອງປະຊຸມຄັ້ງທີ | ວັນທີ ເດືອນປີ ຈັດກອງປະຊຸມ | ປະເທດທີ່ເປັນເຈົ້າພາບ | ສະຖານທີ່ປະຊຸມ |
| --- | --- | --- | --- |
| 1 | ວັນທີ 23-24 ກຸມພາ 1976 | ອິນໂດເນເຊຍ | ບາຫຼີ |
| 2 | ວັນທີ 4-5 ສິງຫາ 1977 | ມາເລເຊຍ | ກົວລາລຳເປີ |
| 3 | ວັນທີ 14-15 ທັນວາ 1987 | ຟີລິບປິນ | ມະນີລາ |
| 4 | ວັນທີ 27-29 ມັງກອນ 1992 | ສິງກະໂປ | ສິງກະໂປ |
| 5 | ວັນທີ 14-15 ມັງກອນ 1995 | ໄທ | ກຸງເທບມະຫານະຄອນ |
| 6 | ວັນທີ 15-16 ທັນວາ 1998 | ຫວຽດນາມ | ຮ່າໂນ້ຍ |
| 7 | ວັນທີ 5-6 ພະຈິກ 2001 | ບຣູໄນ | ບັນດາເຊລີເບກາວັນ |

| | | | |
|---|---|---|---|
| 8 | ວັນທີ 4-5 ພະຈິກ 2002 | ກຳປູເຈຍ | ພະນົມເປັນ |
| 9 | ວັນທີ 7-8 ຕຸລາ 2003 | ອິນໂດເນເຊຍ | ບາຫຼີ |
| 10 | ວັນທີ 29-30 ພະຈິກ 2004 | ລາວ | ວຽງຈັນ |
| 11 | ວັນທີ 12-14 ທັນວາ 2005 | ມາເລເຊຍ | ກົວລາລຳເປີ |
| 12 | ວັນທີ 11-14 ມັງກອນ 2007 | ຟີລິບປິນ[2] | ເຊບູ |
| 13 | ວັນທີ 18-22 ພະຈິກ 2007 | ສິງກະໂປ | ສິງກະໂປ |
| 14 | ວັນທີ 27 ກຸມພາ- 1 ມີນາ 2009 | ໄທ | ຊະອຳ, ຫົວຫີນ |
| | ວັນທີ 10–11 ເມສາ 2009 | | ພັດທະຍາ |
| 15 | ວັນທີ 23-25 ຕຸລາ 2009 | | ຊະອຳ, ຫົວຫີນ |
| 16 | ວັນທີ 8-9 ເມສາ 2010 | ຫວຽດນາມ | ຮ່າໂນ້ຍ |
| 17 | ວັນທີ 28-31 ຕຸລາ 2010 | | |
| 18 | ວັນທີ 7-8 ພຶດສະພາ 2011 | ອິນໂດເນເຊຍ | ຈາກາຕ້າ |
| 19 | ວັນທີ 14-19 ພະຈິກ2011 | | ບາຫຼີ |

| | | | |
|---|---|---|---|
| 20 | ວັນທີ 3-4 ເມສາ 2012 | ກຳປູເຈຍ | ພະນົມເປັນ |
| 21 | ວັນທີ 17–20 ພະຈິກ 2012 | | |
| 22 | ວັນທີ 24–25 ເມສາ 2013 | ບຣູໄນ | ບັນດາເຊລີເບກາວັນ |
| 23 | ວັນທີ 9–10 ຕຸລາ 2013 | | |
| 24 | ວັນທີ 10–11 ພຶດສະພາ2014 | ມຽນມ້າ | ເນປີດໍ |
| 25 | ວັນທີ 10–12 ພະຈິກ 2014 | | |
| 26 | ວັນທີ 26–27 ເມສາ 2015 | ມາເລເຊຍ | ກົວລາລຳເປີ, ເກາະລັງກາວີ |
| 27 | ວັນທີ 18–22  ພະຈິກ 2015 | | ກົວລາລຳເປີ |
| 28-29 | ວັນທີ 6–8 ກັນຍາ 2016 | ລາວ | ວຽງຈັນ |
| 30 | ວັນທີ 26-27 ເມສາ 2017 | ຟີລິບປິນ | ປາໄຊ |
| 31 | ວັນທີ 10-14 ພະຈິກ 2017 | | |
| 32 | ວັນທີ 25-28 ເມສາ  2018 | ສິງກະໂປ | ສິງກະໂປ |
| 33 | ວັນທີ 11-15 ເມສາ 2018 | | |

| | | | |
|---|---|---|---|
| 34 | ວັນທີ 20-23 ມິຖຸນາ 2019 | ໄທ | ກຸງເທບມະຫານະຄອນ |
| 35 | 31 ຕຸລາ - 4 ພະຈິກ 2019 | | ກຸງເທບມະຫານະຄອນ ແລະ ນົນທະບູລີ |
| ພິເສດ | 14 ເມສາ 2020 | | ການປະຊຸມອອນລາຍ |
| 36 | 26 ມິຖຸນາ 2020 | | ການປະຊຸມອອນລາຍ |

# ບົດທີ11

# ຮີດຄອງປະເພນີລາວ-ອາຊຽນ

## 1. ຮີດຄອງປະເພນີລາວ

### 1.1. ຮີດສິບສອງ

ຮີດສິບສອງແມ່ນປະເພນີບູຮານທີ່ຄົນລາວຍຶດຖືແລະປະຕິບັດກັນມາແຕ່ບູຮານນະການໝາຍເຖິງການເຮັດບຸນ 12 ເດືອນນັ້ນເອງເຊິ່ງການເຮັດບຸນນັ້ນຈະຕິດພັນກັບການອອກແຮງງານ, ການທຳມາຫາກິນ ແລະ ການປະຕິບັດໜ້າທີ່ຂອງຄົນລາວລາຍລະອຽດມີດັ່ງນີ້:

| | |
|---|---|
| ເດືອນຈຽງ | ບຸນເຂົ້າກຳ |
| ເດືອນຍີ່ | ບຸນຄູນລານເຂົ້າ |
| ເດືອນສາມ | ບຸນເຂົ້າຈີ່ ແລະ ບຸນມາຂະບູຊາ |
| ເດືອນສີ່ | ບຸນພະເຫວດ |
| ເດືອນຫ້າ | ບຸນສົງການ |
| ເດືອນຫົກ | ບຸນບັ້ງໄປ ແລະ ບຸນວິສາຂະບູຊາ |
| ເດືອນເຈັດ | ບຸນບູຊາມະເຫສັກຫຼັກເມືອງ |
| ເດືອນແປດ | ບຸນເຂົ້າພັນສາ |
| ເດືອນເກົ້າ | ບຸນເຂົ້າປະດັບດິນ |
| ເດືອນສິບ | ບຸນເຂົ້າສະຫຼາກ |
| ເດືອນສິບເອັດ | ບຸນອອກພັນສາ |
| ເດືອນສິບສອງ | ບຸນກະຖິນ |

ນອກຈາກການເຮັດບຸນ 12 ເດືອນນີ້ແລ້ວ ຄົນລາວຍັງມີພິທີກຳປະຈຳຊີວິດຄື: ໃນຊີວິດຂອງຄົນໆ ໜຶ່ງຕ້ອງຜ່ານພິທີກຳທີ່ ສຳຄັນ 4 ຂັ້ນສຳລັບຜູ້ຊາຍ (ພິທີກຳການເກີດ, ການບວດ, ການແຕ່ງດອງ ແລະ ການຕາຍ) ເຊິ່ງພິທີການດັ່ງກ່າວເຄີຍປະຕິ ບັດກັນມາແຕ່ບູ ຮານນະການ

### 1.2. ຄອງ 14

ໝາຍເຖິງສິ່ງຕ່າງໆທີ່ຄົນເຮົາຈະຕ້ອງປະຕິບັດຕໍ່ກັນເພື່ອໃຫ້ເກີດມີແຕ່ສິ່ງດີໆເຊັ່ນ: ຜົວປະຕິບັດຕໍ່ເມຍ, ເມຍ ປະຕິບັດຕໍ່ ຜົວ, ຄົນປະຕິບັດຕໍ່ເຮືອນຊານບ້ານນຊ່ອງ ແລະ ພະສົງອົງຄະເຈົ້າ ລວມກັນແລ້ວມີທັງໝົດ 14 ຂໍ້ດັ່ງລຸ່ມນີ້:

2) ເມື່ອເກັບກ່ຽວຜົນລະປູກສຳເລັດແລ້ວຕ້ອງນຳໄປຖວາຍພະສົງກ່ອນແລ້ວຕົນສິ່ງກ່ອຍກິນ.

3) ຢ່າໂລບລ່າຍຕາຊ່າງ, ຕາຊິງ, ຈ່າຍເງິນແດງແປງເງິນຄວ້າງ ແລະ ເວົ້າຄຳຫຍາບຊ້ຳຕ່ຳກັນ.

4) ໃຫ້ພ້ອມກັນອ້ອມຮົ້ວ-ສ້າງກຳແພງອ້ອມວັດ ແລະ ເຮືອນເພື່ອປ້ອງກັນສັດຮ້າຍ.

5) ທຸກຄັ້ງກ່ອນຈະຂຶ້ນເຮືອນໃຫ້ລ້າງຕີນເສຍກ່ອນຈິ່ງຂຶ້ນ.

6) ເມື່ອເຖິງວັນສິນ 8, ສິນ 15ໃຫ້ພາກັນສົມມາຫົດສົງກ້ອນເສົ້າ, ແມ່ຄີໄຟ, ແມ່ຂັ້ນໄດ, ປະຕູເຮືອນ.

7) ກ່ອນຈະນອນໃຫ້ເອົານ້ຳສ່ອຍຄິງ ແລະ ລ້າງຕີນເສຍກ່ອນຈິ່ງນອນ.

8) ເມື່ອເຖິງວັນສິນ 15 ຄ່ຳໃຫ້ຕົບດອກໄມ້, ແຕ່ງທູບທຽນ, ສົມມາຜີວ, ພໍ່ແມ່, ເຖົ້າແກ່ລຸງຕາຂອງຕົນ.

9) ເມື່ອເຖິງວັນສິນດັບ-ສິນເພັງໃຫ້ນິມົນພະສັງຄະເຈົ້າມາສູດມຸງຄຸນເຮືອນແລ້ວທຳບຸນຕັກບາດຖວາຍທານ ໝາຍຄວາມວ່າໃຫ້ເຮັດບຸນມື້ວັນສິນ ຫຼື ເກັບດອກໄມ້ທູບທຽນໄປຖວາຍພະສົງອົງຄະເຈົ້າ.

10) ເມື່ອພິກຂຸສາມະເນນມາບິນທະບາດ ຢ່າໃຫ້ເພິ່ນຄອຍຖ້າ, ເວລາປ່ອນບາດຢ່າໃຫ້ມີຊູນບາດ ຫຼື ຊູນພິກຂຸ ສາ ມະເນນ, ຍາມໃສ່ບາດຫ້າມໃສ່ເກີບ, ກັ້ງຄັນຮົ່ມ, ຢ່າເອົາຜ້າປົກຫົວ, ຢ່າອູ້ມລູກ, ຫຼື ຫຼານ ແລະ ບໍ່ຖື ອາວຸດ.

11) ເມື່ອພະພິກຂຸອອກຈາກການເຂົ້າກຳແລ້ວ ໃຫ້ນຳເອົາດອກໄມ້ ທູບທຽນ ແລະ ເຄື່ອງອັດຖະບໍລິຂານໄປ ຖວາຍ.

12) ເມື່ອພະພິກຂຸສັງຄະເຈົ້າກາຍມາໃຫ້ນັ່ງລົງແລ້ວຍໍມືໄຫວ້ແລ້ວຈິ່ງຄ່ອຍຖາມ ຫຼື ເວົ້າລົມກັບເພິ່ນ

13) ຢ່າຢຽບເງົາຂອງພະສັງຄະເຈົ້າ ຫຼື ຜູ້ມີສິນບໍລິສຸດ.

14) ຢ່າເອົາອາຫານເຫຼືອ ຫຼື ເງື່ອນໄປໃຫ້ພະສັງຄະເຈົ້າສັນ ແລະ ເອົາໄວ້ຖ້າໃຫ້ຜີວກິນ.

15) ຢ່າເສບການມະຖຸນໃນມື້ວັນສິນ, ວັນເຂົ້າພັນສາ, ວັນອອກພັນສາ, ວັນມາຄະບູຊາ ແລະວັນ ມະຫາສົງການ.

**1.3.ເຮືອນສາມນ້ຳສີ່**

1) ນ້ຳໃຈ ມີນ້ຳໃຈເອື້ອເຟື້ອເພື່ອແຜ່
2) ນ້ຳດື່ມ ຕ້ອງມີໃຫ້ເຕັມອຸແອ່ງໄຫ
3) ນ້ຳໃຊ້ ຕ້ອງມີໄວ້ໃຫ້ພຽງພໍ
4) ນ້ຳປອກປູນ ຕ້ອງມີໄວ້ເພື່ອຕ້ອນຮບແຂກບ້ານແຂກເຮືອນ

## 2. ຮີດຄອງປະເພນີຂອງອາຊຽນ

### 2.1. ປະເພນີບູຮານຂອງໄທ

| | | | |
|---|---|---|---|
| 1. ເດືອນມັງກອນ | ບຸນເກັບກ່ຽວເຂົ້າ | 7. ເດືອນກໍລະກົດ | ບຸນເຂົ້າພັນສາ |
| 2. ເດືອນກຸມພາ | ບຸນມາຄະບູຊາ | 8. ເດືອນສິງຫາ | ພິທີໂກນຈຸກ |
| 3. ເດືອນມີນາ | ບຸນວັນຕຸດຊິ້ນສຸດປີ | 9. ເດືອນກັນຍາ | ບຸນສາດ |

| | | | |
|---|---|---|---|
| 4. ເດືອນເມສາ | ບຸນສົງການ | 10. ເດືອນຕຸລາ | ທອດກະຖິນ |
| 5. ເດືອນພຶດສະພາ | ບຸນວິສາຂະບູຊາ | 11. ເດືອນພະຈິກ | ລອຍກະທົງ |
| 6. ເດືອນມິຖຸນາ | ຫຼົ່ທຽນພັນສາ | 12. ເດືອນທັນວາ | ບຸນເຂົ້າໜົມເບື້ອງ |

**2.2. ປະເພນີຂອງຫວຽດນາມ**

ຫວຽດນາມເປັນຊາດໜຶ່ງທີ່ໄດ້ຮັບອິດທິພົນຈາກຈີນ. ດັ່ງນັ້ນ, ຈຶ່ງມີປະເພນີຄ້າຍຄືກັບຈີນເຊັ່ນ: ບຸນປີໃໝ່ ເຕັດຫງວຽນດ໋ານ ຫຼື ເທດສະການຕຸດຈີນ, ເລ່ໂສໂຕ໊ ຮຸ່ງເອືອງ (ເດືອນເມສາ), ເຕັດຈຸງທູ (ງານບຸນລະດູໃບໄມ້ຫຼົ່ນ ປະມານເດືອນຕຸລາ).

- ບຸນປີໃໝ່ຫວຽດນາມ (ເຕັດຫງວຽນດານ Tết nguyên đán)

ໝາຍຄວາມວ່າເທດສະການແຫ່ງຮຸ່ງອາລຸນຂອງວັນທຳອິດຂອງປີ ຈັດຂຶ້ນລະຫວ່າງທ້າຍເດືອນມັງກອນ ຫາເດືອນກຸມພາເປັນການສະເຫຼີມ ສະຫຼອງຕາມຄວາມເຊື່ອຂອງລັດທິເຕົ໋າ, ຂົງຈື້ ແລະສາສະໜາພຸດນິກາຍມະຫາຍານ ເພື່ອບູຊາບັນພະບຸລຸດ.

- ເທດສະການລະດູໃບໄມ້ຫຼົ່ນ Tết Trung Thu

ກົງກັບວັນຂຶ້ນ 15 ຄ່ຳເດືອນ 8 ຂອງທຸກປີຊາວບ້ານຈະພາກັນເຮັດເຂົ້າໜົມ ບັນຕຮັງທູ ເພື່ອສິ່ງເຂົ້າປະກວດໃນການສະເຫຼີມສະຫຼອງຈະມີການແຫ່ຂະບວນມັງກອນເພື່ອທຳການບູຊາດວງຈັນ.

**2.3.ປະເພນີຂອງກຳປູເຈຍ**

- ບຸນບອນອົມຕຸກ: ເປັນປະເພນີກ່ຽວກັບນ້ຳເປັນບຸນປະເພນີປະຈຳປີທີ່ໃຫຍ່, ຈັດເຂັ້ນໃນເດືອນພະຈິກຂອງທຸກປີ (ປະມານຂຶ້ນ 14,15 ຄ່ຳ ຫາ ແຮມ 1 ຄ່ຳ ). ເປັນການສະແດງຄວາມຮູ້ບຸນຄຸນຂອງແມ່ນ້ຳທີ່ນຳເອົາຄວາມອຸດົມສົມບູນມາໃຫ້. ໃນປາງບຸນຈະປະກອບມີຫຼາຍກິດຈະກຳເຊັ່ນ: ແຂ່ງຂັນເຮືອຊ່ວງ, ຈູດດອກໄຟພຸ, ດອກໄມ້ໄຟ, ຂະບວນເຮືອໄຟ ຢູ່ຕົ່ງເລສາບ.

**2.4. ປະເພນີຂອງຟີລິບປິນ**

- ປະເພນີອາຕິຫານ Atihan ເປັນບຸນປະເພນີທີ່ໃຫຍ່ທີ່ສຸດຂອງຟີລິບປິນທີ່ຈັດຂຶ້ນໃນຊ່ວງເດືອນກໍລະກົດຂອງທຸກປີ
- ປະເພນີ ຊິນນູລັອກ Sinulog ຈັດຂຶ້ນໃນວັນອາທິດທີ 3 ຂອງເດືອນມັງກອນໃນທຸກໆປີ ຈັດຂຶ້ນເພື່ອລະນຶກເຖິງນັກບຸນ ຊານໂຕນີໂນ ມີການແຫ່ຂະບວນຟາເຣດ ແລະ ສະແດງດົນຕີ
- ປະເພນີ ດີນັກຍັງ Dynagyang ຈັດຂຶ້ນໃນອາທິດທີ 2 ຂອງເດືອງມັງກອນຂອງທຸກປີມີການແຫ່ຂະບວນຂອງຊົນເຜົ່າ ອາຕິ Ati ທີ່ມີການຕົບແຕ່ງຮ່າງກາຍດ້ວຍວັດທີ່ທີ່ຫາໄດ້ໃນທຳມະຊາດ.

**2.5. ປະເພນີຂອງມຽນມ້າ**

- ປະເພນີປ່ອຍຊ່າງລອງ Poy Sang Long ປະເພນີບວດຈົວ ທີ່ສືບທອດກັນມາແຕ່ບູຮານນະການ, ຄົນມ່ຽນມ້າໃຫ້ຄວາມສຳຄັນເພາະເປັນບຸນປາງໃຫຍ່ຂອງຄອບຄົວ. ປະເພນີປອຍຊ່າງລອງ ນິຍົມຈັດ

ກັນໃນລະຫວ່າງເດືອນມີນາ ຫາ ເດືອນພຶດສະພາຂອງແຕ່ລະປີ (ເດືອນທີ 1 ມຽນມ້າເທົ່າກັບເດືອນທີ 5 ຂອງລາວ)

- ງານນະມັດສະການພະທາດເຈດີ: ປາງບຸນນີ້ນິຍົມຈັດຂຶ້ນພາຍຫຼັງງານບຸນອອກພັນສາຂອງແຕ່ລະປີ

**2.6. ປະເພນີຂອງມາເລເຊຍ**

- ປະເພນີການຟ້ອນຊາບິນ Zapin ເປັນການສະແດງຟ້ອນເປັນໝູ່ຄະນະ ເປັນສິລະປະພື້ນເມືອງຂອງຊາວມາເລເຊຍ, ເປັນບົດຟ້ອນທີ່ໄດ້ຮັບອິດທິພົນມາຈາກຊາວອາຣັບ ເປັນບົດຟ້ອນຄູ່ຍິງ-ຊາຍທັງໝົດ 6 ຄູ່ ເຕັ້ນຕາມຈັງຫວະຂອງກີຕ້າ ແບບຊາວອາຣາບຽນ ແລະ ກອງນ້ອຍສອງໜ້າທີ່ຕີເປັນຈັງຫວະແຕ່ຊ້າ ຫາໄວ.
- ປະເພນີ ທາເດົາ ຄາອາມາຕັນ Tadau Kaamatan ເປັນປາງບຸນປະຈຳປີຂອງລັດຊາບາ ຈັດຂຶ້ນໃນຊ່ວງທ້າຍເດືອນພຶດສະພາ ເປັນຊ່ວງທ້າຍຂອງລະດູເກັບກ່ຽວເຂົ້າ ແລະ ເລີ່ມຕົ້ນລະດູໃໝ່ ໂດຍມີພິທີກຳທາງສາສະໜາໃນການເຮັດກະສິກຳ ມີການຟ້ອນ ແລະ ເຕັ້ນລະບຳພື້ນເມືອງ ແລະ ຂັບລຳທ້ອງຖິ່ນເພື່ອສະເຫຼີມສະຫຼອງ.

**2.7. ປະເພນີຂອງສິງກະໂປ**

- ບຸນຕຸດຈີນ ເປັນບຸນປີໃໝ່ຂອງຊາວຈີນທີ່ຈັດຂຶ້ນໃນເດືອນກຸມພາ
- ເທດສະການ Good Friday ເປັນບຸນປະເພນີຂອງຊາວຄຣິດ ເພື່ອລະນຶກເຖິງວັນເສຍສະຫຼະຊີວິດເທິງໄມ້ກາງເຂນຂອງພະເຍຊູ, ນິຍົມຈັດບຸນນີ້ໃນເດືອນເມສາຂອງທຸກປີ.
- ບຸນວິສາຂະບູຊາເປັນບຸນປະເພນີຂອງຊາວພຸດເພື່ອລະນຶກເຖິງວັນປະສູດ, ວັນຕັດສະລຸ ແລະ ວັນປະລິນິພານຂອງພະພຸດທະເຈົ້າ, ຈັດຂຶ້ນໃນເດືອນພຶດສະພາຂອງແຕ່ລະປີ.
- ບຸນ ຮາຣີຣາຢາ ປົວຊາ Hari Raya puasa ເປັນພິທີສະເຫຼີມສະຫຼອງຂອງຊາວມູດສະລິມພາຍຫຼັງທີ່ມີການຖືສິນອົດ ຫຼື ການເຮັດບຸນລໍມາດອນ, ຈັດຂຶ້ນໃນຊ່ວງເດືອນຕຸລາ.
- ບຸນ ດີປາວາລີ Deepavali ເປັນບຸນປີໃໝ່ຂອງຊາວຮິນດູ, ຈັດຂຶ້ນໃນເດືອນພະຈິກຂອງທຸກໆປີ.

**2.8. ປະເພນີຂອງປະເທດບຣູໄນ**

- **ເທດສະການຮາຣີຮາຍໍອີດິລຟິຕີ້**

ຈັດຂຶ້ນຫຼັງບຸນລໍມາດອນ (ເດືອນແຫ່ງການຖືສິນອົດຂອງຊາວອຸດສະລິມທົ່ວໂລກ) ໂດຍເລີ່ມຕັ້ງແຕ່ 10 ວັນສຸດທ້າຍຂອງເດືອນລໍມາດອນໃນຕອນເຊົ້າຊາວມຸດສະລິມຈະໄປລວມຕົວກັນ ລະໝາດ ຢູ່ມັດສະຢິດ ຈາກນັ້ນພວກເຂົາກໍ່ຈະໄປສຸສານບັນພະບຸລຸດ. ໃນເທດສະການນີ້ ພວກເຂົາພາກັນເຮັດອະນາໄມເຮືອນຊານ, ຊື້ເຄື່ອງນຸ່ງໃໝ່ມານຸ່ງຫົ່ມ ແລະ ພວກເຂົາຈະເປີດປະຕູຕະຫຼອດມື້ເພື່ອຕ້ອນຮັບຍາດພີ່ນ້ອງ ແລະ ເພື່ອນຝູງມາຢ້ຽມຢາມ.

**2.9. ປະເພນີຂອງປະເທດອິນໂດເນເຊຍ**

- **ວາຢັງ ກູລິດ) Wayang Kilit)**

ເປັນການສະແດງຫຸ່ນເງົາ ທີ່ເປັນເອກະລັກຂອງອິນໂດເນເຊຍ ແລະ ຖືເປັນສິລະປະການສະແດງທີ່ສວຍສົດງົດງາມ ແລະ ມີຄວາມລະອຽດກວ່າການສະແດງແບບອື່ນໆ ເພາະເປັນການລວບລວມເອົາສິລະປະ

ຫຼາຍຮູບແບບເຂົ້າກັນ  ແຕ່ດັ້ງເດີມຫຸ່ນທີ່ນໍາມາສະແດງນັ້ນຈະເຮັດຈາກໜັງສັດ ການສະແດງຈະມີການບັນເລງດົນຕີໄປພ້ອມ

# ເອກະສານອ້າງອີງ


1. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ວິທະຍາສາດສັງຄົມ 3, ປີ 2009, ສາຍສ້າງຄູປະຖົມ
2. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2008, ວິທະຍາສາດສັງຄົມ 2 ສາຍສ້າງຄູປະຖົມ ລະບົບ 2 ປີ
3. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2009,ປະຫວັດສາດ 4 ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ປີທີ 2.
4. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2009, ປະຫວັດສາດ3, ປີທີ2.
5. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2008, ພູມສາດ1, ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ປີທີ 1.
6. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2008, ພູມສາດ2, ສາຍສ້າງຄູມັດທະຍົມຕົ້ນ, ລະບົບ 3 ປີ, ປີທີ 1.
7. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2009 ພູມສາດ3 ສາຍສ້າງຄູມັດທະຍົມຕົ້ນລະບົບ 3 ປີ, ປີທີ 2.
8. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2009 ພູມສາດ 4ສາຍສ້າງຄູມັດທະຍົມຕົ້ນລະບົບ 3 ປີ, ປີທີ 2.

# ໂຄງຮ່າງລາຍວິຊາ

## ຊື່ວິຊາ: ສັງຄົມສຶກສາ

## ຫຼັກສູດສ້າງຄູປະຖົມອະນຸປະລິນຍາຕໍ່ເນື່ອງພັກແລ້ງ ພາກຮຽນທີ3

## ລະຫັດ:

| | |
|---|---|
| ພາກຮຽນ ແລະ ປີຮຽນ<br>Semester and Year | ພາກຮຽນທີ 3 ປີທີ 3 |
| ຈຳນວນຊົ່ວໂມງ<br>Time | 30 ຊົ່ວໂມງ |
| ຈຳນວນໜ່ວຍກິດ<br>Credit | 2(1-2-2) |
| ອະທິບາຍຄ່າໜ່ວຍກິດ<br>Credit Explanation | ວິຊານີ້ມີ2ໜ່ວຍກິດ, ຮຽນ 3 ຊົ່ວໂມງຕໍ່ອາທິດ, ໃນນັ້ນຮຽນທິດສະດີ1ຊົ່ວໂມງ, ຝຶກປະຕິບັດຕົວຈິງ 2 ຊົ່ວໂມງ ແລະ ວຽກມອບໝາຍ 2 ຊົ່ວໂມງ |
| ຈຸດປະສົງ<br>Objectives | ເພື່ອໃຫ້ນັກສຶກສາຄູສາມາດ:<br>1. ອະທິບາຍປະຫວັດສາດລາວນັບແຕ່ສະໄໝການທ້ອນໂຮມຂອງເຈົ້າຟ້າງຸ່ມຈົນຮອດການຍຶດອຳນາດສະຖາປານາສາທາລະນະລັດປະຊາທິປະໄຕປະຊາຊົນລາວ.<br>2. ອະທິບາຍໄດ້ລະບົບສຸລິຍະຈັກກະວານ, ໜ່ວຍໂລກ, ພູມສັນຖານຂອງລາວ, ພູມອາກາດ, ແມ່ນ້ຳຕ່າງໆ, ຊັບພະຍາກອນທຳມະຊາດແລະປະຊາກອນຂອງລາວ.<br>3. ອະທິບາຍກ່ຽວກັບວັດທະນະທຳສັງຄົມລາວແລະອາຊຽນໄດ້<br>4. ປະຕິບັດຕົນໃຫ້ຖືກຕ້ອງກັບຮີດຄອງປະເພນີຂອງຊາດ, ມີມາລະຍາດແລະຮູ້ຈັກປົກປັກຮັກສາວັດທະນະທຳຂອງຊາດລາວ. |
| ເນື້ອໃນຫຍໍ້<br>Course Description | ການທ້ອນໂຮມແຜ່ນດິນລາວ, ລາຊະການເຈົ້າສຸລິຍະວົງສາ, ອານາຈັກລາວລ້ານຊ້າງໃນໄລຍະຊຸດໂຊມ ແລະ ແຕກແຍກ, ການກອບກູ້ອານາຈັກລາວລ້ານຊ້າງຂອງພະເຈົ້າອານຸວົງ,ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານສັກດີນາສະຫຍາມແລະລ່າເມືອງຂຶ້ນຝຣັ່ງ, ການຮຸກຮານຂອງຈັກກະພັດອາເມລິກາ, ການຕໍ່ສູ້ເພື່ອຍຶດອຳນາດ |

| | |
|---|---|
| | ແລະການສະຖາປະນາສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ລະບົບສຸລິຍະຈັກກະວານ, ໜ່ວຍໂລກແລະການເຄື່ອນໝູນຂອງໜ່ວຍໂລກ, ທີ່ຕັ້ງແລະພູມສັນຖານຂອງປະເທດລາວ, ພູມອາກາດ, ແມ່ນ້ຳຕ່າງໆ, ຊັບພະຍາກອນທຳມະຊາດປະຊາກອນຂອງລາວ. |
| ວິທີດຳເນີນການສອນ<br>Methodology | ວິຊາສັງຄົມສຶກສາລວມມີທັງໝົດ14ບົດ, ແຕ່ລະບົດມີຫົວຂໍ້ຍ່ອຍໃຊ້ເວລາຮຽນ16ອາທິດໂດຍໃຊ້ວິທີສິດສອນແບບບັນຍາຍ, ອະທິບາຍ, ລະດົມສະໝອງ, ສົນທະນາ, ກໍລະນີສຶກສາ, ຈັດກິດຈະກຳເປັນກຸ່ມ, ຂຽນບົດລາຍກຸ່ມ ຫຼື ບຸກຄົນ. |
| ສື່ການຮຽນ-ການສອນ<br>Teaching Aids | ເອກະສານປະກອບການສອນ, ຮູບພາບ, ແຜນວາດຊ່ວຍຈື່, ໜ່ວຍໂລກຈຳລອງ,ແຜ່ນທີ່, ຕົວຢ່າງກໍລະນີສຶກສາທີ່ກ່ຽວຂ້ອງ, ສື່ອີເລັກໂຕນິກ (ເຄື່ອງສາຍ LCD, ຄອມພິວເຕີ...) |
| ອາທິດ1<br>Week 1 | **ພາກທີ1**<br>**ປະຫວັດສາດລາວ**<br>**ບົດທີ1**<br>**ການທ້ອນໂຮມແຜນດິນລາວ**<br>1. ການທ້ອນໂຮມອານາຈັກລາວລ້ານຊ້າງຂອງພະເຈົ້າຟ້າງຸ່ມ.<br>2. ອານາຈັກລາວລ້ານຊ້າງແຕ່ ປີ ຄ. ສ 1373-1560<br>3. ອານາຈັກລາວລ້ານຊ້າງແຕ່ 1560-1638 |
| ອາທິດ2<br>Week 2 | **ບົດທີ2**<br>**ອານາຈັກລາວລ້ານຊ້າງໃນລາຊະການເຈົ້າສຸລິຍະວົງສາ**<br>1. ອານາຈັກລາວລ້ານຊ້າງສະໄໝການປົກຄອງຂອງເຈົ້າສຸລິຍະວົງສາ (ຄ.ສ 1638-1695).<br>2. ໄລຍະສຸດທ້າຍຂອງເຈົ້າສຸລິຍະວົງສາ.<br>3.ຄວາມຂັດແຍງພາຍໃນອານາຈັກລາວລ້ານຊ້າງພາຍຫຼັງລາດຊະການຂອງເຈົ້າສຸລິຍະວົງສາ<br>4. ການແຕກແຍກຂອງອານາຈັກລາວລ້ານຊ້າງ |
| ອາທິດ3 | **ບົດທີ3** |

| | |
|---|---|
| Week 3 | **ອານາຈັກລາວລ້ານຊ້າງໃນໄລຍະເສຍເອກະລາດໃຫ້ສະຫຍາມ**<br>1. ການຮຸກຮານ ແລະ ປົດຄອງອານາຈັກລາວລ້ານຊ້າງຂອງສັກດີນາສະຫຍາມ<br>2.ການກອບກູ້ເອກະລາດຂອງປະຊາຊົນລາວພາຍໃຕ້ການນໍາພາຂອງເຈົ້າອານຸວົງ<br>3..ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານສັກດີນາສະຫຍາມຫຼັງການສິ້ນພະຊົນຂອງເຈົ້າອະນຸວົງ |
| ອາທິດ4<br>Week 4 | **ບົດທີ4**<br>**ປະເທດລາວໄລຍະຕົກເປັນທົວເມືອງຂຶ້ນຝຣັ່ງ**<br>1.ການປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງປີຄ.ສ 1893-1945<br>2. ຂະບວນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງແຕ່ປີ 1901-1939.<br>3. ການລຸກຮື້ຂຶ້ນຍຶດອໍານາດແລະປະກາດເອກະລາດຄັ້ງທໍາອິດຂອງລາວ.<br>4.ການປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງແລະການຕໍ່ສູ້ຂອງປະຊາຊົນລາວ (ຄ.ສ 1945-1954).<br>4.ພວກລ່າເມືອງຂຶ້ນຝຣັ່ງກັບຄືນຮຸກຮານລາວຄັ້ງທີ 2 |
| ອາທິດ5<br>Week 5 | **ບົດທີ5**<br>**ການຮຸກຮານລາວຂອງຈັກກະພັດອາເມລິກາ**<br>1. ກົນອຸບາຍຢຶດຄອງລາວຂອງຈັກກະພັດອາເມລິກາ<br>2. ການດໍາເນີນການປົກຄອງລາວຂອງຈັກກະພັດອາເມລິກາ ແລະ ຂະບວນການຕໍ່ສູ້ຂອງປະຊາຊົນລາວໃຕ້ການນໍາພາຂອງພັກປະຊາຊົນປະຕິວັດລາວແຕ່ປີ 1955-1973<br>3.ການລຸກຮື້ຂຶ້ນຍຶດອໍານາດ23 ສິງຫາ 1975 **ແລະ** ການສະຖາປະນາສາທາລະນະລັດປະຊາທິປະໄຕປະຊະຊົນລາວວັນທີ 2 ທັນວາ 1975. |
| ອາທິດ6<br>Week 6 | **ພາກທີ II ພູມສາດ**<br>**ບົດທີ6 ລະບົບສຸລິຍະຈັກກະວານ**<br>1. ຄວາມໝາຍຂອງລະບົບສຸລິຍະຈັກກະວານ<br>2. ອົງປະກອບຂອງລະບົບສຸລິຍະຈັກກະວານ<br>3. ດວງຕາເວັນ |

| | |
|---|---|
| | 4. ດາວບໍລິວານທັງ 8 ຂອງດວງຕາເວັນ |
| ອາທິດ7<br><br>Week 7 | **ບົດທີ7**<br><br>**ໜ່ວຍໂລກແລະການໂຄຈອນຂອງໜ່ວຍໂລກ**<br><br>1. ຮູບຮ່າງ ແລະ ຂະໜາດຂອງໜ່ວຍໂລກ<br><br>2. ການໂຄຈອນຂອງໜ່ວຍໂລກ<br><br>3. ຜົນຕ່າງໆທີ່ເກີດຈາກການໂຄຈອນຂອງໜ່ວຍໂລກ |
| ອາທິດ8<br><br>Week 8 | **ບົດທີ8**<br><br>**ທີ່ຕັ້ງ,ພູມສັນຖານ ແລະ ພູມອາກາດຂອງປະເທດລາວ**<br><br>1. ທີ່ຕັ້ງ, ຂອບເຂດແລະຊາຍແດນ<br><br>2. ຮູບຮ່າງແລະເນື້ອທີ່ຂອງປະເທດລາວ<br><br>3. ພູມສັນຖານຕົ້ນຕໍຂອງປະເທດລາວ<br><br>4. ລັກສະນະລວມຂອງພູມອາກາດ<br><br>5. ລະດູການແລະກະແສລົມທີ່ພັດຜ່ານລາວ |
| ອາທິດ9<br><br>Week 9 | **ບົດທີ9**<br><br>**ປະຊາກອນຂອງລາວ**<br><br>1. ໂຄງສ້າງຂອງປະຊາກອນລາວ<br><br>2. ການເພີ່ມຂຶ້ນແລະຫຼຸດລົງຂອງປະຊາກອນ<br><br>3. ການແຈກຢາຍຂອງປະຊາກອນ<br><br>**ພາກທີ III ວັດທະນະທຳສັງຄົມລາວແລະ ອາຊຽນ**<br><br>**ບົດທີ10 ກຸ່ມປະເທດອາຊຽນ**<br><br>1. ປະຫວັດຄວາມເປັນມາຂອງກຸ່ມອາຊຽນ ແລະ ໂຄງຮ່າງການຈັດຕັ້ງຂອງກຸ່ມອາຊຽນ<br>2. ບັນດາປະເທດສະມາຊິກກຸ່ມອາຊຽນ |
| ອາທິດ10<br><br>Week 10 | **ບົດທີ11 ຮີດຄອງປະເພນີລາວ-ອາຊຽນ**<br><br>1. ຮີດຄອງປະເພນີລາວ<br>2. ຮີດຄອງປະເພນີຂອງອາຊຽນ |

| | |
|---|---|
| ການປະເມີນຜົນການຮຽນ<br><br>Evaluation | 1. ການເຂົ້າຮ່ວມຮຽນ10 %<br>2. ກິດຈະກຳບຸກຄົນ 20 %<br>3. ກິດຈະກຳກຸ່ມ10 %<br>4. ສອບເສັງກາງພາກ20 %<br>5. ສອບເສັງທ້າຍພາກ 40 %<br>ລວມ 100 % |
| ເອກະສານອ້າງອີງ<br><br>References | 9. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ວິທະຍາສາດສັງຄົມ 3, ປີ 2009, ສາຍສ້າງຄູປະຖົມ<br>10. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2008, ວິທະຍາສາດ ສັງຄົມ 2 ສາຍສ້າງຄູປະຖົມ ລະບົບ 2 ປີ<br>11. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2009,ປະຫວັດສາດ 4 ສາຍສ້າງຄູມັດທະຍົມຕົ້ນລະບົບ 3 ປີ, ປີທີ 2.<br>12. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2009, ປະຫວັດສາດ 3, ປີທີ2.<br>13. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2008, ພູມສາດ1, ສາຍ ສ້າງຄູມັດທະຍົມຕົ້ນລະບົບ 3 ປີ, ປີທີ 1.<br>14. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2008, ພູມສາດ2, ສາຍສ້າງຄູມັດທະຍົມຕົ້ນ, ລະບົບ 3 ປີ, ປີທີ 1.<br>15. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2009 ພູມສາດ3 ສາຍ ສ້າງຄູມັດທະຍົມຕົ້ນລະບົບ 3 ປີ, ປີທີ 2.<br>16. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ, ປີ 2009 ພູມສາດ 4ສາຍ ສ້າງຄູມັດທະຍົມຕົ້ນລະບົບ 3 ປີ, ປີທີ 2. |
| ຜູ້ຮຽບຮຽງPrepared by | ພົງສະຫວັດ ສີລິປັນຍາ ວິທະຍາໄລຄູ ດົງຄຳຊ້າງ020 28211099 |
| ຜູ້ຮຽບຮຽງຄືນ<br><br>Revised by | ທ່ານ ວັດທະນາ ໝັ້ນວິໄລ ວິທະຍາໄລຄູສາລະວັນ<br>ທ່ານ ຊອ ປທ ນ ສິງອຳໄພ ພິມພາພອນ ວິທະຍາໄລຄູສາລະວັນ<br>ທ່ານ ຊອ ປທ ມອນໄຊ ຂັນທະຈັກ ວິທະຍາໄລຄູສາລະວັນ<br>ທ່ານ ປທ ນ ລຸ້ງຟ້າ ຂັນຕິວົງ ວິທະຍາໄລຄູສາລະວັນ |